ສຳນັກງານໃຫຍ່

ເລກທີ: 008 /ທຄຕລ.ສພຫ.....
ນະຄອນຫຼວງວຽງຈັນ, ວັນທີ: 29 ມີນາ 2024

ໜັງສືເຊີນ

ຮຽນ: ທ່ານຜູ້ຖືຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ, ທີ່ນັບຖື.
ເລື່ອງ: ເຊີນເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ທຄຕລ.

- ອີງຕາມມະຕິສະພາບໍລິຫານ ທຄຕລ ເລກທີ 007/ສພຫ.ທຄຕລ ລົງວັນທີ 11 ມີນາ 2024;
- ອີງຕາມມະຕິສະພາບໍລິຫານ ທຄຕລ ເລກທີ 009/ສພຫ.ທຄຕລ ລົງວັນທີ 22 ມີນາ 2024.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຂໍຖືເປັນກຽດຮຽນເຊີນທ່ານ ຜູ້ຖືຮຸ້ນ ທຄຕລ ເຂົ້າຮ່ວມ **ກອງປະຊຸມສາມັນຜູ້ຖືຮຸ້ນ ທຄຕລ ປະຈຳປີ 2023 ໃນວັນທີ 29/04/2024 ເວລາ 14:30 ໂມງ** (ລົງທະບຽນເວລາ 13:00 - 14:30 ໂມງ) **ທີ່ຫ້ອງປະຊຸມ Grand Ballroom, ໂຮງແຮມລາວພຣາຊາ**, ນະຄອນຫຼວງວຽງຈັນ ເພື່ອພິຈາລະນາແລະຮັບຮອງເອົາບັນຫາຕ່າງໆ ຕາມວາລະກອງປະຊຸມທີ່ຄັດຕິດມາພ້ອມນີ້.

ທຄຕລ ໄດ້ກຳນົດເອົາວັນທີ **25/03/2024 ເປັນມື້ປິດບັນຊີທະບຽນຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນໃນການເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ທຄຕລ** ເຊິ່ງໄດ້ເປີດເຜີຍຂໍ້ມູນຮຽບຮ້ອຍແລ້ວ.

ສຳຫຼັບຜູ້ຖືຮຸ້ນທີ່ບໍ່ສະດວກເຂົ້າຮ່ວມດ້ວຍຕົນເອງ ສາມາດມອບສິດໃຫ້ສະມາຊິກສະພາບໍລິຫານອິດສະລະ ທ່ານໃດໜຶ່ງເປັນຜູ້ຕາງເຂົ້າຮ່ວມປະຊຸມແທນ ໂດຍປະກອບແບບຟອມໃບມອບສິດທີ່ຄັດຕິດມາພ້ອມນີ້ ແລ້ວສົ່ງໃຫ້ ທຄຕລ ທາງອີເມວ: bcelhqv@bcel.com.la ກ່ອນວັນທີ **25/04/2024.**

ຫວັງຢ່າງຍິ່ງວ່າ ທ່ານຄົງສະຫຼະເວລາອັນມີຄ່າເຂົ້າຮ່ວມກອງປະຊຸມຄັ້ງນີ້ດ້ວຍ.

ປະທານສະພາບໍລິຫານ

ບຸນປອນ ອັນນະຈິດ

ເລກທີ 01, ຖະໜົນ: ປາງຄຳ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ: 2925, ໂທລະສັບ: (856-21) 213200-3, 223243-4, 255080-5
Website: http:/www.bcel.com.la, E-mail: bcelhqv@bcel.com.la, SWIFT Code: COEBLALA

ເອກະສານຄັດຕິດ

1. ວາລະກອງປະຊຸມສາມັນຜູ້ຖືຮຸ້ນ ທຄຕລ (ເອກະສານຄັດຕິດ 1)
2. ບົດບັນທຶກກອງປະຊຸມ ຜູ້ຖືຮຸ້ນ ທຄຕລ ສະໄໝສາມັນ ປະຈຳປີ 2022 (ເອກະສານຄັດຕິດ 2)
3. ລາຍງານຜົນການດຳເນີນງານຂອງ ທຄຕລ ປະຈຳປີ 2023 ໂດຍສັງເຂບ ແລະ ບົດລາຍງານຖານະການເງິນ ທຄຕລ ປະຈຳປີ 2023 ຈາກຜູ້ກວດສອບພາຍນອກ (ເອກະສານຄັດຕິດ 3)
4. ເອກະສານແຜນການປະຈຳປີ 2024 ຂອງ ທຄຕລ (ເອກະສານຄັດຕິດ 4)
5. ຊີວະປະຫວັດຂອງທ່ານ ປອ. ອາຄົມ ປຣະເສີດ (ເອກະສານຄັດຕິດ 5)
6. ຂໍ້ມູນເພີ່ມເຕີມ ກ່ຽວກັບ ການປ່ຽນແປງມູນຄ່າກຳນົດຮຸ້ນຂອງ ທຄຕລ (ເອກະສານຄັດຕິດ 6)
7. ສັງລວມການປັບປຸງກົດລະບຽບຂອງ ທຄຕລ (ເອກະສານຄັດຕິດ 7)
8. ແບບຟອມໃບມອບສິດ (ເອກະສານຄັດຕິດ 8)
9. ລະບຽບສຳລັບການດຳເນີນ ກອງປະຊຸມສາມັນຜູ້ຖືຮຸ້ນ ທຄຕລ (ເອກະສານຄັດຕິດ 9)
10. ຄຳແນະນຳກ່ຽວກັບເອກະສານ ແລະ ຫຼັກຖານທີ່ຕ້ອງນຳມາສະເໜີໂຕເພື່ອເຂົ້າຮ່ວມກອງປະຊຸມ (ເອກະສານຄັດຕິດ 10)
11. ຄຳແນະນຳກ່ຽວກັບການລົງຄະແນນສຽງ (ເອກະສານຄັດຕິດ 11)
12. ແຜນທີ່ສະຖານທີ່ປະຊຸມ (ເອກະສານຄັດຕິດ 12)

❖ ໝາຍເຫດ:

1. ຜູ້ຖືຮຸ້ນແຕ່ລະທ່ານສາມາດດາວໂຫຼດເອົາໜັງສືແຈ້ງເຊີນ ພ້ອມເອກະສານຄັດຕິດໄດ້ທີ່ເວັບໄຊຂອງ ທຄຕລ www.bcel.com.la ແລະ ເວັບໄຊຂອງຕະຫຼາດຫຼັກຊັບລາວ www.lsx.com.la ຫຼື ຈະໄປຮັບເອົາໜັງສືເຊີນປະຊຸມທີ່ລະບຸສິດຂອງທ່ານໃນການເຂົ້າຮ່ວມກອງປະຊຸມ (ມີລະຫັດບາໂຄດ) ຢູ່ຕະຫຼາດຫຼັກຊັບລາວ ທີ່ຊັ້ນ 4 ພະແນກຊຳລະສະສາງ ແລະ ຮັບຝາກຫຼັກຊັບ, ບ້ານໂພນທັນເໜືອ, ຖະໜົນ T4, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ. ໂທລະສັບ +856 (21) 454361–4 ເລີ່ມແຕ່ວັນທີ 29 ມີນາ 2024.
2. ສຳລັບຜູ້ຖືຮຸ້ນທີ່ຈະເຂົ້າຮ່ວມປະຊຸມດ້ວຍຕົນເອງ ແລະ ຜູ້ຕາງໜ້າກະລຸນານຳບັດປະຈຳຕົວ ຫຼື ສຳມະໂນຄົວ ຫຼື ໜັງສືຜ່ານແດນ (ສຳລັບຜູ້ຖືຮຸ້ນຕ່າງປະເທດ) ມາໃນວັນປະຊຸມ ເພື່ອສະເໜີໂຕເວລາລົງທະບຽນເຂົ້າຮ່ວມກອງປະຊຸມ. ລາຍລະອຽດເອກະສານຕ່າງໆ ທີ່ຕ້ອງນຳມາສະແດງໃນເວລາເຂົ້າຮ່ວມກອງປະຊຸມ ໄດ້ລະບຸໃວ້ໃນ ຄຳແນະນຳກ່ຽວກັບເອກະສານ ແລະ ຫຼັກຖານທີ່ຕ້ອງນຳມາສະເໜີໂຕ ເພື່ອເຂົ້າຮ່ວມກອງປະຊຸມ ທີ່ຄັດຕິດມາພ້ອມນີ້.
3. ສຳລັບຜູ້ຖືຮຸ້ນທີ່ຈະໃຫ້ຜູ້ຕາງໜ້າເຂົ້າມາຮ່ວມກອງປະຊຸມ ແລະ ລົງຄະແນນສຽງແທນ, ກະລຸນາປະກອບຂໍ້ມູນພ້ອມລົງລາຍເຊັນໃນໃບມອບສິດຕາມເອກະສານທີ່ໄດ້ຂັດຕິດມາພ້ອມນີ້ ໃຫ້ຖືກຕ້ອງ ແລະ ຄົບຖ້ວນ.

❖ ຜູ້ປະສານງານຝ່າຍ ທຄຕລ

1) ທ່ານ ປອ. ອິນປິງ ສີລິພູທອນ, ໂທ: 020 2888 5353
2) ທ່ານ ພອນນະລັດ ກອງວົງສາ, ໂທ: 020 2222 3455

ວາລະ
ກອງປະຊຸມສາມັນຜູ້ຖືຮຸ້ນ ທຄຕລ ປະຈຳປີ 2023
29 ເມສາ 2024

ວາລະທີ 1: ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມຜູ້ຖືຮຸ້ນສະໄໝສາມັນ ທຄຕລ ປະຈຳປີ 2022

ທຄຕລ ໄດ້ມີບົດບັນທຶກກອງປະຊຸມຜູ້ຖືຮຸ້ນສະໄໝສາມັນ ຂອງ ທຄຕລ ປະຈຳປີ 2022 ຈັດຂຶ້ນໃນວັນທີ 27 ເມສາ 2023 ຕາມລາຍລະອຽດທີ່ຢູ່ໃນ **ເອກະສານຄັດຕິດ 2** ເຊິ່ງບົດບັນທຶກດັ່ງກ່າວ ໄດ້ຖືກເປີດເຜີຍຢ່າງສອດຄ່ອງກັບກົດລະບຽບທີ່ກ່ຽວຂ້ອງແລ້ວ.

ຄຳເຫັນຂອງສະພາບໍລິຫານ:

ສະພາບໍລິຫານໄດ້ພິຈາລະນາແລ້ວ ເຫັນວ່າ ບົດບັນທຶກກອງປະຊຸມດັ່ງກ່າວ ມີເນື້ອໃນຖືກຕ້ອງ ແລະ ຄົບຖ້ວນແລ້ວ ຈຶ່ງເຫັນຄວນສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາຮັບຮອງເອົາ.

ຄະແນນສຽງທີ່ຕ້ອງໃຊ້:

ວາລະນີ້ຈະຖືວ່າຖືກຮັບຮອງ ເມື່ອມີຄະແນນສຽງເຫັນດີຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 2: ພິຈາລະນາ ແລະ ຮັບຮອງບົດລາຍງານຜົນການດຳເນີນງານ ແລະ ເອກະສານລາຍງານການເງິນຂອງ ທຄຕລ ປະຈຳປີ 2023 (ເອກະສານຄັດຕິດ 3)

ການດຳເນີນງານທີ່ພົ້ນເດັ່ນຂອງ ທຄຕລ ໃນໄລຍະປີ 2023 ມີດັ່ງນີ້:

- ຈັດກອງປະຊຸມສາມັນຜູ້ຖືຮຸ້ນ ທຄຕລ ປະຈຳປີ 2022 ພ້ອມທັງສຳເລັດການຈ່າຍເງິນປັນຜົນ ຈຳນວນ 100 ກີບ/ຮຸ້ນ ໃຫ້ແກ່ຜູ້ຖືຮຸ້ນ ທຄຕລ;
- ຈັດກອງປະຊຸມສະພາບໍລິຫານສະໄໝສາມັນ ຈຳນວນ 4 ຄັ້ງ ແລະ ວິສາມັນ 1 ຄັ້ງ;;
- ຈັດກອງປະຊຸມສະຫຼຸບການເຄື່ອນໄຫວວຽກງານຂອງ ທຄຕລ 4 ຄັ້ງ;
- ຈັດຂຶ້ນສາຂາ ແລະ ໜ່ວຍບໍລິການຂອງ ທຄຕລ ທົ່ວລະບົບ ປະຈຳປີ 2023;
- ສະຫຼຸບຜົນການຈັດຕັ້ງປະຕິບັດ KPI ຂອງສາຂາ ປະຈຳປີ 2022 ແລະ ກຳນົດ KPI ປະຈຳປີ 2023;
- ຈຳໜ່າຍພັນທະບັດທະນາຄານແຫ່ງ ສປປ ລາວ 2 ຄັ້ງ ຂອງງວດທີ 2 (ຄັ້ງທີ 2 ແລະ 3);
- ສຳເລັດການພັດທະນາເຄື່ອງມືດ້ານໄອທີ, ຜະລິດຕະພັນ ແລະ ການບໍລິການ ເຊັ່ນ: Go-Live ນຳໃຊ້ລະບົບການອະນຸມັດສິນເຊື່ອ LOS; ພັດທະນາຟັງຊັນຕ່າງໆໃນແອັບ BCEL One ຄື: Tipme, OneX, ໂອນເງິນຢອນໄປ WeChat, OneCash wallet ສຳລັບນັກທ່ອງທ່ຽວຕ່າງປະເທດ, Consumer Loan, ຄິວອອນລາຍ, ການຈອງພັນທະບັດ ທຫລ ແລະ Currency Exchange (ຕະຫຼາດແລກປ່ຽນ); ພັດທະນາ **EzyKip App** ສຳລັບນັກທ່ອງທ່ຽວຕ່າງປະເທດທີ່ເຂົ້າມາທ່ຽວ ສປປ ລາວ ແລະ ອື່ນໆ.
- ເປີດໜ່ວຍບໍລິການ 2 ແຫ່ງ ຄື: ໜ່ວຍບໍລິການຊາຍແດນລາວບາວ ແລະ ໜ່ວຍບໍລິການສາມຫຼ່ຽມຄຳ;
- ຮ່ວມມືທາງດ້ານທຸລະກິດກັບພາກສ່ວນຕ່າງໆທີ່ສຳຄັນ: ຮ່ວມມືກັບບໍລິສັດ Tencent ຂອງ ສປ ຈີນ ໃນໂຄງການໂອນເງິນໄປຈີນຜ່ານ BCEL One ຫາ We-Chat; ຮ່ວມມືກັບ KEB Hana Bank ສ. ເກົາຫຼີ ໃນໂຄງການຊຳລະຜ່ານ

ລະບົບ GLN ສະແກນ QR Code ຜ່ານ BCELOnePay ແລະ ເປີດໂຕການໃຫ້ບໍລິການໂອນເງິນຂ້າມແດນ ລະຫວ່າງ ສປປ ລາວ ແລະ ສ. ເກົາຫຼີ (BCEL ແລະ GLN International); ຮ່ວມມືກັບບໍລິສັດລິດໄຟລາວ-ຈີນ ຈຳກັດ ໃນການຂາຍປີ້ລິດໄຟອອນລາຍຜ່ານແອັບ LCR ຊຳລະຜ່ານ BCEL One ແລະ ຮ່ວມມືກັບບໍລິສັດ ພຣູເດັນ ໂຊລ໌ ປະກັນໄພຊີວິດ (ລາວ) ຈຳກັດ ໃນການຊື້ປະກັນໄພຜ່ານ BCEL One;

- ໄດ້ຮັບລາງວັນນັກທຸລະກິດ ຊັ້ນນຳດີເດັ່ນ ສຄອຊ ປະຈຳປີ 2022 (Lao Business Leader Award 2022) ແລະ ໄດ້ຮັບ 4 ລາງວັນດ້ານການດຳເນີນທຸລະກິດດີເດັ່ນ (VISA Client forum 2023) ປະກອບມີ: ❶ ລາງວັນດີເດັ່ນ ຜູ້ນຳດ້ານການຊຳລະຂ້າມແດນ, ❷ ລາງວັນດີເດັ່ນ ຜູ້ນຳດ້ານການຊຳລະຂອງຮ້ານຄ້າ, ❸ ລາງວັນດີເດັ່ນ ໃນການ ອະນຸມັດລາຍການບັດທີ່ດີທີ່ສຸດ ແລະ ❹ ລາງວັນດີເດັ່ນ ຜູ້ນຳດ້ານການຊຳລະສະສາງ.

ຜົນການດຳເນີນທຸລະກິດປະຈຳປີ 2023 ທີ່ໄດ້ຮັບການກວດສອບຈາກ ບໍລິສັດ PWC ແລະ ຮັບຮອງຈາກສະພາບໍລິຫານ ທຄຕລ ມີດັ່ງນີ້:

- ຍອດຊັບສິນ: 126.433.759 ລ້ານກີບ, ທຽບໃສ່ແຜນການປີ 2023 ປະຕິບັດໄດ້ 127,10%;
- ຍອດສິນເຊື່ອທັງໝົດ: 52.198.063 ລ້ານກີບ, ທຽບໃສ່ແຜນການປີ 2023 ປະຕິບັດໄດ້ 104,29%;
- NPL: 1,92%;
- ຍອດເງິນຝາກທັງໝົດ: 117.626.838 ລ້ານກີບ, ທຽບໃສ່ແຜນການປີ 2023 ປະຕິບັດໄດ້ 129,26%;
- ກຳໄລສຸດທິ ຫຼັງຫັກອາກອນ: 231.408 ລ້ານກີບ, ທຽບໃສ່ແຜນການປີ 2023 ປະຕິບັດໄດ້ 115,70%.

ຄຳເຫັນຂອງສະພາບໍລິຫານ:

ສະພາບໍລິຫານໄດ້ພິຈາລະນາແລ້ວ ແລະ ເຫັນດີສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາຮັບຮອງເອົາ.

ຄະແນນສຽງທີ່ຕ້ອງໃຊ້:

ວາລະນີ້ ຈະຖືວ່າຖືກຮັບຮອງເມື່ອມີຄະແນນສຽງເຫັນດີຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງ ປະຊຸມ.

ວາລະທີ 3: ພິຈາລະນາ ແລະ ຮັບຮອງການຈັດສັນກຳໄລປະຈຳປີ 2023 ເຂົ້າຄັງຕ່າງໆ ແລະ ຈ່າຍເງິນປັນຜົນ

ທຄຕລ ສະເໜີກອງປະຊຸມພິຈາລະນາ ແລະ ຮັບຮອງການຈັດສັນກຳໄລຫຼັງອາກອນປະຈຳປີ 2023 ເພື່ອຈ່າຍເຂົ້າ ຄັງຕ່າງໆຕາມລະບຽບການ ແລະ ຈ່າຍເງິນປັນຜົນໃຫ້ຜູ້ຖືຮຸ້ນ ດັ່ງນີ້:

- ແບ່ງເຂົ້າຄັງສະສົມຕາມລະບຽບການ: **10%**;
- ຈ່າຍເງິນປັນຜົນ: **300 ກີບ/ຮຸ້ນ** ລວມມູນຄ່າເງິນປັນຜົນທັງໝົດ **62.316.990.000 ກີບ**;
- ແບ່ງສ່ວນທີ່ເຫຼືອເຂົ້າຄັງຂະຫຍາຍທຸລະກິດ;
- ມື້ຈ່າຍເງິນປັນຜົນ: **14/05/2024.**

ທຄຕລ ໄດ້ກຳນົດເອົາວັນທີ 26 ເມສາ 2024 ເປັນມື້ປິດປຶ້ມ ເພື່ອກຳນົດສິດຂອງຜູ້ຖືຮຸ້ນໃນການຮັບເງິນປັນຜົນ ປະຈຳປີ 2023 ເຊິ່ງໄດ້ມີການເປີດເຜີຍຂໍ້ມູນແລ້ວ.

ຄຳເຫັນຂອງສະພາບໍລິຫານ:

ສະພາບໍລິຫານໄດ້ພິຈາລະນາແລ້ວ ແລະ ເຫັນດີສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາຮັບຮອງເອົາ.

ຄະແນນສຽງທີ່ຕ້ອງໃຊ້:

ວາລະນີ້ ຈະຖືວ່າຖືກຮັບຮອງເມື່ອມີຄະແນນສຽງເຫັນດີຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 4: ພິຈາລະນາ ແລະ ຮັບຮອງເອົາແຜນການປີ 2024 (ເອກະສານຄັດຕິດ 4)

ສະເໜີກອງປະຊຸມ ພິຈາລະນາ ແລະ ຮັບຮອງເອົາແຜນການ ປະຈຳປີ 2024 ເຊິ່ງມີຄາດໝາຍບາງຕົວເລກສຳຄັນ ທຽບໃສ່ຕົວເລກການປະຕິບັດປີ 2023 ມີດັ່ງນີ້:

- **ຍອດຊັບສິນ:** ບໍ່ຫຼຸດ 140.795.000 ລ້ານກີບ ທຽບໃສ່ປະຕິບັດປີ 2023 ເພີ່ມຂຶ້ນ 11,36%;
- **ເງິນຝາກ:** ບໍ່ຫຼຸດ 130.000.000 ລ້ານກີບ ທຽບໃສ່ປະຕິບັດປີ 2023 ເພີ່ມຂຶ້ນ 10,52%;
- **ເງິນກູ້:** ບໍ່ຫຼຸດ 59.470.000 ລ້ານກີບ ທຽບໃສ່ປະຕິບັດປີ 2023 ເພີ່ມຂຶ້ນ 13,93% ຫຼື ຍອດເງິນກູ້ໃຫ້ກອມອັດຕາສ່ວນບໍ່ຫຼຸດ 45% ຂອງຍອດເງິນຝາກທັງໝົດ;
- **NPL:** ບໍ່ເກີນ 3%;
- **ກຳໄລສຸດທິ (ຫຼັງຫັກອາກອນ):** ບໍ່ຫຼຸດ 300.000 ລ້ານກີບ ທຽບໃສ່ປະຕິບັດປີ 2023 ເພີ່ມຂຶ້ນ 29,64%;
- ແຜນຂະຫຍາຍຕາໜ່າງບໍລິການໃໝ່ 4 ແຫ່ງ ແລະ ຍົກຍ້າຍສະຖານທີ່ໜ່ວຍບໍລິການ 1 ແຫ່ງ;
- ແຜນປະກອບວັດຖຸເຕັກນິກ, ກໍ່ສ້າງ ແລະ ສ້ອມແປງ ແມ່ນຈະເນັ້ນໃສ່ສືບຕໍ່ບັນດາໂຄງການທີ່ຍັງບໍ່ສຳເລັດ, ປ່ຽນແທນສິ່ງເກົ່າທີ່ເປ່ເພ ແລະ ປະກອບເພີ່ມໃໝ່ສິ່ງທີ່ຈຳເປັນ ລວມທັງໝົດ 585,10 ຕື້ກີບ;
- ແຜນຮັບພະນັກງານໃໝ່ ຈຳນວນ 66 ຄົນ ເຊິ່ງຈະປະກອບເພື່ອຮອງຮັບວຽກງານສະເພາະດ້ານທີ່ຈຳເປັນ ບໍ່ສາມາດສັບຊ້ອນພະນັກງານພາຍໃນໄດ້, ທົດແທນພະນັກງານທີ່ລາອອກໃນໄລຍະຜ່ານມາ, ປະກອບເຂົ້າໃນໂຄງຮ່າງການຈັດຕັ້ງ ແລະ ຕາໜ່າງບໍລິການທີ່ຂະຫຍາຍໃໝ່.

ຄຳເຫັນຂອງສະພາບໍລິຫານ:

ສະພາບໍລິຫານໄດ້ພິຈາລະນາແລ້ວ ແລະ ເຫັນດີສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາຮັບຮອງເອົາ.

ຄະແນນສຽງທີ່ຕ້ອງໃຊ້:

ວາລະນີ້ ຈະຖືວ່າຖືກຮັບຮອງເມື່ອມີຄະແນນສຽງເຫັນດີຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 5: ພິຈາລະນາ ແລະ ຮັບຮອງເອົາຜູ້ກວດສອບອິດສະຫຼະປະຈຳປີ 2024.

ຕາມການຄົ້ນຄວ້າ ແລະ ຜ່ານການປະມູນຕາມລະບຽບທີ່ກ່ຽວຂ້ອງ, ທຄຕລ ໄດ້ເລືອກເອົາບໍລິສັດ EY ເປັນຜູ້ດຳເນີນການກວດສອບເອກະສານລາຍງານການເງິນ ປະຈຳປີ 2024 ໃນມູນຄ່າ 945.000.000 ກີບ (ມູນຄ່າຂອງປີຜ່ານມາ: 816.850.000 ກີບ) ແລະ ອອກບົດລາຍງານໃຫ້ ທຄຕລ 5 ບົດຄື:

1) ບົດລາຍງານການກວດສອບເອກະສານລາຍງານການເງິນ ຕາມມາດຕະຖານລາວ (LAS);
2) ບົດລາຍງານການກວດສອບເອກະສານລາຍງານການເງິນ ຕາມມາດຕະຖານສາກົນ (IFRS special purpose);
3) ຈົດໝາຍຄຸ້ມຄອງເຖິງຜູ້ບໍລິຫານ (Management Letter);
4) ບົດລາຍງານທົບທວນຄືນຜົນການດຳເນີນງານ (Operational review report);
5) ບົດລາຍງານການທົບທວນຄືນຖານະເງິນກູ້ (Loan review report).

ຄຳເຫັນຂອງສະພາບໍລິຫານ:

ສະພາບໍລິຫານໄດ້ພິຈາລະນາແລ້ວ ແລະ ເຫັນດີສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາຮັບຮອງເອົາ.

ຄະແນນສຽງທີ່ຕ້ອງໃຊ້:

ວາລະນີ້ຈະຖືວ່າຖືກຮັບຮອງ ເມື່ອມີຄະແນນສຽງເຫັນດີຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 6: ພິຈາລະນາ ແລະ ຮັບຮອງ ການແຕ່ງຕັ້ງສະມາຊິກສະພາບໍລິຫານ ທຄຕລ (ເອກະສານຄັດຕິດ 5)

ສະມາຊິກສະພາບໍລິຫານຂອງ ທຄຕລ ໃນປະຈຸບັນ ປະກອບດ້ວຍ **8 ທ່ານ** ດັ່ງນີ້:

1. ທ່ານ ບຸນປອນ ວັນນະຈິດ	ຮອງລັດຖະມົນຕີກະຊວງການເງິນ ປະທານ
2. ທ່ານ ຄຳສຸກ ສູນດາລາ	ສະມາຊິກອິດສະຫຼະ, ຮອງປະທານ
3. ທ່ານ ນ.ສາຍສະໝອນ ຈັນທະຈັກ	ຜູ້ອຳນວຍການ ທຄຕລ, ກຳມະການ
4. ທ່ານ ປະສົມພັດ ຄຳຕັນ	ຮອງຫົວໜ້າກົມປະຕິຮູບລັດວິສາຫະກິດແລະປະກັນໄພ, ກຳມະການ
5. ທ່ານ Stephane Mangiavacca	ຕົວແທນຄູ່ຮ່ວມຍຸດທະສາດ, ກຳມະການ
6. ທ່ານ ຣສ. ທອງເພັດ ຈັນທະນີວົງ	ສະມາຊິກອິດສະຫຼະ, ກຳມະການ
7. ທ່ານ ນ. ລັດດາວັນ ຊົງວິໄລ	ສະມາຊິກອິດສະຫຼະ, ກຳມະການ
8. ທ່ານ ສອນໄຊ ສີລາເພັດ	ສະມາຊິກອິດສະຫຼະ, ກຳມະການ

ເນື່ອງຈາກວ່າ ທ່ານ ຄຳສຸກ ສູນດາລາ, ສະມາຊິກອິດສະຫຼະ ຮອງປະທານສະພາບໍລິຫານ ໄດ້ດຳລົງຕຳແໜ່ງເປັນສະມາຊິກອິດສະຫຼະຢູ່ໃນສະພາບໍລິຫານ ທຄຕລ ມາຫຼາຍສະໄໝ ແລະ ຄົບກຳນົດທີ່ກົດລະບຽບຂອງ ທຄຕລ ອະນຸຍາດໃຫ້ສາມາດດຳລົງຕຳແໜ່ງແລ້ວ (ຕາມມາດຕາ 32 ຂອງກົດລະບຽບ ທຄຕລ ກຳນົດໃຫ້ສະມາຊິກອິດສະຫຼະຕ້ອງດຳລົງຕຳແໜ່ງບໍ່ເກີນ 4 ສະໄໝຕິດຕໍ່ກັນ).

ສະພາບໍລິຫານ ທຄຕລ ຈຶ່ງໄດ້ຄົ້ນຄວ້າເປົ້າໝາຍຜູ້ມາດຳລົງຕຳແໜ່ງແທນ ໂດຍສົມທົບກັບຂັ້ນເທິງທີ່ກ່ຽວຂ້ອງ ເຊິ່ງທະນາຄານແຫ່ງ ສປປ ລາວ ແລະ ກະຊວງການເງິນ ໄດ້ຕົກລົງແຕ່ງຕັ້ງ **ທ່ານ ປອ. ອາຄົມ ປຣະເສີດ**, ຜູ້ອຳນວຍການສະຖາບັນການທະນາຄານ ໃຫ້ເປັນຮອງປະທານສະພາບໍລິຫານ ທຄຕລ ແທນທ່ານ ຄຳສຸກ ສູນດາລາ. ສ່ວນກຳມະ

ການທ່ານອື່ນ ຍັງຄົງບໍ່ປ່ຽນແປງ. ສະນັ້ນ, ທຄຕລ ຈຶ່ງຂໍສະເໜີກອງປະຊຸມຜູ້ຖືຮຸ້ນພິຈາລະນາຮັບຮອງການແຕ່ງຕັ້ງ ດັ່ງກ່າວ ເພື່ອໃຫ້ສອດຄ່ອງກັບນິຕິກຳກ່ຽວຂ້ອງ.

ຄຳເຫັນຂອງສະພາບໍລິຫານ:

ສະພາບໍລິຫານໄດ້ພິຈາລະນາແລ້ວ ແລະ ເຫັນດີສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາຮັບຮອງເອົາ.

ຄະແນນສຽງທີ່ຕ້ອງໃຊ້:

ວາລະນີ້ຈະຖືວ່າຖືກຮັບຮອງ ເມື່ອມີຄະແນນສຽງເຫັນດີຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງ ປະຊຸມ.

ວາລະທີ 7: ພິຈາລະນາ ແລະ ຮັບຮອງ ການປ່ຽນແປງມູນຄ່າກຳນົດຮຸ້ນ ທຄຕລ (ເອກະສານຄັດຕິດ 6)

ທຄຕລ ເປັນທະນາຄານທຳອິດທີ່ໄດ້ຈົດທະບຽນເຂົ້າໃນຕະຫຼາດຫຼັກຊັບລາວໃນປີ 2011 ໂດຍມີຈຳນວນຮຸ້ນທັງ ໝົດ 207.723.300 ຮຸ້ນ, ໃນນັ້ນມູນຄ່າກຳນົດຮຸ້ນ ຫຼື ມູນຄ່າໜ້າຮຸ້ນ (Par Value): 5.000 ກີບ/ຮຸ້ນ. ໃນຈຳນວນນີ້, ຜູ້ຖືຮຸ້ນລາຍໃຫຍ່ ແມ່ນກະຊວງການເງິນຖືຮຸ້ນ 60%, ທະນາຄານ COFIBRED ຄູ່ຮ່ວມຍຸດທະສາດ 10% ແລະ ມະຫາຊົນທົ່ວໄປ 30%. ອີງຕາມການຕິດຕາມການຊື້-ຂາຍຮຸ້ນປະຈຳວັນໃນຕະຫຼາດຫຼັກຊັບລາວ ເຫັນວ່າ ທຸລະກຳການ ຊື້-ຂາຍ ຍັງມີໜ້ອຍ ເມື່ອທຽບໃສ່ປະເທດໃກ້ຄຽງ.

ສະນັ້ນ, ເພື່ອເພີ່ມສະພາບຄ່ອງຂອງການຊື້-ຂາຍຮຸ້ນຂອງ ທຄຕລ ໃນຕະຫຼາດຫຼັກຊັບລາວ ແລະ ເພື່ອເຮັດໃຫ້ນັກ ລົງທຶນສາມາດເຂົ້າເຖິງຮຸ້ນຂອງ ທຄຕລ ໄດ້ຫຼາຍຂຶ້ນ ດ້ວຍລາຄາທີ່ຖືກລົງ ແຕ່ໃນຂະນະດຽວກັນມູນຄ່າຫຼັກຊັບຕາມ ລາຄາຕະຫຼາດຍັງຄົງເດີມ ທຄຕລ ຈຶ່ງໄດ້ຄົ້ນຄວ້າໂດຍສົມທົບກັບຜູ້ຄຸ້ມຄອງທີ່ກ່ຽວຂ້ອງ ໃນການປ່ຽນແປງມູນຄ່າກຳນົດ ຮຸ້ນ ຫຼື ມູນຄ່າໜ້າຮຸ້ນ (Par Value) ຂອງ ທຄຕລ ໂດຍການແຕກຮຸ້ນອອກ (Stock Split) ຕາມອັດຕາສ່ວນ 1/5 ໝາຍຄວາມວ່າຈາກເດີມລາຄາ 5.000 ກີບ/ຮຸ້ນ ເປັນລາຄາ 1.000 ກີບ/ຮຸ້ນ, ເຮັດໃຫ້ຈຳນວນຮຸ້ນຂອງ ທຄຕລ ເພີ່ມ ຂຶ້ນຈາກເດີມ 207.723.300 ຮຸ້ນ ເປັນ 1.038.616.500 ຮຸ້ນ ໂດຍທຶນຈົດທະບຽນຍັງຄົງເທົ່າເດີມ, ມູນຄ່າຫຼັກຊັບຕາມ ລາຄາຕະຫຼາດບໍ່ມີການປ່ຽນແປງ ແລະ ຍັງຄົງຮັກສາສັດສ່ວນການຖືຄອງຮຸ້ນຂອງຜູ້ຖືຮຸ້ນໄວ້ຕາມເດີມ.

ຄຳເຫັນຂອງສະພາບໍລິຫານ:

ສະພາບໍລິຫານໄດ້ພິຈາລະນາແລ້ວ ແລະ ເຫັນດີສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາຮັບຮອງເອົາ.

ຄະແນນສຽງທີ່ຕ້ອງໃຊ້:

ວາລະນີ້ ຈະຖືກຮັບຮອງດ້ວຍມະຕິສະເພາະທີ່ມີຄະແນນສຽງເຫັນດີຢ່າງໜ້ອຍ 2/3 ຂອງຈຳນວນສຽງທີ່ເຂົ້າ ຮ່ວມກອງປະຊຸມ ແລະ ບໍ່ຫຼຸດ 80% ຂອງຮຸ້ນ ທຄຕລ ທັງໝົດ.

ວາລະທີ 8: ພິຈາລະນາ ແລະ ຮັບຮອງ ການປັບປຸງກົດລະບຽບຂອງ ທຄຕລ (ເອກະສານຄັດຕິດ 7)

ເນື່ອງຈາກ ທຄຕລ ໄດ້ປັບປຸງໂຄງສ້າງຂອງຄະນະກຳມະການທີ່ຂຶ້ນກັບສະພາບໍລິຫານ ຈາກເດີມ 5 ມາເປັນ 4 ຄະນະກຳມະການ ເພື່ອໃຫ້ມີຄວາມກະທັດຮັດ, ຮັບປະກັນຄວາມຄ່ອງຕົວໃນການດຳເນີນງານຂອງຄະນະກຳມະການ ເຊິ່ງການປັບປຸງໂຄງສ້າງດັ່ງກ່າວໄດ້ຮັບການເຫັນດີຈາກຜູ້ຄຸ້ມຄອງທີ່ກ່ຽວຂ້ອງແລ້ວ ແລະ ສືບເນື່ອງຈາກ ທຄຕລ ໄດ້ສະເໜີການປ່ຽນແປງມູນຄ່າກຳນົດຮຸ້ນຂອງ ທຄຕລ ຕາມການສະເໜີໃນວາລະຂ້າງເທິງຜ່ານມານັ້ນ.

ດ້ວຍເຫດນີ້ ຈຶ່ງຈຳເປັນຕ້ອງໄດ້ປັບປຸງເນື້ອໃນບາງມາດຕາຂອງກົດລະບຽບຂອງ ທຄຕລ ທີ່ຕິດພັນກັບຮຸ້ນ ແລະ ຄະນະກຳມະການສະພາບໍລິຫານ ໃຫ້ມີຄວາມສອດຄ່ອງກັບການປ່ຽນແປງດັ່ງກ່າວ. ການປັບປຸງກົດລະບຽບໃນເທື່ອນີ້ ຈະເຮັດໃຫ້ກົດລະບຽບຂອງ ທຄຕລ ຍັງຄົງເຫຼືອ 72 ມາດຕາ ຈາກເດີມ 73 ມາດຕາ ເນື່ອງຈາກການປັບປຸງໂຄງສ້າງຂອງ ຄະນະກຳມະການທີ່ຂຶ້ນກັບສະພາບໍລິຫານ ຕາມທີ່ລະບຸໄວ້ຂ້າງເທິງ.

ການປັບປຸງກົດລະບຽບເທື່ອນີ້ ນອກຈາກຄວາມຈຳເປັນຂ້າງເທິງນີ້ແລ້ວ ຍັງມີຄວາມຈຳເປັນສຳລັບການປະກອບເອກະສານ ເພື່ອດຳເນີນຂັ້ນຕອນແຈ້ງການປ່ຽນແປງມູນຄ່າກຳນົດຮຸ້ນ ຕໍ່ຜູ້ຄຸ້ມຄອງກ່ຽວຂ້ອງ.

ຄຳເຫັນຂອງສະພາບໍລິຫານ:

ສະພາບໍລິຫານໄດ້ພິຈາລະນາແລ້ວ ແລະ ເຫັນດີສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາຮັບຮອງເອົາ.

ຄະແນນສຽງທີ່ຕ້ອງໃຊ້:

ວາລະນີ້ ຈະຖືກຮັບຮອງດ້ວຍມະຕິສະເພາະ ທີ່ມີຄະແນນສຽງເຫັນດີຢ່າງໜ້ອຍ 2/3 ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ ແລະ ບໍ່ຫຼຸດ 80% ຂອງຮຸ້ນ ທຄຕລ ທັງໝົດ.

ສຳນັກງານໃຫຍ່

ເລກທີ: 15 /ທຄຕລ ..ສນຍ.....
ນະຄອນຫຼວງວຽງຈັນ, ວັນທີ: .....10 MAY 2023.....

ບົດບັນທຶກ
ກອງປະຊຸມສາມັນຜູ້ຖືຮຸ້ນ ທຄຕລ ປະຈຳປີ 2022.
ວັນທີ 27/04/2023

ກອງປະຊຸມສາມັນຜູ້ຖືຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ປະຈຳປີ 2022 (ຕໍ່ໄປນີ້ຮຽກວ່າ: "ກອງປະຊຸມ") ໄດ້ຈັດຂຶ້ນໃນເວລາ 14:30 ໂມງ ຂອງວັນທີ 27 ເມສາ 2023 ທີ່ໂຮງແຮມລາວ ພລາຊາ ນະຄອນຫຼວງວຽງຈັນ, ໂດຍການເປັນປະທານຂອງ ທ່ານ ຄຳສຸກ ສຸນດາລາ, ຮັກສາການປະທານສະພາ ບໍລິຫານ ທຄຕລ ພ້ອມດ້ວຍສະມາຊິກສະພາບໍລິຫານ ທຄຕລ, ມີຜູ້ຖືຮຸ້ນເຂົ້າຮ່ວມດ້ວຍຕົນເອງຈຳນວນ 35 ທ່ານ , ຜູ້ມອບສິດຈຳນວນ 154 ທ່ານ ຊຶ່ງລວມຈຳນວນຮຸ້ນທັງໝົດທີ່ເຂົ້າຮ່ວມກອງປະຊຸມເທົ່າກັບ 158.143.510 ຮຸ້ນ , ນັບທັງ 21.822.227 ຮຸ້ນ ທີ່ຖືກມອບສິດ, ບັນລຸອັດຕາສ່ວນ 76,132% ຂອງຈຳນວນຮຸ້ນ ທຄຕລ ທັງໝົດ ແລະ ຖືວ່າຄົບອົງປະຊຸມ ເພື່ອໃຫ້ສາມາດດຳເນີນກອງປະຊຸມໄດ້ຕາມກົດລະບຽບຂອງ ທຄຕລ ແລະ ກົດໝາຍທີ່ ກ່ຽວຂ້ອງ. ສຳລັບຮຸ້ນທີ່ບໍ່ໄດ້ເຂົ້າຮ່ວມກອງປະຊຸມ ມີຈຳນວນ 49.579.790 ຮຸ້ນ ເທົ່າກັບ 23,868% ຂອງ ຈຳນວນຮຸ້ນ ທຄຕລ ທັງໝົດ.

ຄະນະປະທານ ແລະ ສະມາຊິກສະພາບໍລິຫານທີ່ເຂົ້າຮ່ວມກອງປະຊຸມ ປະກອບມີ:

1. ທ່ານ ຄຳສຸກ ສຸນດາລາ, ສະມາຊິກສະພາບໍລິຫານອິດສະຫຼະ, ຮອງປະທານ, ຮັກສາການປະທານສະພາ ບໍລິຫານ ເຮັດໜ້າທີ່ເປັນປະທານກອງປະຊຸມ;
2. ທ່ານ ບຸນປອນ ວັນນະຈິດ, ຮອງລັດຖະມົນຕີກະຊວງການເງິນ;
3. ທ່ານ ນ. ສາຍສະໝອນ ຈັນທະຈັກ, ຜູ້ອຳນວຍການ ທຄຕລ, ສະມາຊິກສະພາບໍລິຫານ;
4. ທ່ານ ປະສົມເພັດ ຄຳຕັນ, ສະມາຊິກສະພາບໍລິຫານ;
5. ທ່ານ ຣສຈ. ທອງເພັດ ຈັນທະນີວົງ, ສະມາຊິກສະພາບໍລິຫານອິດສະຫຼະ;
6. ທ່ານ ສອນໄຊ ສີລາເພັດ, ສະມາຊິກສະພາບໍລິຫານອິດສະຫຼະ;
7. ທ່ານນາງ ລັດດາວັນ ຊົງວິໄລ, ສະມາຊິກສະພາບໍລິຫານອິດສະຫຼະ.
8. ທ່ານ ວຽງສຸກ ຈຸນທະວົງ, ຮອງຜູ້ອຳນວຍການ, ສະມາຊິກສະພາບໍລິຫານ;

ປະທານກອງປະຊຸມ ໄດ້ແນະນຳລະບຽບການດຳເນີນກອງປະຊຸມ ແລະ ວິທີລົງຄະແນນສຽງ. ຈາກນັ້ນ ກອງປະຊຸມຈຶ່ງໄດ້ດຳເນີນແຕ່ລະວາລະຕາມລຳດັບ.

ກອງປະຊຸມ ໄດ້ພິຈາລະນາ, ມີຄຳເຫັນ ແລະ ມີການຕົກລົງໃນແຕ່ລະວາລະດັ່ງນີ້:

ວາລະທີ 1: ຮັບຮອງບົດບັນທຶກກອງປະຊຸມຜູ້ຖືຮຸ້ນສະໄໝວິສາມັນ ທຄຕລ ປະຈຳປີ 2022

ທ່ານ ນ. ສາຍສະໝອນ ຈັນທະຈັກ, ຜູ້ອຳນວຍການ ທຄຕລ ໄດ້ລາຍງານຕໍ່ກອງປະຊຸມວ່າບົດບັນທຶກກອງ ປະຊຸມຜູ້ຖືຮຸ້ນສະໄໝວິສາມັນຂອງ ທຄຕລ ປະຈຳປີ 2022 ໄດ້ຈັດຂຶ້ນໃນວັນທີ 22 ພະຈິກ 2022 ເຊິ່ງບົດບັນທຶກ ດັ່ງກ່າວ ໄດ້ຖືກເປີດເຜີຍຢ່າງສອດຄ່ອງກັບກົດລະບຽບທີ່ກ່ຽວຂ້ອງແລ້ວ, ສະເໜີກອງປະຊຸມ ພິຈາລະນາຮັບຮອງເອົາ ບົດບັນທຶກດັ່ງກ່າວ.

ເລກທີ 01, ຖະໜົນ: ປາງຄຳ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ: 2925, ໂທລະສັບ: (856-21) 213200-1, 222495, 217904, 217898-9
ແຟັກ: (856-21) 213202, 223012, 223245, Website: http:/www.bcel.com.la, E-mail: bcelhqv@bcel.com.la, SWIFT Code: COEBLALA

ປະທານກອງປະຊຸມ ໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນມີຄຳຖາມທີ່ກ່ຽວຂ້ອງກັບວາລະນີ້ ແຕ່ບໍ່ມີຄຳຖາມໃດໆ.

ກອງປະຊຸມ ໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີຈຳນວນ: 158.143.510 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈຳນວນ: 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 2: ພິຈາລະນາ ແລະ ຮັບຮອງບົດລາຍງານຜົນການດຳເນີນງານ ແລະ ເອກະສານລາຍງານການເງິນຂອງ ທຄຕລ ປະຈຳປີ 2022

ທ່ານ ນ. ສາຍສະໝອນ ຈັນທະຈັກ, ຜູ້ອຳນວຍການ ທຄຕລ ໄດ້ລາຍງານໃຫ້ກອງປະຊຸມຮັບຊາບ ກ່ຽວກັບ ຜົນການດຳເນີນງານ ແລະ ເອກະສານລາຍງານການເງິນຂອງ ທຄຕລ ປະຈຳປີ 2022 ທີ່ຜ່ານການກວດສອບແລ້ວ ເຊິ່ງມີຕົວເລກສຳຄັນດັ່ງນີ້:

- ຍອດຊັບສິນ: 94.493.015 ລ້ານກີບ, ທຽບໃສ່ແຜນການປີ 2022 ປະຕິບັດໄດ້ 130%;
- ຍອດສິນເຊື່ອທັງໝົດ: 42.808.801 ລ້ານກີບ, ທຽບໃສ່ແຜນການປີ 2022 ປະຕິບັດໄດ້ 135%;
- NPL: 3,36%;
- ຍອດເງິນຝາກທັງໝົດ: 86.782.335 ລ້ານກີບ, ທຽບໃສ່ແຜນການປີ 2022 ປະຕິບັດໄດ້ 131%;
- ທຶນ: 2.357.960 ລ້ານກີບ, ທຽບໃສ່ແຜນການປີ 2022 ປະຕິບັດໄດ້ 95%;
- ກຳໄລກ່ອນອາກອນ: 197.079 ລ້ານກີບ, ທຽບໃສ່ແຜນການປີ 2022 ປະຕິບັດໄດ້ 334%;
- ກຳໄລຫຼັງອາກອນ: 228.190 ລ້ານກີບ, ທຽບໃສ່ແຜນການປີ 2022 ປະຕິບັດໄດ້ 483%;

ຈາກນັ້ນ ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນມີຄຳຖາມຕໍ່ວາລະນີ້ ເຊິ່ງມີຄຳເຫັນ ແລະ ຄຳຖາມດັ່ງນີ້:

❖ **ທ່ານ ອັງ ບຸດ, ຈາກທະນາຄານແຄນນາເດຍ**: ຊັບສິນລໍຖ້າຂາຍທີ່ສະແດງຢູ່ໃນຖານະການເງິນຂອງ ທຄຕລ ທີ່ຈຳນວນຂ້ອນຂ້າງສູງ ຊັບສິນເຫຼົ່ານີ້ມາຈາກໃສ ແລະ ທຄຕລ ມີແຜນແກ້ໄຂແນວໃດ?

➢ **ທ່ານ ນ. ສາຍສະໝອນ ຈັນທະຈັກ**, ຜູ້ອຳນວຍການ ທຄຕລ ຊີ້ແຈງ:

- ຊັບສິນລໍຖ້າຂາຍໄດ້ມາຈາກການຮັບເອົາຫຼັກຊັບຈາກລູກຄ້າສິນເຊື່ອທີ່ເປັນ ໜີ້ເສຍ, ເຊິ່ງການແກ້ໄຂໜີ້ເສຍ ຂອງ ທຄຕລ ປະຕິບັດຫຼາຍຮູບການເຊັ່ນ: ເກັບເປັນເງິນສົດ, ເຈລະຈາກັບລູກຄ້າແລະເກັບໜີ້ຈາກລາຍຮັບສຳຮອງ, ບາງລາຍມີການປັບປຸງໂຄງສ້າງໜີ້, ເຈລະຈາໃຫ້ລູກຄ້າມອບຫຼັກຊັບໃຫ້ ທຄຕລ ແລະ ອື່ນໆ. ໃນນີ້ລູກຄ້າເງິນກູ້ບາງລາຍ ກໍ່ເຫັນດີມອບຫຼັກຊັບໃຫ້ ທຄຕລ ເພື່ອລ້າງໜີ້;
- ທຄຕລ ໄດ້ມີຍຸດທະສາດເພື່ອຂາຍຫຼັກຊັບທີ່ໄດ້ຮັບຈາກລູກຄ້າອອກໃຫ້ໄວທີ່ສຸດ ພະຍາຍາມຂາຍອອກພາຍໃນ 1 ປີ ເພາະການຮັບຫຼັກຊັບຕິດພັນກັບຄ່າໃຊ້ຈ່າຍຕ່າງໆເຊັ່ນ: ຄ່າໃຊ້ຈ່າຍໃນການໂອນກຳມະສິດ ແລະ ກົດໝາຍ ກຳນົດບໍ່ໃຫ້ໂອນຊັບສິນມາເປັນຂອງ ທຄຕລ.
- ໃນການຂາຍຫຼັກຊັບຄ້ຳປະກັນອອກ ບາງກໍລະນີຂາຍມີກຳໄລ, ເທົ່າທຶນ ຫຼື ຫຼຸບທຶນແລ້ວແຕ່ກໍລະນີ, ທຄຕລ ໄດ້ສົມທົບກັບບໍລິສັດອະສັງຫາລິມະຊັບ ແລະ ປະຕິບັດຫຼາຍວິທີການເພື່ອການຂາຍ; ທ້າຍປີ 2022 ເປັນຕົ້ນມາ ການແກ້ໄຂໄດ້ຫຼາຍສົມຄວນ.

ກອງປະຊຸມ ໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີຈຳນວນ: 158.143.510 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈຳນວນ: 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 3: ພິຈາລະນາ ແລະ ຮັບຮອງການຈັດສັນກຳໄລ ປະຈຳປີ 2022:

ທ່ານ ນ. ສາຍສະໝອນ ຈັນທະຈັກ, ຜູ້ອຳນວຍການ ທຄຕລ ໄດ້ສະເໜີກອງປະຊຸມ ພິຈາລະນາ ແລະ ຮັບຮອງ ການຈັດສັນກຳໄລປະຈຳປີ 2022 ດັ່ງນີ້:

- ແບ່ງເຂົ້າຄັງສະສົມຕາມລະບຽບການ: **10%**;
- ຈ່າຍເງິນປັນຜົນ: **100 ກີບ/ຮຸ້ນ**;
- ແບ່ງສ່ວນທີ່ເຫຼືອເຂົ້າຄັງຂະຫຍາຍທຸລະກິດ;
- ມື້ຈ່າຍເງິນປັນຜົນ: **12/05/2023.**
- ຜູ້ຖືຮຸ້ນທີ່ມີສິດໄດ້ຮັບເງິນປັນຜົນ ອີງຕາມການປິດປຶ້ມບັນຊີຜູ້ຖືຮຸ້ນ ວັນທີ 21 ເມສາ 2023.

ຈາກນັ້ນ ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນມີຄຳຖາມຕໍ່ວາລະນີ້ ເຊິ່ງມີຄຳເຫັນ ແລະ ຄຳຖາມດັ່ງນີ້:

❖ **ທ່ານ ຮວາ ຊຶ ບິນ (Huang Xue Bin)**: ການປັນຜົນປະຈຳປີ 2022 ທຽບກັບຜົນກຳໄລ ແລະ ທຽບກັບການ ຈ່າຍປັນຜົນໃນໄລຍະຜ່ານມາຖືວ່າຕ່ຳ, ນະໂຍບາຍເງິນປັນຜົນ ທຄຕລ ໃນປີ 2023 ຈະມີການປັນຜົນຄືແນວໃດ?

➢ **ທ່ານ ນ. ສາຍສະໝອນ ຈັນທະຈັກ**, ຜູ້ອຳນວຍການ ທຄຕລ ຊີ້ແຈງ:

– ນັກລົງທຶນທີ່ຖືຮຸ້ນ ທຄຕລ ແຕ່ເລີ່ມຕົ້ນເຂົ້າຕະຫຼາດຫຼັກຊັບລາວ ຈະເຫັນວ່າຮຸ້ນ ທຄຕລ ມີການຈ່າຍເງິນປັນຜົນ ດີຫຼາຍ, ຜູ້ຖືຮຸ້ນສ່ວນຫຼາຍກໍ່ຍັງມີຄວາມເຊື່ອໝັ້ນຕໍ່ ທຄຕລ ແລະ ຍັງຖືຮຸ້ນ ທຄຕລ. ໃນປີ 2021 ທີ່ ທຄຕລ ບໍ່ມີການຈ່າຍເງິນປັນຜົນ ເຊິ່ງກໍ່ມີຫຼາຍເຫດຜົນໃນການບໍ່ປັນຜົນ. ສຳລັບປີ 2022 ຄະນະບໍລິຫານ ທຄຕລ ສະເໜີຈ່າຍເງິນປັນຜົນ ເພື່ອເປັນການສ້າງຄວາມເຊື່ອໝັ້ນຕໍ່ຜູ້ຖືຮຸ້ນ ທຄຕລ ເຖິງວ່າຈະເປັນຈຳນວນບໍ່ສູງ; ສຳຫຼັບປີ 2023 ບໍ່ທັນສາມາດເວົ້າໄດ້ວ່າຈະປັນເທົ່າໃດ ແຕ່ຄະນະອຳນວຍການ ທຄຕລ ຂໍໃຫ້ຄຳໝັ້ນສັນຍາຕໍ່ຜູ້ຖືຮຸ້ນວ່າ ຈະພະຍາຍາມເຮັດໃຫ້ດີທີ່ສຸດ, ຈະພະຍາຍາມໃຫ້ມີເງິນປັນຜົນດີກວ່າປີ 2022. ຈາກຂໍ້ມູນຜົນການດຳເນີນ ງານຂອງ ທຄຕລ ປະຈຳໄຕມາດ 1/2023 ກໍ່ມີຜົນການດຳເນີນງານທີ່ດີ.

ກອງປະຊຸມ ໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

– ເຫັນດີຈຳນວນ: 158.088.510 ສຽງ, ເທົ່າກັບ 99,965% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງ ປະຊຸມ.
– ບໍ່ເຫັນດີຈຳນວນ: 55.000 ສຽງ, ເທົ່າກັບ 0,035% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 4: ພິຈາລະນາ ແລະ ຮັບຮອງເອົາແຜນການປີ 2023

ທ່ານ ນ. ສາຍສະໝອນ ຈັນທະຈັກ, ຜູ້ອຳນວຍການ ທຄຕລ ໄດ້ສະເໜີກອງປະຊຸມ ພິຈາລະນາ ແລະ ຮັບຮອງແຜນການປະຈຳປີ 2023 ເຊິ່ງມີບາງຄາດໝາຍຕົວເລກສຳຄັນທຽບໃສ່ຕົວເລກການປະຕິບັດປີ 2022 ມີດັ່ງ ນີ້:

- **ຍອດຊັບສິນ:** ບໍ່ຫຼຸດ 99.476.000 ລ້ານກີບ ທຽບໃສ່ປະຕິບັດປີ 2022 ເພີ່ມຂຶ້ນ 5%;
- **ເງິນຝາກ:** ບໍ່ຫຼຸດ 91.000.000 ລ້ານກີບ ທຽບໃສ່ປະຕິບັດປີ 2022 ເພີ່ມຂຶ້ນ 5%;
- **ເງິນກູ້:** ບໍ່ຫຼຸດ 50.050.000 ລ້ານກີບ ທຽບໃສ່ປະຕິບັດປີ 2022 ເພີ່ມຂຶ້ນ 17% ຫຼື ຍອດເງິນກູ້ໃຫ້ ກວມອັດຕາສ່ວນບໍ່ຫຼຸດ 55% ຂອງຍອດເງິນຝາກທັງໝົດ;
- **NPL:** ບໍ່ເກີນ 3,50%;
- **ທຶນ:** 2.740.000 ລ້ານກີບ ທຽບໃສ່ປະຕິບັດປີ 2022 ເພີ່ມຂຶ້ນ 16%;

- **ກຳໄລ ກ່ອນອາກອນ:** 250.000 ລ້ານກີບ ທຽບໃສ່ປະຕິບັດປີ 2022 ເພີ່ມຂຶ້ນ 27%;
- **ກຳໄລສຸດທິ (ຫຼັງຫັກອາກອນ):** 200.000 ລ້ານກີບ;
- ແຜນຂະຫຍາຍຕາໜ່າງບໍລິການ 05 ແຫ່ງ;
- ແຜນປະກອບອັດຕູເຕັກນິກ, ກໍ່ສ້າງ ແລະ ສ້ອມແປງ ແມ່ນຈະເນັ້ນໃສ່ສືບຕໍ່ບັນດາໂຄງການທີ່ຍັງບໍ່ສຳເລັດ ປ່ຽນແທນສິ່ງເກົ່າທີ່ເປ່ເພ ແລະ ປະກອບເພີ່ມໃໝ່ສິ່ງທີ່ຈຳເປັນ ລວມທັງໝົດ 304 ຕື້ກີບ;

ຈາກນັ້ນ ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນມີຄຳຖາມຕໍ່ວາລະນີ້ ເຊິ່ງມີຄຳເຫັນ ແລະ ຄຳຖາມດັ່ງນີ້:

❖ **ທ່ານ ໂສວັນນະລິດ ອິມ (Mr Sovanrith Im)** ຈາກທະນາຄານແຄນນາເດຍ: ຕໍ່ກັບແຜນປະຈຳປີ 2023 ຂອງ ທຄຕລ ເຫັນວ່າຕົວເລກການຂະຫຍາຍເງິນກູ້ຕ່ຳ, ຍ້ອນຫຍັງ?.

➢ **ທ່ານ ນ. ສາຍສະໝອນ ຈັນທະຈັກ**, ຜູ້ອຳນວຍການ ທຄຕລ ຊີ້ແຈງ:

– ເບິ່ງແບບຜິວເຜີນແຜນການຂະຫຍາຍເງິນກູ້ອາດຈະຄ້າຍຄືຕ່ຳ ຍ້ອນການວາງແຜນ ປີ 2023 ທຄຕລ ຈະເນັ້ນ ການແກ້ໄຂໜີ້ເສຍໃຫ້ຫຼາຍເທົ່າທີ່ຈະເຮັດໄດ້, ແຜນແກ້ໄຂ NPL 1.000 ຕື້ກີບ. ແຕ່ໃນນັ້ນ ກໍຍັງຈະສືບຕໍ່ ປ່ອຍກູ້ໃໝ່ໄປຄຽງຄູ່ກັນ, ການຂຶ້ນແຜນໂດຍເບິ່ງຄວາມອາດສາມາດຕົວຈິງຂອງ ທຄຕລ ທີ່ເຫັນວ່າຍັງຈະປະ ເຊີນກັບຫຼາຍບັນຫາພາຍນອກພາຍໃນ ແລະ ຄູ່ແຂ່ງ; ປີ 2022 ອັດຕາສ່ວນການປ່ອຍກູ້ທຽບໃສ່ຍອດເງິນຝາກ ລວມປະມານ 47%, ໃນແຜນປີ 2023 ອັດຕາສ່ວນການປ່ອຍກູ້ທຽບໃສ່ຍອດເງິນຝາກຈະບໍ່ໃຫ້ຫຼຸດ 55%;

❖ **ທ່ານ ໄກວັນ ກາດາວານິດ** ຈາກສະມາຄົມຜູ້ຖືຮຸ້ນໄທ ມີຄຳເຫັນ ແລະ ຄຳຖາມ ດັ່ງນີ້:

– ສະແດງຄວາມຊົມເຊີຍຕໍ່ການກະກຽມເອກະສານກອງປະຊຸມທີ່ເຮັດໄດ້ດີຫຼາຍ ທັງສະບັບພາສາລາວ ແລະ ພາສາອັງກິດ, ມີເນື້ອໃນກວມເອົາປະເດັນສຳຄັນ ແລະ ບໍ່ຍາວຫຼືສັ້ນເກີນໄປ;

– ສຳລັບຕິດພັນກັບແຜນປີ 2023 ເຫັນວ່າມີບາງຈຸດທີ່ບໍ່ຕ້ອງໃຊ້ເງິນທຶນໃນການພັດທະນາ ຫຼື ການລົງທຶນໄປ ແລ້ວແຕ່ຍັງບໍ່ທັນນຳໃຊ້ຢ່າງຄຸ້ມຄ່າ ເຊັ່ນ: ການໂຄສະນາປະຊາສຳພັນຜະລິດຕະພັນຂອງ ທຄຕລ ຄວນເຮັດໃຫ້ ກວ້າງຂວາງຫຼາຍຂຶ້ນ, ຕົວຢ່າງ ຜະລິດຕະພັນບັດວີຊາເຄຼດິດຂອງ ທຄຕລ ທີ່ສາມາດເຂົ້າໃຊ້ບໍລິການຫ້ອງ ຮັບຮອງສະໜາມບິນ ພຽງແຕ່ລູກຄ້າຕ້ອງຊື້ປະກັນໄພກັບທະນາຄານ ເຊິ່ງຂໍ້ມູນນີ້ຄວນໂຄສະນາໃຫ້ລູກຄ້າໄດ້ ຮັບຊາບ, ຈະເປັນການຊ່ວຍກະຕຸ້ນລາຍຮັບຈາກການຂາຍປະກັນໄພ ແລະ ການອອກບັດເຄຣດິດ;

– ທະນາຄານໄດ້ ພັດທະນາລະບົບ ເຊິ່ງອະນຸຍາດໃຫ້ການຊຳລະດ້ວຍບັດທີ່ມີວົງເງິນບໍ່ສູງ ໂດຍ ທີ່ລູກຄ້າບໍ່ຕ້ອງ ເຊັນໃສ່ໃບຊຳລະ, ແຕ່ການປະຕິບັດຢູ່ບັນດາຮ້ານຄ້າຍັງບໍ່ທັນຕອບຮັບກະແສໄດ້ດີເທື່ອ;

– ບາງຂໍ້ແນະນຳ ກ່ຽວກັບ ພາບພົດຂອງທະນາຄານຕໍ່ກັບສາທົນ: ການນຳໃຊ້ເຄື່ອງໝາຍຈ້ຳ, ເຄື່ອງໝາຍຈຸດ ໃນ ການສະແດງຕົວເລກຜົນການດຳເນີນງານຂອງ ທຄຕລ ຄວນນຳໃຊ້ຕາມວິທີຂອງສາທົນ ເຊັ່ນ: ເຄື່ອງໝາຍຈ້ຳ ຄວນໃຊ້ຂັ້ນຕົວເລກເສດ, ສ່ວນຫົວພັນ ກໍ່ຄວນນຳໃຊ້ເຄື່ອງໝາຍຈຸດ. ກໍລະນີການຂຽນແຊັກລູກຄ້າອາດຈະ ເປັນພາສາອັງກິດ ແລະ ນຳໃຊ້ເຄື່ອງໝາຍຂັ້ນຈຳນວນຕາມສາທົນແຊັກ ເຊິ່ງກໍລະນີນີ້ແຊັກກໍ່ບໍ່ຄວນຖືກ ປະຕິເສດເພາະນຳໃຊ້ເຄື່ອງໝາຍຕາມຫຼັກສາທົນ;

– ຫຼາຍປະເທດໄດ້ຖືເອົາການປົກປິດເອກະສານຄ່າທຳນຽມເປັນຄວາມຜິດຕາມກົດໝາຍ. ກໍລະນີຂອງ ທຄຕລ ຕາຕະລາງຄ່າທຳນຽມ ແມ່ນ ມີຢູ່ໃນເວບໄຊແລ້ວ, ແຕ່ໃນຕົວຈິງເຫັນວ່າພະນັກງານບາງຄົນຍັງເຂົ້າໃຈວ່າ ຕາຕະລາງດັ່ງກ່າວເປັນຄວາມລັບ ໂດຍບອກກັບລູກຄ່າວ່າບອກຄ່າທຳນຽມໄດ້ ແຕ່ໃຫ້ເບິ່ງບໍ່ໄດ້. ຄວາມເຂົ້າໃຈ ຂອງພະນັກງານໃນລັກສະນະນີ້ ເປັນສິ່ງທີ່ບໍ່ຖືກຕ້ອງ ແລະ ກະທົບຕໍ່ພາບພົດຂອງທະນາຄານ. ລູກຄ້າມີຂໍ້ມູນ ວ່າຈະຕ້ອງເສຍຄ່າທຳນຽມເທົ່າໃດ ເພື່ອຕັດສິນໃຈເຮັດທຸລະກຳ ຫຼື ໃຊ້ບໍລິການໃດທີ່ເໝາະສົມ;

- ສະເໜີໃຫ້ອຳນາດແກ່ພະນັກງານທີ່ດູແລລູກຄ້າຢູ່ດ່ານໜ້າ (Front Office) ໃນກໍລະນີບໍ່ສາມາດແກ້ໄຂບັນຫາໃຫ້ລູກຄ້າໄດ້ ແມ່ນໃຫ້ສາມາດຕິດຕໍ່ກັບພະນັກງານໄອທີເພື່ອລົມກັບລູກຄ້າທີ່ເຮັດທຸລະກຳໄດ້ໂດຍກົງ ເຊັ່ນ: ກໍລະນີທີ່ພະນັກງານດັ່ງກ່າວໄດ້ພະຍາຍາມແກ້ໄຂໃຫ້ລູກຄ້າແລ້ວແຕ່ບໍ່ສຳເລັດ 3 ຄັ້ງ, ເນື່ອງຈາກຜ່ານມາຕົນເຄີຍໃຫ້ພະນັກງານພະຍາຍາມແກ້ໄຂບັນຫາເມນູ Approve Merchant ໃນແອັບ BCEL One ເຖິງ 7 ຄັ້ງ ແຕ່ກໍ່ຍັງບໍ່ສຳເລັດ ແລະ ຕໍ່ໜ້າໄປ ກໍອາດຈະຍັງມີບັນຫາລັກສະນະນີ້ຕື່ມອີກ ເຊິ່ງອາດຈະເຮັດໃຫ້ຍອດຂາຍ ທຄຕລ ບໍ່ເພີ່ມ ແລະ ແຜນການກໍອາດຈະປະຕິບັດບໍ່ສຳເລັດ;

➢ **ທ່ານ ນ. ສາຍສະໝອນ ຈັນທະຈັກ**, ຜູ້ອຳນວຍການ ທຄຕລ:

- ການຂັ້ນຫົວໜ່ວຍຫຼັກພັນຂອງລາວຕ່າງກັບຫຼັກສາກົນ, ທຄຕລ ປະຕິບັດຕາມກົດໝາຍບັນຊີຂອງ ສປປ ລາວ ແລະ ແຈ້ງການຈາກ ທຫລ ທີ່ໃຫ້ທະນາຄານທຸລະກິດຈັດຕັ້ງປະຕິບັດຕາມກົດໝາຍບັນຊີລາວ ເຊິ່ງໃຊ້ເຄື່ອງໝາຍຈ້ຳຂັ້ນຫົວພັນ ແລະ ໃຊ້ເຄື່ອງໝາຍຈຸດຂັ້ນເລກເສດ.

❖ **ທ່ານ ໄກອັນ ກາດາອານິດ** ຈາກສະມາຄົມຜູ້ຖືຮຸ້ນໄທ ມີຄຳເຫັນຕື່ມ: ກໍລະນີເອກະສານເປັນພາສາອັງກິດທີ່ນຳສະເໜີສູ່ສາກົນ ກໍ່ຄວນປະຕິບັດຕາມຫຼັກການສາກົນ. ອີງຕາມຂໍ້ມູນທີ່ໄດ້ຊາບມາ ເຫັນວ່າ ທຄຕລ ກໍ່ມີແຈ້ງການພາຍໃນບອກວ່າ ໃຫ້ປະຕິບັດຢ່າງຖືກຕ້ອງທັງຕາມຫຼັກການຂອງສາກົນ ແລະ ຫຼັກການຂອງລາວ ຂຶ້ນກັບວ່າ ເອກະສານນັ້ນ ເປັນພາສາອັງກິດ ຫຼື ພາສາລາວ. ແຕ່ເຫັນວ່າພະນັກງານຍັງບໍ່ທັນປະຕິບັດຕາມແຈ້ງການນີ້ເທົ່າທີ່ຄວນເທື່ອ, ຄວນເອົາໃຈໃສ່ຄວບຄຸມຕື່ມ.

➢ **ທ່ານ ນ. ສາຍສະໝອນ ຈັນທະຈັກ**, ຜູ້ອຳນວຍການ ທຄຕລ: ຂອບໃຈຕໍ່ກັບຄຳເຫັນ ແລະ ຄຳແນະນຳຕ່າງໆ ທຄຕລ ກໍ່ຈະນຳໄປພິຈາລະນາຄືນ, ສຳລັບຄຳເຫັນ ກ່ຽວກັບ ການເປີດເຜີຍຄ່າທຳນຽມນັ້ນ ກໍຈະນຳໄປຫາລືກັນຄືນພາຍໃນຕື່ມ. ສ່ວນບັນຫາທາງເຕັກນິກ ມອບໃຫ້ທ່ານ ນັນທະລາດ ແກ້ວປະເສີດ ຮອງຜູ້ອຳນວຍການ ທຄຕລ ຊ່ວຍຊີ້ແຈງ.

❖ **ທ່ານ ໄກອັນ ກາດາອານິດ** ຈາກສະມາຄົມຜູ້ຖືຮຸ້ນໄທ ມີຄຳເຫັນຕື່ມ: ອາດຈະໃຫ້ພະນັກງານພິມຂໍ້ມູນທີ່ມີໃນເວັບໄຊໃຫ້ລູກຄ້າ; ຖ້າມີບັນຫາໃດທີ່ພະພະນັກງານບໍ່ໝັ້ນໃຈ ໃຫ້ເຂົ້າເບິ່ງໃນເວັບໄຊ ເພາະວ່າບັນດາຂໍ້ມູນທີ່ລົງໄນເວັບໄຊແລ້ວ ຈະບໍ່ຖືເປັນຂໍ້ມູນທີ່ເປັນຄວາມລັບ.

➢ **ທ່ານ ນັນທະລາດ ແກ້ວປະເສີດ:** ການບໍລິການຕ່າງໆໃນແອັບ BCEL One ໂດຍມາດຕະຖານຈະເປັນໄປຕາມທີ່ໄດ້ຕັ້ງຄ່າໄວ້ໃນລະບົບ, ສ່ວນບັນຫາທີ່ມີຄຳເຫັນມານັ້ນ ລາຍລະອຽດຈະຂໍກວດກາ ແລະ ລົມກັນຕື່ມພາຍຫຼັງ.

❖ **ທ່ານ ຄຳໄຊ ບຸນມີສີດາວົງ**: ຕິດພັນກັບແຜນການປີ 2023, ໃນວາລະຜ່ານມາ ທ່ານ ຜູ້ອຳນວຍການໄດ້ຮັບປາກວ່າໃນປີ 2023 ຈະສູ້ຊົນໃຫ້ມີກຳໄລ ແລະ ປັນຜົນຫຼາຍຂຶ້ນ, ແຕ່ເຫັນວ່າຕົວເລກແຜນກຳໄລຫຼັງອາກອນປີ 2023 ທຽບກັບ ກຳໄລຫຼັງອາກອນຂອງປີ 2022 ເຫັນວ່າຕົວເລກຫຼຸດລົງ ເປັນຍ້ອນເຫດຜົນອັນໃດ.

➢ **ທ່ານ ນ. ສາຍສະໝອນ ຈັນທະຈັກ**, ຜູ້ອຳນວຍການ ທຄຕລ: ໃນປີ 2022 ທຄຕລ ມີລາຍຮັບຈາກອາກອນເຍື່ອນຊຳລະ ເຮັດໃຫ້ຕົວເລກກຳໄລຫຼັງອາກອນສູງກວ່າຕົວເລກກຳໄລກ່ອນອາກອນ, ສຳລັບໃນປີ 2023 ທຄຕລ ບໍ່ມີລາຍຮັບຈາກອາກອນເຍື່ອນຊຳລະ. ແຕ່ຕົວເລກກຳໄລໃນແຜນປີ 2023 ເມື່ອທຽບກັບ ກຳໄລທີ່ສາມາດປະຕິບັດໄດ້ຂອງປີ 2022 ແມ່ນເພີ່ມຂຶ້ນ. ສ່ວນການຈ່າຍເງິນປັນຜົນ ຫວັງວ່າຈະໄດ້ດີກວ່າປີ 2022.

ກອງປະຊຸມ ໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີຈຳນວນ: 158.143.510 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈຳນວນ: 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 5: ພິຈາລະນາ ແລະ ຮັບຮອງເອົາຜູ້ກວດສອບອິດສະຫຼະປະຈຳປີ 2023.

ທ່ານ ນ. ສາຍສະໝອນ ຈັນທະຈັກ, ຜູ້ອຳນວຍການ ທຄຕລ ໄດ້ສະເໜີກອງປະຊຸມ ຮັບຮອງເອົາ ບໍລິສັດ PWC ເປັນຜູ້ດຳເນີນການກວດສອບເອກະສານລາຍງານການເງິນ ປະຈຳປີ 2023, ມູນຄ່າບໍລິການກວດສອບ 816.850.000 ກີບ ແລະ ອອກບົດລາຍງານໃຫ້ ທຄຕລ:

- ລາຍງານການກວດສອບເອກະສານລາຍງານການເງິນ;
- ຈົດໝາຍຄຸ້ມຄອງເຖິງຜູ້ບໍລິຫານ;
- ບົດລາຍງານທົບທວນຄືນແບບວິເຄາະ;
- ບົດລາຍງານການທົບທວນຄືນຖານະເງິນກູ້.

ຈາກນັ້ນ ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນມີຄຳຖາມຕໍ່ວາລະນີ້ ແຕ່ບໍ່ມີຄຳເຫັນ ຫຼື ຄຳຖາມໃດໆ.

ກອງປະຊຸມ ໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີຈຳນວນ: 158.143.510 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈຳນວນ: 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 6: ພິຈາລະນາ ແລະ ຮັບຮອງ ການແຕ່ງຕັ້ງປະທານສະພາບໍລິຫານ ທຄຕລ

ທ່ານ ນ. ສາຍສະໝອນ ຈັນທະຈັກ, ຜູ້ອຳນວຍການ ທຄຕລ ໄດ້ສະເໜີກອງປະຊຸມ ຮັບຮອງການແຕ່ງຕັ້ງ **ທ່ານ ບຸນປອນ ອັນນະຈິດ**, ຮອງລັດຖະມົນຕີກະຊວງການເງິນ ເປັນປະທານສະພາບໍລິຫານ ທຄຕລ ຕາມຂໍ້ຕົກລົງເລກທີ 0561/ກງ, ລົງວັນທີ 21 ກຸມພາ 2023 ແລະ ຕາມມະຕິຂອງກອງປະຊຸມສະພາບໍລິຫານ ທຄຕລ ຄັ້ງ ວັນທີ 21 ມີນາ 2023.

ຈາກນັ້ນ ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນມີຄຳຖາມຕໍ່ວາລະນີ້ ແຕ່ບໍ່ມີຄຳເຫັນ ຫຼື ຄຳຖາມໃດໆ.

ກອງປະຊຸມ ໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີຈຳນວນ: 158.143.510 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈຳນວນ: 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ບັນຫາອື່ນໆ:

ປະທານກອງປະຊຸມ ໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນມີຄຳເຫັນ ຫຼື ຄຳຖາມຕໍ່ບັນຫາອື່ນໆທີ່ບໍ່ໄດ້ນອນຢູ່ໃນວາລະຂອງກອງປະຊຸມ ເຊິ່ງມີບາງຄຳເຫັນດັ່ງນີ້:

- **ທ່ານ ໄກອັນ ກາດາອານິດ**: ສະເໜີໃຫ້ ທຄຕລ ທົບທວນ ແລະ ແກ້ໄຂບັນຫາທີ່ລະບົບໄອທີ ແລະ ລະບຽບທີ່ບໍ່ກົງກັນ ເຊັ່ນ: ການອອກເລກບັດສອຍງາມມີຄ່າທຳນຽມ 100 ໂດລາ ໃນລະບຽບ ທຄຕລ ໃຫ້ອອກໄດ້ສະເພາະບັດສາກົນ ເຊິ່ງໃນຕົວຈິງບັດສາກົນມີທັງບັດ Credit ແລະ ບັດ Prepaid. ແຕ່ການອອກເລກສອຍງາມ ແມ່ນ ລະບົບເຮັດໃຫ້ສະເພາະບັດ Credit. ຖ້າການອອກເລກສອຍງາມໃຫ້ບັດ Prepaid ມັນຕິດຂັດຢູ່ລະບົບໄອທີ ກໍ່ຄວນຈະແກ້ໄຂລະບຽບໃຫ້ມັນຊັດເຈນ ເນື່ອງຈາກການທີ່ລະບຽບ ແລະ ລະບົບບໍ່ກົງກັນ ຈະເຮັດໃຫ້ພະນັກງານສັບສົນໄດ້. ສະນັ້ນ, ສະເໜີໃຫ້ທະນາຄານພິຈາລະນາຄືນວ່າຈະແກ້ລະບົບໃຫ້ຖືກກັບລະບຽບ ຫຼື ຄວນຈະແກ້ລະບຽບໃຫ້ຖືກກັບລະບົບ.
- **ທ່ານ ນ. ສາຍສະໝອນ ຈັນທະຈັກ**, ຜູ້ອຳນວຍການ ທຄຕລ: ສະແດງຄວາມຂອບໃຈຕໍ່ຄຳເຫັນ ເຊິ່ງ ທຄຕລ ຈະນຳໄປກວດກາຄືນ ແລະ ຄົ້ນຄວ້າວິທີການປັບປຸງຕາມຄວາມເໝາະສົມ;
- **ທ່ານ ອັງ ບຸດ,** ຈາກທະນາຄານແຄນນາເດຍ: ຕໍ່ກັບຫຼັກຊັບທີ່ ທຄຕລ ໄດ້ຮັບມາຈາກລູກຄ້າ NPL ນັ້ນ ເຫັນວ່າ ສາມາດເປັນທ່າແຮງໃນການສ້າງລາຍຮັບ. ທະນາຄານແຄນນາເດຍ ມີບໍລິສັດໃນເຄືອທີ່ເຮັດທຸລະກິດພັດທະນາອະສັງຫາຣິມະຊັບ ແລະ ຫຼັກຊັບລັກສະນະດັ່ງກ່າວ ເຊິ່ງພວກເຮົາໄດ້ໝຸນໃຊ້ກັບກໍລະນີທີ່ຢູ່ໃນລາວເຊັ່ນກັນ. ຖ້າ

ທຄຕລ ຫາກສົນໃຈພັດທະນາຊັບສິນເຫຼົ່ານີ້ ເພື່ອຫັນເປັນລາຍຮັບ ທະນາຄານແຄນນາເດຍ ກໍຍິນດີໃນການປຶກສາຮ່ວມມື.

- **ທ່ານ ນ. ສາຍສະໝອນ ຈັນທະຈັກ**, ຜູ້ອຳນວຍການ ທຄຕລ: ສະແດງຄວາມຂອບໃຈ ແລະ ຍິນດີທີ່ຈະຫາລືໃນລາຍລະອຽດຕື່ມ.

ປະທານກອງປະຊຸມ ໄດ້ກ່າວສະແດງຄວາມຂອບໃຈຜູ້ຖືຮຸ້ນ ແລະ ຕາງໜ້າຜູ້ຖືຮຸ້ນ ທີ່ໄດ້ໃຫ້ກຽດເຂົ້າຮ່ວມກອງປະຊຸມ ແລະ ໄດ້ປະກາດປິດກອງປະຊຸມໃນເວລາ 15:50 ໂມງ ຂອງວັນດຽວກັນ.

ປະທານກອງປະຊຸມ	**ຜູ້ບັນທຶກ**
ຄຳສຸກ ສຸນດາລາ	**ສອນນາລິນ ແສງມະນີ**

ລາຍງານຜົນການດຳເນີນງານຂອງ ທຄຕລ ປະຈຳປີ 2023 ໂດຍສັງເຂບ

ປີ 2023 ເປັນອີກປີໜຶ່ງທີ່ສະພາບການດຳເນີນທຸລະກິດຂອງ ທຄຕລ ຍັງສືບຕໍ່ພົບກັບຄວາມຫຍຸ້ງຍາກຫຼາຍດ້ານ ຈາກພາບລວມຂອງເສດຖະກິດມະຫາພາກທີ່ຟື້ນຕົວຊ້າ, ຜົນກະທົບຈາກບັນຫາເງິນເຟີ້, ການເໜັງຕີງຂອງລາຄານ້ຳມັນ ແລະ ສະພາບການຜັນຜວນຂອງອັດຕາແລກປ່ຽນ. ແຕ່ເຖິງຢ່າງໃດກໍ່ຕາມ, ດ້ວຍຄວາມເອົາໃຈໃສ່ຂອງຄະນະບໍລິຫານງານ ແລະ ພະນັກງານທັງໝົດ ທີ່ໄດ້ພ້ອມກັນທຸ້ມເທສະຕິປັນຍາ ແລະ ເຫື່ອແຮງເຂົ້າໃນການແກ້ໄຂສະພາບການດຳເນີນທຸລະກິດຂອງຕົນ ເຮັດໃຫ້ການດຳເນີນທຸລະກິດຂອງ ທຄຕລ ມີຜົນສຳເລັດຫຼາຍດ້ານ ເຊິ່ງສະແດງອອກດັ່ງນີ້:

1. ການເຄື່ອນໄຫວວຽກງານຕ່າງໆທີ່ພົ້ນເດັ່ນໂດຍຫຍໍ້

ໃນໄລຍະ 1 ປີຜ່ານມາ ທຄຕລ ເຄື່ອນໄຫວວຽກງານສຳເລັດຫຼາຍດ້ານເຊັ່ນ:

- ຈັດກອງປະຊຸມສາມັນຜູ້ຖືຮຸ້ນ ທຄຕລ ປະຈຳປີ 2022 ພ້ອມທັງຈ່າຍເງິນປັນຜົນ ຈຳນວນ 100 ກີບ/ຮຸ້ນ ໃຫ້ແກ່ຜູ້ຖືຮຸ້ນ;
- ຈັດກອງປະຊຸມສະພາບໍລິຫານ ທຄຕລ ສະໄໝສາມັນ 4 ຄັ້ງ ແລະ ວິສາມັນ 1 ຄັ້ງ;
- ຈັດກອງປະຊຸມສະຫຼຸບການເຄື່ອນໄຫວວຽກງານຂອງ ທຄຕລ 4 ຄັ້ງ ແລະ ເຂົ້າຮ່ວມກອງປະຊຸມທີ່ສຳຄັນທັງພາຍໃນ ແລະ ຕ່າງປະເທດ ທັງໝົດ 8 ຄັ້ງ;
- ທົບທວນແຜນຍຸດທະສາດໄລຍະຍາວ 2021-2025 ໄລຍະກາງສະໄໝ;
- ຈັດຂັ້ນສາຂາ ແລະ ໜ່ວຍບໍລິການຂອງ ທຄຕລ ທົ່ວລະບົບ ປະຈຳປີ 2023;
- ສະຫຼຸບຜົນການຈັດຕັ້ງປະຕິບັດ KPI ຂອງສາຂາ ປະຈຳປີ 2022 ແລະ ກຳນົດ KPI ປະຈຳປີ 2023 ພ້ອມທັງກຳນົດຮູບແບບການຍ້ອງຍໍ ແລະ ການໃຫ້ລາງວັນປະຈຳປີຂອງວຽກງານ KPI ແລະ ວຽກງານການຈັດຂັ້ນສາຂາ ແລະ ໜ່ວຍບໍລິການ;
- ຈຳໜ່າຍພັນທະບັດທະນາຄານແຫ່ງ ສປປ ລາວ 2 ຄັ້ງ ຂອງງວດທີ 2 (ຄັ້ງທີ 2 ແລະ 3);
- ເປີດເຜີຍບົດລາຍງານປະຈຳປີ 2022 ແລະ ປະຈຳແຕ່ລະໄຕມາດ 2023, ພ້ອມທັງເປີດເຜີຍລາຍງານການເງິນມາດຖານສາກົນ ຜ່ານລະບົບເປີດເຜີຍຂໍ້ມູນຂອງຕະຫຼາດຫຼັກຊັບລາວ ແລະ ເວັບໄຊສ໌ຂອງ ທຄຕລ;
- Go-Live ນຳໃຊ້ລະບົບການອະນຸມັດສິນເຊື່ອ LOS;
- ຄົ້ນຄວ້າລະບົບ Customer Scoring ຈາກການໃຊ້ຜະລິດຕະພັນ ແລະ ບໍລິການຂອງ ທຄຕລ ເພື່ອປະເມີນຜົນໄດ້ຮັບເປັນລາຍລູກຄ້າ;
- ພັດທະນາລະບົບຕ່າງໆ ປະກອບມີ: ລະບົບພິມໃບຢັ້ງຢືນຂໍ້ມູນບັນຊີເງິນຝາກ ໃຫ້ເປັນມາດຕະຖານດຽວກັນ; ແບບຟອມເປີດບັນຊີອອນລາຍ; ລະບົບເກັບກຳຂໍ້ມູນສະຖິຕິພະນັກງານ ທຄຕລ ທົ່ວລະບົບ ແລະ ລະບົບຄິວສຳລັບການຖອນເງິນດ່ວນຜ່ານປ່ອງບໍລິການ Fast Track;
- ພັດທະນາຟັງຊັນຕ່າງໆໃນແອັບ BCEL One ຄື: Tipme, OneX, ໂອນເງິນຢວນໄປ WeChat, OneCash wallet ສຳລັບນັກທ່ອງທ່ຽວຕ່າງປະເທດ, Consumer Loan, ຄິວອອນລາຍ, ການຈອງພັນທະບັດ ທຫລ ແລະ Currency Exchange (ຕະຫຼາດແລກປ່ຽນ);
- ສ້າງ ແລະ ພັດທະນາ **EzyKip App** ສຳລັບນັກທ່ອງທ່ຽວຕ່າງປະເທດທີ່ເຂົ້າມາທ່ຽວ ສປປ ລາວ, ເຊິ່ງໄດ້ເປີດໂຕເປັນທາງການໃນຕົ້ນປີ 2024 ຜ່ານມານີ້;
- **ການຮ່ວມມືກັບພາກສ່ວນພາຍນອກ:** ຮ່ວມມືກັບບໍລິສັດ Tencent ຂອງ ສປ ຈີນ ໃນໂຄງການໂອນເງິນໄປຈີນຜ່ານ BCEL One ຫາ We-Chat; ຮ່ວມມືກັບ KEB Hana Bank ສ. ເກົາຫຼີ ໃນໂຄງການຊຳລະຜ່ານລະບົບ GLN ສະແກນ QR Code ຜ່ານ BCELOnePay ພ້ອມທັງໄດ້ເປີດໂຕການ

ໃຫ້ບໍລິການໂອນເງິນຂ້າມແດນລະຫວ່າງ ສປປ ລາວ ແລະ ສ. ເກົາຫຼີ (BCEL ແລະ GLN International); ຮ່ວມມືກັບບໍລິສັດລິດໄຟລາວ-ຈີນ ຈຳກັດ ໃນການຂາຍປີ້ລິດໄຟອອນລາຍຜ່ານແອັບ LCR ຊຳລະຜ່ານ BCEL One ແລະ ຮ່ວມມືກັບບໍລິສັດ ພຣູເດັນໂຊລ ປະກັນໄພຊີວິດ (ລາວ) ຈຳກັດ ໃນການຊື້ປະກັນໄພຜ່ານ BCEL One;

- **ລາງວັນຊີ້ງກຽດທີ່ໄດ້ຮັບ:** ໄດ້ຮັບລາງວັນນັກທຸລະກິດ ຊັ້ນນຳດີເດັ່ນ ສຄອຊ ປະຈຳປີ 2022 (Lao Business Leader Award 2022) ແລະ ໄດ້ຮັບ 4 ລາງວັນດ້ານການດຳເນີນທຸລະກິດດີເດັ່ນ (VISA Client forum 2023) ຄື: ❶ລາງວັນດີເດັ່ນ ຜູ້ນຳດ້ານການຊຳລະຂ້າມແດນ; ❷ລາງວັນດີເດັ່ນ ຜູ້ນຳດ້ານການຊຳລະຂອງຮ້ານຄ້າ; ❸ລາງວັນດີເດັ່ນ ໃນການອະນຸມັດລາຍການບັດທີ່ດີທີ່ສຸດ ແລະ ❹ລາງວັນດີເດັ່ນ ດ້ານຜູ້ນຳການຊຳລະສະສາງ.

2. ຜົນການດຳເນີນທຸລະກິດ ປະຈຳປີ 2023

- **ຍອດຊັບສິນ:** 126.433.759 ລ້ານກີບ, ທຽບໃສ່ແຜນການປີ 2023 ປະຕິບັດໄດ້ 127,10%;
- **ຍອດເງິນກູ້ທັງໝົດ:** 52.198.063 ລ້ານກີບ, ທຽບໃສ່ແຜນການປີ 2023 ປະຕິບັດໄດ້ 104,29%;
- **ອັດຕາສ່ວນ NPL:** 1,92%;
- **ຍອດເງິນຝາກ:** 117.626.838 ລ້ານກີບ, ທຽບໃສ່ແຜນການປີ 2023 ປະຕິບັດໄດ້ 129,26%;
- **ກຳໄລສຸດທິ ຫຼັງຫັກອາກອນ:** 231.408 ລ້ານກີບ, ທຽບໃສ່ແຜນການປີ 2023 ປະຕິບັດໄດ້ 115,70%.

3. ການປະຕິບັດແຜນປະກອບອັດຖຸເຕັກນິກ, ກໍ່ສ້າງ ແລະ ສ້ອມແປງ

ແຜນປະກອບອັດຖຸເຕັກນິກ, ກໍ່ສ້າງ ແລະ ສ້ອມແປງ ທີ່ຂຶ້ນແຜນໄວ້ມີຈຳນວນ 304 ຕື້ກີບ, ພາຍໃນປີ 2023 ສາມາດຈັດເຂົ້າເປັນຊັບສົມບັດຄົງທີ່ເພື່ອຫັກຄ່າຫຼ້ຍຫ້ຽນ ແລະ ຈັດເຂົ້າບັນຊີຊັບສົມບັດຄົງທີ່ພວມຊື້ ພວມກໍ່ສ້າງ ທັງໝົດຈຳນວນ 266 ຕື້ກີບ ເທົ່າກັບ 87% ຂອງແຜນການ.

4. ການຂະຫຍາຍຕາໜ່າງບໍລິການ

ເປີດໜ່ວຍບໍລິການ 2 ແຫ່ງ ຄື: ໜ່ວຍບໍລິການຊາຍແດນລາວບາວ ຂຶ້ນກັບສາຂາສະຫວັນນະເຂດ ແລະ ໜ່ວຍບໍລິການສາມຫຼ່ຽມຄຳ ຂຶ້ນກັບສາຂາບໍ່ແກ້ວ. ນອກຈາກນັ້ນ, ໄດ້ຍົກລະດັບຫ້ອງບໍລິການໂຍທາທິ່ງປ່ຽງ ເປັນ ໜ່ວຍບໍລິການ ແລະ ແຍກໜ່ວຍບໍລິການໄຊສົມບູນ ອອກຈາກສາຂາຊຽງຂວາງ ມາເປັນໜ່ວຍບໍລິການ ເອກະລາດ ຂຶ້ນກັບການຊີ້ນຳໂດຍກົງຂອງຄະນະອຳນວຍການ.

5. ການປະຕິບັດແຜນງານ, ໂຄງການ ແລະ ແຜນວຽກ

ລຳດັບ	ລາຍການ (11 ແຜນງານ, 38 ໂຄງການ)	ຈຳນວນ	2023
		258	74%
ຍຸດທະສາດ 1	ສ້າງຄວາມເຂັ້ມແຂງໃຫ້ອົງກອນຮອບດ້ານ	155	86%
ແຜນງານ 1	ການບໍລິຫານການເງິນ ແລະ ເພີ່ມປະສິດທິພາບການດຳເນີນທຸລະກິດໃຫ້ຍືນຍົງ	79	92%
ແຜນງານ 2	ການຄຸ້ມຄອງ ແລະ ບໍລິຫານສິນເຊື່ອທັນສະໄໝ	23	100%
ແຜນງານ 3	ການພັດທະນາດ້ານບຸກຄະລາກອນໃຫ້ເຂັ້ມແຂງ ແລະ ມີປະສິດທິພາບ	22	77%
ແຜນງານ 4	ສ້າງລະບົບຄຸ້ມຄອງຄວາມສ່ຽງ ແລະ ສ້າງພື້ນຖານຕ້ານການຟອກເງິນໃຫ້ເຂັ້ມແຂງ	31	77%
ແຜນງານ 5	ພັດທະນາການຄຸ້ມຄອງບໍລິຫານໃຫ້ໄດ້ມາດຖານສາກົນ	-	80%
ຍຸດທະສາດ 2	ທັນເປັນທັນສະໄໝ ໂດຍນຳໃຊ້ເຕັກໂນໂລຊີ ແລະ ນະວັດຕະກຳໃໝ່ໆໃນການດຳເນີນທຸລະກິດ ກ້າວສູ່ຍຸກເສດຖະກິດດິຈິຕອລ	86	72%
ແຜນງານ 6	ການພັດທະນາ ແລະ ຄຸ້ມຄອງລະບົບໄອທີ	44	60%

ລຳດັບ	ລາຍການ (11 ແຜນງານ, 38 ໂຄງການ)	ຈຳນວນ 258	2023 74%
ແຜນງານ 7	ຄຸ້ມຄອງບໍລິຫານຂໍ້ມູນ ແລະ ການພັດທະນາວຽກງານສະຖິຕິ ໃຫ້ທັນສະໄໝໄດ້ມາດຖານສາກົນ ແລະ ມີຄຸນນະພາບ	8	86%
ແຜນງານ 8	ພັດທະນາຜະລິດຕະພັນ ເພື່ອຫັນສູ່ການບໍລິການ ໃນຮູບແບບ Digital Banking	34	69%
ຍຸດທະສາດ 3	ສ້າງການຄຸ້ມຄອງ ແລະ ບໍລິການຕາມມາດຕະຖານສາກົນ	17	63%
ແຜນງານ 9	ການປັບປຸງ, ພັດທະນາລະບົບບັນຊີ ແລະ ມາດຕະຖານການລາຍງານການເງິນ	11	75%
ແຜນງານ 10	ພັດທະນາ ແລະ ປັບປຸງລະບົບກວດກາໃຫ້ເຂັ້ມແຂງໄດ້ມາດຕະຖານ.	3	100%
ແຜນງານ 11	ພັດທະນາໂຄງການ PCI Compliance ຫຼື (Payment Card Industry Data Security Standard)	3	15%

6. ການມີສ່ວນຮ່ວມໃນວຽກງານສັງຄົມ ແລະ ອຸປະຖຳສັງຄົມ

ຄຽງຄູ່ກັບການດຳເນີນທຸລະກິດ ແລະ ປະຕິບັດວຽກງານດ້ານອື່ນໆ ໃນໄລຍະປີ 2023 ຄະນະຜູ້ບໍລິຫານ ແລະ ພະນັກງານຂອງ ທຄຕລ ທຸກຄົນ ລ້ວນແຕ່ໄດ້ເອົາໃຈໃສ່ໃນການປະກອບສ່ວນ ແລະ ມີສ່ວນຮ່ວມໃນໂຄງການຄວາມຮັບຜິດຊອບຕໍ່ສັງຄົມ (Corporate Social Responsibility ຫຼື CSR) ເຊິ່ງເປັນໜຶ່ງໃນບັນດາຄຸນຄ່າຫຼັກຂອງ ທຄຕລ ເຊິ່ງມີລາຍລະອຽດລຸ່ມນີ້:


- ການນຳໃຊ້ທ່າແຮງທາງດ້ານເທັກໂນໂລຢີ ແລະ ຄວາມທັນສະໄໝຂອງ ທຄຕລ ໃນການພັດທະນາຜະລິດຕະພັນມາຮັບໃຊ້ສັງຄົມ ເຊັ່ນ: BCEL One Heart ເຊິ່ງເຮັດໜ້າທີ່ເປັນເຄື່ອງມື ແລະ ເປັນສື່ກາງໃນການຮັບບໍລິຈາກເງິນຊ່ວຍເຫຼືອສັງຄົມ ທີ່ອຳນວຍຄວາມສະດວກໃຫ້ທັງຜູ້ຂໍຮັບບໍລິຈາກ ແລະ ຜູ້ສະໝັກໃຈບໍລິຈາກ ຊຶ່ງພາຍໃນປີ 2023 ໄດ້ເປີດຮັບບໍລິຈາກທັງໝົດ 15 ໂຄງການ, ມີຜູ້ບໍລິຈາກ 6.110 ຄັ້ງ, ລວມເງິນທັງໝົດຈຳນວນ 322,73 ລ້ານກີບ.
- ທຄຕລ ໄດ້ປະກອບສ່ວນຊຸກຍູ້ ແລະ ຊ່ວຍເຫຼືອສັງຄົມຜ່ານຫຼາຍຮູບການ ເປັນຕົ້ນແມ່ນ ການອຸປະຖຳວຽກງານການສຶກສາ ແລະ ກິລາ, ວຽກງານສາທາລະນະສຸກ, ຊ່ວຍເຫຼືອຜູ້ປະສົບໄພທຳມະຊາດ, ຊຸກຍູ້ວັນບຸນສຳຄັນຕ່າງໆ ຂອງຊາດ ແລະ ອື່ນໆ ດ້ວຍການມອບເງິນສົດ, ວັດຖຸອຸປະກອນຕ່າງໆ ພາຍໃນປີ 2023 ຈຳນວນ 106 ລາຍການ ລວມເປັນຈຳນວນເງິນທັງໝົດ 1.034,89 ລ້ານກີບ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

pwc

ເອກະສານລາຍງານການເງິນ

31 ທັນວາ 2023



www.pwc.com/la

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ເອກະສານລາຍງານການເງິນ
ສຳລັບປີສິ້ນສຸດວັນທີ 31 ທັນວາ 2023

ສາລະບານ	**ໜ້າ**
ຂໍ້ມູນທົ່ວໄປ	1 – 3
ບົດລາຍງານຂອງຜູ້ກວດສອບບັນຊີອິດສະຫຼະ	4 – 9
ໃບລາຍງານຜົນໄດ້ຮັບ	10
ໃບລາຍງານຜົນໄດ້ຮັບສັງລວມ	11
ໃບລາຍງານຖານະການເງິນ	12
ໃບລາຍງານສ່ວນປ່ຽນແປງທຶນ	13 – 14
ໃບລາຍງານກະແສເງິນສົດ	15 – 16
ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ	17 – 58

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ເອກະສານລາຍງານການເງິນ
ສຳລັບປີສິ້ນສຸດວັນທີ 31 ທັນວາ 2023

ຂໍ້ມູນທົ່ວໄປ

ທະນາຄານ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ("ທະນາຄານ") ດຳເນີນທຸລະກິດໃນຮູບແບບມະຫາຊົນ ແລະ ຈົດທະບຽນຢູ່ໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ("ສປປ ລາວ").

ການສ້າງຕັ້ງ ແລະ ການດຳເນີນທຸລະກິດ

ທະນາຄານຖືກສ້າງຕັ້ງຂຶ້ນໂດຍການປະກອບທຶນຂອງທະນາຄານການຄ້າຕ່າງປະເທດລາວ ເຊິ່ງໄດ້ຮັບການສ້າງຕັ້ງຂຶ້ນພາຍໃຕ້ໃບອະນຸຍາດ ສ້າງຕັ້ງທະນາຄານ ເລກທີ 129/ທຫລ, ລົງວັນທີ 01 ພະຈິກ 1989. ໃນວັນທີ 23 ທັນວາ 2010, ທະນາຄານໄດ້ສຳເລັດການຂາຍຮຸ້ນ ອອກສູ່ມະຫາຊົນ. ທະນາຄານໄດ້ປ່ຽນຊື່ມາເປັນທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ອີງຕາມ ໃບທະບຽນວິສາຫະກິດເລກທີ 0061/ຫຈທ, ລົງວັນທີ 10 ມັງກອນ 2011 ອອກໂດຍ ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, ກະຊວງອຸດສາຫະກຳ ແລະການຄ້າ ແຫ່ງ ສປປ ລາວ. ໃນວັນທີດັ່ງກ່າວ, ລັດຖະບານ ເຊິ່ງຕາງໜ້າໂດຍ ກະຊວງການເງິນເປັນຜູ້ຖືຮຸ້ນໃຫຍ່ສຸດ ໂດຍຖືຮຸ້ນ 80% ຂອງຮຸ້ນທັງໝົດ.

ວັນທີ 15 ກໍລະກົດ 2011, ກະຊວງການເງິນ ຂາຍຮຸ້ນສາມັນ 10% (ທຽບເທົ່າກັບ 13.657.759 ຮຸ້ນ) ໃຫ້ຄູ່ຮ່ວມຮຸ້ນທາງຍຸດທະສາດ ຊື່ວ່າ ທະນາຄານ Compagnie Financière de la BRED ("COFIBRED''). ອີງຕາມສັນຍາການຊື້ຮຸ້ນສາມັນ ລະຫວ່າງ ກະຊວງ ການເງິນ ແລະ ທະນາຄານ COFIBRED. COFIBRED ແມ່ນທະນາຄານໃນເຄືອຂອງ BRED ທະນາຄານດັ່ງກ່າວເປັນທະນາຄານທີ່ ໃຫຍ່ທີ່ສຸດໃນພາກພື້ນຂອງສະມາຄົມທະນາຄານ ພາຍໃຕ້ກຸ່ມຂອງ Banque Populare Group ເຊິ່ງເປັນກຸ່ມຮ່ວມມືຂອງທະນາຄານ ຂອງປະເທດຝຣັ່ງ. ມູນຄ່າຊື້ທັງໝົດ ເຊິ່ງເທົ່າກັບ 150.235.349.000 ກີບໄດ້ຖືກຈ່າຍເຕັມມູນຄ່າໂດຍທະນາຄານ COFIBRED.

ໃນວັນທີ 17 ສິງຫາ 2017, ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບໄດ້ອະນຸມັດໃຫ້ທະນາຄານເພີ່ມທຶນ ໂດຍການສະເໜີຂາຍສິດຊື້ ຮຸ້ນໃຫ້ແກ່ຜູ້ຖືຮຸ້ນເດີມ (ຄິດເປັນຈຳນວນຮຸ້ນ 68.047.300 ຮຸ້ນ) ແລະ ສາທາລະນະຊົນ(ຄິດເປັນຈຳນວນຮຸ້ນ 3.098.400 ຮຸ້ນ) ໃນ ຕະຫຼາດຫຼັກຊັບລາວເພື່ອເພີ່ມທຶນຈົດທະບຽນ. ທະນາຄານໄດ້ຮັບໃບທະບຽນວິສາຫະກິດທະນາຄານສະບັບໃໝ່ ເລກທີ 21/ທຫລ, ລົງວັນ ທີ 13 ກັນຍາ 2017 ອອກໂດຍ ທະນາຄານແຫ່ງ ສປປ ລາວ. ໃນວັນທີ 15 ກັນຍາ 2017, ຕະຫລາດຫລັກຊັບລາວໄດ້ຢັ້ງຢືນວ່າ ທະນາຄານໄດ້ເພີ່ມທຶນຈົດທະບຽນ ຈຳນວນ 355.728.500.000 ກີບ (ເທົ່າກັບ 71.145.700 ຮຸ້ນ) ອີງຕາມໃບຢັ້ງຢືນເລກທີ 01/ ຕລຊລ, ລົງວັນທີ 15 ກັນຍາ 2017 ແລະ ໃບທະບຽນວິສາຫະກິດສະບັບປັບປຸງໃໝ່ ເລກທີ 0429 /ຫຈທ, ລົງວັນ ທີ 18 ພຶດສະພາ 2018 ອອກໂດຍ ກະຊວງອຸດສາຫະກຳ ແລະ ການຄ້າ.

ໃນວັນທີ 11 ຕຸລາ 2019, ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບໄດ້ອະນຸມັດໃຫ້ທະນາຄານປັບໂຄງສ້າງຜູ້ຖືຮຸ້ນ ໂດຍການສະເໜີ ຂາຍສິດຊື້ຮຸ້ນໃຫ້ແກ່ຜູ້ຖືຮຸ້ນເດີມ ແລະ ສາທາລະນະຊົນ. ຈຸດປະສົງຂອງການແບ່ງຮຸ້ນຂາຍຂອງລັດຖະບານ ແມ່ນເພື່ອສະໜັບສະໜຸນ ສະເໜີຂາຍໃຫ້ແກ່ຜູ້ຖືຮຸ້ນທີ່ຫຼາກຫຼາຍ ເພື່ອພັດທະນາທະນາຄານໃຫ້ເຕີບໃຫຍ່ຂະຫຍາຍຕົວ ແລະ ໝັ້ນຄົງ. ໃນວັນທີ 29 ພະຈິກ 2019, ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໄດ້ຢັ້ງຢືນວ່າ ທະນາຄານໄດ້ສຳເລັດການສະເໜີຂາຍຮຸ້ນໃນອັດຕາສ່ວນ 10% ຂອງ ທະນາຄານໄດ້ສຳເລັດ.

ໂຄງສ້າງການຖືຮຸ້ນຂອງທະນາຄານ ໃນວັນທີ 31 ທັນວາ 2023 ມີດັ່ງລຸ່ມນີ້:

ຜູ້ຖືຮຸ້ນ	ຈຳນວນຮຸ້ນ	%
ລັດຖະບານ	124.634.021	60%
ຄູ່ຮ່ວມຮຸ້ນທາງຍຸດທະສາດ	20.772.359	10%
ນັກລົງທຶນພາຍໃນ (ລວມທັງພະນັກງານຂອງທະນາຄານ) ແລະ ນັກລົງທຶນ ຕ່າງປະເທດອື່ນໆ	62.316.920	30%
	207.723.300	100%

ຂໍ້ມູນທົ່ວໄປ (ຕໍ່)

ກິດຈະກຳຫຼັກຂອງທະນາຄານ ແມ່ນເພື່ອສະໜອງການບໍລິການ ລວມທັງການລະດົມທຶນ ແລະ ຮັບຝາກເງິນໄລຍະສັ້ນ, ກາງ ແລະ ຍາວ ຈາກບັນດາອົງກອນ ແລະ ບຸກຄົນ; ສະໜອງເງິນກູ້ໄລຍະສັ້ນ, ກາງ ແລະ ຍາວ ໃຫ້ແກ່ບັນດາອົງກອນ ແລະ ບຸກຄົນ ອີງຕາມຈຸດປະສົງ ແລະ ຄວາມສາມາດໃນການສະໜອງທຶນຂອງທະນາຄານ; ບໍລິການແລກປ່ຽນເງິນຕາຕ່າງປະເທດ, ການບໍລິການດ້ານການຄ້າລະຫວ່າງປະເທດ, ສ່ວນຫຼຸດຂອງເອກະສານທາງດ້ານການຄ້າ, ພັນທະບັດ ແລະ ເອກະສານທີ່ມີມູນຄ່າອື່ນໆ ແລະ ໃຫ້ບໍລິການດ້ານທະນາຄານ ອື່ນໆ ທີ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ.

ທຶນຈົດທະບຽນ

ທຶນຈົດທະບຽນ ໃນວັນທີ 31 ທັນວາ 2023 ແມ່ນ 1.038.617 ລ້ານກີບ (ໃນວັນທີ 31 ທັນວາ 2022: 1.038.617 ລ້ານກີບ).

ທີ່ຕັ້ງ ແລະ ເຄືອຂ່າຍ

ສຳນັກງານໃຫຍ່ຂອງທະນາຄານ ຕັ້ງຢູ່ ເລກທີ 01, ຖະໜົນປາງຄຳ, ບ້ານຊຽງຍືນ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ. ໃນວັນທີ 31 ທັນວາ 2023, ທະນາຄານມີໜຶ່ງ (1) ສຳນັກງານໃຫຍ່, ຫົກ (6) ວິສາຫະກິດຂະໜາດນ້ອຍ ແລະ ວິສາຫະກິດປະສົມ, ຊາວ (20) ສາຂາ ຫລັກ, ເກົ້າສິບເກົ້າ (99) ໜ່ວຍບໍລິການ ແລະ ສິບສອງ (12) ຫ້ອງແລກປ່ຽນເງິນຕາທົ່ວ ສປປ ລາວ.

ບໍລິສັດຮ່ວມທຶນ

ໃນວັນທີ 31 ທັນວາ 2023, ທະນາຄານມີ ຫົກ (6) ວິສາຫະກິດຂະໜາດນ້ອຍ ແລະ ວິສາຫະກິດປະສົມຄື:

ຊື່	ສ້າງຕັ້ງຕາມໃບທະບຽນວິສາຫະກິດເລກທີ	ຂະແໜງການ	% ຖືຮຸ້ນຂອງທະນາຄານ
ບໍລິສັດຫຼັກຊັບ ທຄຕລ-ກທ ຈຳກັດ (BCEL-KT)	1079/ຫຈທ ລົງວັນທີ 10 ກໍລະກົດ 2019 ອອກໂດຍກະຊວງອຸດສາຫະກຳ ແລະ ການຄ້າ	ຫຼັກຊັບ	70%
ທະນາຄານຮ່ວມທຸລະກິດ ລາວ - ຫວຽດ	732/ຫຈທ ລົງວັນທີ 29 ສິງຫາ 2016 ອອກໂດຍກະຊວງອຸດສາຫະກຳ ແລະ ການຄ້າ	ການທະນາຄານ & ການເງິນ	25%
ທະນາຄານລາວ - ຝຣັ່ງ	0495/ຫຈທ ລົງວັນທີ 7 ມິຖຸນາ 2018 ອອກໂດຍກະຊວງອຸດສາຫະກຳ ແລະ ການຄ້າ	ການທະນາຄານ & ການເງິນ	30%
ບໍລິສັດປະກັນໄພ ລາວ -ຫວຽດ	0600 ລົງວັນທີ 16 ສິງຫາ 2013 ໂດຍ ກະຊວງ ອຸດສະຫະກຳ ແລະ ການຄ້າ	ປະກັນໄພ	35%
ທະນາຄານ ລາວຈີນ ຈຳກັດ	041/ຫຈທ ລົງວັນທີ 27 ມັງກອນ 2014 ໂດຍ ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ຂອງ ສປປ ລາວ	ການທະນາຄານ & ການເງິນ	39,87%
ບໍລິສັດ ລາວເຫຼັກນໍ ເພເມັ້ນ ເນັດເວີກ ຈຳກັດ	0349/ຫຈທ ໄດ້ຮັບອະນຸມັດໂດຍ ກົມຄຸ້ມຄອງທະບຽນ ແລະ ຄຸ້ມຄອງວິສາຫະກິດ ຂອງ ກະຊວງອຸດສາຫະກຳ ແລະ ການຄ້າ ຂອງ ສປປ ລາວ ລົງວັນທີ 12 ມິນາ 2019	ການຄຸ້ມຄອງການຊຳລະສະສາງທຸລະກຳ (ເອເລັກໂຕຣນິກ)	20%

ຂໍ້ມູນທົ່ວໄປ (ຕໍ່)

ສະພາບໍລິຫານ

ສະມາຊິກສະພາບໍລິຫານຂອງທະນາຄານ ພາຍໃນປີທີ່ສິ້ນສຸດວັນທີ 31 ທັນວາ 2023 ແລະ ໃນວັນທີ ທີ່ອອກບົດລາຍງານສະບັບນີ້ປະກອບມີ:

ຊື່	ຕຳແໜ່ງ	ວັນທີແຕ່ງຕັ້ງ
ທ່ານ ບຸນປອນ ວັນນະຈິດ	ປະທານ	ແຕ່ງຕັ້ງວັນທີ 27 ເມສາ 2023
ທ່ານ ຄຳສຸກ ສູນດາລາ	ຮອງປະທານ	ແຕ່ງຕັ້ງວັນທີ 14 ກໍລະກົດ 2022
ທ່ານ ປະສົມພັດ ຄຳຕັນ	ສະມາຊິກ	ແຕ່ງຕັ້ງວັນທີ 3 ສິງຫາ 2021
ທ່ານ ສະຕີເຟັນ ມັງເຈຍອາກາ	ສະມາຊິກ	ແຕ່ງຕັ້ງວັນທີ 29 ພຶດສະພາ 2020
ທ່ານ ນ. ສາຍສະໝອນ ຈັນທະຈັກ	ສະມາຊິກ	ແຕ່ງຕັ້ງວັນທີ 22 ພະຈິກ 2022
ທ່ານ ຣສ. ທອງເພັດ ຈັນທະນິວົງ	ສະມາຊິກ	ແຕ່ງຕັ້ງວັນທີ 3 ສິງຫາ 2021
ທ່ານ ນ. ລັດດາວັນ ຊົງວິໄລ	ສະມາຊິກ	ແຕ່ງຕັ້ງວັນທີ 3 ສິງຫາ 2021
ທ່ານ ສອນໄຊ ສີລາເພັດ	ສະມາຊິກ	ແຕ່ງຕັ້ງວັນທີ 3 ສິງຫາ 2021
ທ່ານ ວຽງສຸກ ຈຸນທະວົງ	ສະມາຊິກ	ແຕ່ງຕັ້ງວັນທີ 27 ເມສາ 2018

ຄະນະອຳນວຍການ

ສະມາຊິກຄະນະອຳນວຍການຂອງທະນາຄານ ພາຍໃນປີທີ່ສິ້ນສຸດວັນທີ 31 ທັນວາ 2023 ແລະ ໃນວັນທີ ທີ່ອອກບົດລາຍງານສະບັບນີ້ ປະກອບມີ:

ຊື່	ຕຳແໜ່ງ	ວັນທີແຕ່ງຕັ້ງ
ທ່ານ ສາຍສະໝອນ ຈັນທະຈັກ	ຜູ້ອຳນວຍການ	ແຕ່ງຕັ້ງວັນທີ 2 ສິງຫາ 2022
ທ່ານ ກົງສັກ ສຸພອນສີ	ຮອງຜູ້ອຳນວຍການ	ແຕ່ງຕັ້ງວັນທີ 1 ພຶດສະພາ 2021
ທ່ານ ນັນທະລາດ ແກ້ວປະເສີດ	ຮອງຜູ້ອຳນວຍການ	ແຕ່ງຕັ້ງວັນທີ 30 ກັນຍາ 2014
ທ່ານ ວຽງສຸກ ຈຸນທະວົງ	ຮອງຜູ້ອຳນວຍການ	ແຕ່ງຕັ້ງວັນທີ 18 ກຸມພາ 2019
ທ່ານ ນ. ບົວໄພວັນ ນັນດາວົງ	ຮອງຜູ້ອຳນວຍການ	ແຕ່ງຕັ້ງວັນທີ 1 ພຶດສະພາ 2021
ທ່ານ ສາຍຈິດ ສິມມະວົງ	ຮອງຜູ້ອຳນວຍການ	ແຕ່ງຕັ້ງວັນທີ 1 ພຶດສະພາ 2021

ຕົວແທນທາງດ້ານກົດໝາຍ

ຕົວແທນຂອງທະນາຄານຕາມກົດໝາຍ ໄລຍະປີທີ່ສິ້ນສຸດວັນທີ 31 ທັນວາ 2023 ແລະ ໃນມື້ອອກເອກະສານລາຍງານການເງິນສະບັບນີ້ ແມ່ນທ່ານ ນັນທະລາດ ແກ້ວປະເສີດ– ຮອງຜູ້ອຳນວຍການ.

ນັກກວດສອບ

ຜູ້ກວດສອບບັນຊີຂອງທະນາຄານ ແມ່ນ ບໍລິສັດ ພຣາຍສວໍເຕີເຮົ້າສກຸບເປີສ (ລາວ) ຈຳກັດຜູ້ດຽວ.

ບົດລາຍງານຂອງຜູ້ກວດສອບບັນຊີອິດສະຫຼະ

ເຖິງ: ຄະນະບໍລິຫານ ແລະ ຜູ້ຖືຮຸ້ນຂອງທະນາຄານ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ຄວາມເຫັນ

ພວກເຮົາມີຄວາມເຫັນວ່າເອກະສານລາຍງານການເງິນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທະນາຄານ) ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2023 ໄດ້ສະແດງສະຖານະທາງການເງິນຂອງທະນາຄານ ຢ່າງຖືກຕ້ອງ ແລະ ສອດຄ່ອງກັບນະໂຍບາຍການບັນຊີ ຊຶ່ງອະທິບາຍ ໃນ ບົດອະທິບາຍຊ້ອນທ້າຍ ຂໍ້ທີ 2 ຂອງເອກະສານລາຍງານສະບັບນີ້.

ເອກະສານລາຍງານການເງິນທີ່ກວດສອບ

ເອກະສານລາຍງານການເງິນຂອງທະນາຄານປະກອບດ້ວຍ:

- ໃບລາຍງານຖານະການເງິນ ວັນທີ 31 ທັນວາ 2023;
- ໃບລາຍງານຜົນໄດ້ຮັບ ສຳລັບປີສິ້ນສຸດມື້ດຽວກັນ;
- ໃບລາຍງານຜົນໄດ້ຮັບສັງລວມ ສຳລັບປີສິ້ນສຸດມື້ດຽວກັນ;
- ໃບລາຍງານສ່ວນປ່ຽນແປງທຶນ ສຳລັບປີສິ້ນສຸດມື້ດຽວກັນ;
- ໃບລາຍງານກະແສເງິນສົດ ສຳລັບປີສິ້ນສຸດມື້ດຽວກັນ; ແລະ
- ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນທີ່ສັງລວມຫຼັກການບັນຊີທີ່ສຳຄັນ ແລະ ຂໍ້ມູນອະທິບາຍອື່ນໆ.

ພື້ນຖານໃນການອອກຄວາມເຫັນ

ພວກເຮົາໄດ້ດຳເນີນການກວດສອບ ຕາມມາດຕະຖານການກວດສອບສາກົນ (ISAs) ຄວາມຮັບຜິດຊອບຂອງພວກເຮົາພາຍໃຕ້ ມາດຕະຖານໄດ້ລະບຸໄວ້ໃນໜ້າທີ່ຮັບຜິດຊອບຂອງຜູ້ກວດສອບພາຍນອກ ສຳລັບການກວດສອບ ເອກະສານລາຍງານການເງິນ ຂອງບົດລາຍ ງານພວກເຮົາ.

ພວກເຮົາເຊື່ອວ່າຫລັກຖານການກວດສອບທີ່ພວກເຮົາໄດ້ຮັບພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານສຳລັບການອອກຄວາມເຫັນຂອງ ພວກເຮົາ.

ຄວາມເປັນອິດສະຫລະ

ພວກເຮົາມີຄວາມເປັນອິດສະຫຼະ ຈາກ ທະນາຄານ ຕາມຂໍ້ກຳນົດຈັນຍາບັນ ຂອງຜູ້ປະກອບວິຊາຊີບນັກບັນຊີ (ລວມເຖິງມາດຕະຖານ ຄວາມເປັນອິດສະຫຼະສາກົນ) ທີ່ກຳນົດໂດຍຄະນະກຳມະການຈັນຍາບັນ ນານາຊາດ ສຳລັບນັກບັນຊີ (IESBA Code). ພວກເຮົາໄດ້ ປະຕິບັດຕາມຄວາມຮັບຜິດຊອບຫຼັກຈັນຍາບັນອື່ນໆ, ທີ່ສອດຄ່ອງກັບ ຈັນຍາບັນວິຊາຊີບນັກບັນຊີ (IESBA Code).

ເນັ້ນໜັກໃສ່ໃນເລື່ອງ - ພື້ນຖານ ການບັນຊີ

ພວກເຮົາໃຫ້ຂໍ້ສັງເກດຕໍ່ກັບບົດອະທິບາຍຊ້ອນທ້າຍທີ 2 ຂອງເອກະສານລາຍງານການເງິນ, ເຊິ່ງໄດ້ອະທິບາຍເຖິງພື້ນຖານການກະກຽມເອກະສານລາຍງານການເງິນ. ເອກະສານລາຍງານການເງິນນີ້ໄດ້ຖືກກະກຽມຕາມນະໂຍບາຍການບັນຊີຂອງທະນາຄານ ເຊິ່ງພື້ນຖານການບັນຊີທີ່ຖືກນຳໃຊ້ໃນການກະກຽມບົດລາຍງານການເງິນສະບັບນີ້ ອາດມີຄວາມແຕກຕ່າງກັບ ຈາກຫຼັກການບັນຊີ ມາດຕະຖານການລາຍງານການເງິນສາກົນ ("IFRS"). ດັ່ງນັ້ນ, ຜູ້ທີ່ນຳໃຊ້ ຄວນມີຄວາມເຂົ້າໃຈວ່າ ເອກະສານລາຍງານການເງິນນີ້ ບໍ່ໄດ້ມີຈຸດປະສົງເພື່ອສະແດງຖານະການເງິນ ແລະ ຜົນການດຳເນີນງານ ແລະ ກະແສເງິນສົດຕາມ IFRS. ທັ້ງນີ້ຄວາມເຫັນ ຂອງພວກເຮົາບໍ່ໄດ້ມີການປ່ຽນແປງ ອັນເນື່ອງມາຈາກເລື່ອງທີ່ກ່າວມາຂ້າງເທິງນັ້ນ.

ເລື່ອງສຳຄັນໃນການກວດສອບ

ເລື່ອງສຳຄັນໃນການກວດສອບ ແມ່ນ ເລື່ອງຕ່າງໆ ທີ່ມີຄວາມສຳຄັນທີ່ສຸດຕາມການປະເມີນໂດຍຄວາມຮູ້ຄວາມສາມາດຂອງພວກເຮົາໃນການກວດສອບເອກະສານລາຍງານການເງິນສຳລັບປີປັດຈຸບັນ. ພວກເຮົາເຫັນວ່າມີເລື່ອງສຳຄັນໃນການກວດສອບເລື່ອງໜຶ່ງ ເຊັ່ນ: ການສຳຮອງຄ່າເສື່ອມມູນຄ່າຂອງເງິນໃຫ້ກູ້ຢືມແກ່ລູກຄ້າ. ເລື່ອງດັ່ງກ່າວໄດ້ລະບຸໄວ້ໃນເອກະສານລາຍງານການເງິນ ເພື່ອສະແດງຄວາມເຫັນຂອງພວກເຮົາ ແລະ ພວກເຮົາບໍ່ໄດ້ສະແດງຄວາມເຫັນແຍກຕ່າງຫາກສຳລັບເລື່ອງເຫຼົ່ານີ້.

ເລື່ອງສຳຄັນໃນການກວດສອບ	ວິທີການກວດສອບແກ້ໄຂບັນຫາການກວດສອບສຳຄັນ
ສຳຮອງຄ່າເສື່ອມມູນຄ່າຂອງເງິນໃຫ້ກູ້ຢືມແກ່ລູກຄ້າ ອີງຕາມບົດອະທິບາຍຂໍ້ 13 - ການສຳຮອງຄ່າເສື່ອມມູນຄ່າ. ໃນວັນທີ 31 ທັນວາ 2023 ເງິນໃຫ້ກູ້ຢືມແກ່ລູກຄ້າ ຈຳນວນ 52.198.063 ລ້ານກີບ (41% ຂອງຊັບສິນທັງໝົດ), ແລະ ຍອດເຫຼືອຂອງການສຳຮອງສຳລັບຄ່າເສື່ອມມູນຄ່າແມ່ນ 1.687.920 ລ້ານກີບ. ການສຳຮອງຄ່າເສື່ອມມູນຄ່າ ເງິນກູ້ໃຫ້ກູ້ຢືມແກ່ລູກຄ້າຖືວ່າ ເປັນສິ່ງທີ່ສຳຄັນໃນການກວດສອບຂອງພວກເຮົາ ເນື່ອງຈາກ ການຄາດຄະເນຂອງການສຳຮອງຄ່າເສື່ອມມູນຄ່າ ແມ່ນກ່ຽວຂ້ອງກັບການນຳໃຊ້ໃນການພິຈາລະນາ ແລະ ສົມມຸດຕິຖານ ຂອງຜູ້ບໍລິຫານໃນການລະບຸຫຼັກຖານຄ່າດ້ອຍຄ່າ ສຳລັບລູກຄ້າລາຍບຸກຄົນ ແລະ ລູກຄ້າລວມ ແລະ ການຄິດໄລ່ຄ່າເສື່ອມມູນຄ່າ ລວມເຖິງໄລຍະທີ່ບໍ່ແນ່ນອນໃນການຮັບຮູ້.	ພວກເຮົາໄດ້ດຳເນີນການຕາມຂັ້ນຕອນດັ່ງຕໍ່ໄປນີ້: • ທຳການປະເມີນຄວາມສ່ຽງທັງ ປັດໃຈພາຍໃນ ແລະ ພາຍນອກ ເຊິ່ງອາດສົ່ງຜົນກະທົບການດຳເນີນງານຂອງບຸກຄົນ ແລະ ກຸ່ມອຸດສາຫະກຳ ແລະ ກຸ່ມລູກຄ້າ ເຊິ່ງອາດສົ່ງຜົນກະທົບຕໍ່ການຕັດສິນໃຈ ແລະ ການປະເມີນຂອງຜູ້ບໍລິຫານ • ປະເມີນ ແລະ ທົດສອບເຕັກໂນໂລຊີ ຂໍ້ມູນທົ່ວໄປກ່ຽວກັບການຄວບຄຸມ ການເຂົ້າເຖິງໂປແກຼມ ແລະ ຂໍ້ມູນ, ການຄວບຄຸມຄວາມຄົບຖ້ວນຂອງຂໍ້ມູນຂອງລູກຄ້າທີ່ໃຊ້ໃນການຄິດໄລ່ສຳຮອງຄ່າເສື່ອມມູນຄ່າ. • ປະເມີນ ແລະ ທົດສອບຄູ່ມືການຄວບຄຸມເງິນໃຫ້ກູ້ຢືມແກ່ລູກຄ້າ ແລະ ຂັ້ນຕອນການສຳຮອງສຳລັບຄ່າເສື່ອມມູນຄ່າດັ່ງຕໍ່ໄປນີ້; - ການເກີດຂຶ້ນຂອງເງິນໃຫ້ກູ້ຢືມ ແລະ ການອະນຸມັດເງິນໃຫ້ກູ້ຢືມ - ການປະເມີນມູນຄ່າຫຼັກຊັບຄ้ำປะกัน - ຂໍ້ມູນທີ່ປ້ອນເຂົ້າໃນລະບົບ

ເລື່ອງສຳຄັນໃນການກວດສອບ (ຕໍ່)

ເລື່ອງສຳຄັນໃນການກວດສອບ	ວິທີການກວດສອບແກ້ໄຂບັນຫາການກວດສອບສຳຄັນ
ຜູ້ບໍລິຫານໄດ້ຕັ້ງສຳຮອງຄ່າເສື່ອມມູນຄ່າເງິນໃຫ້ກູ້ຢືມແກ່ລູກຄ້າ ໂດຍຈັດປະເພດອອກເປັນ 2 ປະເພດ ຄື ຄ່າເສື່ອມມູນຄ່າລາຍບຸກຄົນ ແລະ ໂດຍລວມ. ສຳລັບຄ່າເສື່ອມມູນຄ່າລາຍບຸກຄົນແມ່ນຄິດໄລ່ໂດຍມູນຄ່າປັດຈຸບັນຂອງກະແສເງິນສົດໃນອະນາຄົດທີ່ຄາດວ່າຈະໄດ້ຮັບຈາກລູກຄ້າ. (ບົດອະທິບາຍ 2.8.1) ສຳລັບຄ່າເສື່ອມມູນຄ່າໂດຍລວມ, ເງິນໃຫ້ກູ້ຢືມແກ່ລູກຄ້າໄດ້ຖືກຈັດເປັນກຸ່ມໂດຍອີງໃສ່ຄຸນລັກສະນະຄວາມສ່ຽງຂອງສິນເຊື່ອທີ່ຄ້າຍຄືກັນ. ເງິນສົດໃນອະນາຄົດຂອງກຸ່ມເງິນໃຫ້ກູ້ຢືມແກ່ລູກຄ້າໄດ້ຖືກປະເມີນໂດຍລວມສຳລັບຄ່າເສື່ອມມູນຄ່າ ແລະ ຄາດຄະເນໂດຍອີງໃສ່ປະສົບການການສູນເສຍທີ່ຜ່ານມາ. ອີງຕາມຄວາມສຳຄັນ, ລະດັບຂອງຫົວຂໍ້ ແລະ ການຄາດຄະເນຢ່າງບໍ່ແນ່ນອນ, ບັນຊີສຳຮອງຄ່າເສື່ອມມູນຄ່າ ຂອງເງິນໃຫ້ກູ້ຢືມແກ່ລູກຄ້າແມ່ນບັນຫາສຳຄັນໃນການກວດສອບ.	• ການທົດລອງຕົວຢ່າງເງິນໃຫ້ກູ້ຢືມ ເຊິ່ງໄດ້ມີການຈັດປະເພດສຳຮອງຄ່າເສື່ອມມູນຄ່າເປັນລາຍບຸກຄົນ, ພວກເຮົາໄດ້ດຳເນີນການດັ່ງຕໍ່ໄປນີ້; - ສອບຖາມກັບຜູ້ບໍລິຫານກ່ຽວກັບຂັ້ນຕອນທີ່ກຳນົດ ແລະ ຈັດປະເພດເງິນໃຫ້ກູ້ຢືມ ເປັນ ຄ່າເສື່ອມລາຍບຸກຄົນ ຫຼື ໂດຍລວມ - ພິຈາລະນາສົມມຸດຕິຖານທີ່ນຳໃຊ້ເຂົ້າໃນການຄິດໄລ່ມູນຄ່າປັດຈຸບັນຂອງກະແສເງິນສົດໃນອະນາຄົດທີ່ຄາດໄວ້ຈາກລູກຄ້າດ້ວຍເອກະສານສະໜັບສະໜູນເຊັ່ນ: ເງິນສົດໃນອະນາຄົດທີ່ຄາດໄວ້ຈາກລູກຄ້າ, ການປະເມີນມູນຄ່າຊັບສິນ. - ຄິດໄລ່ອັດຕາສ່ວນຫຼຸດ ແລະ ປະເມີນຄວາມເໝາະສົມຂອງອັດຕາສ່ວນຫຼຸດ ທີ່ໃຊ້ໃນການຄິດໄລ່ມູນຄ່າປັດຈຸບັນຂອງກະແສເງິນສົດໃນອະນາຄົດ - ປະເມີນຄວາມເໝາະສົມຂອງການສົມມຸດຕິຖານທີ່ໃຊ້ໃນການຄິດໄລ່ຄວາມເປັນໄປໄດ້ຂອງການຜິດນັດຊຳລະໜີ້ ອັດຕາການສູນເສຍ ສຳລັບການຄິດໄລ່ຂອງຄ່າເສື່ອມມູນຄ່າຂອງກຸ່ມ ໂດຍການກວດກາໂດຍມີຫຼັກຖານປະກອບທີ່ກ່ຽວຂ້ອງ ແລະ ມີການປຶກສາຫາລືໂດຍລະອຽດກັບຜູ້ບໍລິຫານກ່ຽວກັບການສົມມຸດຕິຖານ - ຄິດໄລ່ຍອດເງື່ອສຳຮອງສຳລັບຄ່າເສື່ອມມູນຄ່າຄົນໃໝ່ໃນມື້ສິ້ນສຸດຂອງບົດລາຍງານ • ນອກຈາກນີ້, ສຳລັບການປະເມີນຫຼັກຊັບຄ้ຳປະກັນທີ່ດຳເນີນການໂດຍຜູ້ປະເມີນລາຄາມືອາຊີບ ພວກເຮົາໄດ້ ກວດສອບຄຸນນະສົມບັດຂອງພວກເຂົາ ຈາກນັ້ນ ພວກເຮົາຈຶ່ງສຸ່ມຕົວຢ່າງການປະເມີນເຫຼົ່ານັ້ນ ເພື່ອກວດສອບວ່າຜູ້ບໍລິຫານໃຊ້ການປະເມີນລ່າສຸດໃນການຄິດໄລ່ສຳຮອງຄ່າເສື່ອມມູນຄ່າສຳລັບລູກຄ້າແຕ່ລະລາຍບຸກຄົນ. ຈາກຂັ້ນຕອນເຫຼົ່ານັ້ນ ພວກເຮົາພົບວ່າການພິຈາລະນາ ແລະ ສົມມຸດຕິຖານຂອງຜູ້ບໍລິຫານກ່ຽວກັບການຕັ້ງສຳຮອງຄ່າເສື່ອມມູນຄ່າມີຄວາມເໝາະສົມ.

ຂໍ້ມູນອື່ນ

ຜູ້ອຳນວຍການແມ່ນຮັບຜິດຊອບຕໍ່ກັບຂໍ້ມູນອື່ນໆເຊິ່ງປະກອບມີຂໍ້ມູນທີ່ຢູ່ໃນບົດລາຍງານປະຈຳປີ, ແຕ່ບໍ່ລວມຢູ່ໃນເອກະສານລາຍງານການເງິນ ແລະ ບົດລາຍງານຂອງຜູ້ກວດສອບ. ໃນບົດລາຍງານປະຈຳປີແມ່ນຄາດວ່າຈະສາມາດກະກຽມໃຫ້ພວກເຮົາພາຍຫຼັງວັນທີຂອງບົດລາຍງານຂອງຜູ້ກວດສອບນີ້.

ຄວາມເຫັນຂອງພວກເຮົາຕໍ່ເອກະສານລາຍງານການເງິນບໍ່ຄອບຄຸມເຖິງຂໍ້ມູນອື່ນ ແລະ ພວກເຮົາບໍ່ໄດ້ໃຫ້ຄວາມເຊື່ອໝັ້ນຕໍ່ຂໍ້ມູນເຫຼົ່ານັ້ນ.

ເພື່ອໃຫ້ສອດຄ່ອງກັບການກວດສອບເອກະສານລາຍງານການເງິນ, ຄວາມຮັບຜິດຊອບຂອງພວກເຮົາຄືອ່ານ ແລະ ພິຈາລະນາຂໍ້ມູນອື່ນໆທີ່ມີຄວາມຂັດແຍ່ງຢ່າງເປັນສາລະສຳຄັນຕໍ່ກັບເອກະສານລາຍງານການເງິນ ຫຼື ກັບຄວາມຮູ້ທີ່ໄດ້ຮັບຈາກການກວດສອບຂອງພວກເຮົາ ຫຼື ເຫັນວ່າຂໍ້ມູນອື່ນມີການສະແດງຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງທີ່ເປັນສາລະສຳຄັນ ຫຼື ບໍ່.

ເມື່ອພວກເຮົາອ່ານບົດລາຍງານປະຈຳປີ, ຖ້າຫາກພວກເຮົາສະຫຼຸບໄດ້ວ່າມີການສະແດງຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງອັນເປັນສາລະສຳຄັນ, ພວກເຮົາຈະຕ້ອງແຈ້ງເລື່ອງດັ່ງກ່າວໃຫ້ຄະນະກຳມະການກວດສອບຮັບຮູ້.

ຄວາມຮັບຜິດຊອບຂອງຜູ້ອຳນວຍການ ຕໍ່ເອກະສານລາຍງານການເງິນ

ຜູ້ອຳນວຍການມີຄວາມຮັບຜິດຊອບສຳລັບການກະກຽມເອກະສານລາຍງານການເງິນ ໂດຍສອດຄ່ອງກັບ ລະບຽບການ ການບັນຊີທີ່ກ່ຽວຂ້ອງ ແລະ ແຈ້ງການ ຂອງ ທະນາຄານແຫ່ງ ສປປ ລາວ ແລະ ນະໂຍບາຍການບັນຊີ ດັ່ງທີ່ໄດ້ອະທິບາຍໄວ້ໃນ ບົດອະທິບາຍຊ້ອນທ້າຍ ຂໍ້ທີ 2 ຂອງເອກະສານລາຍງານການເງິນນີ້ ແລະ ການຄວບຄຸມພາຍໃນ ເຊິ່ງຜູ້ອຳນວຍການໄດ້ກຳນົດໄວ້ຢ່າງພຽງພໍ ເພື່ອສ້າງເອກະສານລາຍງານການເງິນ ທີ່ປາສະຈາກ ການລາຍງານບໍ່ຖືກຕ້ອງ ອັນເນື່ອງມາຈາກການສໍ້ໂກງ ຫຼື ຂໍ້ຜິດພາດ.

ໃນການກະກຽມເອກະສານລາຍງານການເງິນ, ຜູ້ອຳນວຍການມີຄວາມຮັບຜິດຊອບໃນການປະເມີນຄວາມສາມາດ ຂອງທະນາຄານ ໃນການດຳເນີນງານຢ່າງຕໍ່ເນື່ອງ, ເປີດເຜີຍເລື່ອງທີ່ກ່ຽວຂ້ອງກ່ຽວກັບການດຳເນີນງານຕໍ່ເນື່ອງ ຕາມຄວາມເໝາະສົມ ແລະ ການໃຊ້ພື້ນຖານບັນຊີສຳຫຼັບການດຳເນີນງານຢ່າງຕໍ່ເນື່ອງ. ຍົກເວັ້ນ ຜູ້ອຳນວຍການມີຄວາມຕັ້ງໃຈທີ່ຈະຍຸບ ກິດຈະການ ຫຼື ບໍ່ສາມາດດຳເນີນງານຢ່າງຕໍ່ເນື່ອງໄດ້.

ຄະນະກຳມະການກວດສອບໄດ້ຊ່ວຍຜູ້ອຳນວຍການ ໃນເລື່ອງຄວາມຮັບຜິດຊອບ ຂອງພວກເຂົາຕໍ່ກັບຂັ້ນຕອນໃນການກຽມບົດລາຍງານການເງິນ.

ຄວາມຮັບຜິດຊອບຂອງຜູ້ກວດສອບ ຕໍ່ເອກະສານລາຍງານການເງິນ

ວັດຖຸປະສົງຂອງພວກເຮົາ ແມ່ນເພື່ອໃຫ້ຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນວ່າເອກະສານລາຍງານການເງິນປາສະຈາກການສະແດງຂໍ້ມູນຜິດພາດທີ່ເປັນສາລະສຳຄັນ, ບໍ່ວ່າເນື່ອງຈາກການສໍ້ໂກງ ຫຼື ຂໍ້ຜິດພາດ ແລະ ສະເໜີຄວາມເຫັນຂອງພວກເຮົາຕໍ່ເອກະສານລາຍງານການເງິນ ເຊິ່ງລວມຄວາມເຫັນຂອງຜູ້ກວດສອບ. ຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນຄືຄວາມເຊື່ອໝັ້ນໃນລະດັບສູງແຕ່ບໍ່ໄດ້ເປັນການຮັບປະກັນວ່າການດຳເນີນການກວດສອບຕາມມາດຕະຖານການກວດສອບບັນຊີສາກົນຈະສາມາດກວດພົບ ຫຼື ປ້ອງກັນການສະແດງຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງທີ່ເປັນສາລະສຳຄັນສະເໝີໄປ ຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງອາດເກີດຈາກການສໍ້ໂກງ ຫຼື ຂໍ້ຜິດພາດ ແລະ ຖືວ່າເປັນສາລະສຳຄັນ ເມື່ອຄາດການຢ່າງສົມເຫດສົມຜົນໄດ້ວ່າລາຍການຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງແຕ່ລະລາຍການ ຫຼື ທຸກລາຍການລວມກັນມີຜົນຕໍ່ການຕັດສິນໃຈທາງເສດຖະກິດຕໍ່ຜູ້ໃຊ້ເອກະສານລາຍງານການເງິນເຫຼົ່ານີ້.

ໃນການກວດສອບຂອງພວກເຮົາອີງຕາມມາດຕະຖານການກວດສອບບັນຊີສາກົນ, ພວກເຮົາໄດ້ໃຊ້ການປະເມີນຕາມຫຼັກວິຊາຊີບທີ່ຄວນຈະມີຕະຫຼອດການກວດສອບ, ການດຳເນີນງານຂອງພວກເຮົາລວມມີ:

- ການລະບຸ ແລະ ການປະເມີນຄວາມສ່ຽງຂອງການລາຍງານຜິດພາດທີ່ເປັນສາລະສຳຄັນຂອງເອກະສານລາຍງານການເງິນ ເນື່ອງຈາກການສໍ້ໂກງ ຫຼື ຂໍ້ຜິດພາດ. ການວາງແຜນ ແລະ ການດຳເນີນງານຕາມວິທີການກວດສອບເພື່ອຕອບສະໜອງຕໍ່ຄວາມສ່ຽງເຫຼົ່ານັ້ນ ແລະ ຫຼັກຖານທີ່ໄດ້ຈາກການກວດສອບ ທີ່ພວກເຮົາໄດ້ຮັບ ແມ່ນພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານສຳລັບການສະແດງຄຳເຫັນຂອງພວກເຮົາ. ຄວາມສ່ຽງທີ່ຈະບໍ່ພົບຂໍ້ມູນທີ່ຜິດພາດ ແລະ ເປັນສາລະສຳຄັນ ເຊິ່ງເກີດຈາກການສໍ້ໂກງມີສູງກວ່າຄວາມສ່ຽງທີ່ເກີດຈາກຂໍ້ຜິດພາດ, ເນື່ອງຈາກການສໍ້ໂກງອາດເກີດຈາກການສົມຮູ້ຮ່ວມຄິດປອມແປງເອກະສານຫຼັກຖານ, ການຕັ້ງໃຈລະເວັ້ນທີ່ຈະສະແດງຂໍ້ມູນທີ່ບໍ່ຖືກຕ້ອງຕາມຄວາມເປັນຈິງ ຫຼື ການເຂົ້າແຊກແຊງການຄວບຄຸມພາຍໃນ
- ທຳຄວາມເຂົ້າໃຈ ແລະ ປະເມີນປະສິດທິພາບຂອງລະບົບການຄວບຄຸມພາຍໃນທີ່ກ່ຽວຂ້ອງກັບການກວດສອບ ເພື່ອກຳນົດຂັ້ນຕອນໃນການກວດສອບທີ່ເໝາະສົມກັບສະພາບຕົວຈິງ, ແຕ່ບໍ່ມີຈຸດປະສົງເພື່ອສະແດງຄວາມເຫັນກ່ຽວກັບ ປະສິດທິຜົນຂອງການຄວບຄຸມພາຍໃນຂອງທະນາຄານ
- ປະເມີນຄວາມເໝາະສົມຂອງການນຳໃຊ້ນະໂຍບາຍການບັນຊີ ແລະ ຄວາມສົມເຫດສົມຜົນຂອງການຄາດຄະເນທາງບັນຊີ ລວມທັງການເປີດເຜີຍຂໍ້ມູນທີ່ກ່ຽວຂ້ອງທີ່ສ້າງຂຶ້ນໂດຍຜູ້ບໍລິຫານ
- ສະຫລຸບກ່ຽວກັບຄວາມເໝາະສົມຂອງການໃຊ້ພື້ນຖານບັນຊີສຳລັບການດຳເນີນງານຢ່າງຕໍ່ເນື່ອງຂອງຜູ້ບໍລິຫານ ແລະ ຫຼັກຖານການກວດສອບທີ່ໄດ້ຮັບວ່າບໍ່ມີຄວາມແນ່ນອນທີ່ມີສາລະສຳຄັນ ທີ່ກ່ຽວກັບເຫດການ ຫຼື ສະພາບຕົວຈິງທີ່ອາດມີປັດໃຈໃຫ້ເກີດຂໍ້ສົງໃສຢ່າງທີ່ມີສາລະສຳຄັນຕໍ່ຄວາມສາມາດໃນການດຳເນີນງານຢ່າງຕໍ່ເນື່ອງຂອງທະນາຄານ ຫຼື ບໍ່, ຖ້າພວກເຮົາສະຫຼຸບໄດ້ວ່າຄວາມບໍ່ແນ່ນອນທີ່ມີສາລະສຳຄັນ ພວກເຮົາຕ້ອງບັນທຶກໃນບົດລາຍງານຂອງຜູ້ກວດສອບຂອງພວກເຮົາທີ່ໄດ້ເປີດເຜີຍກ່ຽວກັບເອກະສານລາຍງານການເງິນເຊິ່ງການເປີດເຜີຍດັ່ງກ່າວບໍ່ພຽງພໍທີ່ຈະເຮັດໃຫ້ ຄວາມເຫັນຂອງພວກເຮົາຈະປ່ຽນແປງໄປ ຂໍ້ສະຫຼຸບຂອງພວກເຮົາຂຶ້ນຢູ່ກັບຫຼັກຖານການກວດສອບທີ່ໄດ້ຮັບຈົນເຖິງວັນທີ່ໃນບົດລາຍງານຂອງພວກເຮົາ. ເຖິງຢ່າງໃດກໍຕາມ ເຫດການ ຫຼື ສະພາບຕົວຈິງໃນອານາຄົດອາດເປັນສາເຫດໃຫ້ທະນາຄານບໍ່ສາມາດດຳເນີນງານຢ່າງຕໍ່ເນື່ອງໄດ້.

ພວກເຮົາໄດ້ສື່ສານກັບຄະນະກຳມະການກວດສອບກ່ຽວກັບບັນຫາອື່ນໆ ຂອບເຂດ ແລະ ຊ່ວງເວລາຂອງການກວດສອບຕາມທີ່ໄດ້ວາງແຜນໄວ້. ເຊິ່ງລວມເຖິງບັນຫາທີ່ສຳຄັນທີ່ພົບເຫັນໃນການກວດສອບ ແລະ ຂໍ້ບົກຜ່ອງຂອງການຄວບຄຸມພາຍໃນທີ່ເປັນສາລະສຳຄັນ ທີ່ພົບລະຫວ່າງການກວດສອບຂອງພວກເຮົາ.

ພວກເຮົາໄດ້ໃຫ້ຄຳຮັບຮອງແກ່ຄະນະກຳມະການກວດສອບວ່າ ພວກເຮົາໄດ້ປະຕິບັດຕາມຂໍ້ກຳນົດຫລັກຈັນຍາບັນກ່ຽວຂ້ອງກັບຄວາມເປັນອິດສະຫຼະ ແລະ ໄດ້ສື່ສານກັບຄະນະກຳມະການກວດສອບກ່ຽວກັບຄວາມສຳພັນທັງໝົດ ລວມເຖິງເລື່ອງອື່ນທີ່ພວກເຮົາເຊື່ອວ່າມີເຫດຜົນທີ່ອາດພິຈາລະນາເຖິງຜົນກະທົບຕໍ່ຄວາມເປັນອິດສະຫຼະ ຂອງພວກເຮົາ ແລະ ຫລັກການທີ່ພວກເຮົາໃຊ້ເພື່ອປ້ອງກັນການຂາດຄວາມເປັນອິດສະຫຼະ.

pwc

ຈາກບັນຫາທີ່ປຶກສາກັບຄະນະກຳມະການກວດສອບ ພວກເຮົາໄດ້ພິຈາລະນາບັນຫາເຫຼົ່ານັ້ນແມ່ນບັນຫາທີ່ມີສາລະສຳຄັນທີ່ສຸດໃນການກວດສອບເອກະສານລາຍງານການເງິນຄັ້ງນີ້ ແລະ ກຳນົດເປັນເລື່ອງສຳຄັນໃນການກວດສອບ. ພວກເຮົາໄດ້ອະທິບາຍເລື່ອງເຫຼົ່ານີ້ໃນບົດລາຍງານຂອງຜູ້ກວດສອບ, ຍົກເວັ້ນກົດໝາຍ ຫຼື ຂໍ້ບັງຄັບບໍ່ໃຫ້ເປີດເຜີຍຕໍ່ສາທາລະນະກ່ຽວກັບເລື່ອງດັ່ງກ່າວ ຫຼື ໃນສະພາບການທີ່ຍາກຈະເກີດຂຶ້ນ ພວກເຮົາພິຈາລະນາວ່າບໍ່ຄວນສື່ສານເລື່ອງດັ່ງກ່າວໃນບົດລາຍງານຂອງພວກເຮົາ ເພາະການປະຕິບັດດັ່ງກ່າວສາມາດຄາດການໄດ້ຢ່າງສົມເຫດສົມຜົນວ່າຈະມີຜົນກະທົບໃນທາງລົບຫຼາຍກວ່າຜົນປະໂຫຍດ ຕໍ່ສ່ວນໄດ້ເສຍສາທາລະນະຈາກການສື່ສານດັ່ງກ່າວ.

ບໍລິສັດ ພຣາຍສວໍເຕີເຮົ້າສກຸບເປີສ (ລາວ) ຈຳກັດຜູ້ດຽວ

ໂດຍ: ອະພິສິດ ທ່ຽງຕິງພິນໄຍ
ຮຸ້ນສ່ວນ

ນະຄອນຫຼວງວຽງຈັນ, ສປປ ລາວ
ວັນທີ: 29 ມີນາ 2024

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ໃບລາຍງານຜົນໄດ້ຮັບ
ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2023

	ບິດ ອະທິບາຍ	2023 ລ້ານກີບ	2022 ລ້ານກີບ
ລາຍຮັບດອກເບ້ຍ	4	4.000.347	3.116.126
ລາຍຈ່າຍດອກເບ້ຍ	4	(2.262.158)	(1.845.243)
ລາຍຮັບສຸດທິຈາກດອກເບ້ຍ	**4**	**1.738.189**	**1.270.883**
ລາຍຮັບຈາກຄ່າທຳນຽມ ແລະ ບໍລິການ	5	925.033	513.818
ລາຍຈ່າຍຈາກຄ່າທຳນຽມ ແລະ ບໍລິການ	5	(371.827)	(149.673)
ລາຍຮັບສຸດທິຈາກຄ່າທຳນຽມ ແລະ ບໍລິການ	**5**	**553.206**	**364.145**
ກຳໄລ/(ຂາດທຶນ)ສຸດທິ ຈາກການແລກປ່ຽນເງິນຕາຕ່າງປະເທດ	6	390.926	(38.154)
ລາຍຮັບອື່ນໆຈາກການດຳເນີນງານ	7	445.957	121.260
ລາຍຮັບຈາກການດຳເນີນງານ		**3.128.278**	**1.718.134**
ລາຍຈ່າຍໃນການສູນເສຍຂອງເງິນໃຫ້ກູ້ຢືມແກ່ລູກຄ້າ	13	(2.098.555)	(912.720)
ການເພີ່ມຂຶ້ນຂອງການດ້ອຍຄ່າຂອງການລົງທຶນທາງການເງິນ - ປະເພດມີໄວ້ເພື່ອຂາຍ		(2.301)	-
ລາຍຮັບສຸດທິຈາກການດຳເນີນງານ		**1.027.422**	**805.414**
ລາຍຈ່າຍບຸກຄະລາກອນ	8	(399.534)	(329.249)
ຄ່າຫຼ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າ	17, 18	(93.616)	(112.823)
ຄ່າຫຼ້ຍຫ້ຽນຂອງສິດນຳໃຊ້ຊັບສິນ	19	(8.574)	(7.898)
ລາຍຈ່າຍອື່ນໆໃນການດຳເນີນງານ	9	(294.971)	(195.263)
ລວມລາຍຈ່າຍໃນການດຳເນີນງານ		**(796.695)**	**(645.233)**
ສ່ວນແບ່ງກຳໄລໃນວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ	16	52.393	36.898
ກຳໄລກ່ອນອາກອນ		**283.120**	**197.079**
ລາຍຈ່າຍອາກອນກຳໄລ	24.1	(51.712)	31.111
ກຳໄລສຸດທິໃນປີ		**231.408**	**228.190**
ກຳໄລຕໍ່ຮຸ້ນ (ກີບ)	31	**1.114**	**1.099**

ກະກຽມໂດຍ:

ທ່ານ ນ ເພັດສະໄໝ ໄຊຍະມຸງຄຸນ
ຮອງພະແນກບັນຊີສັງລວມ
ວັນທີ: 29 ມີນາ 2024

ອະນຸມັດໂດຍ:

ທ່ານ ວິທະຍາ ຈັນເທຣີ
ຮອງຫົວໜ້າພະແນກກວດກາພາຍໃນ
ວັນທີ: 29 ມີນາ 2024

ອະນຸມັດໂດຍ:

ທ່ານ ນັນທະລາດ ແກ້ວປະເສີດ
ຮອງຜູ້ອຳນວຍການ
ວັນທີ: 29 ມີນາ 2024

ບິດອະທິບາຍຊ້ອນທ້າຍ ເອກະສານລາຍງານການເງິນ ແຕ່ໜ້າ 17 ເຖິງ 58 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ໃບລາຍງານຜົນໄດ້ຮັບສັງລວມ
ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2023

	ບິດ ອະທິບາຍ	2023 ລ້ານກີບ	2022 ລ້ານກີບ
ກຳໄລສຸດທິ ໃນປີ		**231.408**	**228.190**
ລາຍຮັບ(ລາຍຈ່າຍ)ສັງລວມອື່ນໆ			
ການສູນເສຍການປະເມີນຄືນຜົນປະໂຫຍດພະນັກງານ	27	11.334	(1.053)
ອາກອນກຳໄລທີ່ກ່ຽວຂ້ອງກັບອົງປະກອບຂອງລາຍຮັບສັງລວມອື່ນໆ	24.3	(2.267)	211
ລາຍຮັບ(ລາຍຈ່າຍ)ສັງລວມອື່ນໆສຳລັບປີ ຫັກອາກອນ		**9.067**	**(842)**
ລວມລາຍຮັບ(ລາຍຈ່າຍ)ສັງລວມອື່ນໆສຳລັບປີ ຫັກອາກອນ		**240.475**	**227.348**

ກະກຽມໂດຍ:

ທ່ານ ນ ເພັດສະໄໝ ໄຊຍະມຸງຄຸນ

ຮອງພະແນກບັນຊີສັງລວມ
ວັນທີ: 29 ມີນາ 2024

ອະນຸມັດໂດຍ:

ທ່ານ ວິທະຍາ ຈັນເທຣີ

ຮອງຫົວໜ້າພະແນກກວດກາພາຍໃນ
ວັນທີ: 29 ມີນາ 2024

ອະນຸມັດໂດຍ:

ທ່ານ ນັນທະລາດ ແກ້ວປະເສີດ

ຮອງຜູ້ອຳນວຍການ
ວັນທີ: 29 ມີນາ 2024

ບິດອະທິບາຍຊ້ອນທ້າຍ ເອກະສານລາຍງານການເງິນ ແຕ່ໜ້າ 17 ເຖິງ 58 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ໃບລາຍງານຖານະການເງິນ
ໃນວັນທີ 31 ທັນວາ 2023

	ບິດ ອະທິບາຍ	2023 ລ້ານກີບ	2022 ລ້ານກີບ
ຊັບສິນ			
ເງິນສົດ ແລະ ເງິນຝາກຢູ່ທະນາຄານແຫ່ງ ສປປ ລາວ	10	31.684.143	27.786.294
ເງິນຝາກຢູ່ທະນາຄານອື່ນ	11	21.964.355	11.855.719
ເງິນໃຫ້ກູ້ຢືມແກ່ລູກຄ້າ	12	53.892.356	47.235.372
ການລົງທຶນທາງການເງິນ - ປະເພດມີໄວ້ເພື່ອຂາຍ	14	87.822	90.123
ການລົງທຶນທາງການເງິນ - ປະເພດຖືໄວ້ຈົນຄົບກຳນົດ	15	14.865.690	4.967.151
ການລົງທຶນໃນວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ ໂດຍການນຳໃຊ້ວິທີທຶນສ່ວນໄດ້ເສຍ -ສຸດທິ	16	747.223	691.081
ຊັບສິນບັດຖີທີ່ ແລະ ອຸປະກອນ	17	568.104	540.325
ຊັບສິນບັດຖີທີ່ບໍ່ມີຕົວຕົນ	18	321.734	283.285
ສິດໃນການນຳໃຊ້ຊັບສິນ	19	53.500	52.028
ອາກອນຊັບສິນເຍື່ອນຊຳລະ	24.3	102.813	116.520
ຊັບສິນອື່ນໆ	20	2.146.019	875.117
ລວມຊັບສິນ		**126.433.759**	**94.493.015**
ໜີ້ສິນ ແລະ ທຶນ			
ໜີ້ສິນ			
ເງິນຝາກຈາກທະນາຄານ ແລະ ສະຖາບັນການເງິນອື່ນໆ	21	9.463.117	6.639.183
ເງິນຝາກຈາກລູກຄ້າ	22	109.471.717	80.994.071
ເງິນກູ້ຢືມຈາກທະນາຄານອື່ນ	23	4.378.394	4.105.783
ໜີ້ຕ້ອງສົ່ງອາກອນໃນປີ	24.2	27.454	21.907
ໜີ້ຕ້ອງສົ່ງສັນຍາເຊົ່າ		29.285	26.553
ໜີ້ສິນອື່ນໆ	25	486.128	347.558
ລວມໜີ້ສິນ		**123.856.095**	**92.135.055**
ທຶນ			
ທຶນຈົດທະບຽນ	26	1.038.617	1.038.617
ຄັງສະສົມຕາມລະບຽບການ	27	911.701	836.635
ລາຍການສັງລວມອື່ນ		18.107	9.040
ກຳໄລສະສົມ		609.239	473.668
ລວມທຶນ		**2.577.664**	**2.357.960**
ລວມໜີ້ສິນ ແລະ ທຶນ		**126.433.759**	**94.493.015**

ກະກຽມໂດຍ:	ອະນຸມັດໂດຍ:	ອະນຸມັດໂດຍ:
ທ່ານ ນ ເພັດສະໄໝ ໄຊຍະມຸງຄຸນ	ທ່ານ ວິທະຍາ ຈັນເທຣີ	ທ່ານ ນັນທະລາດ ແກ້ວປະເສີດ
ຮອງພະແນກບັນຊີສັງລວມ	ຮອງຫົວໜ້າພະແນກກວດກາພາຍໃນ	ຮອງຜູ້ອຳນວຍການ
ວັນທີ: 29 ມີນາ 2024	ວັນທີ: 29 ມີນາ 2024	ວັນທີ: 29 ມີນາ 2024

ບິດອະທິບາຍຊ້ອນທ້າຍ ເອກະສານລາຍງານການເງິນ ແຕ່ໜ້າ 17 ເຖິງ 58 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນ.

ໃບລາຍງານສ່ວນປ່ຽນແປງທຶນ
ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2023

				ລາຍການສັງລວມອື່ນ			
	ບົດອະທິບາຍ	ທຶນຈົດທະບຽນ ລ້ານກີບ	ຄັງສະສົມຕາມລະບຽບການ ລ້ານກີບ	ການປະເມີນຄືນຜົນປະໂຫຍດພະນັກງານຫຼັງອອກການທີ່ກຳນົດໄວ້ ລ້ານກີບ	ຄັງສຳຮອງສຳລັບຫຼັກຊັບມີໄວ້ເພື່ອຂາຍ ລ້ານກີບ	ກຳໄລສະສົມ ລ້ານກີບ	ລວມ ລ້ານກີບ
ຍອດເຫລືອໃນວັນທີ 31 ທັນວາ 2021		**1.038.617**	**831.667**	**9.882**	**1.534**	**250.446**	**2.132.146**
ແບ່ງເຂົ້າຄັງສະສົມຕາມລະບຽບການພາຍໃນປີ 2021	27	**-**	4.968	-	-	(4.968)	-
ກຳໄລສຸດທິໃນປີ 2022		-	-	-	-	228.190	228.190
ການປະເມີນມູນຄ່າຄືນຂອງການລົງທຶນທາງການເງິນ - ປະເພດມີໄວ້ເພື່ອຂາຍ		-	-	-	(1.534)	-	(1.534)
ການປະເມີນຄືນຜົນປະໂຫຍດພະນັກງານ	25	-	-	(1.053)	-	-	(1.053)
ອາກອນກຳໄລທີ່ກ່ຽວຂ້ອງກັບອົງປະກອບຂອງລາຍຮັບສັງລວມອື່ນໆ	24.3	-	-	211	-	-	211
ຍອດເຫລືອໃນວັນທີ 31 ທັນວາ 2022		**1.038.617**	**836.635**	**9.040**	**-**	**473.668**	**2.357.960**

ບົດອະທິບາຍຊ້ອນທ້າຍ ເອກະສານລາຍງານການເງິນ ແຕ່ໜ້າ 17 ເຖິງ 58 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນ.

ໃບລາຍງານສ່ວນປ່ຽນແປງທຶນ
ສຳລັບປີທີ່ສິ້ນສຸດອັນທີ 31 ທັນວາ 2023

	ບົດອະທິບາຍ	ທຶນຈົດທະບຽນ ລ້ານກີບ	ຄັງສະສົມຕາມລະບຽບການ ລ້ານກີບ	ລາຍການສ່ວນອື່ນ: ການປະເມີນຄືນຜົນປະໂຫຍດພະນັກງານຫຼັງອອກການທີ່ກຳນົດໄວ້ ລ້ານກີບ	ກຳໄລສະສົມ. ລ້ານກີບ	ລວມ ລ້ານກີບ
ຍອດເຫລືອໃນວັນທີ 31 ທັນວາ 2022		**1.038.617**	**836.635**	**9.040**	**473.668**	**2.357.960**
ແບ່ງສ່ວນສຳລັບເງິນປັນຜົນທີ່ໄດ້ຈ່າຍໃຫ້ຜູ້ຖືຮຸ້ນ	32	-	-	-	(20.771)	(20.771)
ແບ່ງເຂົ້າຄັງສະສົມຕາມລະບຽບການພາຍໃນປີ 2022	27	-	75.066	-	(75.066)	-
ກຳໄລສຸດທິໃນປີ 2023		-	-	-	231.408	231.408
ການປະເມີນຄືນຜົນປະໂຫຍດພະນັກງານ	25	-	-	11.334	-	11.334
ອາກອນກຳໄລທີ່ກ່ຽວຂ້ອງກັບອົງປະກອບຂອງລາຍຮັບສັງລວມອື່ນໆ	24.3	-	-	(2.267)	-	(2.267)
ຍອດເຫລືອໃນວັນທີ 31 ທັນວາ 2023		**1.038.617**	**911.701**	**18.107**	**609.239**	**2.577.664**

ກະກຽມໂດຍ:

ທ່ານ ນ ເພັດສະໄໝ ໄຊຍະມຸງຄຸນ

ຮອງພະແນກບັນຊີສັງລວມ
ວັນທີ: 29 ມີນາ 2024

ອະນຸມັດໂດຍ:

ທ່ານ ວິທະຍາ ຈັນເທຣີ

ຮອງຫົວໜ້າພະແນກກວດກາພາຍໃນ
ວັນທີ: 29 ມີນາ 2024

ອະນຸມັດໂດຍ:

ທ່ານ ນັນທະລາດ ແກ້ວປະເສີດ

ຮອງຜູ້ອຳນວຍການ
ວັນທີ: 29 ມີນາ 2024

ບົດອະທິບາຍຊ້ອນທ້າຍ ເອກະສານລາຍງານການເງິນ ແຕ່ໜ້າ 17 ເຖິງ 58 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນ.

ໃບລາຍງານກະແສເງິນສົດ
ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2023

	ບົດອະທິບາຍ	2023 ລ້ານກີບ	2022 ລ້ານກີບ
ກິດຈະກຳການດຳເນີນງານ			
ກຳໄລກ່ອນຫັກອາກອນ		**283.120**	**197.079**
ດັດແກ້ສຳລັບ:			
ລາຍຈ່າຍຄ່າຫລຸ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າ	17, 18, 19	102.190	120.720
ລາຍຈ່າຍຄ່າເສື່ອມມູນຄ່າ	13	2.098.555	912.720
ສ່ວນປ່ຽນແປງຄ່າເສື່ອມມູນຄ່າຈາກການລົງທຶນທາງການເງິນ - ປະເພດມີໄວ້ເພື່ອຂາຍ		2.301	-
ລາຍຈ່າຍຜົນປະໂຫຍດພະນັກງານ	25	7.226	9.288
ສ່ວນແບ່ງກຳໄລໃນວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ	16	(52.393)	(36.898)
(ກຳໄລ)/ຂາດທຶນຈາກເງິນຕາຕ່າງປະເທດ		(464.090)	1.532.273
ຂາດທຶນຈາກການຂາຍ ແລະ ຊຳລະສະສາງ		479	6.359
ລາຍຮັບດອກເບ້ຍ	4	(4.000.347)	(3.116.126)
ລາຍຈ່າຍດອກເບ້ຍ	4	2.262.158	1.845.243
ລາຍຮັບເງິນປັນຜົນ	7	(1.918)	(1.918)
ກະແສເງິນສົດຈາກ ກຳໄລຈາກການດຳເນີນງານກ່ອນການປ່ຽນແປງດ້ານຊັບສິນ ແລະ ໜີ້ສິນ		**237.281**	**1.468.742**
ສ່ວນປ່ຽນແປງໃນຊັບສິນຈາກການດຳເນີນງານ			
ສ່ວນປ່ຽນແປງເງິນຝາກຢູ່ທະນາຄານອື່ນສຸດທິ		(12.079.564)	(1.486.073)
ສ່ວນປ່ຽນແປງເງິນໃຫ້ກູ້ຢືມແກ່ລູກຄ້າສຸດທິ		(20.095.751)	(13.983.518)
ສ່ວນປ່ຽນແປງໃນຊັບສິນອື່ນໆ		(1.177.526)	(192.252)
ສ່ວນປ່ຽນແປງໃນໜີ້ສິນຈາກການດຳເນີນງານ			
ສ່ວນປ່ຽນແປງໃນເງິນຝາກກັບທະນາຄານອື່ນສຸດທິ		2.849.098	1.361.992
ສ່ວນປ່ຽນແປງໃນເງິນຝາກຈາກລູກຄ້າສຸດທິ		28.253.313	23.658.446
ສ່ວນປ່ຽນແປງໃນໜີ້ສິນອື່ນໆສຸດທິ		684.569	55.838
ສ່ວນປ່ຽນແປງໃນເງິນກູ້ຢືມຈາກທະນາຄານອື່ນສຸດທິ		148.527	(711.662)
ດອກເບ້ຍທີ່ໄດ້ຮັບ		7.319.548	694.112
ດອກເບ້ຍທີ່ໄດ້ຊຳລະ		(2.457.374)	(1.380.334)
ອາກອນທີ່ໄດ້ຊຳລະພາຍໃນປີ	24.2	(34.725)	(2.261)
ກະແສເງິນສົດສຸດທິຈາກການດຳເນີນງານ		**3.647.396**	**9.483.029**
ກິດຈະກຳການລົງທຶນ			
ການຊື້ ແລະ ປຸກສ້າງຊັບສິນບັດຖຶງທີ່ ແລະ ສິ່ງກໍ່ສ້າງກຳລັງດຳເນີນ ແລະ ຊັບສິນບັດຖຶງທີ່ພວມເຄື່ອນຍ້າຍ		(105.860)	(80.409)
ການຊື້ສິດການນຳໃຊ້ຊັບສິນ		(6.440)	(5.364)
ການຊື້ຊັບສິນບັດຖຶງທີ່ບໍ່ມີຕົວຕົນ	18	(50.307)	(1.784)
ຮັບເງິນຈາກການສະສາງ/ຂາຍຊັບສິນບັດຖຶງທີ່		-	7.468
ຈ່າຍເງິນໃຫ້ວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ	16	(12.000)	(18.498)
ເງິນປັນຜົນຮັບຈາກວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ	16	8.251	7.633
ເງິນປັນຜົນຮັບຈາກການລົງທຶນທາງການເງິນ - ປະເພດມີໄວ້ເພື່ອຂາຍ	7	1.918	1.918
ຈ່າຍເງິນສຳລັບການລົງທຶນທາງການເງິນ - ປະເພດຖືໄວ້ຈົນຄົບກຳນົດ		(5.674.624)	(931.000)
ຮັບເງິນສຳລັບການລົງທຶນທາງການເງິນ - ປະເພດຖືໄວ້ຈົນຄົບກຳນົດ		4.101.382	1.465.537
ກະແສເງິນສົດສຸດທິທີ່ໄດ້ນຳໃຊ້ໃນກິດຈະກຳການລົງທຶນ		**(1.737.680)**	**445.501**

ບົດອະທິບາຍຊ້ອນທ້າຍ ເອກະສານລາຍງານການເງິນ ແຕ່ໜ້າ 17 ເຖິງ 58 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ໃບລາຍງານກະແສເງິນສົດ
ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2023

	ບິດ ອະທິບາຍ	2023 ລ້ານກີບ	2022 ລ້ານກີບ
ກິດຈະກຳທາງການເງິນ			
ຈ່າຍເງິນສຳລັບເງິນປັນຜົນ	32	(20.771)	-
ຈ່າຍເງິນສຳລັບການຊຳລະສັນຍາເຊົ່າ		(10.870)	(13.345)
ກະແສເງິນສົດສຸດທິທີ່ນຳໃຊ້ໃນກິດຈະກຳທາງການເງິນ		**(31.641)**	**(13.345)**
ປ່ຽນແປງສຸດທິ ຂອງເງິນສົດ ແລະ ທຽບເທົ່າເງິນສົດ		**1.878.075**	**9.915.185**
ເງິນສົດ ແລະ ທຽບເທົ່າເງິນສົດໃນຕົ້ນປີ	**28**	**35.715.070**	**25.799.885**
ເງິນສົດ ແລະ ທຽບເທົ່າເງິນສົດໃນທ້າຍປີ	**28**	**37.593.145**	**35.715.070**

ລາຍການທີ່ບໍ່ແມ່ນເງິນສົດຈາກກິດຈະກຳການທາງດ້ານການເງິນ ແລະ ການລົງທຶນ;

ການໄດ້ມາຂອງລາຍການການການຊື້ ແລະ ປຸກສ້າງຊັບສົມບັດຄົງທີ່ ແລະ ສິ່ງກໍ່ສ້າງກຳລັງດຳເນີນ ແລະ ຊັບສົມບັດຄົງທີ່ພວມເຄື່ອນຍ້າຍ	3.711	2.033
ການຊຳລະສະສາງກູ້ຢືມເງິນໃຫ້ລູກຄ້າ ແລະ ການລົງທຶນທາງການເງິນ - ປະເພດຖືໄວ້ຈົນຄົບກຳນົດ	7.699.424	229.358
ການຊື້ສິດການນຳໃຊ້ຊັບສິນ	4.051	-

ກະກຽມໂດຍ:

ທ່ານ ນ ເພັດສະໄໝ ໄຊຍະມຸງຄຸນ
ຮອງພະແນກບັນຊີສັງລວມ
ວັນທີ: 29 ມີນາ 2024

ອະນຸມັດໂດຍ:

ທ່ານ ວິທະຍາ ຈັນເທຣີ
ຮອງຫົວໜ້າພະແນກກວດກາພາຍໃນ
ວັນທີ: 29 ມີນາ 2024

ອະນຸມັດໂດຍ:

ທ່ານ ນັນທະລາດ ແກ້ວປະເສີດ
ຮອງຜູ້ອຳນວຍການ
ວັນທີ: 29 ມີນາ 2024

ບິດອະທິບາຍຊ້ອນທ້າຍ ເອກະສານລາຍງານການເງິນ ແຕ່ໜ້າ 17 ເຖິງ 58 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນ.

1. ຂໍ້ມູນກ່ຽວກັບທະນາຄານ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທະນາຄານ) ແມ່ນ ບໍລິສັດມະຫາຊົນ ທີ່ຈົດທະບຽນໃນຢູ່ພາຍໃຕ້ທະນາຄານແຫ່ງ ສປປ ລາວ (BoL) ແລະ ຕະຫຼາດຫຼັກຊັບໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (LSX).

ທະນາຄານ ໄດ້ສ້າງຕັ້ງ ແລະ ມີພູມລຳເນົາຢູ່ໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ. ສຳນັກງານໃຫຍ່ຂອງທະນາຄານ ຕັ້ງຢູ່ ເລກທີ 01, ຖະໜົນປາງຄຳ, ບ້ານຊຽງຍືນ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ. ໃນວັນທີ 31 ທັນວາ 2023, ທະນາຄານມີໜຶ່ງ (1) ສຳນັກງານໃຫຍ່, ຫົກ (6) ວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ, ຊາວ (20) ສາຂາຫລັກ, ເກົ້າສິບເກົ້າ (99) ໜ່ວຍບໍລິການ ແລະ ສິບສອງ (12) ຫ້ອງແລກປ່ຽນເງິນຕາທົ່ວ ສປປ ລາວ.

ກິດຈະກຳຫຼັກຂອງທະນາຄານ, ວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ ແມ່ນສະໜອງການບໍລິການດ້ານທະນາຄານ ແລະ ການບໍລິການດ້ານອື່ນໆ ປະກອບມີ:

- ການລະດົມທຶນ ແລະ ຮັບເງິນຝາກຈາກ ອົງກອນ ແລະ ບຸກຄົນ
- ປ່ອຍເງິນໃຫ້ກູ້ຢືມແກ່ ອົງກອນ ແລະ ບຸກຄົນ
- ບໍລິການແລກປ່ຽນເງິນຕາຕ່າງປະເທດ
- ການບໍລິການການຄ້າລະຫວ່າງປະເທດ
- ຂາຍຫຼຸດລາຄາຂອງຕາສານໜີ້
- ພັນທະບັດ ແລະ ເອກະສານທີ່ມີມູນຄ່າອື່ນໆ
- ປະກັນໄພ
- ຫຼັກຊັບ

ເອກະສານລາຍງານການເງິນ ແມ່ນຖືກນຳສະເໜີ ເປັນສະກຸນເງິນກີບ ແລະ ປັດໃຫ້ເປັນຫົວໜ່ວຍລ້ານເລກຖ້ວນ, ເວັ້ນເສຍແຕ່ໄດ້ລະບຸໄວ້ເປັນຢ່າງອື່ນ.

ເອກະສານລາຍງານການເງິນສະບັບນີ້ໄດ້ຮັບການຮັບຮອງຈາກສະພາຜູ້ອຳນວຍການ ໃນວັນທີ 29 ມີນາ 2024.

2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ

ນະໂຍບາຍການບັນຊີທີ່ໄດ້ນຳໃຊ້ໃນການກະກຽມເຂົ້າໃນເອກະສານລາຍງານການເງິນແມ່ນໄດ້ລະບຸໄວ້ດັ່ງລຸ່ມນີ້.

2.1 ພື້ນຖານໃນການກະກຽມ

ເອກະສານລາຍງານການເງິນໄດ້ຖືກກະກຽມໃຫ້ສອດຄ່ອງກັບນະໂຍບາຍການບັນຊີຂອງທະນາຄານທີ່ໄດ້ອະທິບາຍໄວ້ດ້ານລຸ່ມ ແລະ ໄດ້ຖືກກະກຽມພາຍໃຕ້ຫຼັກການໃນການບັນທຶກໂດຍອີງຕາມມູນຄ່າຕົ້ນທຶນເບື້ອງຕົ້ນ, ຍົກເວັ້ນຊັບສິນທາງການເງິນບາງປະເພດ (ການລົງທຶນທາງການເງິນ - ປະເພດມີໄວ້ເພື່ອຂາຍ) ວັດມູນຄ່າດ້ວຍມູນຄ່າຍຸດຕິທຳ.

ກິດໝາຍການບັນຊີ ສະບັບເລກທີ 47/ສພ ລົງວັນທີ 26 ທັນວາ 2013, ວິສາຫະກິດຮັບໃຊ້ຜົນປະໂຫຍດສາທາລະນະ (PIE) ແມ່ນຕ້ອງໄດ້ກະກຽມເອກະສານລາຍງານການເງິນຂອງຕົນຕາມມາດຕະຖານລາຍການເງິນສາກົນ (IFRS). ເຖິງຢ່າງໃດກໍຕາມ, ກະຊວງການເງິນໄດ້ອອກແຈ້ງການສະບັບເລກທີ 1137/ກຊ ລົງວັນທີ 27 ເມສາ 2020 ແລະ ຈາກຄະນະກຳມະການຄຸ້ມຄອງຫຼັກຊັບ (LSCO) ລົງວັນທີ 25 ພຶດສະພາ 2020 ເຊິ່ງເປັນທາງເລືອກໃຫ້ວິສາຫະກິດຮັບໃຊ້ຜົນປະໂຫຍດສາທາລະນະ ກະກຽມແຜນປະຕິບັດງານການນຳໃຊ້ IFRS ໄປຈົນເຖິງວັນທີ 31 ທັນວາ 2025 ແລະ 1 ມັງກອນ 2026 ເປັນຕົ້ນໄປ, ທຸກໆບໍລິສັດທີ່ຈົດທະບຽນຈຳຕ້ອງນຳໃຊ້ມາດຕະຖານລາຍງານການເງິນສາກົນຢ່າງສົມບຸນ.

2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

2.1 ພື້ນຖານໃນການກະກຽມ (ຕໍ່)

ຜູ້ບໍລິຫານ ແມ່ນກຳລັງກະກຽມປະຕິບັດງານການນຳໃຊ້ມາດຕະຖານລາຍງານການເງິນສາກົນຕາມການແຈ້ງການ. ດັ່ງນັ້ນ, ຫຼັກການບັນຊີທີ່ໃຊ້ອາດຈະແຕກຕ່າງຈາກມາດຕະຖານລາຍການເງິນສາກົນ.

ການກະກຽມເອກະສານລາຍງານການເງິນ ຮຽກຮ້ອງໃຫ້ຝ່າຍຜູ້ບໍລິຫານ ຕ້ອງມີການຄາດຄະເນ ແລະ ອາງຂໍ້ສົມມຸດຖານ ຫຼາຍປະການ ທີ່ມີຜົນກະທົບຕໍ່ ຈຳນວນທີ່ລາຍງານເປັນ ຊັບສິນ ແລະ ໜີ້ສິນ, ການເປີດເຜີຍຊັບສິນ ແລະ ໜີ້ສິນອາດເກີດ ຂຶ້ນໃນວັນທີ ຂອງເອກະສານລາຍງານການເງິນ ແລະ ຈຳນວນລາຍຮັບ ແລະ ລາຍຈ່າຍໃນໄລຍະເວລາທີ່ລາຍງານ. ເຖິງ ແມ່ນວ່າ ການຄາດຄະເນເຫຼົ່ານີ້ແມ່ນອີງໃສ່ຄວາມຮູ້ທີ່ດີທີ່ສຸດຂອງຜູ້ບໍລິຫານກ່ຽວກັບເຫດການ ແລະ ການປະຕິບັດໃນປະຈຸ ບັນ, ແຕ່ຜົນໄດ້ຮັບຕົວຈິງອາດຈະແຕກຕ່າງຈາກການຄາດຄະເນ (ບົດອະທິບາຍ 3).

2.2 ການປ່ຽນຄ່າເງິນຕາຕ່າງປະເທດ

ລາຍການເຄື່ອນໄຫວໃນສະກຸນເງິນຕາຕ່າງປະເທດແມ່ນຖືກບັນທຶກເບື້ອງຕົ້ນຕາມອັດຕາແລກປ່ຽນໃນມື້ທີ່ລາຍການເຄື່ອນໄຫວ ນັ້ນເກີດຂຶ້ນ. ຊັບສິນ ແລະ ໜີ້ສິນ ທີ່ເປັນເງິນຕາຕ່າງປະເທດຈະຖືກປ່ຽນຄ່າເປັນສະກຸນເງິນກີບ ໃນອັດຕາແລກປ່ຽນໃນ ວັນທີລາຍງານ (ເບິ່ງລາຍການ ອັດຕາແລກປ່ຽນເງິນຕາຕ່າງປະເທດທີ່ໃຊ້ໃນການແລກປ່ຽນເງິນກີບ ໃນວັນທີ 31 ທັນວາ 2023 ແລະ 31 ທັນວາ 2022 ຕາມທີ່ສະແດງໃນ ບົດອະທິບາຍຂໍ້ 35). ຜົນຕ່າງຈາກອັດຕາແລກປ່ຽນທີ່ຍັງບໍ່ໄດ້ເກີດຂຶ້ນຈິງ ທີ່ເກີດຈາກການປ່ຽນຄ່າຊັບສິນ ແລະ ໜີ້ສິນທາງການເງິນ ໃນວັນທີຂອງໃບລາຍງານຖານະການເງິນແມ່ນຮັບຮູ້ເຂົ້າໃນໃບລາຍ ງານຜົນໄດ້ຮັບ.

2.3 ການຮັບຮູ້ລາຍຮັບ ແລະ ລາຍຈ່າຍ

ລາຍຮັບຖືກຮັບຮູ້ໃນຂອບເຂດທີ່ອາດຈະເປັນໄປໄດ້ວ່າຜົນປະໂຫຍດທາງເສດຖະກິດຈະໄຫຼເຂົ້າສູ່ທະນາຄານ ແລະ ລາຍຮັບ ສາມາດວັດແທກໄດ້ຢ່າງໜ້າເຊື່ອຖື, ຕ້ອງປະຕິບັດຕາມເງື່ອນໄຂການຮັບຮູ້ສະເພາະຕໍ່ໄປນີ້ກ່ອນທີ່ຈະຮັບຮູ້ລາຍຮັບ.

2.3.1 ລາຍຮັບ ແລະ ລາຍຈ່າຍດອກເບ້ຍ

ສຳລັບເຄື່ອງມືການເງິນທັງໝົດ ທີ່ຖືກວັດແທກດ້ວຍມູນຄ່າທຶນແບ່ງຈ່າຍ, ຊັບສິນທາງການເງິນທີ່ມີດອກເບ້ຍ ເຊິ່ງ ຈັດປະເພດເປັນເຄື່ອງມືທີ່ມີເພື່ອຂາຍ ແລະ ເຄື່ອງມືທາງການເງິນທີ່ຖືກກຳນົດໃນມູນຄ່າຍຸດຕິທຳ ຜ່ານກຳໄລ ຫຼື ຂາດທຶນ, ລາຍໄດ້ດອກເບ້ຍ ຫຼື ລາຍຈ່າຍດອກເບ້ຍ ຖືກບັນທຶກໂດຍນຳໃຊ້ ອັດຕາດອກເບ້ຍທີ່ແທ້ຈິງ (EIR).

ການຄິດໄລ່ໄດ້ຄຳນຶງເຖິງທຸກເງື່ອນໄຂຕາມສັນຍາຂອງເຄື່ອງມືທາງການເງິນ (ຕົວຢ່າງ, ທາງເລືອກໃນການຈ່າຍ ລ່ວງໜ້າ) ແລະ ປະກອບມີຄ່າທຳນຽມ ຫຼື ຄ່າໃຊ້ຈ່າຍເພີ່ມ ເຊິ່ງສາມາດນຳໃຊ້ໂດຍກົງກັບເຄື່ອງມື ແລະ ເປັນສ່ວນ ໜຶ່ງຂອງ EIR, ແຕ່ບໍ່ແມ່ນການສູນເສຍສິນເຊື່ອໃນອະນາຄົດ.

ເມື່ອມູນຄ່າທີ່ບັນທຶກຂອງຊັບສິນທາງການເງິນ ຫຼື ກຸ່ມຂອງຊັບສິນທາງການເງິນ ທີ່ຄ້າຍຄືກັນໄດ້ຖືກຫຼຸດລົງໂດຍການ ສູນເສຍຄ່າເສື່ອມມູນຄ່າ, ລາຍໄດ້ຈາກດອກເບ້ຍຍັງຄົງຖືກຮັບຮູ້ໂດຍນຳໃຊ້ອັດຕາດອກເບ້ຍທີ່ໃຊ້ເພື່ອຫຼຸດກະແສ ເງິນສົດໃນອະນາຄົດເພື່ອຈຸດປະສົງຂອງການວັດແທກການສູນເສຍຄ່າເສື່ອມມູນຄ່າ.

2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

2.3 ການຮັບຮູ້ລາຍຮັບ ແລະ ລາຍຈ່າຍ (ຕໍ່)

2.3.2 ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການ

ທະນາຄານມີລາຍໄດ້ຈາກຄ່າທຳນຽມ ແລະ ບໍລິການ ຈາກການບໍລິການດ້ານການເງິນຫຼາກຫຼາຍກັບລູກຄ້າ. ລາຍໄດ້ຄ່າທຳນຽມ ແລະ ບໍລິການ ແມ່ນຖືກຮັບຮູ້ເປັນຈຳນວນທີ່ສະທ້ອນໃຫ້ເຫັນເຖິງສິ່ງຕອບແທນທີ່ທະນາຄານຄາດວ່າຈະໄດ້ຮັບຈາກການສະໜອງການບໍລິການ.

ພັນທະການປະຕິບັດງານ ພ້ອມທັງກຳນົດເວລາຂອງຄວາມເພິ່ງພໍໃຈ, ໄດ້ຖືກກຳນົດ ແລະ ກຳນົດ, ໃນຊ່ວງເລີ່ມຕົ້ນຂອງສັນຍາ. ສັນຍາ ລາຍຮັບຂອງທະນາຄານບໍ່ລວມເອົາພັນທະການປະຕິບັດຫຼາຍຢ່າງ, ດັ່ງທີ່ໄດ້ອະທິບາຍເພີ່ມຕື່ມໃນ ຂໍ້ 2.3.2.1 ແລະ 2.3.2.2 ຂ້າງລຸ່ມນີ້.

ເມື່ອທະນາຄານໃຫ້ການບໍລິການແກ່ລູກຄ້າ, ການພິຈາລະນາຈະຖືກຮຽກເກັບເງິນ ແລະ ໂດຍທົ່ວໄປຈະຄົບກຳນົດທັນທີ ທີ່ເພິ່ງພໍໃຈໃນການບໍລິການ ທີ່ໃຫ້ໃນຊ່ວງເວລາໃດໜຶ່ງ ຫຼື ເມື່ອສິ້ນສຸດສັນຍາ ສຳລັບການບໍລິການທີ່ໃຫ້ໃນໄລຍະເວລາ (ເວັ້ນເສຍແຕ່ໄດ້ລະບຸໄວ້ໃນຂໍ້ 2.3.2.1 ແລະ 2.3.2.2 ຢູ່ດ້ານລຸ່ມ). ໂດຍທົ່ວໄປແລ້ວທະນາຄານໄດ້ຂໍ້ສະຫຼຸບວ່າເປັນຫຼັກໃນການຈັດກຽມລາຍຮັບ ເນື່ອງຈາກໂດຍທົ່ວໄປຈະຄວບຄຸມການບໍລິການກ່ອນທີ່ຈະໂອນໄປໃຫ້ລູກຄ້າ.

2.3.2.1 ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການ ຈາກການບໍລິການທີ່ມີຄວາມເພິ່ງພໍໃຈໃນພາລະຜູກພັນຕະຫຼອດໄລຍະເວລາ

ພັນທະປະຕິບັດທີ່ພໍໃຈໃນແຕ່ຕະຫຼອດໄລຍະເວລາ ລວມເຖິງ ມີການບໍລິການທີ່ລູກຄ້າໄດ້ຮັບ ແລະ ຊົມໃຊ້ຜົນປະໂຫຍດຈາກການປະຕິບັດຂອງທະນາຄານທີ່ທະນາຄານດຳເນີນງານ.

2.3.2.2 ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການ ຈາກການບໍລິການທີ່ມີຄວາມເພິ່ງພໍໃຈໃນພາລະຜູກພັນໃນເວລາ

ການບໍລິການທີ່ສະໜອງໃຫ້ເມື່ອພັນທະປະຕິບັດຂອງທະນາຄານມີຄວາມເພິ່ງພໍໃຈໃນເວລາໃດໜຶ່ງ ແມ່ນຖືກຮັບຮູ້ເມື່ອໄດ້ຄວບຄຸມການບໍລິການດັ່ງກ່າວໃຫ້ລູກຄ້າ. ໂດຍທົ່ວໄປຈະເກີດຂຶ້ນເມື່ອສຳເລັດການເຄື່ອນໄຫວ ຫຼື ການບໍລິການທີ່ຕິດພັນ ຫຼື ສຳລັບຄ່າທຳນຽມ ຫຼື ສ່ວນປະກອບຂອງຄ່າທຳນຽມທີ່ຕິດພັນກັບການປະຕິບັດສະເພາະໃດໜຶ່ງ, ຫຼັງຈາກປະຕິບັດຕາມມາດຖານທີ່. ສິ່ງເຫລົ່ານີ້ລວມມີ ຄ່າທຳນຽມ ແລະ ຄ່າບໍລິການ ທີ່ເກີດຂຶ້ນຈາກການເຈລະຈາ ຫຼື ເຂົ້າຮ່ວມໃນການເຈລະຈາຂອງລາຍການເຄື່ອນໄຫວສຳລັບພາກສ່ວນທີສາມ ເຊັ່ນການກະກຽມ/ການມີສ່ວນຮ່ວມ ຫຼື ການເຈລະຈາການຊື້ຮຸ້ນ ຫຼື ຫຼັກຊັບອື່ນໆ, ຫຼື ການຊື້ ຫຼື ການຂາຍທຸລະກິດ, ຄ່ານາຍໜ້າ ແລະ ຄ່າທຳນຽມປະກັນໄພ.

ໂດຍທົ່ວໄປ, ທະນາຄານມີພັນທະການປະຕິບັດງານດຽວທີ່ກ່ຽວຂ້ອງກັບການບໍລິການເຫຼົ່ານີ້, ແມ່ນເພື່ອເຮັດໃຫ້ສຳເລັດລາຍການເຄື່ອນໄຫວ ທີ່ລະບຸໄວ້ໃນສັນຍາ.

2.3.3 ລາຍຮັບເງິນປັນຜົນ

ລາຍຮັບເງິນປັນຜົນ ຖືກຮັບຮູ້ເມື່ອທະນາຄານມີສິດທິໃນການໄດ້ຮັບການຈ່າຍເງິນເງິນປັນຜົນ

2.3.4 ລາຍຮັບຈາກການຄ້າສຸດທິ

ຜົນໄດ້ຮັບທີ່ເກີດຂຶ້ນຈາກກິດຈະກຳການຄ້າ ປະກອບມີກຳໄລ ແລະ ຂາດທຶນທັງໝົດ ຈາກການປ່ຽນແປງຂອງມູນຄ່ຍຸດຕິທຳ ແລະ ລາຍຮັບດອກເບ້ຍ ຫຼື ລາຍຈ່າຍດອກເບ້ຍທີ່ກ່ຽວຂ້ອງ ແລະ ເງິນປັນຜົນ ສຳລັບຊັບສິນ ທາງການເງິນ ແລະ ໜີ້ສິນທາງການເງິນ 'ຖືໄວ້ເພື່ອຂາຍ'.

2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

2.4 ເງິນສົດ ແລະ ທຽບເທົ່າເງິນສົດ

ເງິນສົດ ແລະ ທຽບເທົ່າເງິນສົດ ຕາມທີ່ອ້າງອີງໃນໃບລາຍງານກະແສເງິນສົດ ປະກອບມີເງິນສົດໃນມື, ບັນຊີເງິນຝາກກະແສລາຍວັນກັບ ທຫລ ແລະ ຈຳນວນເງິນຝາກກັບທະນາຄານສາມາດຮຽກເກັບຕາມຄວາມຕ້ອງການຫຼື ມີກຳນົດ ສາມເດືອນ ຫຼື ໜ້ອຍກວ່າ.

2.5 ການລົງທຶນໃນວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ

ທະນາຄານມີສ່ວນໄດ້ສ່ວນເສຍກັບວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ, ເຊິ່ງເປັນບໍລິສັດຮ່ວມຮຸ້ນໂດຍກິດຈະການມີຂໍ້ຕົກລົງຕາມສັນຍາທີ່ກຳນົດໃຫ້ມີການຄວບຄຸມຮ່ວມກັນໃນກິດຈະກຳທາງເສດຖະກິດຂອງກິດຈະການ. ຂໍ້ຕົກລົງດັ່ງກ່າວຈຳເປັນຕ້ອງມີຂໍ້ຕົກລົງເປັນເອກະພາບ ສຳລັບການຕັດສິນໃຈດ້ານການເງິນ ແລະ ການດຳເນີນງານໃນບັນດາບໍລິສັດຮ່ວມ.

ທະນາຄານຮັບຮູ້ສ່ວນໄດ້ສ່ວນເສຍໃນວິສາຫະກິດຂາຮຸ້ນ ແລະວິສາຫະກິດປະສົມໂດຍການຄິດໄລ່ກຳໄລຕາມສັດສ່ວນຮຸ້ນ ໂດຍການນຳໃຊ້ຂໍ້ມູນທາງດ້ານການເງິນທີ່ມີຢູ່ໃນມື.

ການຄິດໄລ່ກຳໄລຕາມສັດສ່ວນຮຸ້ນ

ພາຍໃຕ້ການຄິດໄລ່ກຳໄລຕາມສັດສ່ວນຮຸ້ນຂອງການບັນຊີ, ການລົງທຶນໄດ້ຖືກຮັບຮູ້ໃນເບື້ອງຕົ້ນໃນລາຄາຕົ້ນທຶນ ແລະ ປັບປຸງຈາກນັ້ນ, ເພື່ອຮັບຮູ້ ສ່ວນແບ່ງຂອງທະນາຄານໃນກຳໄລ ຫຼັງການລົງທຶນ ຫຼື ຂາດທຶນຂອງຜູ້ລົງທຶນໃນ ກຳໄລ ຫຼື ຂາດທຶນ, ແລະ ສ່ວນແບ່ງການເຄື່ອນໄຫວຂອງທະນາຄານໃນໃບລາຍງານຜົນໄດ້ຮັບສັງລວມຂອງທຸລະກິດ ຂອງຜູ້ລົງທຶນໃນລາຍຮັບສັງລວມອື່ນໆ.

ເງິນປັນຜົນທີ່ໄດ້ຮັບ ຫຼື ໜີ້ຕ້ອງຮັບຈາກວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມໄດ້ຖືກຮັບຮູ້ໃນມູນຄ່າຕາມບັນຊີຂອງການລົງທຶນທຸດລົງ. ໃນກໍລະນີທີ່ ສ່ວນແບ່ງຂາດທຶນ ຂອງທະນາຄານ ໃນບັນຊີສ່ວນໄດ້ສ່ວນເສຍຂອງການລົງທຶນເທົ່າກັບ ຫຼື ສູງຜົນປະໂຫຍດໃນກິດຈະການ, ທະນາຄານຈະບໍ່ຮັບຮູ້ຂາດທຶນເພີ່ມເຕີມ, ເວັ້ນເສຍແຕ່ຈະມີພາລະຜູກພັນ ຫຼື ການຊຳລະໃນນາມຂອງໜ່ວຍງານອື່ນ. ຄ່າເຜື່ອ ສຳລັບຄ່າເສື່ອມມູນຄ່າ ໄດ້ຕັ້ງຂຶ້ນສຳລັບການລົງທຶນຂອງວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມເມື່ອມີການຂາດທຶນ (ຍົກເວັ້ນການຂາດທຶນຖືກລະບຸໄວ້ໃນແຜນທຸລະກິດກ່ອນການສ້າງຕັ້ງ). ດັ່ງນັ້ນ, ຄ່າເຜື່ອແມ່ນຕັ້ງຂຶ້ນເພື່ອຄວາມແຕກຕ່າງລະຫວ່າງການລົງທຶນທີ່ແທ້ຈິງໃນວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມແລະ ສ່ວນແບ່ງຕາມສັດສ່ວນຂອງທະນາຄານໃນສ່ວນໄດ້ສ່ວນເສຍ ໃນວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ.

2.6 ເຄື່ອງມືທາງການເງິນ - ການຮັບຮູ້ໃນເບື້ອງຕົ້ນ ແລະ ການປະເມີນໃນເວລາຕໍ່ມາ

2.6.1 ວັນທີຮັບຮູ້

ຊັບສິນ ແລະ ໜີ້ສິນທາງການເງິນທັງໝົດ, ຍົກເວັ້ນເງິນໃຫ້ກູ້ຢືມແກ່ລູກຄ້າ ແລະ ຍອດຄົງເຫຼືອທີ່ຕ້ອງຊຳລະໃຫ້ແກ່ລູກຄ້າຈະຮັບຮູ້ເບື້ອງຕົ້ນໃນມື້ການຄ້າ ເຊັ່ນ:ມື້ທີ່ທະນາຄານກາຍເປັນຄູ່ສັນຍາຕາມເງື່ອນໄຂຕາມສັນຍາຂອງເຄື່ອງມື ເຊິ່ງປະກອບມີ “ການຊື້ຂາຍແບບປົກກະຕິ” - ການຊື້ ຫຼື ການຂາຍຊັບສິນທາງການເງິນ ທີ່ຕ້ອງການການຈັດສົ່ງສິນຊັບພາຍໃນເວລາທີ່ກຳນົດໂດຍທົ່ວໄປຕາມລະບຽບການ ຫຼື ສົນທິສັນຍາໃນຕະຫລາດ.

ເງິນໃຫ້ກູ້ຢືມແກ່ລູກຄ້າ ແມ່ນຖືກຮັບຮູ້ເມື່ອມີການໂອນເງິນເຂົ້າບັນຊີຂອງລູກຄ້າ. ທະນາຄານຮັບຮູ້ຍອດຄົງເຫຼືອທີ່ຕ້ອງຊຳລະໃຫ້ແກ່ລູກຄ້າ ເມື່ອມີເງິນເຂົ້າເຖິງທະນາຄານ.

2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

2.6 ເຄື່ອງມືທາງການເງິນ - ການຮັບຮູ້ໃນເບື້ອງຕົ້ນ ແລະ ການປະເມີນໃນເວລາຕໍ່ມາ (ຕໍ່)

2.6.2 ການປະເມີນເບື້ອງຕົ້ນຂອງເຄື່ອງມືທາງການເງິນ

ການຈັດປະເພດເຄື່ອງມືທາງການເງິນໃນການຮັບຮູ້ເບື້ອງຕົ້ນແມ່ນຂຶ້ນກັບຈຸດປະສົງ ແລະ ຄຸນລັກສະນະ ແລະ ເຈດຕະນາຂອງຜູ້ບໍລິຫານໃນການຊື້ເຄື່ອງມືເຫຼົ່ານັ້ນ. ເຄື່ອງມືທາງການເງິນທັງໝົດ ຖືກປະເມີນໃນເບື້ອງຕົ້ນດ້ວຍມູນຄ່າຍຸດຕິທຳບວກກັບຄ່າໃຊ້ຈ່າຍໃນການເຄື່ອນໄຫວ, ຍົກເວັ້ນໃນກໍລະນີຊັບສິນທາງການເງິນ ແລະ ໜີ້ສິນທາງການເງິນທີ່ບັນທຶກໃນມູນຄ່າຍຸດຕິທຳຜ່ານກຳໄລ ຫຼື ຂາດທຶນ.

2.6.3 ອິທິອັດຕາດອກເບ້ຍທີ່ແທ້ຈິງ

ອັດຕາດອກເບ້ຍທີ່ແທ້ຈິງ (EIR) ແມ່ນອັດຕາສ່ວນຫຼຸດທີ່ແນ່ນອນການຄາດຄະເນການຈ່າຍເງິນສົດ ຫຼື ໃບຮັບເງິນໃນອະນາຄົດໂດຍຜ່ານອາຍຸການທີ່ຄາດໄວ້ຂອງເຄື່ອງມືທາງການເງິນ ຫຼື, ເມື່ອມີໄລຍະເວລາທີ່ສັ້ນກວ່າ, ເຖິງມູນຄ່າຕາມບັນຊີສຸດທິຂອງຊັບສິນ ຫຼື ໜີ້ສິນທາງການເງິນ. ຕົ້ນທຶນແບ່ງຈ່າຍຂອງຊັບສິນ ຫຼື ໜີ້ສິນທາງການເງິນ ແມ່ນຖືກປັບປຸງຖ້າທະນາຄານປັບປຸງການຄາດຄະເນຂອງການຈ່າຍ ຫຼື ລາຍຮັບ. ການປັບປຸງຕົ້ນທຶນແບ່ງຈ່າຍ ແມ່ນແລ້ວ ຖືກຄິດໄລ່ໂດຍອີງໃສ່ຕົ້ນສະບັບ ຫຼື EIR ທີ່ຖືກປະເມີນຄືນໃໝ່ ແລະ ການປ່ຽນແປງແມ່ນບັນທຶກເປັນ 'ລາຍຮັບດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ' ສຳລັບຊັບສິນທາງການເງິນ ແລະ 'ລາຍຈ່າຍດອກເບ້ຍ ແລະ ລາຍຈ່າຍທີ່ຄ້າຍຄືກັນ' ສຳລັບໜີ້ສິນທາງການເງິນ.

2.6.4 'ມື້ທີ 1' ກຳໄລ ຫຼື ຂາດທຶນ

ເມື່ອລາຄາຊື້ຂາຍ ແຕກຕ່າງຈາກມູນຄ່າຍຸດຕິທຳ ຂອງການຊື້ຂາຍອື່ນໆໃນຕະຫຼາດໃນປະຈຸບັນທີ່ສາມາດສັງເກດໄດ້ໃນເຄື່ອງມືດຽວກັນ ຫຼື ອີງໃສ່ເຕັກນິກການປະເມີນມູນຄ່າທີ່ມີຕົວປ່ຽນແປງປະກອບມີພຽງແຕ່ຂໍ້ມູນຈາກຕະຫຼາດທີ່ສັງເກດໄດ້, ທະນາຄານຮັບຮູ້ທັນທີ ຄວາມແຕກຕ່າງລະຫວ່າງລາຄາການຊື້ຂາຍ ແລະ ມູນຄ່າຍຸດຕິທຳ ('ມື້ທີ 1' ກຳໄລ ຫຼື ຂາດທຶນ) ໃນ' ລາຍໄດ້ຈາກການຄ້າສຸດທິ ' ໃນກໍລະນີທີ່ມູນຄ່າຍຸດຕິທຳ ຖືກກຳນົດໂດຍການນຳໃຊ້ຂໍ້ມູນທີ່ບໍ່ສາມາດສັງເກດໄດ້, ຄວາມແຕກຕ່າງລະຫວ່າງລາຄາການຊື້ຂາຍ ແລະ ມູນຄ່າແບບຈຳລອງແມ່ນຖືກຮັບຮູ້ໃນໃບລາຍງານຜົນໄດ້ຮັບ ເມື່ອຂໍ້ມູນນຳເຂົ້າສາມາດສັງເກດເຫັນໄດ້, ຫຼື ເຄື່ອງມືແມ່ນການຕັດລາຍການບັນຊີ.

2.6.5 ການລົງທຶນທາງການເງິນມີໄວ້ເພື່ອຂາຍ

ການລົງທຶນເພື່ອຂາຍປະກອບມີການລົງທຶນໃນສ່ວນໄດ້ສ່ວນເສຍ. ການລົງທຶນໃນສ່ວນໄດ້ສ່ວນເສຍຈັດປະເພດເປັນ ການລົງທຶນເພື່ອຂາຍ ແມ່ນການລົງທຶນທີ່ບໍ່ໄດ້ຈັດປະເພດໄວ້ເພື່ອຄ້າ ຫຼື ບໍ່ກຳນົດດ້ວຍມູນຄ່າຍຸດຕິທຳໂດຍຜ່ານ ກຳໄລ ຫຼື ຂາດທຶນ.

ທະນາຄານບໍ່ໄດ້ກຳນົດເງິນໃຫ້ກູ້ຢືມ ຫຼື ໜີ້ຕ້ອງຮັບ ທີ່ມີໄວ້ເພື່ອຂາຍ.

ຫຼັງຈາກປະເມີນໃນເບື້ອງຕົ້ນ, ການລົງທຶນທາງການເງິນທີ່ມີໄວ້ເພື່ອຂາຍແມ່ນ ຖືກປະເມີນໃນເວລາຕໍ່ມາໃນມູນຄ່າຍຸດຕິທຳ.

ກຳໄລ ແລະ ຂາດທຶນ ທີ່ຍັງບໍ່ໄດ້ເກີດຂຶ້ນຈິງ ຈະຮັບຮູ້ໂດຍກົງໃນສ່ວນຂອງຜູ້ຖືຮຸ້ນ (ຜົນໄດ້ຮັບສັງລວມອື່ນ)ໃນ "ຄັງສຳຮອງສຳລັບຫຼັກຊັບມີໄວ້ເພື່ອຂາຍ". ເມື່ອການລົງທຶນຖືກສາງ, ກຳໄລ ຫຼື ຂາດທຶນສະສົມທີ່ຜ່ານມາຮັບຮູ້ໃນສ່ວນໄດ້ສ່ວນເສຍໃນໃບລາຍງານຜົນໄດ້ຮັບໃນ 'ລາຍຮັບຈາກການດຳເນີນງານອື່ນ'. ໃນກໍລະນີທີ່ທະນາຄານຖືການລົງທຶນຫລາຍກ່ວາໜຶ່ງລາຍການໃນຫຼັກຊັບດຽວ ຖືວ່າຖືກສະສາງບົນພື້ນຖານເຂົ້າກ່ອນອອກກ່ອນ.

2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

2.6 ເຄື່ອງມືທາງການເງິນ - ການຮັບຮູ້ໃນເບື້ອງຕົ້ນ ແລະ ການປະເມີນໃນເວລາຕໍ່ມາ (ຕໍ່)

2.6.5 ການລົງທຶນທາງການເງິນມີໄວ້ເພື່ອຂາຍ (ຕໍ່)

ເງິນປັນຜົນທີ່ໄດ້ຮັບໃນຂະນະທີ່ຖືຄອງໄວ້ເພື່ອຂາຍທາງການເງິນຈະຖືກຮັບຮູ້ໃນເອກະສານລາຍງານຜົນໄດ້ຮັບເປັນ 'ລາຍຮັບຈາກການດຳເນີນງານອື່ນ' ເມື່ອມີການກຳນົດສິດໃນການຮັບຊຳລະ. ການສູນເສຍທີ່ເກີດຂຶ້ນຈາກຄ່າເສື່ອມຂອງການລົງທຶນດັ່ງກ່າວແມ່ນໄດ້ຖືກຮັບຮູ້ໃນໃບລາຍງານຜົນໄດ້ຮັບ 'ການສູນເສຍຄ່າເສື່ອມມູນຄ່າໃນການລົງທຶນທາງການເງິນ' ແລະ ຖືກເອົາອອກຈາກ 'ການສຳຮອງທີ່ມີໄວ້ເພື່ອຂາຍ'.

2.6.6 ການລົງທຶນທາງການເງິນທີ່ຖືໄວ້ຈົນຄົບກຳນົດ

ການລົງທຶນທາງການເງິນທີ່ຖືຈົນຄົບກຳນົດແມ່ນຊັບສິນທາງການເງິນບໍ່ແມ່ນອະນຸພັນ ໂດຍມີການຊຳລະທີ່ມີກຳນົດ ຫຼື ກຳນົດການຊຳລະ ແລະ ກຳນົດເວລາ, ເຊິ່ງທະນາຄານມີຄວາມຕັ້ງໃຈ ແລະ ຄວາມສາມາດໃນການຖືຈົນຄົບກຳນົດ. ຫຼັງຈາກການວັດແທກໃນເບື້ອງຕົ້ນ, ການລົງທຶນທາງການເງິນທີ່ຖືຈົນຄົບກຳນົດໄດ້ຖືກວັດແທກຕໍ່ມາ ໃນມູນຄ່າຕົ້ນທຶນແບ່ງຈ່າຍໂດຍນຳໃຊ້ EIR. ໃນແຕ່ລະໄລຍະ, ຫຼັກຊັບທີ່ຖືຈົນຄົບກຳນົດ ຕ້ອງໄດ້ຮັບການທົບທວນຄືນຄ່າເສື່ອມມູນຄ່າ. ຄ່າເຜື່ອສຳລັບຄ່າເສື່ອມມູນຄ່າຂອງຫລັກຊັບເຫລົ່ານີ້ເກີດຂຶ້ນເມື່ອມູນຄ່າຍຸດຕິທຳຂອງຫຼັກຊັບດັ່ງກ່າວຫຼຸດລົງຢ່າງມີສາລະສຳຄັນ ຫຼື ເປັນເວລາດົນ ຜົນຂາດທຶນທີ່ເກີດຈາກຄ່າດ້ອຍຄ່າຂອງການລົງທຶນດັ່ງກ່າວຮັບຮູ້ໃນໃບລາຍງານຜົນໄດ້ຮັບ 'ລາຍຈ່າຍການສູນເສຍຄ່າເສື່ອມມູນຄ່າ'.

ຖ້າທະນາຄານຈະຂາຍ ຫຼື ຈັດປະເພດໃໝ່ຫຼາຍກ່ວາ ຈຳນວນທີ່ບໍ່ເປັນສາລະສຳຄັນຂອງການລົງທຶນທີ່ຖືຈົນຄົບກຳນົດກ່ອນກຳນົດ (ນອກເໜືອຈາກໃນສະຖານະການສະເພາະບາງກໍລະນີ) ໝວດໝູ່ທັງໝົດຈະເສຍໄປ ແລະ ຈະຖືກຈັດປະເພດໃໝ່ເປັນມີໄວ້ເພື່ອຂາຍ. ນອກຈາກນີ້ ຫ້າມບໍ່ໃຫ້ທະນາຄານຈັດປະເພດຊັບສິນທາງການເງິນໃດ ເປັນຖືຈົນຄົບກຳນົດໃນລະຫວ່າງສອງປີຂ້າງໜ້າ.

2.6.7 ເງິນຝາກກັບທະນາຄານ ແລະ ເງິນໃຫ້ກູ້ຢືມແກ່ລູກຄ້າ

'ເງິນຝາກກັບທະນາຄານ' ແລະ 'ເງິນໃຫ້ກູ້ຢືມແກ່ລູກຄ້າ' ລວມມີຊັບສິນທາງການເງິນ ທີ່ບໍ່ແມ່ນອະນຸພັນທີ່ມີກຳນົດຄົງທີ່ ຫຼື ກຳນົດການຊຳລະທີ່ບໍ່ໄດ້ສະເໜີລາຄາໃນຕະຫຼາດທີ່ມີການເຄື່ອນໄຫວນອກເໜືອຈາກ:

- ທີ່ທະນາຄານຕັ້ງໃຈຈະຂາຍໃຫ້ທັນທີ ຫຼື ໃນໄລຍະອັນໃກ້ ແລະ ຜູ້ທີ່ທະນາຄານຮັບຮູ້ໃນເບື້ອງຕົ້ນກຳນົດໃຫ້ເປັນມູນຄ່າຍຸດຕິທຳຜ່ານ ກຳໄລ ຫຼື ຂາດທຶນ;
- ສິ່ງທີ່ທະນາຄານຮັບຮູ້ໃນເບື້ອງຕົ້ນກຳນົດວ່າມີໄວ້ເພື່ອຂາຍ;
- ກໍລະນີທີ່ທະນາຄານບໍ່ສາມາດກູ້ເງິນລົງທຶນເບື້ອງຕົ້ນທັງໝົດໄດ້ຢ່າງມີສາລະສຳຄັນ ນອກເໜືອຈາກການເສື່ອມສະພາບຄ່ອງທາງສິນເຊື່ອ.

ຫຼັງຈາກການວັດແທກໃນເບື້ອງຕົ້ນ, ຈຳນວນ 'ເງິນຝາກກັບທະນາຄານ' ແລະ 'ເງິນໃຫ້ກູ້ຢືມແກ່ລູກຄ້າ' ແມ່ນໄດ້ຖືກວັດແທກໃນເວລາຕໍ່ມາດ້ວຍມູນຄ່າຕົ້ນທຶນແບ່ງຈ່າຍໂດຍນຳໃຊ້ວິທີ EIR, ຫັກຄ່າເຜື່ອຄ່າເສື່ອມມູນຄ່າ. ຕົ້ນທຶນແບ່ງຈ່າຍແມ່ນຖືກຄິດໄລ່ໂດຍຄຳນຶງເຖິງສ່ວນຫຼຸດ ຫຼື ສ່ວນເກີນຕ່າງໆກ່ຽວກັບການໄດ້ມາ ແລະ ຄ່າທຳນຽມ ແລະ ຄ່າໃຊ້ຈ່າຍທີ່ເປັນສ່ວນ ໜຶ່ງ ຂອງ EIR. ສະນັ້ນ, ທະນາຄານຮັບຮູ້ລາຍໄດ້ດອກເບ້ຍ ໂດຍນຳໃຊ້ອັດຕາຜົນຕອບແທນທີ່ສະແດງໃຫ້ເຫັນການຄາດຄະເນທີ່ດີທີ່ສຸດຂອງອັດຕາຜົນຕອບແທນຄົງທີ່ຕະຫຼອດອາຍຸພຶດຕິກຳທີ່ຄາດຫ້ວງຂອງເງິນໃຫ້ກູ້ຢືມ, ດັ່ງນັ້ນ, ການຮັບຮູ້ຜົນກະທົບຂອງອັດຕາດອກເບ້ຍທີ່ແຕກຕ່າງກັນທີ່ອາດເກີດຂຶ້ນໃນໄລຍະຕ່າງໆ, ແລະລັກສະນະອື່ນໆຂອງວົງຈອນຊີວິດຜະລິດຕະພັນ (ການຈ່າຍລ່ວງໜ້າ, ດອກເບ້ຍປັບໃໝ່ ແລະ ຄ່າບໍລິການ).

2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

2.6 ເຄື່ອງມືທາງການເງິນ - ການຮັບຮູ້ໃນເບື້ອງຕົ້ນ ແລະ ການປະເມີນໃນເວລາຕໍ່ມາ (ຕໍ່)

2.6.7 ເງິນຝາກກັບທະນາຄານ ແລະ ເງິນໃຫ້ກູ້ຢືມແກ່ລູກຄ້າ (ຕໍ່)

ຖ້າຫາກມີການແກ້ໄຂຄວາມຄາດຫວັງການປັບປຸງຈະຖືກບັນທຶກການປັບປຸງໃນທາງບວກ ຫຼື ລົບ ຕໍ່ມູນຄ່າຕາມບັນຊີ ໃນໃບລາຍງານຖານະການເງິນ ເຊິ່ງເພີ່ມຂຶ້ນ ຫຼື ຫຼຸດລົດໃນລາຍຮັບດອກເບ້ຍ. ການປັບປຸງໄດ້ແບ່ງຈ່າຍໃນເວລາຕໍ່ມາຜ່ານ ລາຍຮັບດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ ໃນໃບລາຍງານຜົນໄດ້ຮັບ.

2.6.8 ເງິນຝາກຈາກທະນາຄານອື່ນ ແລະ ລູກຄ້າ ແລະ ເງິນກູ້ຢືມອື່ນ

"ເງິນຝາກຈາກທະນາຄານອື່ນ ແລະ ລູກຄ້າ ແລະ ເງິນກູ້ຢືມອື່ນ" ລວມທັງການກະກຽມທີ່ເນື້ອໃນຂອງຂໍ້ຕົກລົງຕາມສັນຍາສົ່ງຜົນໃຫ້ທະນາຄານມີພັນທະໃນການສົ່ງມອບເງິນສົດ ຫຼື ຊັບສິນທາງການເງິນໃຫ້ແກ່ຜູ້ຖືຮຸ້ນ.

ຫຼັງຈາກການວັດແທກໃນເບື້ອງຕົ້ນ, "ເງິນຝາກຈາກທະນາຄານອື່ນ ແລະ ລູກຄ້າ ແລະ ເງິນກູ້ຢືມອື່ນ" ແມ່ນຖືກວັດແທກດ້ວຍຕົ້ນທຶນແບ່ງຈ່າຍ ໂດຍໃຊ້ EIR. ຕົ້ນທຶນແບ່ງຈ່າຍແມ່ນຖືກຄິດໄລ່ໂດຍ ຄຳນຶງເຖິງສ່ວນຫຼຸດ ແລະ ສ່ວນເພີ່ມຕ່າງໆສຳລັບບັນຫາ ແລະ ຕົ້ນທຶນທີ່ເປັນສ່ວນໜຶ່ງຂອງ EIR.

2.6.9 ການຈັດປະເພດຄືນໃໝ່ຂອງຊັບສິນທາງການເງິນ

ທະນາຄານໄດ້ຮັບອະນຸຍາດໃຫ້ຈັດປະເພດຄືນໃໝ່, ໃນບາງສະຖານະການ, ຊັບສິນທາງການເງິນບໍ່ແມ່ນອະນຸພັນອອກຈາກປະເພດ "ມີໄວ້ເພື່ອການຄ້າ" ແລະ ເຂົ້າໄປໃນ "ມີໄວ້ເພື່ອຂາຍ", "ເງິນໃຫ້ກູ້ຢືມ ແລະ ໜີ້ຕ້ອງຮັບ", ຫຼື "ຖືຈົນຄົບກຳນົດ". ນັບແຕ່ມື້ນີ້ໄດ້ຖືກອະນຸຍາດໃຫ້ຈັດປະເພດຄືນໃໝ່, ໃນບາງສະຖານະການ, ເຄື່ອງມືການເງິນອອກຈາກປະເພດ "ມີໄວ້ເພື່ອຂາຍ" ແລະ ເຂົ້າໃນປະເພດ "ເງິນໃຫ້ກູ້ຢືມ ແລະ ໜີ້ຕ້ອງຮັບ"ການຈັດປະເພດຄືນໃໝ່ແມ່ນຖືກບັນທຶກດ້ວຍມູນຄ່າຍຸດຕິທຳໃນວັນທີການຈັດປະເພດຄືນໃໝ່, ເຊິ່ງກາຍເປັນຕົ້ນທຶນແບ່ງຈ່າຍໃໝ່
.
ສຳລັບຊັບສິນທາງການເງິນທີ່ຖືກຈັດປະເພດຄືນໃໝ່ອອກຈາກປະເພດ "ມີໄວ້ເພື່ອຂາຍ", ຜົນກຳໄລ ຫຼື ຂາດທຶນຜ່ານມາກ່ຽວກັບຊັບສິນທີ່ໄດ້ຮັບຮູ້ໃນສ່ວນຂອງຜູ້ຖືຮຸ້ນແມ່ນແບ່ງຈ່າຍເຂົ້າໃນ ກຳໄລ ຫຼື ຂາດທຶນ ຕະຫຼອດອາຍຸທີ່ເຫຼືອຂອງການລົງທຶນໂດຍໃຊ້ວິທີ EIR. ຄວາມແຕກຕ່າງລະຫວ່າງຕົ້ນທຶນແບ່ງຈ່າຍໃໝ່ ແລະກະແສເງິນສົດທີ່ຄາດວ່າຈະແບ່ງຈ່າຍຕະຫຼອດອາຍຸການໃຊ້ງານທີ່ຍັງເຫຼືອຂອງຊັບສິນໂດຍໃຊ້ວິທີ EIR. ຖ້າຊັບສິນຖືກພິຈາລະນາວ່າມີ ຄ່າເສື່ອມໃນເວລາຕໍ່ມາ,ຈຳນວນທີ່ຖືກບັນທຶກໃນສ່ວນຂອງທຶນຈະຖືກນຳໄປໃຊ້ຄືນໃໝ່ໃນໃບລາຍງານຜົນໄດ້ຮັບ.

ໃນສະຖານະການທີ່ຫາຍາກ, ທະນາຄານອາດຈະຈັດປະເພດຊັບສິນການຄ້າທີ່ບໍ່ແມ່ນອະນຸພັນ ອອກຈາກປະເພດ 'ມີໄວ້ເພື່ອການຄ້າ' ແລະ ເຂົ້າໄປໃນປະເພດ 'ເງິນໃຫ້ກູ້ຢືມ ແລະ ໜີ້ຕ້ອງຮັບ' ຖ້າເປັນໄປຕາມຄຳນິຍາມຂອງເງິນໃຫ້ກູ້ຢືມ ແລະ ໜີ້ຕ້ອງຮັບ ແລະ ທະນາຄານມີຄວາມຕັ້ງໃຈ ແລະ ຄວາມສາມາດໃນການຖືຊັບສິນທາງການເງິນໃນອະນາຄົດທີ່ຄາດລ່ວງໜ້າ ຫຼື ຈົນຄົບກຳນົດ. ຖ້າຊັບສິນທາງການເງິນຖືກຈັດປະເພດຄືນໃໝ່, ແລະຖ້າທະນາຄານເພີ່ມການຄາດຄະເນລາຍຮັບເງິນສົດໃນອະນາຄົດເປັນຜົນມາຈາກການເພີ່ມຄວາມສາມາດ ໃນການຮັບເງິນສົດ, ຜົນຂອງການເພີ່ມຂຶ້ນນັ້ນແມ່ນຖືກຮັບຮູ້ວ່າເປັນການປັບປຸງ EIR ນັບແຕ່ມື້ມີການປ່ຽນແປງໃນການຄາດຄະເນ.

ການຈັດປະເພດຄືນໃໝ່ຂຶ້ນຢູ່ກັບການເລືອກຂອງຜູ້ບໍລິຫານ ແລະ ພິຈາລະນາຈາກເຄື່ອງມືໂດຍພື້ນຖານຂອງເຄື່ອງມື.

2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

2.7 ການຕັດບັນຊີຊັບສິນ ແລະ ໜີ້ສິນທາງການເງິນ

2.7.1 ຊັບສິນທາງການເງິນ

ຊັບສິນທາງການເງິນ (ຫຼື ສ່ວນໜຶ່ງຂອງຊັບສິນການເງິນ ຫຼື ສ່ວນໜຶ່ງຂອງກຸ່ມຊັບສິນການເງິນທີ່ຄ້າຍຄືກັນ) ຈະຖືກຢຸດຮັບຮູ້ເປັນຊັບສິນ ກໍ່ຕໍ່ເມື່ອສິດທິທີ່ຈະໄດ້ຮັບກະແສເງິນສົດຈາກຊັບສິນທີ່ໄດ້ໝົດອາຍຸແລ້ວ. ນອກຈາກນີ້, ທະນາຄານຍັງຢຸດຮັບຮູ້ເປັນຊັບສິນ ໃນກໍລະນີທີ່ຊັບສິນດັ່ງກ່າວຖືກໂອນ ແລະ ການໂອນດັ່ງກ່າວ ສອດຄ່ອງກັບເງື່ອນໄຂການຢຸດຮັບຮູ້.

ທະນາຄານຖືວ່າໄດ້ໂອນຊັບສິນຖ້າຫາກວ່າ:

- ທະນາຄານໄດ້ໂອນກຳມະສິດທັງໝົດໃນການຮັບກະແສເງິນສົດຈາກຊັບສິນ ຫຼື
- ການຮັກສາສິດທິໃນການຮັບກະແສເງິນສົດ ແຕ່ຕ້ອງມີພັນທະຜູກພັນທີ່ຈະຕ້ອງຈ່າຍກະແສເງິນສົດທີ່ຈະໄດ້ຮັບທັງໝົດໃນອະນາຄົດໂດຍທັນທີໃຫ້ພາກສ່ວນທີສາມພາຍໃຕ້ຮູບແບບ 'ການຕິດພັນ'.

ການໂອຍຍ້າຍພຽງແຕ່ມີຄຸນນະສົມບັດສຳລັບການຕັດບັນຊີໃນກໍລະນີ:

- ທະນາຄານໄດ້ໂອນຄວາມສ່ຽງ ແລະ ຜົນຕອບແທນທັງໝົດຂອງຊັບສິນ ຫຼື
- ທະນາຄານບໍ່ໄດ້ໂອນ ຫຼື ບໍ່ໄດ້ຮັກສາຄວາມສ່ຽງ ແລະ ຜົນຕອບແທນທັງໝົດຂອງຊັບສິນ, ແຕ່ໄດ້ໂອນການຄວບຄຸມຊັບສິນ.

ອີງຕາມຂໍ້ມູນຂ້າງເທິງ, ທະນາຄານຈະພິຈາລະນາວ່າການຄວບຄຸມ ຈະຖືກໂອນຖ້າຫາກຜູ້ຮັບໂອນມີຄວາມສາມາດໃນການຂາຍຊັບສິນໃຫ້ແກ່ບຸກຄົນທີສາມທີ່ບໍ່ກ່ຽວຂ້ອງກັນ ແລະ ສາມາດໃຊ້ຄວາມສາມາດດັ່ງກ່າວໄດ້ພຽງຝ່າຍດຽວ ແລະ ບໍ່ມີຂໍ້ຈຳກັດໃດໆກ່ຽວກັບການໂອນ.

ເມື່ອທະນາຄານໄດ້ໂອນສິດໃນການຮັບເງິນສົດຈາກຊັບສິນການເງິນ ຫຼື ໄດ້ເຂົ້າຮ່ວມໃນຮູບແບບການຕິດພັນ, ແລະ ບໍ່ໄດ້ໂອນ ຫຼື ຍັງຄົງຮັກສາຄວາມສ່ຽງ ແລະ ຜົນຕອບແທນທັງໝົດຂອງຊັບສິນ ຫຼືໄດ້ໂອນສິດໃນການຄວບຄຸມຊັບສິນ, ຊັບສິນຈະຖືກຮັບຮູ້ໃນເວລາທີ່ທະນາຄານຍັງມີສ່ວນກ່ຽວຂ້ອງກັບຊັບສິນນັ້ນໆ. ໃນກໍລະນີນີ້ ທະນາຄານຍັງຮັບຮູ້ເປັນໜີ້ສິນທີ່ຕິດພັນ, ການໂອນຊັບສິນ ແລະ ໜີ້ສິນທີ່ຕິດພັນແມ່ນ ຖືກປະເມີນບົນພື້ນຖານທີ່ວ່າມັນຈະສົ່ງຜົນກະທົບຕໍ່ສິດ ແລະ ພັນທະຂອງທະນາຄານທີ່ມີຢູ່.

ການສືບຕໍ່ຂອງຮູບແບບຂອງການຄ້ຳປະກັນຕໍ່ຊັບສິນທີ່ໄດ້ໂອນ ແມ່ນຖືກຕີມູນຄ່າໃນລະດັບຕ່ຳກວ່າມູນຄ່າເດີມຂອງຊັບສິນ ແລະ ມູນຄ່າສູງສຸດຂອງການພິຈາລະນາວ່າ ທະນາຄານມີຄວາມສາມາດໃນການຊຳລະໜີ້.

ນອກຈາກນີ້ທະນາຄານຍັງຢຸດຮັບຮູ້ບັນດາຊັບສິນທາງການເງິນໂດຍສະເພາະການໃຫ້ກູ້ຢືມແກ່ລູກຄ້າ ເມື່ອເງື່ອນໄຂ ແລະ ຂໍ້ຕົກລົງສ່ວນໃຫຍ່ໄດ້ມີການເຈລະຈາກັນໃໝ່ ແລະ ຖືກພິຈາລະນາເປັນກູ້ຢືມໃໝ່, ສ່ວນຜົດຕ່ຽງຈະຖືກບັນທຶກເປັນຄ່າເສື່ອມໃນໃບລາຍງານຜົນໄດ້ຮັບ.

2.7 ການຕັດບັນຊີຊັບສິນ ແລະ ໜີ້ສິນທາງການເງິນ

2.7.2 ໜີ້ສິນທາງການເງິນ

ໜີ້ສິນທາງການເງິນຈະຖືກຢຸດຮັບຮູ້ໃນບັນຊີເມື່ອພັນທະຕ່ຳກັບໜີ້ສິນດັ່ງກ່າວໄດ້ສິ້ນສຸດ ຫຼື ໄດ້ມີການຍົກເລີກ ຫຼື ໝົດອາຍຸ. ເມື່ອໜີ້ສິນການເງິນທີ່ມີຢູ່ຖືກແທນທີ່ ດ້ວຍໜີ້ສິນອື່ນໆຈາກເຈົ້າໜີ້ຜູ້ເກົ່າໃນເງື່ອນໄຂທີ່ແຕກຕ່າງກັນ, ຫຼື ປັບປຸງເງື່ອນໄຂຂອງໜີ້ສິນທີ່ມີຢູ່ ເຊັ່ນ: ການປ່ຽນແປງ ຫຼື ການປັບປຸງຖືກປະຕິບັດເຊັ່ນດຽວກັບການສະສາງບັນຊີໜີ້ສິນເດີມອອກ ແລະ ຮັບຮູ້ໜີ້ສິນໃໝ່. ສ່ວນຜົດຕ່ຽງຂອງມູນຄ່າເດີມທີ່ບັນທຶກບັນຊີຂອງໜີ້ສິນທາງການເງິນ ແລະ ການພິຈາລະນາທີ່ໄດ້ຈ່າຍຈະຖືກຮັບຮູ້ໃນກຳໄລ ຫຼື ຂາດທຶນ.

2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

2.8 ການເສື່ອມມູນຄ່າຂອງຊັບສິນທາງການເງິນ

ທະນາຄານປະເມີນໃນມື້ເຮັດໃບລາຍງານຖານະການເງິນວ່າມີຫຼັກຖານຊັດເຈນທີ່ສະແດງໃຫ້ເຫັນວ່າຊັບສິນການເງິນ - ເງິນໃຫ້ກູ້ຢືມແກ່ລູກຄ້າ ມີການເສື່ອມມູນຄ່າ ຫຼື ບໍ່. ຊັບສິນການເງິນ - ເງິນໃຫ້ກູ້ຢືມແກ່ລູກຄ້າຈະຖືວ່າມີຄວາມເສຍຫາຍ ຖ້າພຽງແຕ່ວ່າມີ ຫຼັກຖານຊັດເຈນຂອງຄວາມເສຍຫາຍຈາກຜົນຂອງໜຶ່ງ ຫຼື ຫຼາຍເຫດການທີ່ປະກົດຂຶ້ນຫຼັງຈາກ ມີການຮັບຮູ້ຊັບສິນ (ເກີດມີ 'ເຫດການເສຍຫາຍ') ແລະ ເຫດການເສຍຫາຍໜຶ່ງ (ຫຼື ຫຼາຍເຫດການ) ໄດ້ສົ່ງຜົນກະທົບເຖິງການຄາດຄະເນກະແສເງິນສົດໃນອະນາຄົດ ຂອງຊັບສິນການເງິນ ຫຼື ກຸ່ມຂອງຊັບສິນການເງິນທີ່ສາມາດຄາດຄະເນໄດ້ຢ່າງໜ້າເຊື່ອຖື.

ຫຼັກຖານຂອງການເສື່ອມມູນຄ່າອາດລວມມີ: ຕົວຊີ້ວັດວ່າຜູ້ກູ້ຢືມ ຫຼື ກຸ່ມຂອງຜູ້ກູ້ຢືມແມ່ນມີຄວາມຫຍຸ້ງຍາກທາງດ້ານການເງິນ, ການຜິດສັນຍາ ຫຼື ບໍ່ສາມາດຊຳລະຕົ້ນທຶນ ແລະ ດອກເບ້ຍ, ມີຄວາມເປັນໄປໄດ້ວ່າ ພວກເຂົາຈະລົ້ມລະລາຍ ຫຼື ການປັບປຸງລະບົບ ການເງິນຄືນໃໝ່ ແລະ ຂໍ້ມູນອື່ນໆທີ່ສະແດງໃຫ້ເຫັນວ່າກະແສເງິນສົດທີ່ຖືກປະເມີນໃນອະນາຄົດ ຫຼຸດລົງ ເຊັ່ນ: ການປ່ຽນແປງໜີ້ ເກີນກຳນົດ ຫຼື ເງື່ອນໄຂດ້ານເສດຖະກິດທີ່ກ່ຽວຂ້ອງກັບການຜິດສັນຍາ.

2.8.1 ຊັບສິນທາງການເງິນທີ່ຮັບຮູ້ຕາມຕົ້ນທຶນຄ່າເສື່ອມມູນຄ່າ

ການສູນເສຍຄ່າເສື່ອມມູນຄ່າສ່ວນບຸກຄົນ

ສຳລັບຊັບສິນທາງການເງິນ - ເງິນໃຫ້ກູ້ຢືມແກ່ລູກຄ້າ ທີ່ບັນທຶກຕາມມູນຄ່າສຸດທິຫຼັງຫັກຄ່າເສື່ອມ (ເຊັ່ນ: ໜີ້ຕ້ອງສົ່ງທະນາຄານອື່ນ ແລະ ເງິນໃຫ້ກູ້ຢືມແກ່ລູກຄ້າ), ທະນາຄານຈະປະເມີນຫຼັກຖານຂອງການເສື່ອມມູນຄ່າຂອງຊັບສິນທາງການເງິນວ່າມີຫຼັກຖານການເສື່ອມຄ່າຂອງຊັບສິນການເງິນນັ້ນສຳຄັນ ຫຼືວ່າ ຖືກພິຈາລະນາສະເພາະໂດຍຜູ້ບໍລິຫານ.

ຖ້າຫາກມີຫຼັກຖານວ່າຄ່າເສື່ອມເກີດຂຶ້ນ,ຈຳນວນຄ່າເສື່ອມຈະຖືກຕີມູນຄ່າເປັນສ່ວນຕ່າງລະຫວ່າງຍອດຍົກມາຂອງຊັບສິນ ແລະ ຍອດເງິນປະຈຸບັນຂອງກະແສເງິນສົດໃນອະນາຄົດ (ບໍ່ລວມເອົາຄ່າເສື່ອມທີ່ອາດຈະເກີດຂຶ້ນໃນອະນາຄົດ). ການຄາດຄະເນກະແສເງິນສົດໃນອະນາຄົດຂອງເງິນກູ້ຢືມໃຫ້ແກ່ລູກຄ້າພາຍໃຕ້ການຈັດປະເພດເງິນໃຫ້ກູ້ຢືມທີ່ບໍ່ເກີດດອກອອກຜົນ ຄິດໄລ່ຈາກ 40% ຂອງມູນຄ່າຫຼັກຊັບຄ້ຳປະກັນທີ່ປະເມີນໂດຍຜູ້ປະເມີນພາຍໃນ ປະກອບກັບການພິຈາລະນາໄລຍະເວລາທີ່ຄາດວ່າຈະຂາຍຫຼັກຊັບຄ້ຳປະກັນ ແລະ ຄາດຄະເນກະແສເງິນສົດໃນອະນາຄົດພາຍໃຕ້ການຈັດປະເພດເງິນກູ້ຢືມທີ່ເກີດດອກອອກຜົນ ທີ່ໄດ້ມາຈາກການເກັບຄືນເງິນຕົ້ນ ແລະ ດອກເບ້ຍ ຕະຫຼອດອາຍຸການຂອງສັນຍາປະກອບກັບການພິຈາລະນາ ອັດຕາການກູ້ຄືນທີ່ຄາດວ່າຈະນຳໃຊ້ອັດຕາເກຣດ A 99% ແລະ B 97%-95%) ບວກ 20% ຂອງມູນຄ່າຄ້ຳປະກັນທີ່ປະເມີນໂດຍຜູ້ປະເມີນພາຍໃນ.

ຍອດທີ່ບັນທຶກບັນຊີຂອງຊັບສິນແມ່ນຫຼຸດລົງຍ້ອນນຳໃຊ້ບັນຊີຄ່າເສື່ອມ ແລະ ຍອດທີ່ຫຼຸດລົງແມ່ນຖືກຮັບຮູ້ເປັນລາຍຈ່າຍສູນເສຍສິນເຊື່ອໃນໃບລາຍງານຜົນໄດ້ຮັບ. ລາຍຮັບດອກເບ້ຍຈະຖືກສືບຕໍ່ຄິດໄລ່ຕາມຍອດຍົກມາທີ່ຫຼຸດລົງ ແລະ ຖືກຄິດໄລ່ໂດຍນຳໃຊ້ອັດຕາດອກເບ້ຍຫຼຸດຄ່າກະແສເງິນສົດໃນອະນາຄົດເພື່ອປະເມີນຄ່າເສື່ອມ. ລາຍຮັບດອກເບ້ຍຖືກລົງບັນຊີໃນ "ລາຍຮັບດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ".

ເງິນກູ້ພ້ອມກັບລາຍຈ່າຍທີ່ຕິດພັນຈະຖືກສະສາງອອກ ເມື່ອທະນາຄານໄດ້ພິຈາລະນາວ່າຈະບໍ່ສາມາດເກັບໜີ້ໄດ້ ແລະ ເມື່ອຫຼັກຊັບຄ້ຳປະກັນຖືກໂອນໃຫ້ທະນາຄານ. ຖ້າໃນປີຕໍ່ມາ, ຄ່າເສື່ອມໜີ້ເສຍຈະເພີ່ມຂຶ້ນ ຫຼື ຫຼຸດລົງຍ້ອນວ່າມີເຫດການ ເກີດຂຶ້ນຫຼັງຈາກໄດ້ ຫັກຄ່າເສື່ອມ, ຄ່າເສື່ອມໜີ້ເສຍທີ່ຖືກຫັກໄວ້ກ່ອນໜ້ານີ້ຈະເພີ່ມຂຶ້ນ ຫຼື ຫຼຸດລົງ ໂດຍການດັດແກ້ໃນບັນຊີລາຍຈ່າຍ, ຖ້າໃນອະນາຄົດຈະສາມາດເກັບຄືນໄດ້ ມູນຄ່າທີ່ເກັບຄືນໄດ້ນັ້ນຈະຖືກລົງບັນຊີເບື້ອງມີໃນລາຍຮັບ.

2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

2.8 ການເສື່ອມມູນຄ່າຂອງຊັບສິນທາງການເງິນ (ຕໍ່)

2.8.1 ຊັບສິນທາງການເງິນທີ່ຮັບຮູ້ຕາມຕົ້ນທຶນຄ່າເສື່ອມມູນຄ່າ (ຕໍ່)

ມູນຄ່າປະຈຸບັນຂອງກະແສເງິນສົດໃນອະນາຄົດທີ່ຄາດຄະເນໄວ້ ແມ່ນມູນຄ່າໃນປະຈຸບັນຕາມອັດຕາດອກເບ້ຍຕາມສັນຍາຊັບສິນການເງິນ. ຖ້າທະນາຄານໄດ້ຈັດປະເພດຊັບສິນການຄ້າເປັນເງິນກູ້ ແລະ ເງິນລ່ວງໜ້າ, ອັດຕາສ່ວນຫຼຸດສຳລັບຄິດໄລ່ຄ່າເສື່ອມແມ່ນອັດຕາດອກເບ້ຍທີ່ແທ້ຈິງໃໝ່ທີ່ພິຈາລະນາໃນວັນທີຈັດປະເພດຄືນໃໝ່.

ການຄິດໄລ່ມູນຄ່າປະຈຸບັນຂອງກະແສເງິນສົດໃນອະນາຄົດ ທີ່ຄາດຄະເນໄວ້ຂອງຫຼັກຊັບຄ້ຳປະກັນ ມີຜົນກະທົບຕໍ່ກະແສເງິນສົດ ຊຶ່ງອາດເປັນຜົນມາຈາກຫຼັກຊັບຄ້ຳປະກັນທີ່ຍຶດມາໄດ້ລຶບໃຫ້ຕົ້ນທຶນຂອງຫຼັກຊັບຄ້ຳປະກັນທີ່ໄດ້ຮັບ ແລະ ຂາຍ ບໍ່ວ່າການຍຶດຫຼັກຊັບຈະເປັນໄປໄດ້ ຫຼື ບໍ່ກໍ່ຕາມ.

ຮູບແບບການເສື່ອມມູນຄ່າເປັນກຸ່ມ

ເພື່ອຈຸດປະສົງໃນການປະເມີນຄ່າເສື່ອມເປັນກຸ່ມ, ຊັບສິນການເງິນແມ່ນຖືກຈັດເປັນກຸ່ມ ຕາມລັກສະນະຄວາມສ່ຽງທີ່ຄ້າຍຄືກັນ ຊຶ່ງເປັນຕົວຊີ້ວັດຄວາມສາມາດຂອງລູກໜີ້ໃນການຈ່າຍເງິນຈຳນວນທັງໝົດອີງຕາມເງື່ອນໄຂໃນສັນຍາ (ຕົວຢ່າງເຊັ່ນ, ອີງຕາມພື້ນຖານຂອງການປະເມີນຜົນຄວາມສ່ຽງການປ່ອຍສິນເຊື່ອ ຫຼື ການໃຫ້ຄະແນນ).

ກະແສເງິນສົດໃນອະນາຄົດຂອງກຸ່ມຊັບສິນທາງການເງິນທີ່ຖືກປະເມີນຜົນລວມ ສຳລັບຄ່າເສື່ອມມູນຄ່າແມ່ນຖືກຄາດຄະເນບົນພື້ນຖານຂອງປະສົບການດ້ານການສູນເສຍທີ່ຜ່ານມາ ສຳລັບຊັບສິນທີ່ມີຄຸນລັກສະນະຄວາມສ່ຽງດ້ານສິນເຊື່ອຄ້າຍຄືກັນກັບໃນກຸ່ມ. ປະສົບການດ້ານການສູນເສຍທີ່ຜ່ານມາແມ່ນຖືກປັບປຸງບົນພື້ນຖານຂອງຂໍ້ມູນທີ່ສັງເກດໄດ້ໃນປະຈຸບັນເພື່ອສະທ້ອນເຖິງຜົນກະທົບຂອງສະພາບການໃນປະຈຸບັນທີ່ອີງຕາມປະສົບການດ້ານການສູນເສຍທີ່ຜ່ານມາ ແລະ ເພື່ອກຳຈັດຜົນກະທົບຂອງເງື່ອນໄຂຕ່າງໆໃນໄລຍະທີ່ຜ່ານມາທີ່ບໍ່ມີຢູ່.

ການຄາດຄະເນຂອງການປ່ຽນແປງຂອງກະແສເງິນສົດໃນອະນາຄົດສະທ້ອນ ແລະ ສອດຄ່ອງກັບທິດທາງການປ່ຽນແປງຂໍ້ມູນທີ່ສັງເກດຈາກແຕ່ລະໄລຍະ (ເຊັ່ນ: ການປ່ຽນແປງຂອງອັດຕາການຫວ່າງງານ, ການເປັນໜີ້ສ່ວນບຸກຄົນ, ມູນຄ່າຊັບສິນລວມທັງລາຄາຊັບສິນ ສຳລັບການຈຳນອງ, ລາຄາສິນຄ້າ, ສະຖານະການຊຳລະ ຫຼື ປັດໃຈອື່ນໆ ທີ່ ແມ່ນຕົວຊີ້ບອກຂອງການສູນເສຍທີ່ເກີດຂຶ້ນໃນກຸ່ມ ແລະ ຂະໜາດຂອງພວກເຂົາ). ວິທີການ ແລະ ຂໍ້ສົມມຸດທີ່ໃຊ້ໃນການຄາດຄະເນກະແສເງິນສົດໃນອະນາຄົດແມ່ນຖືກທົບທວນເປັນປົກກະຕິ ເພື່ອຫຼຸດຜ່ອນຄວາມແຕກຕ່າງລະຫວ່າງການຄາດຄະເນການສູນເສຍ ແລະ ປະສົບການການສູນເສຍຕົວຈິງ.

2.8.2 ການເສື່ອມມູນຄ່າຂອງການລົງທຶນທາງການເງິນມີໄວ້ເພື່ອຂາຍ

ທະນາຄານຍັງໄດ້ບັນທຶກຄ່າເສື່ອມຕໍ່ການລົງທຶນທີ່ມີໄວ້ເພື່ອຂາຍ ເມື່ອເກີດການຫຼຸດລົງທີ່ສຳຄັນ ຫຼື ການຫຼຸດລົງໃນມູນຄ່າຍຸຕິທຳທີ່ຕ່ຳກວ່າຕົ້ນທຶນ ຂໍ້ກຳນົດທີ່ ‘ສຳຄັນ’ ຫຼື ‘ຍາວນານ’ ຕ້ອງຖືກພິຈາລະນາ, ການພິຈາລະນາດັ່ງກ່າວນີ້ ທະນາຄານປະເມີນລະຫວ່າງຫຼາຍປັດໃຈ ແລະ ການເໜັງຕີງຂອງລາຄາຮຸ້ນ ແລະ ໄລຍະເວລາ ແລະ ກຳນົດຂອບເຂດຂອງມູນຄ່າຍຸຕິທຳທີ່ຕ່ຳກວ່າຕົ້ນທຶນ.

2.8.3 ການປະເມີນມູນຄ່າຫຼັກຊັບຄ້ຳປະກັນ

ທະນາຄານຊອກຫາວິທີທີ່ຈະນຳໃຊ້ຫຼັກຊັບຄ້ຳປະກັນ, ຖ້າເປັນໄປໄດ້, ເພື່ອຫຼຸດຜ່ອນຄວາມສ່ຽງຂອງຊັບສິນການເງິນ. ຫຼັກຊັບຄ້ຳປະກັນອາດເປັນໄດ້ຫຼາຍຮູບແບບ ເຊັ່ນ: ເງິນສົດ, ຫຼັກຊັບ, ໜັງສືສິນເຊື່ອ/ໜັງສືຄ້ຳປະກັນ, ອະສັງຫາລິມະຊັບ, ໜີ້ຕ້ອງຮັບ, ເຄື່ອງໃນສາງ, ຊັບສິນທີ່ບໍ່ແມ່ນການເງິນອື່ນໆ ແລະ ການຍົກລະດັບສິນເຊື່ອ ເຊັ່ນ ຂໍ້ຕົກລົງທີ່ຮັດກຸມ. ໂດຍທົ່ວໄປ, ມູນຄ່າຍຸຕິທຳຂອງຫຼັກຊັບຄ້ຳປະກັນແມ່ນຖືກປະເມີນໃນມູນຄ່າຕ່ຳສຸດໃນມື້ເລີ່ມຕົ້ນ ແລະ ກຳນົດເວລາການລາຍງານປະຈຳປີຂອງທະນາຄານ.

2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

2.8 ການເສື່ອມມູນຄ່າຂອງຊັບສິນທາງການເງິນ (ຕໍ່)

2.8.3 ການປະເມີນມູນຄ່າຫຼັກຊັບຄ้ຳປະກັນ (ຕໍ່)

ເພື່ອກຳນົດຂອບເຂດທີ່ຄວນເປັນໄປໄດ້ ທະນາຄານໄດ້ນຳໃຊ້ຂໍ້ມູນຕາມທ້ອງຕະຫຼາດສຳລັບປະເມີນຊັບສິນການເງິນ ທີ່ໃຊ້ເປັນຫຼັກຊັບຄ้ຳປະກັນ. ຊັບສິນການເງິນອື່ນໆທີ່ຍັງບໍ່ສາມາດກຳນົດມູນຄ່າຕາມທ້ອງຕະຫຼາດ ຈະຖືກປະເມີນໂດຍໃຊ້ຮູບແບບການປະເມີນ. ຫຼັກຊັບຄ้ຳປະກັນທີ່ບໍ່ແມ່ນທາງການເງິນເຊັ່ນ: ອະສັງຫາລິມະຊັບ ຈະຖືກປະເມີນຕາມຂໍ້ມູນທີ່ໄດ້ຈາກພາກສ່ວນພາຍນອກ (ຖ້າມີ) ເຊັ່ນ: ນາຍໜ້າ, ດັດສະນີລາຄາທີ່ພັກອາໄສ, ບົດລາຍງານການເງິນທີ່ຖືກກວດສອບແລ້ວ ແລະ ແຫຼ່ງຂໍ້ມູນທີ່ໜ້າເຊື່ອຖືອື່ນໆ.

2.8.4 ຫຼັກຊັບຄ้ຳປະກັນທີ່ຖືກຍຶດ

ນະໂຍບາຍທະນາຄານແມ່ນກຳນົດວ່າຊັບສິນທີ່ຍຶດມາ ສາມາດນຳໃຊ້ເຂົ້າໃນການດຳເນີນກິດຈະການພາຍໃນຂອງທະນາຄານ ຫຼື ຄວນຈະຂາຍ. ຊັບສິນທີ່ເປັນປະໂຫຍດສຳລັບການດຳເນີນງານພາຍໃນຈະຖືກໂອນເຂົ້າໄປເປັນຊັບສິນຕາມແຕ່ລະປະເພດທີ່ກ່ຽວຂ້ອງ ເຊິ່ງຈະຖືກຕີມູນຄ່າຫຼຸດລົງຈາກມູນຄ່າທີ່ຍຶດມາ ຫຼື ຍອດບັນທຶກບັນຊີຂອງຊັບສິນທີ່ຖືກຄ้ຳປະກັນ. ຊັບສິນທີ່ຖືກກຳນົດວ່າຈະຂາຍອອກຈະຖືກໂອນເປັນຊັບສິນມີໄວ້ສຳລັບຂາຍ ແລະ ຖືກຕີມູນຄ່າຕາມມູນຄ່າຕົວຈິງນະມື້ທີ່ຍຶດຊັບສິນໂດຍສອດຄ່ອງກັບນະໂຍບາຍຂອງທະນາຄານ.

2.9 ການຫັກລ້າງເຄື່ອງມືທາງການເງິນ

ຊັບສິນ ແລະ ໜີ້ສິນທາງການເງິນແມ່ນຖືກຫັກລ້າງກັນ ແລະ ມູນຄ່າສຸດທິຈະຖືກລາຍງານໃນໃບລາຍງານຖານະການເງິນ, ຖ້າຫາກວ່າ ທະນາຄານຖືກບັງຄັບທາງກົດໝາຍໃຫ້ສະສາງຈຳນວນເງິນດັ່ງກ່າວນັ້ນ ແລະ ທະນາຄານຕັ້ງໃຈຈະສະສາງໃນມູນຄ່າສຸດທິ ຫຼື ຂາຍຊັບສິນເພື່ອຊຳລະໜີ້ສິນໃນເວລາດຽວກັນ. ນີ້ບໍ່ແມ່ນກໍລະນີທົ່ວໄປໃນຂໍ້ຕົກລົງວ່າດ້ວຍການຫັກລ້າງລະຫວ່າງ ຊັບສິນ ແລະ ໜີ້ສິນ ທີ່ກ່ຽວຂ້ອງໄດ້ຖືກສະແດງມູນຄ່າລວມໃນໃບລາຍງານຖານະການເງິນ.

2.10 ຊັບສົມບັດຄົງທີ່ ແລະ ອຸປະກອນ

ຊັບສົມບັດຄົງທີ່ ແລະ ອຸປະກອນ ແມ່ນໄດ້ລາຍງານ ຕາມຕົ້ນທຶນຂອງການບໍລິການມື້ຕໍ່ມື້ ລົບຄ່າຫລຸ້ຍຫ້ຽນສະສົມ ແລະ ຄ່າເສື່ອມສະສົມ. ການປ່ຽນແປງ ຂອງອາຍຸການນຳໃຊ້ ແມ່ນໄດ້ລົງບັນຊີຕາມການປ່ຽນແປງຂອງໄລຍະການເສື່ອມຄ່າ ຫຼື ວິທີຫັກຄ່າເສື່ອມຕາມຄວາມເໝາະສົມ ແລະ ເຮັດໃຫ້ມີການປ່ຽນແປງຕາມການຄາດຄະເນທາງການບັນຊີ.

ຄ່າຫຼ້ຍຫ້ຽນຖືກຄິດໄລ່ອີງຕາມພື້ນຖານການຄິດໄລ່ຄ່າຫຼ້ຍຫ້ຽນແບບສະເໝີຕົ້ວ ເພື່ອຫຼຸດຕົ້ນທຶນຂອງຊັບສົມບັດ ແລະ ອຸປະກອນໃຫ້ຖືກຕາມມູນຄ່າທີ່ຍັງເຫຼືອຕົວຈິງຕາມອາຍຸການໃຊ້ງານ. ອາຍຸການນຳໃຊ້ທີ່ໄດ້ຄາດຄະເນແມ່ນມີດັ່ງ ລຸ່ມນີ້:

ອາຄານ & ສ່ວນປັບປຸງ	5%-10%
ເຄື່ອງໃຊ້ຫ້ອງການ	20%
ເຟີນີເຈີ & ການຕິດຕັ້ງ	20%
ຍານພາຫະນະ	20%

ຊັບສົມບັດຄົງທີ່ ແລະ ອຸປະກອນຈະບໍ່ຖືກຮັບຮູ້ເມື່ອມີການສະສາງອອກ ຫຼື ເມື່ອເຫັນວ່າບໍ່ມີຜົນປະໂຫຍດຕໍ່ທຸລະກິດໃນອະນາຄົດຈາກການນຳໃຊ້ຊັບສົມບັດ ແລະ ອຸປະກອນດັ່ງກ່າວ. ກຳໄລ ຫຼື ຂາດທຶນທີ່ເກີດຈາກການສະສາງຊັບສົມບັດ (ຄິດໄລ່ໄດ້ລະຫວ່າງມູນຄ່າສະສາງອອກ ແລະ ມູນຄ່າຍັງເຫຼືອຂອງຊັບສົມບັດ) ແມ່ນຖືກຮັບຮູ້ເປັນ "ລາຍຮັບຈາກການດຳເນີນງານອື່ນໆ' ໃນໃບລາຍງານຜົນໄດ້ຮັບຂອງປີທີ່ຊັບສົມບັດໄດ້ຖືກສະສາງອອກ.

2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

2.11 ຊັບສົມບັດຄົງທີ່ບໍ່ມີຕົວຕົນ

ຊັບສົມບັດຄົງທີ່ບໍ່ມີຕົວຕົນຂອງທະນາຄານປະກອບດ້ວຍ ສິດນຳໃຊ້ທີ່ດິນ ແລະ ຊ໋ອບແວ.

ຊັບສົມບັດຄົງທີ່ບໍ່ມີຕົວຕົນຖືກຮັບຮູ້ເມື່ອຕົ້ນທຶນຂອງຊັບສົມບັດຄົງທີ່ສາມາດປະເມີນໄດ້ຢ່າງແນ່ນອນ ແລະ ມັນຈະສາມາດສ້າງຜົນປະໂຫຍດໃຫ້ແກ່ທະນາຄານໃນອະນາຄົດ.

ຊັບສົມບັດຄົງທີ່ບໍ່ມີຕົວຕົນທີ່ທະນາຄານຍຶດມາໄດ້ຈະຖືກປະເມີນມູນຄ່າຕົ້ນທຶນເບື້ອງຕົ້ນ. ຕົ້ນທຶນຂອງຊັບສົມບັດຄົງທີ່ບໍ່ມີຕົວຕົນທີ່ໄດ້ມາ ຈາກການລວມທຸລະກິດຈະຖືກຮັບຮູ້ຕາມມູນຄ່າຍຸຕິທຳໃນມື້ທີ່ໄດ້ມາ. ຕໍ່ຈາກນັ້ນ, ຊັບສົມບັດຄົງທີ່ບໍ່ມີຕົວຕົນຈະຖືກຮັບຮູ້ ໂດຍການເອົາຕົ້ນທຶນລົບໃຫ້ຄ່າເສື່ອມສະສົມ.

ອາຍຸການນຳໃຊ້ຂອງຊັບສິນທີ່ບໍ່ມີຕົວຕົນ ແມ່ນໄດ້ຖືກປະເມີນໂດຍຈັດເປັນ ມີກຳນົດ ແລະ ບໍ່ມີກຳນົດ. ຊັບສົມບັດຄົງທີ່ບໍ່ມີຕົວຕົນທີ່ມີອາຍຸການນຳໃຊ້ທີ່ມີກຳນົດແມ່ນຖືກຫັກຄ່າເສື່ອມຕາມອາຍຸການນຳໃຊ້. ໄລຍະຂອງການຫັກຄ່າເສື່ອມ ແລະ ວິທີການຫັກຄ່າເສື່ອມສຳລັບຊັບສົມບັດຄົງທີ່ບໍ່ມີຕົວຕົນທີ່ມີອາຍຸການນຳໃຊ້ກຳນົດຈະຖືກທົບທວນຄືນເປັນຢ່າງນ້ອຍສຸດໃນທ້າຍປີການບັນຊີ. ການປ່ຽນແປງອາຍຸການນຳໃຊ້ຄາດຄະເນແມ່ນຈະໄດ້ລົງບັນຊີເປັນການປ່ຽນແປງໄລຍະ ແລະ ວິທີຂອງການຫັກຄ່າເສື່ອມ, ຕາມຄວາມເໝາະສົມ ແລະ ຖືເປັນການປ່ຽນແປງການຄາດຄະເນໃນບັນຊີ. ລາຍຈ່າຍກ່ຽວກັບການຫັກຄ່າເສື່ອມຂອງຊັບສົມບັດຄົງທີ່ບໍ່ມີຕົວຕົນທີ່ມີອາຍຸການນຳໃຊ້ທີ່ມີກຳນົດແມ່ນໄດ້ຖືຮັບຮູ້ໃນໃບລາຍງານຜົນໄດ້ຮັບໃນໝວດຂອງລາຍຈ່າຍທີ່ພົວພັນກັບຊັບສົມບັດຄົງທີ່ທີ່ບໍ່ມີຕົວຕົນ.

ຄ່າເສື່ອມຖືກຄິດໄລ່ອີງຕາມພື້ນຖານການຄິດໄລ່ຄ່າເສື່ອມແບບສະເໝີຕົວເພື່ອຫຼຸດຕົ້ນທຶນຂອງຊັບສິນທີ່ບໍ່ມີຕົວຕົນໃຫ້ຖືກຕາມມູນຄ່າທີ່ຍັງເຫຼືອຕົວຈິງຕາມອາຍຸການໃຊ້ງານ. ອັດຕາຄາດຄະເນການຫັກຄ່າເສື່ອມມີດັ່ງນີ້:

ຊ໋ອບແວ	20% - 50%

ສິດໃນການນຳໃຊ້ທີ່ດິນຂອງທະນາຄານແມ່ນບໍ່ມີຄ່າເສື່ອມ ເນື່ອງຈາກສິດໃນການນຳໃຊ້ທີ່ດິນແມ່ນມີອາຍຸການນຳໃຊ້ແບບບໍ່ຈຳກັດ ແລະ ອອກໃຫ້ໂດຍລັດຖະບານຂອງ ສປປ ລາວ.

2.12 ຄ່າເສື່ອມຂອງຊັບສິນທີ່ບໍ່ແມ່ນທາງການເງິນ

ທະນາຄານປະເມີນນະມື້ເຮັດເອກະສານລາຍງານ ວ່າມີຊັບສິນໃດທີ່ມີການເສື່ອມຄ່າ ຫຼື ບໍ່. ຖ້າມີ ຫຼື ເມື່ອເຮັດການທົດສອບການເສື່ອມຄ່າຊັບສິນປະຈຳປີຕາມທີ່ໄດ້ກຳນົດ ທະນາຄານປະເມີນຈຳນວນເງິນທີ່ເກັບກູ້ຄືນໄດ້ຂອງຊັບສິນ. ຈຳນວນເງິນທີ່ສາມາດເກັບກູ້ ຄືນໄດ້ຂອງຊັບສິນ ແມ່ນໄດ້ຈາກ ມູນຄ່າທີ່ສູງກວ່າລະຫວ່າງ ມູນຄ່າຍຸຕິທຳຂອງຊັບສິນ ຫຼື ມູນຄ່າຍຸຕິທຳຂອງຫົວໜ່ວຍຊັບສິນທີ່ກໍ່ໃຫ້ເກີດເງິນສົດ (CGU) ລົບໃຫ້ຕົ້ນທຶນຂາຍ ແລະ ມູນຄ່າທີ່ຖືກນຳໃຊ້. ເມື່ອຍອດຍົກມາຂອງຊັບສິນ ຫຼື ມູນຄ່າຂອງ CGU ຫຼາຍກວ່າມູນຄ່າທີ່ສາມາດເກັບກູ້ຄືນໄດ້, ຊັບສິນຈະຖືວ່າເສື່ອມຄ່າ ແລະ ຈະຫຼຸດມູນຄ່າລົງໃຫ້ເທົ່າກັບມູນຄ່າທີ່ສາມາດເກັບກູ້ຄືນໄດ້.

ໃນການປະເມີນມູນຄ່າທີ່ຖືກນຳໃຊ້, ກະແສເງິນສົດທີ່ຖືກປະເມີນໃນອະນາຄົດແມ່ນຫຼຸດລົງ ເພື່ອໃຫ້ໄດ້ມູນຄ່າປະຈຸບັນ ໂດຍການນຳໃຊ້ອັດຕາສ່ວນຫຼຸດກ່ອນອາກອນ ທີ່ສົ່ງຜົນຕໍ່ການປະເມີນມູນຄ່າຕາມທ້ອງຕະຫຼາດໃນປະຈຸບັນຂອງເງິນ ແລະ ຄວາມສ່ຽງສະເພາະຂອງຊັບສິນ. ໃນການກຳນົດມູນຄ່າຍຸຕິທຳລົບໃຫ້ຕົ້ນທຶນຂາຍ, ແບບວິທີການຕີມູນຄ່າທີ່ເໝາະສົມຈະຖືກນຳໃຊ້. ການຄິດໄລ່ຈະຖືກປະຕິບັດໂດຍເອົາຜົນຄູນຂອງການຕີມູນຄ່າ, ລາຄາຮຸ້ນທີ່ກຳນົດສຳລັບການຄ້າຂາຍກັບບໍລິສັດໃນເຄືອ ຫຼື ຕົວຊີ້ບອກມູນຄ່າຍຸຕິທຳອື່ນໆ.

2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

2.12 ຄ່າເສື່ອມຂອງຊັບສິນທີ່ບໍ່ແມ່ນທາງການເງິນ (ຕໍ່)

ສຳລັບຊັບສິນທີ່ບໍ່ລວມຄ່ານິຍົມ, ການປະເມີນຈະຖືກເຮັດໃນມື້ສ້າງບົດລາຍງານ ເພື່ອເບິ່ງວ່າອາດຈະມີຕົວຊີ້ບອກເຖິງ ການ ເສື່ອມຄ່າຂອງຊັບສິນທີ່ຜ່ານມານັ້ນຈະບໍ່ເກີດຂຶ້ນອີກ ຫຼື ອາດຫຼຸດລົງ. ຖ້າຫາກມີຕົວຊີ້ບອກ, ທະນາຄານຈະຄາດ ຄະເນ ຈຳນວນເງິນທີ່ສາມາດຮຽກເກັບຄືນມາໄດ້ຂອງຊັບສິນ ຫຼື ຫົວໜ່ວຍຊັບສິນທີ່ກ່ຳໃຫ້ເກີດເງິນສົດ. ການເສື່ອມຄ່າຜ່ານ ມາຈະສາມາດຮຽກເກັບຄືນມາໄດ້ກ່ຳຕໍ່ເມື່ອມັນ ມີການປ່ຽນແປງ ໃນການກຳນົດມູນຄ່າທີ່ສາມາດເກັບຄືນໄດ້ຂອງຊັບສິນ ນັບຕັ້ງແຕ່ການເສື່ອມຄ່າຄັ້ງສຸດທ້າຍໄດ້ຖືກຮັບຮູ້. ການປັ້ນຄືນແມ່ນຖືກກຳນົດຂຶ້ນ ສະນັ້ນ ຍອດຍົກມາຂອງຊັບສິນແມ່ນບໍ່ ເກີນມູນຄ່າທີ່ສາມາດເກັບຄືນໄດ້ ຫຼື ບໍ່ເກີນຍອດຍົກມາທີ່ຖືກກຳນົດລົບໃຫ້ຄ່າຫລຸ້ຍຫ້ຽນ, ບໍ່ມີຄ່າເສື່ອມຂອງຊັບສິນໃນ ປີຜ່ານມາ. ການປັ້ນຄືນແມ່ນຖືກຮັບຮູ້ໃນໃບລາຍງານຜົນໄດ້ຮັບ.

2.13 ການຄ້ຳປະກັນທາງການເງິນ

ໂດຍທົ່ວໄປ ທະນາຄານໄດ້ໃຫ້ການຄ້ຳປະກັນທາງການເງິນ, ປະກອບມີ ໜັງສືສິນເຊື່ອ, ໜັງສືຄ້ຳປະກັນ ແລະ ໜັງສືຕອບຮັບ. ການຄ້ຳປະກັນທາງການເງິນແມ່ນຖືກຮັບຮູ້ ໃນໄລຍະເອກະສານລາຍງານການເງິນ (ພາຍໃຕ້ 'ໜີ້ສິນອື່ນໆ') ທີ່ມູນຄ່າຍຸຕິທຳ, ພ້ອມຄ່າທຳນຽມ.

ພາຍຫຼັງການຮັບຮູ້ໜີ້ສິນຂອງທະນາຄານພາຍໃຕ້ໜັງສືຄ້ຳປະກັນແມ່ນຄິດໄລ່ໂດຍເອົາມູນຄ່າທີ່ຮັບຮູ້ພື້ນຖານທີ່ສູງກວ່າ ລົບ ຄ່າເສື່ອມສະສົມທີ່ຮັບຮູ້ໃນໃບລາຍງານຜົນໄດ້ຮັບ ແລະ ການຄາດຄະເນລາຍຈ່າຍທີ່ດີທີ່ສຸດທີ່ຕ້ອງຊຳລະຕາມພັນທະທີ່ເກີດ ຂຶ້ນຈາກໜັງສືຄ້ຳປະກັນ.

ທຸກໆການເພີ່ມຂຶ້ນຂອງໜີ້ສິນທີ່ກ່ຽວຂ້ອງກັບການຄ້ຳປະກັນທາງການເງິນ ແມ່ນຖືກບັນທຶກໄວ້ໃນໃບລາຍງານຜົນໄດ້ຮັບ ສ່ວນລວມ ໃນ 'ລາຍຈ່າຍເງິນແຮໜີ້ເສຍ'. ຄ່າທຳນຽມແມ່ນຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານ ໃນ 'ລາຍຮັບສຸດທິ ຄ່າທຳນຽມ ແລະ ຄ່າບໍລິການ' ຕາມວິທີສະເໜີຕົວຕາມອາຍຸຂອງການຄ້ຳປະກັນ.

2.14 ສັນຍາເຊົ່າ

2.14.1. ສິດນຳໃຊ້ຊັບສິນ

ໃນມື້ເລີ່ມຕົ້ນເຮັດສັນຍາ, ທະນາຄານຈະປະເມີນວ່າສັນຍາແມ່ນເປັນສັນຍາເຊົ່າ, ຫຼືປະກອບມີເງື່ອນໄຂການ ເຊົ່າ ຫຼືບໍ່ ໂດຍອີງໃສ່ສັນຍາທີ່ບົ່ງບອກເຖິງຜູ້ໃຊ້ (ຜູ້ເຊົ່າ) ທີ່ມີສິດຄວບຄຸມການນຳໃຊ້ຊັບສິນທີ່ໄດ້ລະບຸໄວ້ເປັນ ໄລຍະເວລາໃດໜຶ່ງແລກປ່ຽນເພື່ອພິຈາລະນາ. ຖ້າສັນຍາປະກອບດ້ວຍສ່ວນປະກອບຂອງສັນຍາເຊົ່າຫຼາຍກວ່າ ໜຶ່ງລາຍການ ຫຼື ລວມກັນຂອງທຸລະກຳການໃຫ້ເຊົ່າ ແລະ ການບໍລິການ, ການພິຈາລະນາຈະຖືກຈັດສັນໃຫ້ ແຕ່ລະສ່ວນຂອງສັນຍາເຊົ່າ ແລະ ສ່ວນທີ່ບໍ່ໄດ້ເຊົ່າຕາມຂໍ້ສະຫຼຸບ ແລະ ໃນການວັດແທກຄືນໃໝ່ຂອງສັນຍາ ແຕ່ລະຄັ້ງບົນພື້ນຖານຂອງລາຄາຂາຍແບບດ່ຽວ. ທະນາຄານຮວບຮວມອົງປະກອບຂອງການເຊົ່າ ແລະ ທີ່ບໍ່ແມ່ນການເຊົ່າໃນກໍລະນີທີ່ບໍ່ສາມາດແຍກສ່ວນປະກອບທີ່ບໍ່ແມ່ນການເຊົ່າອອກໄດ້.

ທະນາຄານຮັບຮູ້ສິດນຳໃຊ້ຊັບສິນໃນວັນທີເລີ່ມຕົ້ນຂອງສັນຍາເຊົ່າ (ຕົວຢ່າງ, ວັນທີທີ່ຊັບສິນທີ່ຕິດພັນສາມາດ ນຳໃຊ້ໄດ້). ສິດໃນການນຳໃຊ້ຊັບສິນແມ່ນຖືກວັດແທກດ້ວຍລາຄາຕົ້ນທຶນຫັກຄ່າເສື່ອມສະສົມ ແລະ ຂາດທຶນຈາກການເສື່ອມຄ່າ, ແລະດັດແກ້ສຳລັບການວັດແທກມູນຄ່າຄືນໃໝ່ ຂອງໜີ້ສິນການເຊົ່າ.

ຕົ້ນທຶນຂອງສິດໃນການນຳໃຊ້ຊັບສິນປະກອບມີໜີ້ສິນຕາມສັນຍາເຊົ່າທີ່ຖືກດັດແກ້ສຳລັບການຈ່າຍຄ່າເຊົ່າທີ່ ເກີດຂຶ້ນໃນ ຫຼື ກ່ອນວັນທີເລີ່ມຕົ້ນ, ບວກໃຫ້ຕົ້ນທຶນທາງກົງໃນເບື້ອງຕົ້ນ ແລະ ຄາດຄະເນລາຍຈ່າຍໃນ ການຮື້ຖອນ ຫຼື ຕິດຕັ້ງຄືນຂອງຊັບສິນດັ່ງກ່າວ ຫຼື ສະຖານທີ່ຕັ້ງ ຫັກສ່ວນຫຼຸດຈູງໃຈໃຫ້ເຊົ່າທີ່ໄດ້ຮັບ.

2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

2.14 ສັນຍາເຊົ່າ (ຕໍ່)

2.14.1. ສິດນຳໃຊ້ຊັບສິນ (ຕໍ່)

ໄລຍະເວລາຂອງການເຊົ່າລວມທັງໄລຍະເວລາທີ່ຄອບຄຸມທາງເລືອກ ໃນການຕໍ່ເວລາຖ້າທະນາຄານມີຄວາມເຊື່ອທີ່ແນ່ນອນຢ່າງສົມເຫດສົມຜົນໃນເລືອກທາງເລືອກດັ່ງກ່າວ. ເວັ້ນເສຍແຕ່ວ່າທະນາຄານມີຄວາມເຊື່ອທີ່ແນ່ນອນທີ່ຈະມີສິດເປັນເຈົ້າຂອງຊັບສິນທີ່ເຊົ່າໃນວັນທີສິ້ນສຸດຂອງສັນຍາເຊົ່າ, ສິດໃນການນຳໃຊ້ຊັບສິນທີ່ຖືກຮັບຮູ້ແມ່ນຖືກຫັກຄ່າເສື່ອມໂດຍວິທີເສັ້ນຊື່ຕາມອາຍຸການນຳໃຊ້ທີ່ສັ້ນກວ່າອາຍຸການນຳໃຊ້ທີ່ຄາດຄະເນ ແລະ ອາຍຸສັນຍາເຊົ່າ. ສິດໃນການນຳໃຊ້ຊັບສິນແມ່ນຈະຖືກຄິດໄລ່ການເສື່ອມຄ່າ.

2.14.2 ໜີ້ສິນຕາມສັນຍາເຊົ່າ

ໃນວັນທີ ທີ່ເລີ່ມຕົ້ນຂອງການເຊົ່າ, ທະນາຄານໄດ້ຮັບຮູ້ ໜີ້ສິນທີ່ເກີດຈາກການເຊົ່າຖືກຕີມູນຄ່າຕາມມູນຄ່າປັດຈຸບັນຂອງການຈ່າຍຄ່າເຊົ່າຕາມໄລຍະເວລາຂອງການເຊົ່າ. ການຈ່າຍຄ່າເຊົ່າແມ່ນລວມເຖິງການຈ່າຍແບບຄົງທີ່ (ລວມທັງການຈ່າຍເປັນກຳມະສິດ) ຫັກລົບໃຫ້ລາຍຮັບທີ່ໄດ້ຈາກການເຊົ່າ, ການຈ່າຍຄ່າເຊົ່າຜັນແປ ເຊິ່ງຂຶ້ນກັບດັດສະນີ ຫຼື ອັດຕາ, ແລະ ມູນຄ່າຄາດຄະເນວ່າຈະຈ່າຍພາຍໃຕ້ການຄ້ຳປະກັນມູນຄ່າທີ່ເຫຼືອ. ການຈ່າຍຄ່າເຊົ່າລວມເຖິງລາຄາການໃຊ້ສິດຂອງທາງເລືອກໃນການຊື້ທີ່ສົມເຫດສົມຜົນທີ່ທະນາຄານຈະຕ້ອງໃຊ້ ແລະ ການຈ່າຍຄ່າປັບໃໝສຳລັບການຍົກເລີກສັນຍາຫາກໄລຍະເວລາການເຊົ່າສະທ້ອນໃຫ້ເຫັນເຖິງການໃຊ້ສິດຂອງທະນາຄານໃນການຍົກເລີກ. ຄ່າເຊົ່າຜັນແປທີ່ບໍ່ຂຶ້ນກັບດັດສະນີ ຫຼື ອັດຕາ ຈະຖືກຮັບຮູ້ເປັນຄ່າໃຊ້ຈ່າຍໃນຊ່ວງເວລາທີ່ເຫດການ ຫຼື ເງື່ອນໄຂທີ່ເຮັດໃຫ້ເກີດມີການຊຳລະ.

ໃນການຄິດໄລ່ມູນຄ່າປັດຈຸບັນຂອງຄ່າເຊົ່າ, ທະນາຄານນຳໃຊ້ອັດຕາດອກເບ້ຍເງິນກູ້ຢືມສ່ວນເພີ່ມໃນມື້ທີ່ເລີ່ມການເຊົ່າ ຖ້າຫາກວ່າອັດຕາດອກເບ້ຍໃນການເຊົ່າບໍ່ສາມາດຫາໄດ້ໂດຍງ່າຍ. ຫຼັງຈາກມື້ທີ່ເລີ່ມການເຊົ່າ, ມູນຄ່າຂອງໜີ້ສິນທີ່ເກີດຈາກການເຊົ່າແມ່ນຖືກເພີ່ມຂຶ້ນຕາມການເພີ່ມຂຶ້ນຂອງດອກເບ້ຍ ແລະ ຫຼຸດລົງສຳລັບຄ່າເຊົ່າທີ່ຕ້ອງຈ່າຍ. ນອກຈາກນີ້ ມູນຄ່າຕາມບັນຊີຂອງໜີ້ສິນທີ່ເກີດຈາກການເຊົ່າຈະຖືກຮັບຮູ້ ກໍຕໍ່ເມື່ອມີການປ່ຽນແປງໃນສ່ວນຂອງໄລຍະເວລາຂອງການຈ່າຍຄ່າເຊົ່າແບບຄົງທີ່ ທີ່ມີເນື້ອຫາສຳຄັນ ຫຼື ການປ່ຽນແປງທາງດ້ານການປະເມີນເພື່ອຊື້ຊັບສິນ.

2.14.3 ການເຊົ່າຊັບສິນໄລຍະສັ້ນ ແລະ ການເຊົ່າຊັບສິນທີ່ມີມູນຄ່າຕ່ຳ

ທະນາຄານນຳໃຊ້ການຍົກເວັ້ນການຮັບຮູ້ ການເຊົ່າໄລຍະສັ້ນທີ່ມີໄລຍະເວລາ 12 ເດືອນ ຫຼື ໜ້ອຍກວ່າ ນັບແຕ່ມື້ເລີ່ມຕົ້ນ ແລະ ບໍ່ມີຕົວເລືອກໃນການຊື້. ນອກຈາກນີ້ ຍັງໃຊ້ການຍົກເວັ້ນການຮັບຮູ້ ການເຊົ່າຊັບສິນທີ່ມີມູນຄ່າຕ່ຳ ມາເປັນການເຊົ່າຊັບສິນທີ່ຖືກພິຈາລະນາໃຫ້ເປັນມູນຄ່າຕ່ຳ. ການຈ່າຍຄ່າເຊົ່າ ສຳລັບການເຊົ່າທີ່ມີໄລຍະສັ້ນ ແລະ ການເຊົ່າຊັບສິນທີ່ມີມູນຄ່າຕ່ຳ ແມ່ນຖືກຮັບຮູ້ເປັນຄ່າໃຊ້ຈ່າຍຕາມວິທີເສັ້ນຊື່ຕາມອາຍຸສັນຍາເຊົ່າ.

2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

2.15 ຜົນປະໂຫຍດຂອງພະນັກງານ

ຜົນປະໂຫຍດພາຍຫຼັງອອກການ

ຜົນປະໂຫຍດພາຍຫຼັງອອກການ ຈະຈ່າຍໃຫ້ແກ່ພະນັກງານທີ່ກະສຽນອາຍຸຂອງພະນັກງານຂອງທະນາຄານ ເມື່ອເວລາທີ່ກະສຽນອາຍຸ ໂດຍເອົາຈຳນວນວັນ ເທົ່າກັບ (ເງິນເດືອນພື້ນຖານຄັ້ງລ່າສຸດ + ຄ່າແຮງງານ + 25% ຂອງເງິນເບ້ຍລ້ຽງ (ຖ້າມີ) + 25% ຂອງຜົນປະໂຫຍດອື່ນໆ) x 1,5 x ປີການເຮັດວຽກ.

ກອງທຶນເພື່ອຜົນປະໂຫຍດພາຍຫຼັງອອກການ ແມ່ນມາຈາກ:

(i) ຄັງສຳຮອງກະສຽນອາຍຸທີ່ຮັບຈາກພະນັກງານ ເຊິ່ງທະນາຄານໄດ້ຫັກເງິນເດືອນຂອງພະນັກງານ (5,5%) ຂອງ ຈຳນວນເງິນ (ເທົ່າກັບເງິນເດືອນພື້ນຖານ + ຄ່າແຮງງານ + 25% ຂອງເງິນເບ້ຍລ້ຽງ + 25% ຂອງ (ຜົນປະໂຫຍດອື່ນໆ); ແລະ
(ii) ເງິນສົມທົບຈາກທະນາຄານເປັນລາຍເດືອນ ເຊິ່ງເທົ່າກັບ 6% ຂອງຈຳນວນເງິນ (ເທົ່າກັບ ເງິນເດືອນພື້ນຖານ + ຄ່າແຮງງານ + 25% ຂອງເງິນເບ້ຍລ້ຽງ + 25% ຂອງຜົນປະໂຫຍດອື່ນໆ);

ທະນາຄານໄດ້ບັນທຶກເງິນສົມທົບເປັນ 'ເງິນເດືອນແລະຄ່າໃຊ້ຈ່າຍພະນັກງານອື່ນໆ'ເຂົ້າໃນໃບລາຍງານຜົນການດຳເນີນງານຕາມຫຼັກເກນຄົງຄ້າງ.

ໃນເດືອນ ຕຸລາ ປີ 2022, ທາງທະນາຄານໄດ້ມີເຂົ້າຮ່ວມກອງທຶນປະກັນສັງຄົມ ໂດຍທາງທະນາຄານຕ້ອງຈ່າຍເງິນສົມທົບໃນອັດຕາ 6% ຂອງເງິນເດືອນພື້ນຖານຕໍ່ເດືອນເຂົ້າກອງທຶນປະກັນສັງຄົມ ແລະທະນາຄານຍັງຄົງຈ່າຍເງິນຜົນປະໂຫຍດພາຍຫຼັງອອກການຕາມທີ່ກ່າວໄວ້ຂ້າງເທິງ.

ໃນເດືອນ ເມສາ 2023, ທະນາຄານໄດ້ປະຕິບັດລະບຽບວ່າດ້ວຍສະຫວັດດີການຂອງພະນັກງານສະບັບໃໝ່ ເຊິ່ງໄດ້ແບ່ງ ຜົນປະໂຫຍດພາຍຫຼັງອອກການ ຈະຈ່າຍໃຫ້ແກ່ພະນັກງານທີ່ກະສຽນອາຍຸອອກເປັນ 2 ກຸ່ມຄື: 1) ພະນັກງານທີ່ໄດ້ຮັບການຈ້າງງານກ່ອນ ເດືອນ ຕຸລາ 2022, ທະນາຄານຈະຍັງໃຊ້ວິທີການຄິດໄລ່ຜົນປະໂຫຍດພາຍຫຼັງອອກການແບບເດີມ ຫັກດ້ວຍ ເງິນບຳເນັດ ຫຼື ເງິນບຳນານ (ເງິນບຳນານສະເພາະຜູ້ທີ່ໄດ້ມອບເງິນສົມທົບເຂົ້າກອງທຶນປະກັນສັງຄົມແຕ່ 180 ເດືອນຂຶ້ນໄປ) ຈ່າຍໂດຍອົງການປະກັນສັງຄົມ, 2) ພະນັກງານທີ່ໄດ້ຮັບການຈ້າງງານຫຼັງຈາກ ເດືອນ ຕຸລາ 2022 ຈະໄດ້ຮັບເງິນອຸດໜູນບຳເນັດ ຫຼື ບຳນານອີງຕາມລະບຽບຂອງອົງການປະກັນສັງຄົມ.

ພາລະຜູກພັນກ່ຽວກັບຜົນປະໂຫຍດຂອງພະນັກງານ ຄິດໄລ່ເປັນລາຍປີໂດຍຜູ້ບໍລິຫານໃຊ້ວິທີຄິດໄລ່ແບບສ່ວນຫຼຸດແຕ່ລະຫົວໜ່ວຍ ມູນຄ່າປັດຈຸບັນສຸດທ້າຍຂອງພາລະຜູກພັນຜົນປະໂຫຍດຂອງພະນັກງານ ຖືກຄິດໄລ່ໂດຍນຳໃຊ້ສ່ວນຫຼຸດຂອງກະແສເງິນສົດໃນອະນາຄົດທີ່ຄາດການໄວ້ ໂດຍໃຊ້ອັດຕາຜົນຕອບແທນທາງຕະຫຼາດຂອງພັນທະບັດລັດຖະບານທີ່ສອດຄ່ອງກັບເວລາທີ່ຄາດການໄວ້ ແລະ ສະກຸນເງິນຂອງກະແສເງິນສົດໄຫຼອອກທີ່ຄາດການໄວ້.

ຜົນປະໂຫຍດຫລັງອອກການ ແມ່ນຈະຖືກຈ່າຍໃຫ້ພະນັກງານທະນາຄານ ນະເວລາກະສຽນຈາກ:

(i) ຄັງສຳຮອງເງິນບຳເນັດ ສົມທົບໂດຍພະນັກງານ, ສຳລັບທະນາຄານຫັກຈາກເງິນເດືອນພື້ນຖານຂອງພະນັກງານທຸກໆເດືອນ, (ອັດຕາຄັງແຮເງິນບຳເນັດທີ່ໄດ້ນຳໃຊ້ໃນປະຈຸບັນທີ່ຫັກໄວ້ແມ່ນ 8,00%) ແລະ ທະນາຄານໄດ້ບັນທຶກເປັນ "ໜີ້ສິນອື່ນໆ" ໃນໃບລາຍງານຖານະການເງິນສະເພາະກິດຈະການ;
(ii) ການສົມທົບທຶນຂອງທະນາຄານແມ່ນເທົ່າທຽມກັບ ຈຳນວນເດືອນເຮັດວຽກຂອງພະນັກງານກັບທະນາຄານ ຄູນໃຫ້ 15,00% ຂອງເງິນເດືອນລ້າສຸດ. ທະນາຄານບັນທຶກ ເງິນສົມທົບດັ່ງກ່າວເປັນ 'ເງິນເດືອນ ແລະ ລາຍຈ່າຍອື່ນໆຂອງພະນັກງານ'ເຂົ້າໃນໃບລາຍງານຜົນການດຳເນີນງານສະເພາະກິດຈະການ ເມື່ອລາຍຈ່າຍເຫຼົ່ານັ້ນໄດ້ຮັບການຊຳລະ.

2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

2.15 ຜົນປະໂຫຍດຂອງພະນັກງານ (ຕໍ່)

ຜົນປະໂຫຍດຈາກການເລີກຈ້າງ

ອີງຕາມມາດຕາ 82 ຂອງກົດໝາຍແຮງງານສະບັບປັບປຸງ ເລກທີ 43/ສພຊ ອອກໂດຍປະທານປະເທດແຫ່ງ ສປປ ລາວ ລົງວັນທີ 28 ມັງກອນ 2014, ທະນາຄານມີພັນທະຈ່າຍຊົດເຊີຍໃຫ້ແກ່ພະນັກງານຜູ້ທີ່ລາອອກອີງຕາມເງື່ອນໄຂລຸ່ມນີ້:

- ກໍລະນີພະນັກງານຂາດທັກສະຄວາມຊຳນິຊຳນານ ຫຼື ມີສຸຂະພາບບໍ່ແຂງແຮງ ແລະ ບໍ່ສາມາດສືບຕໍ່ເຮັດ ວຽກໄດ້;
- ກໍລະນີທະນາຄານພິຈາລະນາວ່າຈຳເປັນຕ້ອງຫຼຸດພະນັກງານ ເພື່ອປັບປຸງການເຮັດວຽກພາຍໃນອົງກອນ

ສຳລັບການຍົກເລີກສັນຍາຈ້າງງານໃນຂົງເຂດທີ່ໄດ້ກ່າວມາຂ້າງເທິງນັ້ນ, ນາຍຈ້າງຕ້ອງຈ່າຍເງິນເບ້ຍລ້ຽງໃຫ້ພະນັກງານ ໂດຍອີງໃສ່ພື້ນຖານການຄິດໄລ່ 10% ຂອງເງິນເດືອນພື້ນຖານກ່ອນການເລີກຈ້າງ.

ໃນວັນທີ 31 ທັນວາ 2023, ບໍ່ມີພະນັກງານທະນາຄານຖືກຢຸດຈ້າງຕາມເງື່ອນໄຂທີ່ລະບຸໄວ້ຂ້າງເທິງ. ດັ່ງນັ້ນ ທະນາຄານບໍ່ ໄດ້ຫັກຄັງແຮສຳລັບການຍົກເລີກການຈ້າງດັ່ງກ່າວໃນເອກະສານລາຍງານການເງິນ.

2.16 ເງິນແຮ

ເງິນແຮ ຈະຖືກຮັບຮູ້ກໍຕໍ່ເມື່ອທະນາຄານມີພັນທະ (ທາງດ້ານກົດໝາຍ ຫຼື ຕາມການຕີກລົງ) ເນື່ອງມາ ຈາກເຫດການທີ່ ຜ່ານມາ ແລະ ມີຄວາມເປັນໄປໄດ້ວ່າຈະມີລາຍຈ່າຍ ເພື່ອຊຳລະສະສາງໜີ້ສິນທີ່ອາດຈະເກີດຂຶ້ນ ແລະ ມູນຄ່າຄາດຄະເນ ດັ່ງກ່າວຕ້ອງເຊື່ອຖືໄດ້. ໃນເວລາທີ່ຜົນກະທົບຂອງມູນຄ່າເງິນເວລາ, ທະນາຄານກຳນົດລະດັບເງິນແຮດ້ວຍວິທີຄິດໄລ່ ອັດຕາສ່ວນຫຼຸດກະແສເງິນສົດທີ່ຄາດວ່າຈະໄດ້ຮັບ ໂດຍອັດຕາກ່ອນການພາສີ ເຊິ່ງແມ່ນອັດຕາການປັດຈຸບັນທີ່ກຳນົດໄວ້ ສະເພາະກັບໜີ້ສິນ. ລາຍຈ່າຍທີ່ກ່ຽວຂ້ອງກັບຄັງແຮຖືກລາຍງານໃນໃບລາຍງານຜົນໄດ້ຮັບສັງລວມພາຍຫຼັງໄດ້ຮັບເງິນຄືນ.

2.17 ອາກອນກຳໄລ

ອາກອນພາຍໃນປີ

ຊັບສິນ ແລະ ໜີ້ສິນອາກອນພາຍໃນໄລຍະ ສຳລັບປີປະຈຸບັນ ແລະ ປີກ່ອນ ແມ່ນຖືກຕີມູນຄ່າຕາມຈຳນວນທີ່ຄາດວ່າຈະ ເກັບຄືນ ຫຼື ຈ່າຍໃຫ້ກົມສ່ວຍສາອາກອນ. ອັດຕາອາກອນ ແລະ ກົດໝາຍສ່ວຍສາອາກອນທີ່ຖືກນຳໃຊ້ຄິດໄລ່ອາກອນ ແມ່ນມີຜົນສັກສິດນຳໃຊ້ໃນມື້ສ້າງໃບລາຍງານຖານະການເງິນ ພາຍໃນປະເທດທີ່ທະນາຄານດຳເນີນທຸລະກິດ ແລະ ສ້າງລາຍຮັບທີ່ຕ້ອງເສຍອາກອນ.

ອາກອນລາຍໄດ້ພາຍໃນໄລຍະທີ່ກ່ຽວຂ້ອງກັບລາຍການທີ່ບັນທຶກໃນບັນຊີທຶນແມ່ນຖືກຮັບຮູ້ໃນທຶນເຈົ້າຂອງ ແລະ ບໍ່ໄດ້ມີ ການບັນທຶກໃນບັນຊີກຳໄລ ຫຼື ຂາດທຶນ, ຜູ້ບໍລິຫານໄດ້ມີການປະເມີນສະຖານະການປະຕິບັດອາກອນເປັນແຕ່ລະໄລຍະ ໂດຍອີງຕາມກົດລະບຽບທາງດ້ານອາກອນ ເພື່ອການຕີລາຄາຄືນ ແລະ ສ້າງຄັງແຮໃນເວລາທີ່ເໝາະສົມ.

ອາກອນເບື້ອນຊຳລະ

ອາກອນຊັບສິນເບື້ອນຊຳລະແມ່ນຖືກຄິດໄລ່ ຈາກສ່ວນຜິດຊົ່ວຄາວ ຕາມມື້ທີ່ອອກບົດລາຍງານ ລະຫວ່າງຊັບສິນ ແລະ ໜີ້ສິນອາກອນ ແລະ ຍອດຍົກມາສຳລັບການລາຍງານການເງິນ. ອາກອນໜີ້ສິນເບື້ອນຊຳລະແມ່ນຖືກຮັບຮູ້ເປັນສ່ວນຕ່າງ ອາກອນຊົ່ວຄາວ, ຍົກເວັ້ນເມື່ອອາກອນໜີ້ສິນເບື້ອນຊຳລະເກີດຂຶ້ນຈາກການຮັບຮູ້ເບື້ອງຕົ້ນຂອງຊັບສິນ ຫຼື ໜີ້ສິນ ໃນ ການເຄື່ອນໄຫວທີ່ບໍ່ແມ່ນການສັງລວມກິດຈະການ ແລະ ໃນເວລານັ້ນການເຄື່ອນໄຫວບໍ່ມີຜົນກະທົບຕໍ່ກຳໄລທາງດ້ານ ບັນຊີ ຫຼື ກຳໄລ ແລະ ຂາດທຶນທີ່ຖືກອາກອນ.

2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

2.17 ອາກອນກຳໄລ (ຕໍ່)

ຍອດຍົກມາຂອງອາກອນຊັບສິນເຍື່ອນຊຳລະ ແລະ ອາກອນໜີ້ສິນເຍື່ອນຊຳລະແມ່ນຖືກກວດກາຄືນໃນມື້ສ້າງບົດລາຍງານ ແລະ ຫຼຸດລົງ ຖ້າມີຄວາມເປັນໄປໄດ້ວ່າຈະບໍ່ມີກຳໄລທີ່ຖືກເສຍອາກອນທີ່ອະນຸຍາດໃຫ້ ຫຼື ພາກສ່ວນໜຶ່ງຂອງອາກອນຊັບສິນເຍື່ອນຊຳລະ ແລະອາກອນໜີ້ສິນເຍື່ອນຊຳລະຈະຖືກອະນຸຍາດໃຫ້ຫັກ. ອາກອນຊັບສິນເຍື່ອນຊຳລະທີ່ບໍ່ຖືກຮັບຮູ້ແມ່ນຖືກປະເມີນຄືນໃນມື້ສ້າງບົດລາຍງານ ແລະ ຖືກຮັບຮູ້ເມື່ອມີຄວາມເປັນໄປໄດ້ວ່າກຳໄລທີ່ຖືກເສຍອາກອນໃນອະນາຄົດ ຈະອະນຸຍາດໃຫ້ອາກອນຊັບສິນເຍື່ອນຊຳລະສາມາດຫັກອອກໄດ້.

ອາກອນຊັບສິນເຍື່ອນຊຳລະ ແລະ ອາກອນໜີ້ສິນເຍື່ອນຊຳລະແມ່ນຖືກໄລ່ລຽງຕາມອັດຕາອາກອນທີ່ຄາດວ່າຈະນຳໄປໃຊ້ພາຍໃນປີ ເມື່ອຊັບສິນຖືກຮັບຮູ້ມູນຄ່າຕົວຈິງ ຫຼື ໜີ້ສິນຖືກສະສາງ ອີງຕາມອັດຕາອາກອນ (ແລະ ກົດໝາຍວ່າດ້ວຍ ສ່ວຍສາອາກອນ) ທີ່ປະກາດນຳໃຊ້ກ່ອນໜ້າ ຫຼື ປະກາດໃຊ້ນະວັນທີໃບລາຍງານຖານະການເງິນ.

ອາກອນໃນປະຈຸບັນ ແລະ ອາກອນເຍື່ອນຊຳລະຖືກຮັບຮູ້ໃນ ໃນກຳໄລ ຫຼື ຂາດທຶນ, ຍົກເວັ້ນໃນສ່ວນທີ່ກ່ຽວຂ້ອງກັບລາຍການທີ່ຮັບຮູ້ ໃນ ໃບລາຍງານຜົນໄດ້ຮັບລວມ ຫຼື ໂດຍກົງໃນທຶນ. ໃນກໍລະນີນີ້, ອາກອນຍັງຖືກຮັບຮູ້ໃນໃບລາຍງານຜົນໄດ້ຮັບອື່ນ ຫຼື ໂດຍກົງໃນທຶນ ຕາມລຳດັບ.

ອາກອນຊັບສິນເຍື່ອນຊຳລະ ແລະ ອາກອນໜີ້ສິນເຍື່ອນຊຳລະ ຈະຖືກສະແດງຫັກລ້າງກັນ ເມື່ອມີສິດຕາມກົດໝາຍທີ່ຈະນຳອາກອນຊັບສິນເຍື່ອນຊຳລະ ແລະ ອາກອນໜີ້ສິນເຍື່ອນຊຳລະ ມາຫັກລ້າງກັນກັບໜີ້ຕ້ອງສົ່ງອາກອນຂອງປີປະຈຸບັນ ແລະ ທັ້ງອາກອນຊັບສິນ ແລະ ໜີ້ສິນເຍື່ອນຊຳລະກ່ຽວຂ້ອງກັບອາກອນກຳໄລທີ່ຖືກປະເມີນໂດຍໜ່ວຍງານສ່ວຍສາອາກອນ ດຽວກັນເຊິ່ງຕັ້ງໃຈຈະຈ່າຍໜີ້ຕ້ອງຮັບ ແລະ ໜີ້ຕ້ອງສົ່ງອາກອນຂອງປີປະຈຸບັນ ໂດຍຍອດສຸດທິ.

2.18 ຄັງສະສົມຕາມລະບຽບການ

ອີງຕາມຂໍ້ກຳນົດຂອງກົດໝາຍວ່າດ້ວຍທະນາຄານທຸລະກິດສະບັບລົງວັນທີ 7 ທັນວາ 2018, ທະນາຄານທຸລະກິດ ຈຳເປັນຕ້ອງໄດ້ແບ່ງກຳໄລສຸດທິທີ່ເໝາະສົມເພື່ອປະຕິບັດຕາມການສຳຮອງ:

- ກອງທຶນສຳຮອງຕາມລະບຽບການ
- ກອງທຶນຂະຫຍາຍທຸລະກິດ ແລະ ກອງທຶນອື່ນໆ

ອີງຕາມມາດຕາ 156, ວ່າກົດໝາຍວິສາຫະກິດສະບັບລົງວັນທີ 26 ທັນວາ 2013, ທະນາຄານ ຕ້ອງແບ່ງ 10% ຂອງ ກຳໄລ ຫຼັງຈາກຫັກອາກອນໃນແຕ່ລະປີເຂົ້າໃນກອງທຶນສຳຮອງທີ່ກຳນົດໄວ້. ເມື່ອກອງທຶນສຳຮອງນີ້ຄົບເຖິງ 50% ຂອງ ທຶນຈົດທະບຽນ, ທະນາຄານອາດຈະຢຸດການສຳຮອງດັ່ງກ່າວ, ເວັ້ນເສຍແຕ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ. ທະນາຄານ ຈະບັນທຶກຫຼັງຈາກໄດ້ຮັບການອະນຸມັດຈາກກອງປະຊຸມຜູ້ຖືຮຸ້ນທົ່ວໄປ.

ກອງທຶນຂະຫຍາຍທຸລະກິດ ແລະ ກອງທຶນອື່ນໆຈະຖືກສ້າງຂຶ້ນຕາມການຕັດສິນໃຈຂອງສະພາບໍລິຫານ.

3. ການຄາດຄະເນທີ່ສຳຄັນທາງບັນຊີ ແລະ ການຕັ້ງຂໍ້ສົມມຸດຖານ

ໃນການກະກຽມເອກະສານລາຍງານການເງິນຂອງທະນາຄານ, ຮຽກຮ້ອງໃຫ້ຄະນະບໍລິຫານຕ້ອງມີການພິຈາລະນາ, ຕີລາຄາ ແລະ ການປະເມີນຜົນກະທົບຕໍ່ຈຳນວນລາຍຮັບ, ລາຍຈ່າຍ, ຊັບສິນ ແລະ ໜີ້ສິນ ແລະ ການເປີດເຜີຍທີ່ກ່ຽວຂ້ອງ, ລວມທັງ ການເປີດເຜີຍໜີ້ສິນທີ່ອາດເກີດຂຶ້ນ. ຄວາມບໍ່ແນ່ນອນໃນການປະເມີນ ແລະ ການຕີລາຄາ ອາດຈະເຮັດໃຫ້ເກີດມີຄວາມ ຮຽກຮ້ອງຕ້ອງການດ້ານການດັດແກ້ມູນຄ່າຂອງຍອດຍົກມາຂອງຊັບສິນ ແລະ ໜີ້ສິນທີ່ຈະສົ່ງຜົນກະທົບໃນອະນາຄົດ.

ໃນຂະບວນການຂອງການຈັດຕັ້ງປະຕິບັດນະໂຍບາຍການບັນຊີຂອງທະນາຄານ, ຄະນະບໍລິຫານໄດ້ເຮັດການປະເມີນ ແລະ ສົມມຸດຖານດັ່ງຕໍ່ໄປນີ້ ເຊິ່ງກ່ຽວຂ້ອງກັບອະນາຄົດ ແລະ ຄວາມບໍ່ແນ່ນອນການຄາດຄະເນໃນວັນທີລາຍງານ, ເຊິ່ງມີຄວາມສ່ຽງ ຫຼາຍ ແລະ ມີຜົນຕໍ່ການດັດແກ້ທີ່ສຳຄັນໃນຍອດທີ່ບັນທຶກບັນຊີຂອງຊັບສິນ ແລະ ໜີ້ສິນ ພາຍໃນໄລຍະການເງິນຕໍ່ໜ້າ. ສະພາບການ ແລະ ສົມມຸດຖານທີ່ມີຢູ່ກ່ຽວກັບການພັດທະນາໃນອະນາຄົດອາດຈະມີການປ່ຽນແປງເນື່ອງມາຈາກສະຖານະການ ທີ່ເໜືອການຄວບຄຸມຂອງທະນາຄານ ແລະ ມັນຖືກສະທ້ອນໃນຂໍ້ສົມມຸດຖານໃນເວລາທີ່ເກີດຂຶ້ນ. ລາຍການທີ່ມີຜົນກະທົບທີ່ ສຳຄັນທີ່ສຸດໃນຍອດທີ່ຖືກຮັບຮູ້ໃນໃບລາຍງານການເງິນ ພ້ອມກັບການປະເມີນການບໍລິຫານທີ່ສຳຄັນ ແລະ/ຫຼື ການຄາດຄະເນ ແມ່ນຖືກປຽບທຽບຂ້າງລຸ່ມນີ້

3.1 ວິທີການຄິດໄລ່ອັດຕາດອກເບ້ຍທີ່ແທ້ຈິງ

ວິທີອັດຕາດອກເບ້ຍທີ່ແທ້ຈິງຂອງທະນາຄານ, ຮັບຮູ້ດອກເບ້ຍພາຍໃຕ້ອັດຕາຂອງເງິນໄດ້ຮັບຄືນ ທີ່ສາມາດກຳນົດໄດ້ຢ່າງ ຖືກຕ້ອງທີ່ສຸດໂດຍນຳໃຊ້ອັດຕາຄົງທີ່ ຕາມອາຍຸຂອງເງິນກູ້ ແລະ ເງິນຝາກ ແລະ ຮັບຮູ້ຜົນກະທົບຂອງອັດຕາດອກເບ້ຍ ທີ່ອາດຈະແຕກຕ່າງໃນແຕ່ລະຂັ້ນຕອນ ແລະ ລັກສະນະອື່ນໆ ຈາກວົງຈອນອາຍຸຂອງແຕ່ລະຜະລິດຕະພັນ (ເຊັ່ນ: ການ ຈ່າຍລ່ວງໜ້າ, ຄ່າປັບໄໝ, ດອກເບ້ຍ ແລະ ຄ່າທຳນຽມອື່ນໆ). ການຄາດຄະເນນີ້ໄດ້ອີງໃສ່ລັກສະນະ, ອົງປະກອບຂອງ ການຕັດສິນໃຈ ກ່ຽວກັບລັກສະນະທີ່ຄາດຄະເນໄວ້ ແລະ ວົງຈອນຊີວິດຂອງເຄື່ອງມື, ເນື່ອງຈາກການປ່ຽນແປງຂອງລາຍ ຮັບ/ລາຍຈ່າຍອື່ນໆເປັນສ່ວນສຳຄັນຂອງເຄື່ອງມື.

3.2 ການຂາດທຶນຈາກຄ່າເສື່ອມຂອງເງິນໃຫ້ກູ້ຢືມແກ່ລູກຄ້າ

ທະນາຄານໄດ້ມີການທົບທວນເງິນໃຫ້ກູ້ຢືມທີ່ສຳຄັນເປັນແຕ່ລະບຸກຄົນຕາມແຕ່ລະວັນທີລາຍງານ ເພື່ອປະເມີນວ່າການ ຂາດທຶນຈາກຄ່າເສື່ອມ ຄວນຖືກບັນທຶກລົງໃນໃບລາຍງານຜົນໄດ້ຮັບ ຫຼື ບໍ່.

ວິທີການປະເມີນຄ່າເສື່ອມຂອງທະນາຄານສຳລັບຊັບສິນທີ່ບັນທຶກໂດຍວິທີຫັກລົບຕົ້ນທຶນ ເປັນຜົນໃຫ້ມີການບັນທຶກ ເງິນແຮສຳລັບ:

- ການຂາດທຶນຈາກການເສື່ອມມູນຄ່າແບບລາຍບຸກຄົນສະເພາະຕາມຄວາມສຳຄັນ ຫຼື ສະເພາະລາຍການເຈາະຈົງ;

  ການປະມານການນີ້ຈຳເປັນຕ້ອງໃຊ້ການຕັດສິນໃຈຂອງຝ່າຍບໍລິຫານ ໂດຍສະເພາະສຳລັບການປະມານຈຳນວນເງິນ ແລະໄລຍະເວລາຂອງກະແສເງິນສົດໃນອະນາຄົດ ແລະມູນຄ່າຫຼັກຊັບຄ້ຳປະກັນໃນການພິຈາລະນາການຂາດທຶນ ຈາກການເສື່ອມມູນຄ່າຂອງແຕ່ລະບຸກຄົນ. ການປະມານການນີ້ໄດ້ມາຈາກຫຼາຍໆປັດໃຈ ໂດຍການປ່ຽນແປງນີ້ ອາດສົ່ງຜົນໃຫ້ເກີດຄວາມແຕກຕ່າງຂອງປະມານການຄ່າເສື່ອມ

- ການເສື່ອມມູນຄ່າໂດຍລວມ

  ການຂາດທຶນສຳລັບຊັບສິນທາງການເງິນທີ່ເປັນໄປຕາມຂໍ້ສົມມຸດຕິຖານ ກ່ຽວກັບຄວາມສ່ຽງຈາກການຜິດນັດ ຊຳລະໜີ້ ແລະອັດຕາການສູນເສຍ. ທະນາຄານອາດຈະຕ້ອງໃຊ້ການຕັດສິນໃຈໃນການຕັ້ງຂໍ້ສົມມຸດຕິຖານ ແລະ ເລືອກປັດໄຈທີ່ໃຊ້ໃນການຄຳນວນການເສື່ອມມູນຄ່າໂດຍພິຈາລະນາຈາກປະຫວັດໃນອະດີດຂອງທະນາຄານ ແລະ ສະພາບຕະຫຼາດທີ່ມີຢູ່ໃນວັນສິ້ນຮອບໄລຍະເວລາລາຍງານໃນແຕ່ລະຮອບ.

3. ການຄາດຄະເນທີ່ສຳຄັນທາງບັນຊີ ແລະ ການຕັ້ງຂໍ້ສົມມຸດຖານ (ຕໍ່)

3.3 ການເສື່ອມມູນຄ່າຂອງຊັບສິນມີໄວ້ເພື່ອຂາຍ

ທະນາຄານທົບທວນຄືນຕາສານໜີ້ຂອງຕົນທີ່ຈັດປະເພດເປັນການລົງທຶນທີ່ມີໄວ້ເພື່ອຂາຍໃນແຕ່ລະວັນທີ່ລາຍງານເພື່ອປະເມີນວ່າພວກມັນໄດ້ເສື່ອມມູນຄ່າ ຫຼື ບໍ່.

ການປະເມີນຜົນດັ່ງກ່າວນີ້, ລວມທັງການຄາດຄະເນກະແສເງິນສົດໃນອະນາຄົດ ແລະ ຂໍ້ມູນທີ່ປະກອບເຂົ້າອື່ນໆເຂົ້າໃນຮູບແບບກະແສເງິນສົດແບບສ່ວນຫຼຸດ ແລະ ໃນກໍລະນີຂອງການລົງທຶນ, ການຕີມູນຄ່າຂອງສິ່ງທີ່ເປັນ 'ທີ່ສຳຄັນທຽບຖານ' ຫຼື 'ເປັນເວລາດົນ' ແມ່ນຮຽກຮ້ອງໃຫ້ມີການຕັດສິນໃຈ. ໃນການຕັດສິນໃຈດັ່ງກ່າວນີ້, ທະນາຄານປະເມີນ, ໃນບັນດາປັດໄຈອື່ນໆ, ປະຫວັດການເຄື່ອນໄຫວຂອງລາຄາຮຸ້ນ ແລະ ໄລຍະເວລາ ແລະ ຂອບເຂດ ທີ່ມູນຄ່າຍຸຕິທຳຂອງການລົງທຶນແມ່ນຕ່ຳກວ່າຕົ້ນທຶນ.

3.4 ກຳນົດເງື່ອນໄຂສັນຍາເຊົ່າ

ການພິຈາລະນາທີ່ສຳຄັນໃນການກຳນົດໄລຍະເວລາຂອງການເຊົ່າ, ທະນາຄານຈະພິຈາລະນາທຸກໆຂໍ້ເທັດຈິງ ແລະ ສະພາບການທີ່ສ້າງແຮງຈູງໃຈທາງດ້ານເສດຖະກິດໃຫ້ໃຊ້ທາງເລືອກໃນການອາຍຸສັນຍາ, ຫຼືບໍ່ໃຊ້ທາງເລືອກໃນການຍົກເລີກສັນຍາ. ທາງເລືອກໃນການຕໍ່ອາຍຸສັນຍາ (ຫຼື ໄລຍະຫຼັງຈາກຕົວເລືອກການຍົກເລີກສັນຍາ) ແມ່ນລວມຢູ່ໃນສັນຍາການເຊົ່າເທົ່ານັ້ນຖ້າວ່າສັນຍາເຊົ່າແມ່ນມີຄວາມສົມເຫດສົມຜົນທີ່ຈະໄດ້ຮັບການຕໍ່ອາຍຸສັນຍາ (ຫຼື ບໍ່ໝົດອາຍຸ).

ສຳລັບການເຊົ່າຊັບສິນ, ປັດໃຈທີ່ກ່ຽວຂ້ອງທີ່ສຸດແມ່ນໄລຍະເວລາເຊົ່າໃນອະດີດ, ຕົ້ນທຶນ ແລະ ສະພາບເງື່ອນໄຂຂອງຊັບສິນທີ່ເຊົ່າ.

ທາງເລືອກໃນການຕໍ່ເວລາສ່ວນໃຫຍ່ໃນການເຊົ່າຫ້ອງການ ແລະ ພາຫະນະບໍ່ໄດ້ຖືກລວມເຂົ້າໃນໜີ້ສິນສັນຍາເຊົ່າ, ເພາະວ່າທະນາຄານພິຈາລະນາ i) ສະພາບເງື່ອນໄຂຂອງຊັບສິນທີ່ຕິດພັນ ແລະ / ຫຼື ii) ຕົ້ນທຶນບໍ່ມີສາລະສຳຄັນ ເພື່ອທົດແທນ ຊັບສິນທີ່ເຊົ່າ.

ໄລຍະເວລາຂອງການເຊົ່າແມ່ນຖືກປະເມີນຄືນໃໝ່ ຖ້າວ່າທາງເລືອກໜຶ່ງຖືກປະຕິບັດຕົວຈິງ (ຫຼື ບໍ່ປະຕິບັດ) ຫຼື ທະນາຄານມີພາລະຜູກພັນທີ່ຈະຕ້ອງໃຊ້ສິດ (ຫຼື ບໍ່ປະຕິບັດ). ການປະເມີນຄວາມແນ່ນອນທີ່ສົມເຫດສົມຜົນຈະຖືກປັບປຸງໃໝ່ກໍ່ຕໍ່ເມື່ອມີເຫດການສຳຄັນ ຫຼື ການປ່ຽນແປງຢ່າງມີສາລະສຳຄັນໃນສະພາບການທີ່ມີຜົນກະທົບຕໍ່ການປະເມີນນີ້ເກີດຂຶ້ນ, ແລະ ຢູ່ໃນການຄວບຄຸມຂອງທະນາຄານ.

3.5 ກຳນົດອັດຕາສ່ວນຫຼຸດສຳລັບສັນຍາເຊົ່າ

ທະນາຄານປະເມີນອັດຕາດອກເບ້ຍການກູ້ຢືມມສ່ວນເພີ່ມຂອງຜູ້ເຊົ່າ ດັ່ງນີ້

- ໃຊ້ຂໍ້ມູນທີ່ການຈັດຫາເງິນທຶນຈາກບຸກຄົນທີ່ສາມຂອງແຕ່ລະກິດຈະການທີ່ເປັນຜູ້ເຊົ່າ ແລະ ປັບປຸງຂໍ້ມູນທີ່ໄດ້ຮັບໃຫ້ແທກເໝາະກັບການປ່ຽນແປງໃນປັດໄຈທາງດ້ານການເງິນຂອງຜູ້ເຊົ່າຫາກເປັນໄປໄດ້
- ປັບປຸງສັນຍາເຊົ່າໂດຍສະເພາະເຈາະຈົງ ເຊັ່ນ ອາຍຸສັນຍາເຊົ່າ, ສະກຸນເງິນ ແລະຫຼັກປະກັນ

4. ລາຍຮັບສຸດທິຈາກດອກເບ້ຍ

	2023 ລ້ານກີບ	2022 ລ້ານກີບ
ລາຍຮັບດອກເບ້ຍທີ່ຄິດໄລ່ໂດຍນຳໃຊ້ວິທີອັດຕາດອກເບ້ຍທີ່ແທ້ຈິງຈາກ:		
ເງິນກູ້ຍືມໃຫ້ກັບລູກຄ້າ	3.118.426	2.537.667
ການລົງທຶນໃນຫຼັກຊັບ	420.810	315.734
ເງິນຝາກຢູ່ທະນາຄານອື່ນໆ	461.111	262.725
	4.000.347	**3.116.126**
ລາຍຈ່າຍດອກເບ້ຍທີ່ຄິດໄລ່ໂດຍນຳໃຊ້ວິທີອັດຕາດອກເບ້ຍທີ່ແທ້ຈິງ ສຳລັບ:		
ເງິນຝາກຈາກລູກຄ້າ	(2.012.627)	(1.604.004)
ເງິນຝາກຈາກທະນາຄານ	(249.531)	(241.239)
	(2.262.158)	**(1.845.243)**
ລາຍຮັບສຸດທິດອກເບ້ຍ	**1.738.189**	**1.270.883**

5. ລາຍຮັບສຸດທິຈາກຄ່າທຳນຽມ ແລະ ຄ່າບໍລິການ

	2023 ລ້ານກີບ	2022 ລ້ານກີບ
ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການຈາກ:		
ບໍລິການຊຳລະສະສາງ	582.628	421.069
ທຸລະກຳທາງດ້ານການເງິນ	14.963	16.493
ຄ່າທຳນຽມ ແລະ ຄ່າບໍລິການອື່ນໆ	327.442	76.256
	925.033	**513.818**
ລາຍຈ່າຍຄ່າທຳນຽມ ແລະ ຄ່າບໍລິການສຳລັບ:		
ບໍລິການຊຳລະສະສາງ	(110.122)	(57.119)
ທຸລະກຳທາງດ້ານການເງິນ	(261.705)	(92.554)
	(371.827)	**(149.673)**
ລາຍຮັບສຸດທິຈາກຄ່າທຳນຽມ ແລະ ຄ່າບໍລິການ	**553.206**	**364.145**

6. ກຳໄລສຸດທິຈາກການແລກປ່ຽນເງິນຕາຕ່າງປະເທດ

	2023 ລ້ານກີບ	2022 ລ້ານກີບ
ກຳໄລສຸດທິຈາກການຊື້ຂາຍເງິນຕາ ແລະ ການຕີມູນຄ່າລາຍການທີ່ເປັນເງິນ	15.392.519	19.843.888
ຂາດທຶນຈາກການຊື້ຂາຍເງິນຕາ ແລະ ການຕີມູນຄ່າລາຍການທີ່ເປັນເງິນ	(15.001.593)	(19.882.042)
	390.926	**(38.154)**

7. ລາຍຮັບອື່ນໆຈາກການດຳເນີນງານ

	2023 ລ້ານກີບ	2022 ລ້ານກີບ
ເກັບຄືນໜີ້ເສຍທີ່ຖືກສະສາງອອກ	429.990	79.983
ລາຍຮັບເງິນປັນຜົນ	1.918	1.918
ອື່ນໆ	14.049	39.359
	445.957	**121.260**

8. ລາຍຈ່າຍພະນັກງານ

	2023 ລ້ານກີບ	2022 ລ້ານກີບ
ເງິນເດືອນ	179.493	175.210
ເງິນບຳເນັດ ແລະ ເງິນອຸດໜູນອື່ນໆ	169.167	131.925
ຄ່າໃຊ້ຈ່າຍຜົນປະໂຫຍດຫຼັງການຈ້າງງານ	45.644	9.288
ຄ່າໃຊ້ຈ່າຍອື່ນໆຂອງພະນັກງານ	5.230	12.826
	399.534	**329.249**

9. ລາຍຈ່າຍອື່ນໆຈາກການດຳເນີນງານ

	2023 ລ້ານກີບ	2022 ລ້ານກີບ
ເບ້ຍປະກັນເງິນຝາກໃຫ້ກອງທຶນປົກປ້ອງຜູ້ຝາກເງິນ	90.619	66.506
ຄ່າສ້ອມແປງ ແລະ ຄ່າບຳລຸງຮັກສາ	32.774	23.698
ອຸປະກອນ ແລະ ເຄື່ອງໃຊ້ຫ້ອງການ	25.531	19.473
ຄ່າຝຶກອົບຮົມ, ການປະຊຸມ ແລະ ການສຳມະນາ	18.553	9.162
ສາທາລະນຸປະໂພກ	12.817	9.085
ຄ່າໂທລະຄົມມະນາຄົມ	9.466	9.435
ຄ່າປະກັນໄພ	9.416	6.885
ຄ່າໂຄສະນາ, ການຕະຫຼາດ ແລະ ການສົ່ງເສີມການຂາຍ	9.037	5.052
ຄ່າເຊົ່າ	6.759	7.533
ຄ່ານ້ຳມັນ	5.712	4.502
ຄ່າທີ່ປຶກສາ ແລະ ຄ່າທຳນຽມການບໍລິການທາງການເງິນ	1.709	2.783
ຄ່າອາກອນ ແລະ ພາສີອື່ນໆ	1.406	2.019
ລາຍຈ່າຍດອກເບ້ຍສຳລັບສັນຍາເຊົ່າ	757	1.016
ອື່ນໆ	70.415	28.114
	294.971	**195.263**

10. ເງິນສົດ ແລະ ເງິນຝາກຢູ່ທະນາຄານແຫ່ງ ສປປ ລາວ ("ທຫລ")

	2023 ລ້ານກີບ	2022 ລ້ານກີບ
ເງິນສົດໃນຄັງເປັນເງິນກີບ	2.343.586	1.836.261
ເງິນສົດໃນຄັງເປັນເງິນຕາຕ່າງປະເທດ	2.827.492	2.003.515
ຍອດເຫຼືອຢູ່ ທຫລ		
- ເງິນຝາກກະແສລາຍວັນ	15.450.480	21.205.571
- ເງິນແຮຝາກບັງຄັບ (*)	6.228.255	2.196.153
- ເງິນຝາກປະຈຳ	4.813.060	516.600
ດອກເບ້ຍຄ້າງຮັບ	21.270	28.194
	31.684.143	**27.786.294**

ເງິນຝາກຢູ່ກັບທະນາຄານແຫ່ງ ສປປ ລາວ ລວມມີບັນຊີເງິນຝາກເພື່ອການຊຳລະສະສາງ ແລະ ເງິນຝາກແຮບັງຄັບ. ເງິນຝາກປະເພດນີ້ບໍ່ມີດອກເບ້ຍ.

(*) ພາຍໃຕ້ລະບຽບການຂອງທະນາຄານກາງ, ທະນາຄານຖືກຮຽກຮ້ອງໃຫ້ຮັກສາຄັງສະສົມເງິນສົດກັບທະນາຄານກາງໃນຮູບແບບເງິນຝາກແຮບັງຄັບ, ເຊິ່ງຖືກຄິດໄລ່ 8,00% ສຳລັບສະກຸນເງິນກີບ ແລະ 10,00% ສຳລັບສະກຸນເງິນຕ່າງປະເທດ, ສອງອາທິດຕໍ່ຄັ້ງ (2022 5,00% ແລະ 5,00%) ຂອງເງິນຝາກລູກຄ້າທີ່ມີມື້ຄົບກຳນົດຕ່ຳກວ່າ 12 ເດືອນ. ພາຍໃນປີ, ທະນາຄານໄດ້ຮັກສາຍອດເງິນຝາກແຮບັງຄັບໃນມູນຄ່າທີ່ຖືກຕ້ອງຕາມລະບຽບຂອງທຫລ. ເງິນຝາກທີ່ຖືກຈຳກັດນີ້ກັບທຫລ. ແມ່ນບໍ່ສາມາດນຳໃຊ້ໃນການດຳເນີນງານປະຈຳວັນໄດ້.

11. ເງິນຝາກຢູ່ທະນາຄານອື່ນ

	2023 ລ້ານກີບ	2022 ລ້ານກີບ
ເງິນຝາກກະແສລາຍວັນ ແລະ ເງິນຝາກປະຢັດ	**11.804.977**	**7.033.415**
- ເປັນເງິນກີບ	10.945	255.257
- ເປັນເງິນຕາຕ່າງປະເທດ	11.794.032	6.778.158
ເງິນຝາກມີກຳນົດ	**10.003.341**	**4.722.038**
- ເປັນເງິນກີບ	4.042.000	3.105.000
- ເປັນເງິນຕາຕ່າງປະເທດ	5.961.341	1.617.038
ດອກເບ້ຍຄ້າງຮັບ	**156.037**	**100.266**
	21.964.355	**11.855.719**

ອັດຕາດອກເບ້ຍສຳລັບໜີ້ຕ້ອງຮັບທະນາຄານອື່ນພາຍໃນປີມີດັ່ງລຸ່ມນີ້:

	2023 % ຕໍ່ປີ	2022 % ຕໍ່ປີ
ເງິນຝາກກະແສລາຍວັນ	0,15% - 1,20%	0,15% - 1,20%
ເງິນຝາກປະຢັດ	0,07% - 2,16%	2,16%
ເງິກຝາກມີກຳນົດ	0,15% - 7,70%	2,00% - 7,50%

12. ເງິນໃຫ້ກູ້ຢືມແກ່ລູກຄ້າ

	2023 ລ້ານກີບ	2022 ລ້ານກີບ
ເງິນໃຫ້ກູ້ຢືມແກ່ລູກຄ້າ	52.198.063	42.808.801
ປະກອບມີ:		
ລົບ: ເງິນແຮສຳລັບການຂາດທຶນຈາກການເສື່ອມຄ່າ (ບົດອະທິບາຍຂໍ້ທີ 15)	(1.687.920)	(1.809.562)
ດອກເບ້ຍຄ້າງຮັບ	3.382.213	6.236.133
	53.892.356	**47.235.372**

ອັດຕາດອກເບ້ຍສຳລັບເງິນກູ້ທຸລະກິດພາຍໃນໄລຍະມີ ດັ່ງລຸ່ມນີ້:

	2023 ອັດຕາດອກເບ້ຍ % ຕໍ່ປີ	2022 ອັດຕາດອກເບ້ຍ % ຕໍ່ປີ
ເງິນກູ້ເປັນເງິນ ກີບ	3,00% - 17,00%	5,00% - 16,00%
ເງິນກູ້ເປັນເງິນ ໂດລາ	5,80% - 16,00%	4,99% - 16,00%
ເງິນກູ້ເປັນເງິນ ບາດ	6,00% - 11,50%	6,00% - 11,50%

ການວິເຄາະຖານະເງິນກູ້ຂອງລູກຄ້າຕາມສະກຸນເງິນ

	2023 ລ້ານກີບ	2022 ລ້ານກີບ
ເງິນກູ້ເປັນເງິນ ກີບ	17.840.433	12.763.474
ເງິນກູ້ເປັນເງິນ ໂດລາ	28.553.192	24.790.269
ເງິນກູ້ເປັນເງິນ ບາດ	5.804.438	5.255.058
	52.198.063	**42.808.801**

ການວິເຄາະຖານະເງິນກູ້ຂອງລູກຄ້າຕາມມື້ຄົບກຳນົດເດີມ:

	2023 ລ້ານກີບ	2022 ລ້ານກີບ
ເງິນກູ້ໄລຍະສັ້ນ	3.794.827	4.560.760
ເງິນກູ້ໄລຍະກາງ	34.227.684	24.929.587
ເງິນກູ້ໄລຍະຍາວ	14.175.552	13.318.454
	52.198.063	**42.808.801**

12. ເງິນໃຫ້ກູ້ຢືມແກ່ລູກຄ້າ (ຕໍ່)

ການວິເຄາະຖານະເງິນກູ້ຂອງລູກຄ້າສຳລັບແຕ່ລະຂະແໜງອຸດສາຫະກຳ:

	2023		2022	
	ລ້ານກີບ	**%**	**ລ້ານກີບ**	**%**
ຂະແໜງ ອຸດສາຫະກຳ	29.659.421	56,82%	23.252.832	54,32%
ຂະແໜງ ບໍລິການ	5.587.391	10,71%	5.667.984	13,24%
ຂະແໜງ ການຄ້າ	6.507.353	12,47%	4.672.093	10,91%
ຂະແໜງ ກໍ່ສ້າງ	6.354.360	12,17%	5.120.441	11,96%
ຂະແໜງ ຂົນສົ່ງ	2.095.071	4,01%	1.751.815	4,09%
ຂະແໜງ ປະກອບອັດຖະເຕັກນິກ	1.017.387	1,95%	1.755.682	4,10%
ຂະແໜງ ກະສິກຳ - ປ່າໄມ້	235.490	0,45%	80.631	0,19%
ຂະແໜງ ຫັດຖະກຳ	3.093	0,01%	2.830	0,01%
ຂະແໜງ ອື່ນໆ	738.497	1,41%	504.493	1,18%
	52.198.063	**100,00%**	**42.808.801**	**100,00%**

13 ເງິນເຜື່ອສຳລັບການຂາດທຶນຈາກການເສື່ອມຄ່າຂອງເງິນໃຫ້ກູ້ຢືມແກ່ລູກຄ້າ

ສ່ວນປ່ຽນແປງໃນເງິນເຜື່ອສຳລັບການຂາດທຶນຈາກການເສື່ອມຄ່າຂອງເງິນກູ້ໃຫ້ກູ້ຢືມແກ່ລູກຄ້າພາຍໃນທ້າຍປີ ມີດັ່ງລຸ່ມນີ້:

	2023	**2022**
	ລ້ານກີບ	**ລ້ານກີບ**
ຍອດເຫຼືອໃນອັນທີ 1 ມັງກອນ	**1.809.562**	**1.457.635**
ປ່ຽນແປງສຸດທິພາຍໃນປີ	2.098.555	912.703
ສະສາງໜີ້ຕ້ອງຮັບທວງຍາກ	(2.365.211)	(904.200)
ສ່ວນຕ່າງຈາກອັດຕາແລກປ່ຽນ	145.014	343.424
ຍອດເຫຼືອໃນອັນທີ 31 ທັນວາ	**1.687.920**	**1.809.562**

ລາຍລະອຽດເງິນເຜື່ອສຳລັບການເສື່ອມຄ່າຂອງເງິນກູ້ໃຫ້ກັບລູກຄ້າ ໃນອັນທີ 31 ທັນວາ ມີດັ່ງລຸ່ມນີ້:

	2023		2022	
	ຍອດເຫຼືອທ້າຍ ລ້ານກີບ	**ຄ່າເສື່ອມ ລ້ານກີບ**	**ຍອດເຫຼືອທ້າຍ ລ້ານກີບ**	**ຄ່າເສື່ອມ ລ້ານກີບ**
ຄ່າເສື່ອມຈາກການປະເມີນເງິນກູ້ແບບລາຍບຸກຄົນ	6.484.088	1.388.525	5.764.485	1.586.358
ຄ່າເສື່ອມຈາກການປະເມີນເງິນກູ້ແບບກຸ່ມ	45.713.975	299.395	37.044.316	223.204
	52.198.063	**1.687.920**	**42.808.801**	**1.809.562**

14. ການລົງທຶນທາງການເງິນ - ປະເພດມີໄວ້ເພື່ອຂາຍ

ໃນອັນທີ 31 ທັນວາ 2023, ມູນຄ່າຍຸດຕິທຳຂອງຮຸ້ນມີຈຳນວນ 87.822 ລ້ານກີບ (2022: 90.123 ລ້ານກີບ).

15. ການລົງທຶນທາງການເງິນ - ປະເພດຖືໄວ້ຈົນເຖິງວັນຄົບກຳນົດ

	2023 ລ້ານກີບ	2022 ລ້ານກີບ
ມູນຄ່າຕາມວິທີຫຼຸດຕົ້ນທຶນລົງຂອງພັນທະບັດຄັງເງິນທີ່ອອກໂດຍກະຊວງການເງິນ	4.237.005	855.777
ມູນຄ່າຕາມວິທີຫຼຸດຕົ້ນທຶນລົງຂອງພັນທະບັດທີ່ອອກໂດຍທະນາຄານແຫ່ງ ສປປ ລາວ	4.207.804	-
ມູນຄ່າຕາມວິທີຫຼຸດຕົ້ນທຶນລົງຂອງພັນທະບັດທີ່ອອກໂດຍກະຊວງການເງິນ	6.420.881	4.111.374
	14.865.690	**4.967.151**

15.1 ພັນທະບັດຄັງເງິນທີ່ອອກໂດຍກະຊວງການເງິນ ແລະ ທະນາຄານແຫ່ງ ສປປ ລາວ

ໄລຍະເວລາ	ມື້ທີ່ຊື້	ມື້ຄົບກຳນົດ	ສະກຸນເງິນ	ມູນຄ່າໜ້າບັດ ລ້ານກີບ	ມູນຄ່າຕາມວິທີຫຼຸດຕົ້ນທຶນ ລ້ານກີບ	ອັດຕາດອກເບ້ຍ ຕໍ່ປີ
1 ປີ	17-Jul-23	17-Jul-24	ກີບ	617.983	617.733	5,80%
1 ປີ	12-Sep-23	12-Sep-24	ກີບ	1.000.000	999.658	5,80%
1 ປີ	17-Jul-23	17-Jul-24	ໂດລາ	739.894	739.670	5,00%
1 ປີ	12-Sep-23	12-Sep-24	ບາດ	1.271.020	1.270.695	5,00%
1 ປີ	28-Sep-23	28-Sep-24	ບາດ	609.391	609.249	5,00%
1				**4.238.288**	**4.237.005**	

15.2 ພັນທະບັດທີ່ອອກໂດຍກະຊວງການເງິນ ແລະ ທະນາຄານແຫ່ງ ສປປ ລາວ

- ລາຍລະອຽດຂອງພັນທະບັດອື່ນໆ ຕາມມື້ຄົບກຳນົດຂອງສັນຍາ ມີດັ່ງຕໍ່ໄປນີ້:

	2023		2022	
	ມູນຄ່າໜ້າບັດ ລ້ານກີບ	ມູນຄ່າຕາມວິທີຫຼຸດຕົ້ນທຶນ ລ້ານກີບ	ມູນຄ່າໜ້າບັດ ລ້ານກີບ	ມູນຄ່າຕາມວິທີຫຼຸດຕົ້ນທຶນ ລ້ານກີບ
ພາຍໃນ 1 ປີ	700.911	697.735	-	-
1 ຫາ 5 ປີ	6.961.756	6.920.602	1.836.096	1.814.313
ຫຼາຍກວ່າ 5 ປີ	3.124.876	3.010.348	2.359.536	2.297.061
	10.787.543	**10.628.685**	**4.195.632**	**4.111.374**

- ລາຍລະອຽດຂອງດອກເບ້ຍພັນທະບັດອື່ນໆ ຕາມມື້ຄົບກຳນົດຂອງສັນຍາ ມີດັ່ງຕໍ່ໄປນີ້:

	2023 % ຕໍ່ປີ	2022 % ຕໍ່ປີ
ພາຍໃນ 1 ປີ	0,10%-5,80%	5,00%
1 ຫາ 5 ປີ	0,10%-6,90%	3,80-6,95%
ຫຼາຍກວ່າ 5 ປີ	5,50%-6,00%	4,00-6,00%

ພັນທະບັດອື່ນໆ ເປັນພັນທະບັດທີ່ອອກໂດຍກະຊວງການເງິນ ແລະ ທະນາຄານແຫ່ງ ສປປ ລາວ ອອກໃຫ້ ເພື່ອຊຳລະເງິນໃຫ້ກູ້ຢືມທີ່ທະນາຄານໄດ້ປ່ອຍກູ້ໃຫ້ກັບລູກຄ້າທີ່ນຳໄປເຮັດການກໍ່ສ້າງໂຄງການຂອງລັດຖະບານ ແລະ ເພື່ອການຊຳລະເງິນໃຫ້ກູ້ຢືມທີ່ກະຊວງການເງິນ ແລະ ທະນາຄານແຫ່ງ ສປປ ລາວ ຄ້ຳປະກັນໃຫ້

16. ການລົງທຶນໃນວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ

	ລ້ານກີບ
ຍອດໃນວັນທີ 1 ມັງກອນ 2023	**691.081**
ສ່ວນແບ່ງກຳໄລຈາກວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ	52.393
ລົງທຶນໃນວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ	12.000
ຫັກ: ເງິນປັນຜົນຮັບໃນປີ	(8.251)
ຍອດເຫຼືອທ້າຍໃນວັນທີ 31 ທັນວາ 2023	**747.223**

ການລົງທຶນໃນວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ ໃນວັນທີ 31 ທັນວາ, ແລະ ລາຍຮັບເງິນປັນຜົນ ສຳລັບທ້າຍປີສິ້ນສຸດ ວັນທີ 31 ທັນວາ ມີດັ່ງລຸ່ມນີ້:

	ອັດຕາສ່ວນເງິນ ລົງທຶນ		**ມູນຄ່າຕົ້ນທຶນ**		**ມູນຄ່າສຸດທິ**		**ລາຍຮັບເງິນປັນຜົນ**	
	2023	**2022**	**2023**	**2022**	**2023**	**2022**	**2023**	**2022**
	(%)				**LAKm**			
ບໍລິສັດຫຼັກຊັບ ທຄຕລ-ກທ ຈຳກັດ	70	70	70.000	70.000	79.766	76.392	2.377	-
ທະນາຄານຮ່ວມທຸລະກິດລາວ-ຫວຽດ (LVB)	25	25	197.839	197.839	268.770	260.080	-	-
ທະນາຄານ ລາວ - ຝຣັ່ງ ຈຳກັດ	30	30	150.000	138.000	175.985	148.156	-	-
ທະນາຄານ ລາວຈີນ ຈຳກັດ	39,87	39,87	151.458	151.458	196.535	181.030	-	4.808
ບໍລິສັດປະກັນໄພລາວ -ຫວຽດ	35	35	9.168	9.168	16.453	17.549	5.874	1.076
ບໍລິສັດ ລາວ ເນເຊິນນໍ ເພເມັ້ນ ເນັດເວີກ ຈຳກັດ	20	20	6.800	6.800	9.714	7.874	-	1.749
ລວມ			**585.265**	**573.265**	**747.223**	**691.081**	**8.251**	**7.633**

- ບໍລິສັດຫຼັກຊັບ ທຄຕລ-ກທ ຈຳກັດ ເປັນທຸລະກິດໜຶ່ງທີ່ໄດ້ຈົດທະບຽນຢູ່ ສປປ ລາວ ພາຍໃຕ້ໃບອະນຸຍາດດຳເນີນທຸລະກິດສະບັບເລກທີ 180-10 ທີ່ໄດ້ຮັບອະນຸຍາດຈາກກົມສົ່ງເສີມການລົງທຶນຂອງກະຊວງແຜນການ ແລະ ການລົງທຶນແຫ່ງ ສປປ ລາວໃນວັນທີ 14 ທັນວາ 2010. ກິດຈະກຳຕົ້ນຕໍຂອງບໍລິສັດແມ່ນ ໃຫ້ການບໍລິການນາຍໜ້າຊື້ຂາຍຫຼັກຊັບ, ການບໍລິການໃຫ້ ຄຳ ປຶກສາດ້ານການລົງທຶນທາງການເງິນ, ບໍລິການຄຸ້ມຄອງດູແລ, ການປະກັນໄພ, ສຳລັບການແບ່ງປັນ ແລະ ການບໍລິການທີ່ມີມູນຄ່າອື່ນໆ.

- ທະນາຄານ ຮ່ວມທຸລະກິດ ລາວ - ຫວຽດ ("LVB") ເປັນທຸລະກິດໜຶ່ງທີ່ໄດ້ຈົດທະບຽນຢູ່ ສປປ ລາວ, ເຊິ່ງມີສຳນັກງານໃຫຍ່ຕັ້ງຢູ່ ນະຄອນຫຼວງວຽງຈັນ ແລະ ດຳເນີນທຸລະກິດສະໜອງການບໍລິການທາງດ້ານທະນາຄານ. ເປັນບໍລິສັດທີ່ຮ່ວມທຶນກັບທະນາຄານເພື່ອການລົງທຶນ ແລະ ການພັດທະນາຂອງຫວຽດນາມ, ເຊິ່ງເປັນທະນາຄານທຸລະກິດລັດທີ່ດຳເນີນທຸລະກິດຢູ່ ສສ ຫວຽດນາມ.ບໍລິສັດຮ່ວມທຶນດຳເນີນທຸລະກິດພາຍໃຕ້ໃບອະນຸຍາດລົງທຶນການທະນາຄານ ລົງວັນທີ 31 ມີນາ 2000 ອອກໂດຍທະນາຄານແຫ່ງ ສປປ ລາວ ເປັນໄລຍະເວລາ 30 ປີ. ໃນປີ 2015, ທຮລ ໄດ້ເພີ່ມທຶນຈົດທະບຽນເປັນ 791.357.560.000 ກີບ. ອັດຕາສ່ວນກຳມະສິດຂອງທະນາຄານໃນ ທຮລ ພາຍຫຼັງທຶນເພີ່ມຂຶ້ນ 25% ອີງຕາມ ໃບອະນຸຍາດການລົງທຶນ ເລກທີ 004-15/KH-DDT4 ທີ່ອອກໂດຍ ກະຊວງ ແຜນການ ແລະ ການລົງທຶນ, ວັນທີ 24 ສິງຫາ 2015 ທຽບເທົ່າເງິນກີບເທົ່າກັບ 197.839.390.000 ກີບ.

16. ການລົງທຶນໃນວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ (ຕໍ່)

- ທະນາຄານ ລາວ-ຈີນ ຈຳກັດ (LCNB) ເປັນທຸລະກິດທີ່ດຳເນີນກ່ຽວກັບການບໍລິການດ້ານການທະນາຄານຢູ່ໃນ ສປປ ລາວ. ທະນາຄານລາວ-ຈີນ ເປັນທະນາຄານຮ່ວມທຶນກັບ ທະນາຄານ ຟູດ້ຽນ ຈີນ ເຊິ່ງແມ່ນທະນາຄານທຸລະກິດຂອງລັດທີ່ດຳເນີນການຢູ່ປະເທດຈີນ. LCNB ດຳເນີນທຸລະກິດ ພາຍໃຕ້ໃບອະນຸຍາດລົງທຶນການທະນາຄານ ລົງວັນທີ 20 ມັງກອນ 2014 ອອກໂດຍທະນາຄານແຫ່ງ ສປປ ລາວ. ໃນປີ 2022 ອີງຕາມໃບທະບຽນວິສາຫະກິດເລກທີ 0839/ຈທວ, ລົງວັນທີ 26 ເມສາ 2022, ທະນາຄານລາວຈີນ ຈຳກັດ ໄດ້ເພີ່ມທຶນຈາກ 1.000 ຮຸ້ນ ເປັນ 1.229 ຮຸ້ນ. ແຕ່ວ່າ ທາງ ທຄຕລ ຕົກລົງທີ່ຈະຮັກສາຈຳນວນຮຸ້ນຂອງຕົນໄວ້ຄືເກົ່າຈາກຄັ້ງທຳອິດ (490 ຮຸ້ນ) ໂດຍຈະບໍ່ມີການຊຳລະເພີ່ມຕໍ່ກັບການເພີ່ມທຶນໃນຄັ້ງນີ້. ຜູ້ຖືຫຸ້ນ "ທະນາຄານຟູດຽນ ຈຳກັດ" ເປັນບໍລິສັດດຽວທີ່ເອົາເງິນສົດເຂົ້າມາເພີ່ມທຶນຕາມຈຳນວນ 229 ຮຸ້ນ ຫຼື 79.880 ລ້ານກີບ ເຊິ່ງສົ່ງຜົນກະທົບຕໍ່ອັດຕາສ່ວນການຖືຮຸ້ນຂອງ ທຄຕລ ຫຼຸດລົງຈາກ 49,00% ມາເປັນ 39,87%.

- ທະນາຄານ ລາວ - ຝຣັ່ງ ຈຳກັດ ("BFL") ເປັນທຸລະກິດໜຶ່ງທີ່ໄດ້ຈົດທະບຽນຢູ່ ສປປ ລາວ ເຊິ່ງມີສຳນັກງານໃຫຍ່ຕັ້ງຢູ່ ນະຄອນຫຼວງວຽງຈັນ ແລະ ສະໜອງການບໍລິການທາງດ້ານການທະນາຄານ. ທະນາຄານ ລາວ-ຝຣັ່ງ ຖືກສ້າງຂຶ້ນໂດຍ ໄດ້ຮ່ວມທຶນກັບ Cofibred Company Frances De La Bred ເຊິ່ງເປັນທະນາຄານທຸລະກິດລັດທີ່ດຳເນີນທຸລະກິດ ຢູ່ ປາຣີ, ປະເທດ ຝຣັ່ງ. ບໍລິສັດຮ່ວມທຶນດຳເນີນທຸລະກິດພາຍໃຕ້ໃບອະນຸຍາດລົງທຶນ ການທະນາຄານຊື່ວຄາວ ລົງວັນທີ 01 ຕຸລາ 2009 ແລະ ໃບອະນຸຍາດຖາວອນ ລົງວັນທີ 16 ກໍລະກົດ 2010 ອອກໂດຍທະນາຄານ ແຫ່ງ ສປປ ລາວ. ທຶນຈົດທະບຽນຕາມກົດລະບຽບຂອງທະນາຄານ BFL ແມ່ນ 20 ລ້ານໂດລາ ເຊິ່ງໄດ້ເພີ່ມເປັນ 37 ລ້ານໂດລາ, ອີງຕາມ ບົດບັນຍັດຂອງປະທານປະເທດອອກໃນ ວັນທີ 24 ກັນຍາ 2009 ແລະ ໜັງສືເລກທີ 01/ທຫລ ລົງວັນທີ 28 ມັງກອນ 2010 ຈາກ ທຫລ. ໃນວັນທີ 31 ທັນວາ 2023, ທະນາຄານໄດ້ປະກອບທຶນທັງໝົດໃນບໍລິສັດ ຈຳນວນ 150.000 ລ້ານກີບ (2022 : 138.000 ລ້ານກີບ) ແລະ ໄດ້ປະກອບທຶນຄົບຕາມຈຳນວນດັ່ງກ່າວໃນປີ 2023.

- ບໍລິສັດປະກັນໄພລາວຫວຽດ (LVI) ເປັນທຸລະກິດທີ່ຈົດທະບຽນເປັນບໍລິສັດຮ່ວມທຶນ ຢູ່ ສປປ ລາວ, ສະໜອງການ ບໍລິການທາງດ້ານການປະກັນໄພ ພາຍໃຕ້ໃບອະນຸຍາດການລົງທຶນເລກທີ 077/08/FIMC ອອກໂດຍຄະນະກຳມະການ ຄຸ້ມຄອງການລົງທຶນຕ່າງປະເທດ, ລົງວັນທີ 09 ມິຖຸນາ 2008. ເປັນການຮ່ວມທຶນກັບບໍລິສັດຫຸ້ນສ່ວນປະກັນໄພ BIDV ແລະ ທະນາຄານຮ່ວມທຸລະກິດລາວຫວຽດ. ໃນວັນທີ 31 ທັນວາ 2023, ທະນາຄານໄດ້ປະກອບທຶນທັງໝົດໃນມູນຄ່າ 1.050.000 ໂດ ລາ ຫຼື ທຽບເທົ່າກັບ 9.168 ລ້ານກີບ. (2022: 9.168 ລ້ານກີບ).

- ບໍລິສັດ ລາວເນເຊິນນໍ ເພເມັ້ນ ເນັດເວີກ ຈຳກັດ (LAPNet) ແມ່ນເປັນບໍລິສັດໜຶ່ງທີ່ສ້າງຕັ້ງໃນ ສປປ ລາວ ພາຍໃຕ້ ໃບທະບຽນວິສາຫະກິດ ເລກທີ 0349 ອອກໂດຍ ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ຂອງ ກະຊວງອຸດສາຫະກຳ ແລະ ການຄ້າ ຂອງ ສປປ ລາວ ລົງວັນທີ 12 ມິນາ 2019 ເຊິ່ງໃຫ້ບໍລິການທາງການເງິນ. ເປັນການຮ່ວມມືລະຫວ່າງ ທະນາຄານແຫ່ງ ສປປ ລາວ, Union Pay International, ທະນາຄານພັດທະນາລາວ, ທະນາຄານສົ່ງເສີມກະສິກຳ, ທະນາຄານຮ່ວມພັດທະນາ, ທະນາຄານລາວ - ຫວຽດ, ທະນາຄານ ເອັສທີ ຈຳກັດ, ທະນາຄານ ບີໄອຊີ ແລະ ທະນາຄານ. ບໍລິສັດ ມີທຶນຈົດທະບຽນ ມູນຄ່າ 34.000 ລ້ານກີບ. ໃນວັນທີ 31 ທັນວາ 2023, ການປະກອບທຶນທັງໝົດຂອງ ທະນາຄານໃນບໍລິສັດນີ້ມີຈຳນວນ 34.000 ລ້ານກີບ.

17. ຊັບສິນຍັດ ແລະ ອຸປະກອນ

	ສິ່ງກໍ່ສ້າງກຳລັງດຳເນີນ ແລະ ຊັບສິນຍັດຄ້າງທີ່ພວມ ເຄື່ອນຍ້າຍ ລ້ານກີບ	ອາຄານ ແລະ ສ່ວນປັບປຸງ ລ້ານກີບ	ອຸປະກອນ ຫ້ອງການ ລ້ານກີບ	ເຟີນີເຈີ ແລະ ເຄື່ອງຕິດຕັ້ງ ລ້ານກີບ	ພາຫະນະ ລ້ານກີບ	ລວມ ລ້ານກີບ
ໃນວັນທີ 31 ທັນວາ 2022						
ຕົ້ນທຶນ	102.991	541.374	283.694	37.510	25.179	990.748
ຫັກ : ຄ່າຫຼ້ຍຫ້ຽນສະສົມ	-	(236.413)	(169.387)	(28.009)	(16.614)	(450.423)
ມູນຄ່າຕາມບັນຊີສຸດທິ	**102.991**	**304.961**	**114.307**	**9.501**	**8.565**	**540.325**
ທ້າຍປີສິ້ນສຸດວັນທີ 31 ທັນວາ 2023						
ຍອດຍົກມາຂອງມູນຄ່າຕາມບັນຊີສຸດທິ	102.991	304.961	114.307	9.501	8.565	540.325
ຊື້ເພີ່ມໃໝ່	112.583	1.118	1.618	321	9	115.649
ໂອນເຂົ້າ/(ອອກ)	(44.370)	17.296	18.695	2.125	176	(6.078)
ສະສາງອອກ	-	(16)	(17)	(1)	-	(34)
ຫັກ : ຄ່າຫຼ້ຍຫ້ຽນສະສົມ	-	(30.476)	(44.756)	(3.706)	(2.820)	(81.758)
ໃນວັນທີ 31 ທັນວາ 2023	**171.204**	**292.883**	**89.847**	**8.240**	**5.930**	**568.104**
ໃນວັນທີ 31 ທັນວາ 2023						
ຕົ້ນທຶນ	171.204	556.973	303.787	36.680	25.365	1.094.009
ຫັກ : ຄ່າຫຼ້ຍຫ້ຽນສະສົມ	-	(264.090)	(213.940)	(28.440)	(19.435)	(525.905)
ມູນຄ່າຕາມບັນຊີສຸດທິ	**171.204**	**292.883**	**89.847**	**8.240**	**5.930**	**568.104**

(i) ການໂອນ ເຂົ້າ(ອອກ) ແມ່ນລວມມີການໂອນຊັບສິນຍັດຄ້າງທີ່ບໍ່ມີຕົວຕົນ ທີ່ສຳເລັດແລ້ວໃນລະຫວ່າງປີ, ຈຳນວນ 6.078 ລ້ານກີບ (ເອກະສານຊ້ອນທ້າຍ 18)

18. ຊັບສິນບັດຄົງທີ່ບໍ່ມີຕົວຕົນ

	ສິດນຳໃຊ້ທີ່ດິນ ລ້ານກີບ	ຊັອບແວ ລ້ານກີບ	ລວມ ລ້ານກີບ
ໃນວັນທີ 1 ມັງກອນ 2023			
ຕົ້ນທຶນ	244.337	62.683	307.020
ຄ່າເສື່ອມສະສົມ	-	(23.735)	(23.735)
ມູນຄ່າຕາມບັນຊີສຸດທິ	**244.337**	**38.948**	**283.285**
ທ້າຍປີສິ້ນສຸດວັນທີ 31 ທັນວາ 2023			
ຍອດຍົກມາຂອງມູນຄ່າຕາມບັນຊີສຸດທິ	244.337	38.948	283.285
ຊື້ເພີ່ມໃໝ່	44.229	-	44.229
ໂອນເຂົ້າ	758	5.320	6.078
ຄ່າເສື່ອມພາຍໃນປີ	-	(11.858)	(11.858)
ໃນວັນທີ 31 ທັນວາ 2023	**289.324**	**32.410**	**321.734**
ໃນວັນທີ 31 ທັນວາ 2023			
ຕົ້ນທຶນ	289.324	68.002	357.326
ຄ່າເສື່ອມສະສົມ	-	(35.592)	(35.592)
ມູນຄ່າຕາມບັນຊີສຸດທິ	**289.324**	**32.410**	**321.734**

(i) ການໂອນ ເຂົ້າ ແມ່ນລວມມີການໂອນຊັບສິນບັດຄົງທີ່ບໍ່ມີຕົວຕົນມາຈາກຊັບສິນບັດ ແລະ ອຸປະກອນ ທີ່ສຳເລັດແລ້ວ (ເອກະສານຊ້ອນທ້າຍ 17)

19. ສິດນຳໃຊ້ຊັບສິນ

	ທີ່ດິນ ແລະ ອາຄານ ລ້ານກີບ
ໃນວັນທີ 1 ມັງກອນ 2023	
ຕົ້ນທຶນ	90.543
ຄ່າເສື່ອມສະສົມ	(38.515)
ມູນຄ່າຕາມບັນຊີສຸດທິ	**52.028**
ຄ່າຫຼຸ້ຍຫ້ຽນສະສົມ:	
ຍອດຍົກມາ	**52.028**
ຊື້ເພີ່ມ	10.491
ສະສາງອອກ	(445)
ຄ່າເສື່ອມພາຍໃນປີ	(8.574)
ໃນວັນທີ 31 ທັນວາ 2023	**53.500**
ໃນວັນທີ 31 ທັນວາ 2023	
ຕົ້ນທຶນ	100.589
ຄ່າເສື່ອມສະສົມ	(47.089)
ມູນຄ່າຕາມບັນຊີສຸດທິ	**53.500**

20. ຊັບສິນອື່ນໆ

	2023 ລ້ານກີບ	2022 ລ້ານກີບ
ຊັບສິນມີໄວ້ເພື່ອຂາຍ (i)	1.459.456	358.864
ດອກເບ້ຍຄ້າງຮັບ	232.405	104.679
ຊັບສິນອື່ນໆທີ່ລໍຖ້າໂອນບັນຊີ ຫຼື ສະສາງ(ii)	207.958	65.961
ເງິນລ່ວງໜ້າສຳລັບການຕື່ມເງິນ (ii)	106.637	167.218
ເຄື່ອງໃຊ້ຫ້ອງການ ແລະ ອຸປະກອນອື່ນໆ	32.000	18.503
ລາຍຈ່າຍລ່ວງໜ້າແບ່ງສ່ວນຈ່າຍ	21.130	16.158
ເງິນຈ່າຍລ່ວງໜ້າສຳລັບຜູ້ສະໜອງ	8.749	3.302
ອື່ນໆ	77.684	140.432
	2.146.019	**875.117**

(i) ຊັບສິນລໍຖ້າຂາຍ ໝາຍເຖິງຊັບສິນທີ່ໄດ້ມາຈາກການທີ່ລູກໜີ້ທີ່ມອບໃຫ້ເພື່ອຊຳລະໜີ້ຂອງທະນາຄານ

(ii) ຊັບສິນອື່ນໆທີ່ລໍຖ້າໂອນບັນຊີ ຫຼື ສະສາງ ແມ່ນ ລາຍການ ເຊັ່ນ ການໂອນເງິນລະຫວ່າງທະນາຄານ, ທຸລະກຳບັດທີ່ດຳເນີນການຜ່ານສູນບັດສາກົນ ຫຼື ກິດຈະກຳທາງດ້ານການເງິນອື່ນໆ. ລາຍການເຫຼົ່ານີ້ໄດ້ເກີດຂຶ້ນແລ້ວ ແຕ່ຍັງບໍ່ໄດ້ຮັບການຊຳລະສະສາງ ແລະ ກະທົບຍອດລະຫວ່າງບໍລິສັດອື່ນ ເພື່ອລໍຖ້າຊຳລະສະສາງກັບບໍລິສັດທີ່ກ່ຽວຂ້ອງ

(iii) ເງິນລ່ວງໜ້າສຳລັບການຕື່ມເງິນ ໝາຍເຖິງການຊຳລະເງິນລ່ວງໜ້າສຳລັບການຊື້ມູນຄ່າໂທຂອງເຄືອຂ່າຍໂທລະສັບເພື່ອໃຫ້ບໍລິການຕື່ມເງິນແກ່ລູກຄ້າຂອງທະນາຄານ

21. ໜີ້ຕ້ອງສົ່ງທະນາຄານ ແລະ ສະຖາບັນການເງິນອື່ນ

	2023 ລ້ານກີບ	2022 ລ້ານກີບ
ເງິນຝາກກະແສລາຍວັນ	**8.136.564**	**5.260.211**
- ເປັນເງິນກີບ	2.551.312	1.744.986
- ເປັນເງິນຕາຕ່າງປະເທດ	5.585.252	3.515.225
ເງິນຝາກປະຢັດ	**400.852**	**356.226**
- ເປັນເງິນກີບ	154.784	94.772
- ເປັນເງິນຕາຕ່າງປະເທດ	246.068	261.454
ເງິນຝາກມີກຳນົດ	**881.074**	**975.367**
- ເປັນເງິນກີບ	201.536	238.485
- ເປັນເງິນຕາຕ່າງປະເທດ	679.538	736.882
ອື່ນໆ	**40.130**	**17.718**
- ເປັນເງິນກີບ	40.130	17.689
- ເປັນເງິນຕາຕ່າງປະເທດ	-	29
ດອກເບ້ຍຄ້າງຈ່າຍ	**4.497**	**29.661**
	9.463.117	**6.639.183**

21. ໜີ້ຕ້ອງສົ່ງທະນາຄານ ແລະ ສະຖາບັນການເງິນອື່ນ (ຕໍ່)

ອັດຕາດອກເບ້ຍສຳລັບເງິນຝາກຈາກທະນາຄານ ແລະ ສະຖາບັນການເງິນອື່ນພາຍໃນປີ ມີດັ່ງລຸ່ມນີ້:

	2023 % ຕໍ່ປີ	2022 % ຕໍ່ປີ
ເງິນຝາກກະແສລາຍວັນ	0,00% - 0,30%	0,00% - 0,30%
ເງິນຝາກປະຢັດ	ບໍ່ມີດອກເບ້ຍ	ບໍ່ມີດອກເບ້ຍ
ເງິນຝາກມີກຳນົດ	0,56% - 6,65%	0,56% - 6,65%

22. ໜີ້ຕ້ອງສົ່ງລູກຄ້າ

	2023 ລ້ານກີບ	2022 ລ້ານກີບ
ເງິນຝາກກະແສລາຍວັນ	**16.773.450**	**10.938.271**
ເງິນຝາກກະແສລາຍວັນເປັນເງິນກີບ	4.990.191	4.438.412
ເງິນຝາກກະແສລາຍວັນເປັນເງິນຕາຕ່າງປະເທດ	11.783.259	6.499.859
ເງິນຝາກປະຢັດ	**59.829.971**	**42.874.328**
ເງິນຝາກປະຢັດເປັນເງິນກີບ	23.183.532	17.924.403
ເງິນຝາກປະຢັດເປັນເງິນຕາຕ່າງປະເທດ	36.646.439	24.949.925
ເງິນຝາກກຳນົດ	**31.394.673**	**26.007.200**
ເງິນຝາກມີກຳນົດເປັນເງິນກີບ	9.082.106	8.885.920
ເງິນຝາກມີກຳນົດເປັນເງິນຕາຕ່າງປະເທດ	22.312.567	17.121.280
ເງິນອາງຄ້ຳປະກັນ	**210.254**	**370.732**
ເງິນອາງຄ້ຳປະກັນເປັນເງິນກີບ	32.218	290.574
ເງິນອາງຄ້ຳປະກັນເປັນເງິນຕາຕ່າງປະເທດ	178.036	80.158
ອື່ນໆ	**375.193**	**139.691**
ດອກເບ້ຍຄ້າງຈ່າຍ	**888.176**	**663.849**
	109.471.717	**80.994.071**

ອັດຕາດອກເບ້ຍພາຍໃນປີສຳລັບເງິນຝາກດັ່ງກ່າວ ມີດັ່ງລຸ່ມນີ້:

	2023 % ຕໍ່ປີ	2022 % ຕໍ່ປີ
ເງິນຝາກກະແສລາຍວັນ	ບໍ່ມີດອກເບ້ຍ	ບໍ່ມີດອກເບ້ຍ
ເງິນຝາກປະຢັດເປັນເງິນກີບ	1,25% - 1,89%	1,25% - 1,75%
ເງິນຝາກປະຢັດເປັນເງິນໂດລາ	0,90% - 1,15%	0,60% - 1,00%
ເງິນຝາກປະຢັດເປັນເງິນບາດ	0,45% - 0,70%	0,45% - 0,55%
ເງິນຝາກມີກຳນົດເປັນເງິນກີບ	3,16% - 12,15%	3,16% - 12,50%
ເງິນຝາກມີກຳນົດເປັນເງິນໂດລາ	1,65% - 7,75%	1,65% - 7,75%
ເງິນຝາກມີກຳນົດເປັນເງິນບາດ	1,10% - 7,75%	1,40% - 7,75%

23. ເງິນກູ້ຢືມຈາກ ທະນາຄານອື່ນ

	2023 ລ້ານກີບ	2022 ລ້ານກີບ
ເງິນກູ້ຢືມຈາກທະນາຄານແຫ່ງ ສປປ ລາວ	4.257.910	3.614.601
ເງິນກູ້ຢືມ ອື່ນໆ	62.260	21.000
ດອກເບ້ຍຄ້າງຈ່າຍ	58.224	470.182
	4.378.394	**4.105.783**

	2023 ລ້ານກີບ	2022 ລ້ານກີບ
ເງິນກູ້ຢືມໝຸນວຽນ	94.589	3.841.066
ເງິນກູ້ຢືມບໍ່ໝຸນວຽນ	4.283.805	264.717
	4.378.394	**4.105.783**

ເງິນກູ້ຢືມຈາກທະນາຄານແຫ່ງ ສປປ ລາວ ໃນວັນທີ 31 ທັນວາ 2023 ລວມມີ:

- ເງິນກູ້ໄລຍະຍາວ ທີ່ມີຍອດເຫຼືອ 97.854.000 ໂດລາ (ສະກຸນເງິນເດີມແມ່ນ 100.000.000 ໂດລາ ໂດຍອັດຕາດອກເບ້ຍ 5,50% ຕໍ່ປີ) ຈຸດປະສົງແມ່ນ ເພື່ອສະໜອງສິນເຊື່ອໃຫ້ໂຄງການເຂື່ອນໄຟຟ້າທີ່ໄດ້ຮັບການສະໜັບສະໜຸນຈາກລັດຖະບານ. ໄລຍະເວລາຂອງສັນຍາກູ້ຢືມແມ່ນຕັ້ງແຕ່ວັນທີ 27 ສິງຫາ 2015 ຫາ ວັນທີ 27 ສິງຫາ 2025. ດອກເບ້ຍແມ່ນຈ່າຍທຸກໆໄຕມາດ.

- ເງິນກູ້ໄລຍະຍາວ ທີ່ມີຍອດເຫຼືອ 97.900.000 ໂດລາ (ສະກຸນເງິນເດີມແມ່ນ 100.000.000 ໂດລາ ໂດຍມີອັດຕາດອກເບ້ຍ 5,30% ຕໍ່ປີ) ຈຸດປະສົງແມ່ນ ເພື່ອສະໜອງສິນເຊື່ອໃຫ້ໂຄງການເຂື່ອນໄຟຟ້າທີ່ໄດ້ຮັບການສະໜັບສະໜຸນຈາກລັດຖະບານ. ໄລຍະເວລາຂອງສັນຍາກູ້ຢືມແມ່ນຕັ້ງແຕ່ວັນທີ 3 ພຶດສະພາ 2016 ຫາ 3 ພຶດສະພາ 2026. ດອກເບ້ຍແມ່ນຈ່າຍທຸກໆໄຕມາດ.

- ເງິນກູ້ໄລຍະຍາວຈຳນວນ 4.050.000.000 ກີບ (ວົງເງິນກູ້ 4.050.000.000 ກີບ ທີ່ມີອັດຕາດອກເບ້ຍ 3% ຕໍ່ປີ) ເພື່ອໃຫ້ ສິນເຊື່ອແກ່ທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງ ທີ່ໄດ້ຮັບຜົນກະທົບຈາກ COVID-19 ອີງຕາມລະບຽບຂອງ ທຫລ ສະບັບເລກທີ 318/ທຫລ ລົງວັນທີ 19 ພຶດສະພາ 2020. ເງິນຕົ້ນຂອງເງິນໃຫ້ກູ້ຢືມຈະຖືກຊຳລະເປັນ 3 ຄັ້ງ ເຊັ່ນ ການຊຳລະຄືນຄັ້ງທຳອິດໃນປີ 2024 ແມ່ນ 30%, ການຊຳລະຄືນຄັ້ງທີສອງໃນປີ 2025 30% ແລະ ການຊຳລະຄືນຄັ້ງທີສາມໃນປີ 2026 40%. ດອກເບ້ຍແມ່ນຊຳລະສອງຄັ້ງຕໍ່ປີ (ມິຖຸນາ ແລະ ທັນວາ) ໄລຍະເວລາການກູ້ຢືມແມ່ນເລີ່ມຕົ້ນວັນທີ 18 ສິງຫາ 2020 ເຖິງ ວັນທີ 18 ສິງຫາ 2026.

- ເງິນກູ້ໄລຍະຍາວຈຳນວນ 4.116.657.000 ກີບ (ວົງເງິນກູ້ 4.200.000.000 ກີບ ທີ່ມີອັດຕາດອກເບ້ຍ 3% ຕໍ່ປີ) ເພື່ອໃຫ້ ສິນເຊື່ອແກ່ທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງ ທີ່ໄດ້ຮັບຜົນກະທົບຈາກ COVID-19 ອີງຕາມລະບຽບຂອງ ທຫລ ສະບັບເລກທີ 318/ທຫລ ລົງວັນທີ 19 ພຶດສະພາ 2020. ເງິນຕົ້ນຂອງເງິນໃຫ້ກູ້ຢືມຈະຖືກຊຳລະເປັນ 3 ຄັ້ງ ເຊັ່ນ ການຊຳລະຄືນຄັ້ງທຳອິດໃນປີ 2024 ແມ່ນ 30%, ການຊຳລະຄືນຄັ້ງທີສອງໃນປີ 2025 30% ແລະ ການຊຳລະຄືນຄັ້ງທີສາມໃນປີ 2026 40%. ດອກເບ້ຍແມ່ນຊຳລະສອງຄັ້ງຕໍ່ປີ (ມິຖຸນາ ແລະ ທັນວາ) ໄລຍະເວລາການກູ້ຢືມແມ່ນເລີ່ມຕົ້ນວັນທີ 3 ພະຈິກ 2020 ເຖິງ ວັນທີ 3 ພະຈິກ 2026.

23. ເງິນກູ້ຢືມຈາກ ທະນາຄານອື່ນ (ຕໍ່)

- ເງິນກູ້ໄລຍະຍາວຈຳນວນ 3.000.000.000 ກີບ (ວົງເງິນກູ້ 3.080.000.000 ກີບ ທີ່ມີອັດຕາດອກເບ້ຍ 3% ຕໍ່ປີ) ເພື່ອໃຫ້ ສິນເຊື່ອແກ່ທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງ ທີ່ໄດ້ຮັບຜົນກະທົບຈາກ COVID-19 ອີງຕາມລະບຽບ ຂອງ ທຫລ ສະບັບເລກທີ 318/ທຫລ ລົງວັນທີ 19 ພຶດສະພາ 2020. ເງິນຕົ້ນຂອງເງິນໃຫ້ກູ້ຢືມຈະຖືກຊຳລະເປັນ 3 ຄັ້ງ ເຊັ່ນ ການຊຳລະຄືນຄັ້ງທຳອິດໃນປີ 2024 ແມ່ນ 30%, ການຊຳລະຄືນຄັ້ງທີສອງໃນປີ 2025 30% ແລະ ການຊຳ ລະຄືນຄັ້ງທີສາມໃນປີ 2026 40%. ດອກເບ້ຍແມ່ນຊຳລະສອງຄັ້ງຕໍ່ປີ (ມິຖນາ ແລະ ທັນວາ) ໄລຍະເວລາການກູ້ຢືມ ແມ່ນເລີ່ມຕົ້ນວັນທີ 22 ທັນວາ 2020 ເຖິງ ວັນທີ 22 ທັນວາ 2026.

- ເງິນກູ້ໄລຍະຍາວຈຳນວນ 10.050.000.000 ກີບ (ວົງເງິນກູ້ 15.050.000.000 ກີບ ທີ່ມີອັດຕາດອກເບ້ຍ 3% ຕໍ່ປີ) ເພື່ອໃຫ້ ສິນເຊື່ອແກ່ທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງ ທີ່ໄດ້ຮັບຜົນກະທົບຈາກ COVID-19 ອີງຕາມລະບຽບ ຂອງ ທຫລ ສະບັບເລກທີ 318/ທຫລ ລົງວັນທີ 19 ພຶດສະພາ 2020. ເງິນຕົ້ນຂອງເງິນໃຫ້ກູ້ຢືມຈະຖືກຊຳລະເປັນ 3 ຄັ້ງ ເຊັ່ນ ການຊຳລະຄືນຄັ້ງທຳອິດໃນປີ 2025 ແມ່ນ 30%, ການຊຳລະຄືນຄັ້ງທີສອງໃນປີ 2026 30% ແລະ ການຊຳ ລະຄືນຄັ້ງທີສາມໃນປີ 2027 40%. ດອກເບ້ຍແມ່ນຊຳລະສອງຄັ້ງຕໍ່ປີ (ມິຖນາ ແລະ ທັນວາ) ໄລຍະເວລາການກູ້ຢືມ ແມ່ນເລີ່ມຕົ້ນວັນທີ 15 ມີນາ 2021 ເຖິງ ວັນທີ 15 ມີນາ 2027.

- ເງິນກູ້ໄລຍະຍາວຈຳນວນ 110.000.000.000 ກີບ (ວົງເງິນກູ້ 110.000.000.000 ກີບ ທີ່ມີອັດຕາດອກເບ້ຍ 3% ຕໍ່ ປີ) ເພື່ອໃຫ້ ສິນເຊື່ອແກ່ທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງ ທີ່ໄດ້ຮັບຜົນກະທົບຈາກ COVID-19 ອີງຕາມ ລະບຽບຂອງ ທຫລ ສະບັບເລກທີ 318/ທຫລ ລົງວັນທີ 19 ພຶດສະພາ 2020. ເງິນຕົ້ນຂອງເງິນໃຫ້ກູ້ຢືມຈະຖືກຊຳລະ ເປັນ 2 ຄັ້ງ ເຊັ່ນ ການຊຳລະຄືນຄັ້ງທຳອິດ ແມ່ນ 40% ແລະການຊຳລະຄືນຄັ້ງທີສອງ 60% ໂດຍເລີ່ມຊຳລະໃນປີ 2026. ດອກເບ້ຍແມ່ນຊຳລະສອງຄັ້ງຕໍ່ປີ (ມິຖນາ ແລະ ທັນວາ) ໄລຍະເວລາການກູ້ຢືມແມ່ນເລີ່ມຕົ້ນວັນທີ 3 ພະຈິກ 2022 ເຖິງ ວັນທີ 3 ພະຈິກ 2027.

- ເງິນກູ້ໄລຍະຍາວຈຳນວນ 120.000.000.000 ກີບ (ວົງເງິນກູ້ 120.000.000.000 ກີບ ທີ່ມີອັດຕາດອກເບ້ຍ 3% ຕໍ່ ປີ) ເພື່ອໃຫ້ ສິນເຊື່ອແກ່ທຸລະກິດລົງທຶນໃນການພັດທະນາເທັກໂນໂລຊີທາງດ້ານການແພດ ແລະ ຢາ (ຈັດຊື້ອຸປະກອນໃນ ການຜະລິດ, ວັດຖຸດິບໃນການຜະລິດ ແລະ ພັດທະນາບຸກຄະລາກອນ ແລະ ລົງທຶນໃນການກໍ່ສ້າງໂຮງງານ). ເງິນຕົ້ນຂອງ ເງິນໃຫ້ກູ້ຢືມຈະຖືກຊຳລະເປັນ 4 ຄັ້ງ ເຊັ່ນ ການຊຳລະຄືນຄັ້ງລະ 25% ຂອງແຕ່ລະປີ ເລີ່ມຊຳລະຄັ້ງທຳອິດ ປີ 2025. ດອກເບ້ຍແມ່ນຈ່າຍທຸກໆໄຕມາດ. ໄລຍະເວລາການກູ້ຢືມແມ່ນເລີ່ມຕົ້ນວັນທີ 27 ທັນວາ 2021 ເຖິງ ວັນທີ 27 ທັນວາ 2028.

ເງິນກູ້ຢືມ ອື່ນໆ ໃນວັນທີ 31 ທັນວາ 2023 ລວມມີ:

- ເງິນກູ້ໄລຍະຍາວຈຳນວນ 21.000.000.000 (ວົງເງິນກູ້ 21.000.000.000 ກີບ ທີ່ມີບໍ່ມີອັດຕາດອກເບ້ຍ) ເພື່ອໃຫ້ ສິນເຊື່ອແກ່ທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງ ທີ່ຖືຮຸ້ນໂດຍຄົນລາວ 100% ເພື່ອໃຫ້ສາມາດດຳເນີນທຸລະກິດຕໍ່ ໄປ ແລະ ຂະຫຍາຍທຸລະກິດ. ເງິນຕົ້ນຂອງເງິນໃຫ້ກູ້ຢືມຈະຖືກຊຳລະຕອນທ້າຍໄລຍະເວລາເງິນກູ້. ໄລຍະເວລາການກູ້ຢືມ ແມ່ນເລີ່ມຕົ້ນວັນທີ 6 ທັນວາ 2022 ເຖິງ ວັນທີ 6 ທັນວາ 2033.

- ເງິນກູ້ໄລຍະຍາວຈຳນວນ 30.260.000.000 (ວົງເງິນກູ້ 30.260.000.000 ກີບ ທີ່ມີບໍ່ມີອັດຕາດອກເບ້ຍ) ເພື່ອໃຫ້ ສິນເຊື່ອແກ່ທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງ ທີ່ຖືຮຸ້ນໂດຍຄົນລາວ 100% ເພື່ອໃຫ້ສາມາດດຳເນີນທຸລະກິດຕໍ່ ໄປ ແລະ ຂະຫຍາຍທຸລະກິດ. ເງິນຕົ້ນຂອງເງິນໃຫ້ກູ້ຢືມຈະຖືກຊຳລະຕອນທ້າຍໄລຍະເວລາເງິນກູ້. ໄລຍະເວລາການກູ້ຢືມ ແມ່ນເລີ່ມຕົ້ນວັນທີ 13 ທັນວາ 2023 ເຖິງ ວັນທີ 20 ຕຸລາ 2034

- ເງິນກູ້ໄລຍະຍາວຈຳນວນ 11.000.000.000 (ວົງເງິນກູ້ 11.000.000.000 ກີບ ທີ່ມີບໍ່ມີອັດຕາດອກເບ້ຍ) ເພື່ອໃຫ້ ສິນເຊື່ອແກ່ທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງ ທີ່ຖືຮຸ້ນໂດຍຄົນລາວ 100% ເພື່ອໃຫ້ສາມາດດຳເນີນທຸລະກິດຕໍ່ ໄປ ແລະ ຂະຫຍາຍທຸລະກິດ. ເງິນຕົ້ນຂອງເງິນໃຫ້ກູ້ຢືມຈະຖືກຊຳລະຕອນທ້າຍໄລຍະເວລາເງິນກູ້. ໄລຍະເວລາການກູ້ຢືມ ແມ່ນເລີ່ມຕົ້ນວັນທີ 28 ທັນວາ 2023 ເຖິງ ວັນທີ 8 ທັນວາ 2034.

24. ອາກອນ

24.1 ລາຍຈ່າຍອາກອນກຳໄລ

ອົງປະກອບສຳຄັນຂອງລາຍຈ່າຍອາກອນ ມີດັ່ງລຸ່ມນີ້:

	2023 ລ້ານກີບ	2022 ລ້ານກີບ
ລາຍຈ່າຍອາກອນກຳໄລພາຍໃນປີ	(40.272)	(48.184)
ລາຍຮັບອາກອນເຍື້ອນຊຳລະ	(11.440)	79.295
ລວມລາຍຈ່າຍອາກອນພາຍໃນປີ	**(51.712)**	**31.111**

24.2 ອາກອນກຳໄລໃນປີ ("PT")

ທະນາຄານມີພັນທະຕ້ອງຈ່າຍອາກອນກຳໄລໃນອັດຕາ 20% (2022: 20%) ຂອງກຳໄລກ່ອນອາກອນ ໂດຍໃຫ້ສອດຄ່ອງກັບກົດໝາຍອາກອນ.

ການຄິດໄລ່ຂອງອາກອນກຳໄລສຳລັບປີ 2023 ແລະ 2022 ແມ່ນມີດັ່ງຕໍ່ໄປນີ້:

	2023 ລ້ານກີບ	2022 ລ້ານກີບ
ກຳໄລກ່ອນອາກອນ	**283.120**	**197.079**
ດັດແກ້ສຳລັບ:		
ມູນຄ່າຫຼຸດຕົ້ນທຶນຂອງການລົງທຶນທາງການເງິນ - ປະເພດໄວ້ຈົນເຖິງວັນຄົບກຳນົດ	3.176	3.077
- ມູນຄ່າຫຼຸດຕົ້ນທຶນຂອງເງິນໃຫ້ກູ້ຢືມແກ່ລູກຄ້າ	138.126	(281.447)
- ເງິນແຮ່ຄ່າເສື່ອມຂອງເງິນໃຫ້ກູ້ຢືມແກ່ລູກຄ້າ	(32.319)	261.433
ເງິນອຸດໜູນສຳລັບຜົນປະໂຫຍດພາຍຫຼັງອອກການ	(2.245)	(6.855)
ກຳໄລທີ່ບໍ່ສາມາດຫັກອາກອນຈາກການລົງທຶນໃນວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມໂດຍການຄິດໄລ່ກຳໄລຕາມສັດສ່ວນຮຸ້ນ	(44.142)	(29.266)
ກຳໄລກ່ອນອາກອນຕາມເອກະສານລາຍງານການເງິນ ຂອງ ລະບຽບການ ແລະ ແຈ້ງການທີ່ກ່ຽວຂ້ອງ ຂອງ ທະນາຄານແຫ່ງ ສປປ ລາວ	**345.716**	**144.021**
ອັດຕາອາກອນ 20% (2022: 20%)	**69.143**	**28.804**
ເພີ່ມຂຶ້ນ/(ຫຼຸດລົງ):		
- ລາຍຮັບທີ່ຍົກເວັ້ນອາກອນກຳໄລ	(3.019.740)	(3.924.746)
- ລາຍຈ່າຍທີ່ບໍ່ໃຫ້ຖືເປັນລາຍຈ່າຍ	2.988.058	3.942.513
- ລາຍການປັບອື່ນໆ	2.811	1.613
ລາຍຈ່າຍອາກອນທັງໝົດໃນປີ	**40.272**	**48.184**

24. ອາກອນ (ຕໍ່)

24.2 ອາກອນກຳໄລໃນປີ ("PT") (ຕໍ່)

	2023 ລ້ານກີບ
ກຳໄລກ່ອນອາກອນ	**283.120**
ອັດຕາອາກອນ 20%	56.624
ຜົນກະທົບຈາກອາກອນ	
ຜົນກະທົບຈາກອາກອນລາຍຈ່າຍທີ່ບໍ່ໃຫ້ຖືເປັນລາຍຈ່າຍ	3.030.026
ຜົນກະທົບຈາກອາກອນຂອງລາຍຮັບທີ່ຍົກເວັ້ນອາກອນກຳໄລ	(3.037.749)
ລາຍການປັບອື່ນໆ	2.811
ລາຍຈ່າຍອາກອນພາຍໃນປີ	**51.712**

	2023 ລ້ານກີບ	2022 ລ້ານກີບ
ລາຍຈ່າຍອາກອນທັງໝົດໃນປີ	**40.272**	**48.184**
ອາກອນກຳໄລຕ້ອງຈ່າຍຕົ້ນປີ	21.907	(24.015)
ຈ່າຍໃນປີ	(34.725)	(2.262)
ອາກອນຄ້າງຊຳລະໃນທ້າຍປີ	**27.454**	**21.097**

ການແຈ້ງອາກອນຂອງທະນາຄານຕ້ອງໄດ້ຮັບການກວດກາໂດຍກົມສ່ວຍສາອາກອນ. ເນື່ອງຈາກກົດໝາຍ ແລະກົດລະບຽບທາງດ້ານສ່ວຍສາອາກອນແມ່ນຖືກນຳໃຊ້ກັບລາຍການເຄື່ອນໄຫວຫຼາຍປະເພດເຊິ່ງອາດຈະມີການຕີຄວາມໝາຍທີ່ແຕກຕ່າງກັນ, ຈຳນວນເງິນທີ່ໄດ້ສະແດງຢູ່ໃນເອກະສານລາຍງານການເງິນ ສຳລັບປີອາດຈະຖືກປ່ຽນແປງຫຼັງຈາກມື້ໄລ່ລຽງຂອງ ກົມສ່ວຍສາອາກອນ.

24.3 ອາກອນຊັບສິນ(ໜີ້ສິນ)ເຍື້ອນຊຳລະ

	ໃນລາຍງານຖານະການເງິນ		ໃນລາຍງານຜົນໄດ້ຮັບ		ໃນລາຍງານຜົນໄດ້ຮັບສັງລວມ	
	2023 ລ້ານກີບ	2022 ລ້ານກີບ	2023 ລ້ານກີບ	2022 ລ້ານກີບ	2023 ລ້ານກີບ	2022 ລ້ານກີບ
ອາກອນຊັບສິນເຍື້ອນຊຳລະ	140.398	121.615	18.783	77.522	-	211
ອາກອນໜີ້ສິນເຍື້ອນຊຳລະ	(37.585)	(5.095)	(30.223)	1.773	(2.267)	-
ອາກອນຊັບສິນເຍື້ອນຊຳລະ, ສຸດທິ	**102.813**	**116.520**				
ອາກອນລໍຖ້າຊຳລະສະສາງສຸດທິທີ່ຕ້ອງປັນທຶກ/ລ້າງອອກໃນໃບລາຍງານຜົນໄດ້ຮັບ			**(11.440)**	**79.925**		
ອາກອນລໍຖ້າຊຳລະສະສາງສຸດທິທີ່ຕ້ອງປັນທຶກເຂົ້າໃນໃບລາຍງານຜົນໄດ້ຮັບສັງລວມ					**(2.267)**	**211**

25. ໜີ້ສິນອື່ນໆ

	2023 ລ້ານກີບ	2022 ລ້ານກີບ
ລາຍການລໍຖ້າສະສາງ	250.712	163.936
ພາລະຜູກພັນຂອງຜົນປະໂຫຍດທີ່ກຳນົດໄວ້ຫຼັງອອກການ	63.216	75.310
ລາຍຈ່າຍອາກອນຄ້າງຈ່າຍອື່ນໆ	53.007	55.238
ໜີ້ຕ້ອງສົ່ງພະນັກງານ	34.357	13.347
ໜີ້ຕ້ອງສົ່ງຜູ້ສະໜອງ	34.354	26.643
ອື່ນໆ	50.482	13.084
	486.128	**347.558**

ການປ່ຽນແປງກຳນົດແຜນຜົນປະໂຫຍດອອກຈາກການມີດັ່ງລຸ່ມນີ້:

	2023 ລ້ານກີບ	2022 ລ້ານກີບ
ໃນວັນທີ 1 ມັງກອນ	75.310	70.026
ຕົ້ນທຶນບໍລິການປັດຈຸບັນ	3.146	4.355
ລາຍຈ່າຍດອກເບ້ຍ	4.080	4.933
ສ່ວນຕ່າງທີ່ເກີດຈາກການປ່ຽນແປງຂໍ້ສົມມຸດຖານທາງການເງິນ	(11.334)	1.053
ຜົນປະໂຫຍດທີ່ຖືກຈ່າຍ	(7.986)	(5.058)
ໃນວັນທີ 31 ທັນວາ	**63.216**	**75.310**

ລາຍຈ່າຍທາງດ້ານຜົນປະໂຫຍດສຸດທິ (ຖືກຮັບຮູ້ໃນກຳໄລ ຫຼື ຂາດທຶນ)**:**

	2023 ລ້ານກີບ	2022 ລ້ານກີບ
ຕົ້ນທຶນບໍລິການປະຈຸບັນ	3.146	4.355
ລາຍຈ່າຍດອກເບ້ຍ	4.080	4.933
	7.226	**9.288**

ຂໍ້ສົມມຸດຕົ້ນຕໍທີ່ໃຊ້ໃນການກຳນົດພັນທະດ້ານຜົນປະໂຫຍດຫຼັງການຈ້າງງານ ສຳລັບແຜນການຂອງທະນາຄານແມ່ນສະແດງຢູ່ລຸ່ມນີ້:

	2023 %	2022 %
ອັດຕາສ່ວນຫຼຸດ	5,00 – 8,00	5,00 - 10,40
ການເພີ່ມຂຶ້ນເງິນເດືອນໃນອະນາຄົດ	2,35	0,91
ອັດຕາການໝຸນຂອງພະນັກງານ	2,91	4,24

25. ໜີ້ສິນອື່ນໆ (ຕໍ່)

ການວິເຄາະຄວາມອ່ອນໄຫວທາງດ້ານປະລິມານສຳລັບຂໍ້ສົມມຸດຖານທີ່ສຳຄັນ ໃນວັນທີ 31 ທັນວາ ແມ່ນສະແດງດັ່ງລຸ່ມນີ້:

	2023 ລ້ານກີບ	2022 ລ້ານກີບ
ອັດຕາສ່ວນຫຼຸດ		
ເພີ່ມຂຶ້ນ 50 ຈຸດ	(3.214)	(4.432)
ຫຼຸດລົງ 50 ຈຸດ	3.476	4.832
ການເພີ່ມເງິນເດືອນໃນອະນາຄົດ		
ເພີ່ມຂຶ້ນ 50 ຈຸດ	5.283	5.154
ຫຼຸດລົງ 50 ຈຸດ	(5.729)	(4.745)

26. ທຶນຈົດທະບຽນ

ຮຸ້ນຈົດທະບຽນທັງໝົດເຊິ່ງແມ່ນມີ 207.723.300 ຮຸ້ນ (2022: 207.723.300 ຮຸ້ນ) ມີລາຄາ 5.000 ກີບ ຕໍ່ຮຸ້ນ (2022: 5.000 ກີບ ຕໍ່ຮຸ້ນ) ຮຸ້ນທັງໝົດໄດ້ອອກແລະຊຳລະເຕັມມູນຄ່າແລ້ວ.

27. ສຳຮອງຕາມລະບຽບການ

	ຄັງສະສົມຕາມ ລະບຽບການ ລ້ານກີບ	ຄັງຂະຫຍາຍ ທຸລະກິດ ແລະ ຄັງອື່ນໆ ລ້ານກີບ	ລວມ ລ້ານກີບ
ໃນວັນທີ 31 ທັນວາ 2021	**228.135**	**603.532**	**831.667**
ແບ່ງສ່ວນເຂົ້າຄັງສະສົມສຳລັບປີ 2021	496	4.472	4.968
ໃນວັນທີ 31 ທັນວາ 2022	**228.631**	**608.004**	**836.635**
ແບ່ງສ່ວນເຂົ້າຄັງສະສົມສຳລັບປີ 2022	9.583	65.483	75.066
ໃນວັນທີ 31 ທັນວາ 2023	**238.214**	**673.487**	**911.701**

28. ລາຍລະອຽດເພີ່ມເຕີມກ່ຽວກັບກະແສເງິນສົດ

ເງິນສົດ ແລະ ທຽບເທົ່າເງິນສົດລວມຢູ່ໃນໃບລາຍງານກະແສເງິນສົດ ປະກອບມີມູນຄ່າຂອງໃບລາຍງານຖານະການເງິນ ເຊິ່ງມີລາຍລະອຽດດັ່ງນີ້:

	2023 ລ້ານກີບ	2022 ລ້ານກີບ
ເງິນຝາກກະແສລາຍວັນຢູ່ທະນາຄານແຫ່ງ ສປປ ລາວ	15.450.480	21.205.571
ເງິນຝາກກະແສລາຍວັນຢູ່ທະນາຄານອື່ນໆ	11.804.977	7.033.415
ເງິນສົດ ແລະ ທຽບເທົ່າເງິນສົດໃນຄັງ	5.171.078	3.839.776
ເງິນຝາກມີກຳນົດພາຍໃນ 90 ວັນ	5.166.610	3.636.308
	37.593.145	**35.715.070**

29. ໜີ້ສິນທີ່ອາດເກີດຂຶ້ນ ແລະ ຂໍ້ຜູກພັນ

	2023 ລ້ານກີບ	2022 ລ້ານກີບ
ວົງເງິນສິນເຊື່ອໃຫ້ແກ່ລູກຄ້າ (ii)	8.425.014	2.890.791
ວົງເງິນສິນເຊື່ອໃຫ້ແກ່ທະນາຄານອື່ນ (ii)	36.000	-
ໜັງສືສິນເຊື່ອກັບທີ່	1.241.528	796.757
ໜັງສືຄ້ຳປະກັນທາງການເງິນ (i)	574.835	698.175
	10.277.377	**4.385.723**

(i) ໜັງສືຄ້ຳປະກັນທາງການເງິນ

ໜັງສືສິນເຊື່ອ, ໜັງສືຄ້ຳປະກັນ (ລວມທັງໜັງສືສິນເຊື່ອເພື່ອຄ້ຳປະກັນ) ແລະ ໜັງສືໃດໜຶ່ງທີ່ເຮັດໃຫ້ທະນາຄານຕ້ອງເປັນຜູ້ຈ່າຍເງິນແທນລູກຄ້າໃນກໍລະນີທີ່ລູກຄ້າຜິດສັນຍາ. ໜັງສືຄ້ຳປະກັນ ແລະ ໜັງສືສິນເຊື່ອເພື່ອຄ້ຳປະກັນ ຖືວ່າມີຄວາມສ່ຽງຄ້າຍຄືກັບເງິນກູ້. ໜັງສືຄ້ຳປະກັນສາມາດເຮັດເປັນຮູບແບບໃບບິນແລກປ່ຽນ ຫຼື ໃນຮູບແບບໜັງສືສິນເຊື່ອບໍ່ສາມາດຖອນຄືນໄດ້, ໜັງສືຄ້ຳປະກັນເງິນລ່ວງໜ້າ ແລະ ໜັງສືຮັບຮອງໜີ້ຈາກບິນສ່ວນຫຼຸດ (ລວມທັງໜັງສືສິນເຊື່ອເພື່ອຄ້ຳປະກັນ).

(ii) ວົງເງິນສິນເຊື່ອໃຫ້ແກ່ລູກຄ້າແລະທະນາຄານອື່ນ

ບັນດາຂໍ້ຜູກພັນສຳລັບຕໍ່ອາຍຸສັນຍາສິນເຊື່ອແມ່ນມີໄວ້ສຳລັບເງິນກູ້ ແລະ ເງິນກູ້ໝຸນວຽນ. ຂໍ້ຜູກພັນໂດຍທົ່ວໄປມີມື້ຄົບກຳນົດທີ່ໄດ້ກຳນົດໄວ້, ຫຼື ສາເຫດຂອງການຢຸດຕິສັນຍາອື່ນໆ. ດັ່ງນັ້ນ,ຂໍ້ຜູກພັນອາດຈະໝົດກຳນົດໂດຍທີ່ຍັງບໍ່ໄດ້ຖືກຖອນ, ມູນຄ່າໃນສັນຍາທັງໝົດບໍ່ຈຳເປັນຕ້ອງລາຍງານຢູ່ໃບລາຍງານກະແສເງິນສົດ. ເຖິງຢ່າງໃດກໍຕາມ, ໂອກາດຄ່າເສື່ອມໜີ້ເສຍຈະເກີດຂຶ້ນແມ່ນຕ່ຳກວ່າມູນຄ່າທັງໝົດຂອງບັນດາຂໍ້ຜູກພັນທີ່ຍັງບໍ່ໄດ້ຖືກນຳໃຊ້. ເນື່ອງຈາກວ່າ, ຂໍ້ຜູກພັນໃນການຕໍ່ອາຍຸສິນເຊື່ອແມ່ນຄວາມບັງເອີນ ໃນເມື່ອລູກຄ້າຍັງຮັກສາມາດຕະຖານສະເພາະທີ່ໄດ້ກຳນົດໄວ້. ທະນາຄານຕິດຕາມມື້ຄົບກຳນົດຂອງຂໍ້ຜູກພັນສິນເຊື່ອ, ເພາະວ່າຂໍ້ຜູກພັນທີ່ມີອາຍຸສັນຍາທີ່ຍາວນານ ໂດຍທົ່ວໄປແມ່ນມີລະດັບຄວາມສ່ຽງສິນເຊື່ອຫຼາຍກວ່າ ຂໍ້ຜູກພັນທີ່ມີອາຍຸສັນຍາສັ້ນ.

30. ຍັນດາລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ

ລາຍການເຄື່ອນໄຫວທີ່ສຳຄັນທີ່ກ່ຽວຂ້ອງກັບພາກສ່ວນທີ່ກ່ຽວຂ້ອງ ພາຍໃນປີ 2023 ມີລາຍລະອຽດຄືດັ່ງລຸ່ມນີ້:

(ກ) ບໍລິສັດແມ່

ທະນາຄານຖືກຄອບຄຸມໂດຍພາກສ່ວນດັ່ງຕໍ່ໄປນີ້:

ຊື່	ປະເພດ	ທີ່ຢູ່ຈົດທະບຽນ
ກະຊວງການເງິນແຫ່ງ ສປປ ລາວ (“ກງ”)	ບໍລິສັດແມ່	ສປປ ລາວ

ສ່ວນທີ່ເຫຼືອ 40% ຂອງການຖືຮຸ້ນທີ່ຖືໂດຍບຸກຄົນອື່ນ

(ຂ) ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ

ລາຍການຕໍ່ໄປນີ້ເປັນລາຍການກັບພາກສ່ວນທີ່ກ່ຽວຂ້ອງ

	2023 ລ້ານກີບ	2022 ລ້ານກີບ
ດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ		
ບໍລິສັດແມ່	513.795	293.105

(ຄ) ຍອດຄ້າງຈ່າຍໃນມື້ສິ້ນສຸດຂອງບົດລາຍງານທີ່ກ່ຽວຂ້ອງກັບລາຍການເຄື່ອນໄຫວຂອງພາກສ່ວນທີ່ກ່ຽວຂ້ອງມີດັ່ງນີ້:

ຍອດຄົງຄ້າງໃນວັນທີສິ້ນສຸດງວດທີ່ໄດ້ເຮັດລາຍການກັບພາກສ່ວນທີ່ກ່ຽວຂ້ອງດັ່ງລຸ່ມນີ້:

	2023 ລ້ານກີບ	2022 ລ້ານກີບ
ເງິນຝາກຢູ່ທະນາຄານອື່ນ		
ວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ	2.978.124	1.674.875
ການລົງທຶນທາງການເງິນ - ປະເພດຖືໄວ້ຈົນຄົບກຳນົດ		
ບໍລິສັດແມ່	15.025.830	5.015.632
ຊັບສິນອື່ນໆ		
ບໍລິສັດແມ່	233.527	104.679
ວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ	5.020	5.249
ເງິນຝາກຈາກທະນາຄານ ແລະ ສະຖາບັນການເງິນອື່ນໆ		
ວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ	2.175.996	2.008.538

30. ຍັນດາລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

(ງ) ຄ່າຕອບແທນຜູ້ບໍລິຫານທີ່ສຳຄັນ

ຜູ້ບໍລິຫານທີ່ສຳຄັນຂອງທະນາຄານລວມເຖິງ ສະມາຊິກສະພາບໍລິຫານ ແລະ ຄະນະອຳນວຍການ. ຄ່າຕອບແທນທີ່ຈ່າຍແລະຄ້າງຈ່າຍສຳລັບຜູ້ບໍລິຫານສຳຄັນ ມີດັ່ງນີ້:

	2023 ລ້ານກີບ	2022 ລ້ານກີບ
ເງິນເດືອນ ແລະຜົນປະໂຫຍດໄລຍະສັ້ນ	3.055	2.807

31. ກຳໄລຕໍ່ຮຸ້ນ

	2023	2022
ກຳໄລຕໍ່ຮຸ້ນຂັ້ນພື້ນຖານ		
ຈາກການດຳເນີນງານຕໍ່ເນື່ອງທີ່ເປັນຂອງຜູ້ຖືຮຸ້ນສາມັນຂອງທະນາຄານ (ລ້ານກີບ)	231.408	228.190
ຈຳນວນສະເລ່ຍຂອງຮຸ້ນສາມັນທີ່ໃຊ້ສຳລັບການຄິດໄລ່ກຳໄລຕໍ່ຮຸ້ນ ພື້ນຖານ (ຮຸ້ນ)	207.723.300	207.723.300
ກຳໄລຕໍ່ຮຸ້ນຂັ້ນພື້ນຖານທີ່ເປັນສ່ວນຂອງຜູ້ຖືຮຸ້ນສາມັນຂອງທະນາຄານ (ກີບ)	1.114	1.099

32. ເງິນປັນຜົນ

ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີຈັດຂຶ້ນໃນວັນທີ 27 ເມສາ 2023, ໄດ້ອະນຸມັດການຈ່າຍເງິນປັນຜົນປະຈຳປີຈາກກຳໄລສຸດທິ ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2022 ຈຳນວນ 100 ກີບຕໍ່ຮຸ້ນ, ລວມເປັນເງິນທັງໝົດ 20.771 ລ້ານກີບ. ເງິນປັນຜົນແມ່ນໄດ້ຈ່າຍໃນວັນທີ 12 ພຶດສະພາ 2023.

33. ນະໂຍບາຍບໍລິຫານຄວາມສ່ຽງ

ຄຳນຳ

ຄວາມສ່ຽງໝາຍເຖິງຄວາມສ່ຽງໃນຕົວທີ່ເກີດຂຶ້ນກັບກິດຈະກຳຂອງທະນາຄານ ໂດຍຜ່ານຕົວຊີ້ບອກທີ່ຊັດເຈນ, ຜ່ານການ ວັດແທກ ແລະ ການຄວບຄຸມ, ຂອບເຂດຄວາມສ່ຽງ ແລະ ການຄຸ້ມຄອງອື່ນໆ. ການບໍລິຫານຄວາມສ່ຽງ ແມ່ນສິ່ງທີ່ສຳຄັນຕໍ່ ຄວາມສາມາດສ້າງກຳໄລຢ່າງຕໍ່ເນື່ອງຂອງທະນາຄານ ແລະ ພະນັກງານແຕ່ລະຄົນພາຍໃນທະນາຄານ ແມ່ນຕ້ອງຮັບຜິດຊອບຕໍ່ຄວາມສ່ຽງທີ່ເກີດຂຶ້ນ ເຊິ່ງກ່ຽວຂ້ອງກັບໜ້າທີ່ຂອງຕົນ.

ຈຸດປະສົງສຳຄັນຂອງທະນາຄານໃນການບໍລິຫານຄວາມສ່ຽງແມ່ນເພື່ອໃຫ້ສອດຄ່ອງກັບລະບຽບຂອງທະນາຄານກາງ ແລະ ອີກເຫດຜົນໜຶ່ງແມ່ນຍ້ອນທະນາຄານໄດ້ຮັບຮູ້ເຖິງຄວາມສຳຄັນຂອງການບໍລິຫານຄວາມສ່ຽງເພື່ອໃຫ້ສອດຄ່ອງຕາມການປະຕິບັດຂອງມາດຕະຖານສາກົນທີ່ດີທີ່ສຸດໃນການບໍລິຫານຄວາມສ່ຽງ. ຄະນະບໍລິຫານ ແລະ ຄະນະອຳນວຍການ, ພ້ອມດ້ວຍການສະໜັບສະໜຸນຈາກຄະນະກຳມະການບໍລິຫານຊັບສິນ ແລະ ໜີ້ສິນ ແມ່ນກຳລັງກຳນົດຕົວຜັນແປທີ່ຊັດເຈນຂອງຄວາມສ່ຽງທີ່ສາມາດຍອມຮັບໄດ້ຂອງທະນາຄານ ແລະ ຄວບຄຸມການປະຕິບັດທີ່ກົງກັນຂ້າມກັບຕົວຜັນແປນີ້.

33. ນະໂຍບາຍບໍລິຫານຄວາມສ່ຽງ (ຕໍ່)

ຄຳນຳ (ຕໍ່)

ສະພາໄດ້ແຕ່ງຕັ້ງຄະນະກຳມະການບໍລິຫານຊັບສິນ ແລະ ໜີ້ສິນ ເຊິ່ງຮັບຜິດຊອບກ່ຽວກັບການຄວບຄຸມການຈັດການຄວາມສ່ຽງ ໂດຍລວມຂອງທະນາຄານ.

ທະນາຄານມີຄວາມສ່ຽງທາງດ້ານສິນເຊື່ອ, ຄວາມສ່ຽງສະພາບຄ່ອງ ແລະ ຄວາມສ່ຽງທາງດ້ານຕະຫຼາດ, ຫຼັງຈາກນັ້ນໄດ້ແບ່ງອອກ ເປັນກຸ່ມຄວາມສ່ຽງຍ່ອຍຄື: ຄວາມສ່ຽງການຄ້າ ແລະ ຄວາມສ່ຽງບໍ່ແມ່ນການຄ້າ. ນອກນັ້ນ, ທະນາຄານຍັງມີຄວາມສ່ຽງອື່ນໆອີກທີ່ ເກີດຈາກການດຳເນີນງານ.

ຂະບວນການໃນການຄຸ້ມຄອງຄວາມສ່ຽງເອກະລາດ ບໍ່ໄດ້ລວມເອົາຄວາມສ່ຽງທຸລະກິດ ເຊັ່ນ: ການປ່ຽນແປງຂອງສະພາບ ແວດລ້ອມ, ເຕັກໂນໂລຊີ ແລະ ອຸດສາຫະກຳ. ນະໂຍບາຍຂອງທະນາຄານແມ່ນເພື່ອຄວບຄຸມຄວາມສ່ຽງທຸລະກິດຜ່ານຂັ້ນຕອນ ແລະ ແຜນຍຸດທະສາດຂອງທະນາຄານ.

ໂຄງສ້າງຂອງການຄຸ້ມຄອງຄວາມສ່ຽງ

ສະພາບໍລິຫານແມ່ນມີຄວາມຮັບຜິດຊອບສຳລັບການບໍລິຫານຄວາມສ່ຽງໂດຍລວມ ແລະ ສຳລັບການອະນຸມັດ ກົນລະຍຸດ ແລະ ຫຼັກການບໍລິຫານຄວາມສ່ຽງ.

ຄະນະກຳມະການບໍລິຫານຊັບສິນ ແລະ ໜີ້ສິນມີຄວາມຮັບຜິດຊອບໃນການພັດທະນາກົນລະຍຸດ ແລະ ຫຼັກການໂດຍລວມ, ຂອບ ເຂດວຽກ, ນະໂຍບາຍ ແລະ ຂອບເຂດ. ພະແນກປະຕິບັດຕາມ ແລະ ຄວາມສ່ຽງ ແມ່ນຮັບຜິດຊອບໃນການຕັດສິນໃຈ ແລະ ຄວບ ຄຸມຄວາມສ່ຽງ ແລະ ລາຍງານໃຫ້ສະພາບໍລິຫານຮັບຮູ້.

ນະໂຍບາຍຂອງທະນາຄານແມ່ນຂັ້ນຕອນການຈັດການຄວາມສ່ຽງໂດຍທີ່ທະນາຄານໄດ້ຖືກກວດສອບປະຈຳປີ. ເຊິ່ງຜ່ານການກວດ ສອບນີ້ຈະຮູ້ໄດ້ວ່າທະນາຄານສາມາດປະຕິບັດໄດ້ຕາມຂັ້ນຕອນທີ່ວາງໄວ້ ຫຼື ບໍ່. ພະແນກກວດກາພາຍໃນໄດ້ປຶກສາຫາລື ຜົນຂອງ ການປະເມີນຄວາມສ່ຽງ ແລະ ລາຍງານສິ່ງທີ່ພົບເຫັນ ແລະ ຄຳແນະນຳໃຫ້ຄະນະກຳມະການກວດສອບ.

34. ເຫດການທີ່ເກີດຂຶ້ນຫຼັງມື້ທີ່ອອກເອກະສານລາຍງານ

ການອະນຸມັດຈ່າຍເງິນປັນຜົນ

ກອງປະຊຸມສະພາບໍລິຫານ ເລກທີ. 009/ທຄຕລ.ສພຫ ຈັດຂຶ້ນໃນວັນທີ 22 ມີນາ 2024, ສະພາບໍລິຫານໄດ້ອະນຸມັດຈ່າຍ ເງິນປັນຜົນສຳລັບກຳໄລປະຈຳປີໃນມູນຄ່າ 300 ກີບ ຕໍ່ຮຸ້ນ, ເປັນມູນຄ່າທັງໝົດ 62.317 ລ້ານກີບ.

ເງິນປັນຜົນທີ່ຖືກອະນຸມັດຈະຈ່າຍໃນວັນທີ 14 ພຶດສະພາ 2024

35. ອັດຕາແລກປ່ຽນທີ່ນຳໃຊ້ກັບສະກຸນເງິນຕາຕ່າງປະເທດ ທຽບເທົ່າເງິນກີບລາວໃນທ້າຍປີ

	2023 ກີບ	2022 ກີບ
ໂດລາ	20.468,00	17.220,00
ເອີໂຣ	22.603,00	18.287,00
ບາດໄທ	635,51	498,22
ປอนอังกິด	25.723,00	20.593,00
ເຢນຍີ່ປຸ່ນ	144,10	129,82
ໂດລາອົດສະຕາລີ	13.871,00	11.558,00
ยอนจีน	2.954,00	2.456,00

ແຜນດຳເນີນງານຂອງ ທຄຕລ ປະຈຳປີ 2024 ໂດຍສັງເຂບ

ປີ 2024 ຍັງຈະເປັນອີກປີໜຶ່ງທີ່ການດຳເນີນທຸລະກິດຂອງ ທຄຕລ ສືບຕໍ່ປະເຊີນກັບສິ່ງທ້າທາຍຫຍຸ້ງຍາກຫຼາຍດ້ານ ຈາກຜົນກະທົບໂດຍລວມຂອງສະພາບເສດຖະກິດໂລກ, ພາກພື້ນ ແລະ ເສດຖະກິດມະຫາພາກ ເປັນຕົ້ນ ແມ່ນ ການເພີ່ມຂຶ້ນຂອງອັດຕາເງິນເຟີ້ໃນລະດັບທີ່ສູງໃນຮອບຫຼາຍປີ ບວກໃສ່ກັບຂໍ້ຂັດແຍ່ງທາງດ້ານການເມືອງ ແລະ ການທະຫານໃນຂົງເຂດເອີຣົບ ແລະ ຕາເວັນອອກກາງ ເຊິ່ງເຮັດໃຫ້ລາຄາພະລັງງານ ແລະ ລາຄາສະບຽງອາຫານເພີ່ມຂຶ້ນຫຼາຍເທົ່າຕົວ ສົ່ງຜົນກະທົບເຮັດໃຫ້ຫຼາຍປະເທດໃນໂລກປະເຊີນກັບພາວະເງິນເຟີ້. ຕໍ່ກັບສະພາບດັ່ງກ່າວ, ບັນດາທະນາຄານກາງ ຂອງແຕ່ລະປະເທດ ໄດ້ດຳເນີນນະໂຍບາຍເງິນຕາ ເພື່ອຄວບຄຸມອັດຕາເງິນເຟີ້ ຜ່ານເຄື່ອງມືນະໂຍບາຍທີ່ຮັດກຸມ ແລະ ສອດຄ່ອງກັບສະພາບເສດຖະກິດຂອງຕົນ. ສຳລັບເສດຖະກິດ ສປປ ລາວ ປີ 2024 ຄາດວ່າຈະຂະຫຍາຍຕົວ 4%[1] ແຕ່ເຖິງຢ່າງໃດກໍ່ຕາມ ເສດຖະກິດຂອງ ສປປ ລາວ ຍັງຈະສືບຕໍ່ປະເຊີນຄວາມທ້າທາຍຫຼາຍດ້ານ ນອກຈາກອັດຕາເງິນເຟີ້ທີ່ສູງແລ້ວ ຍັງພົບບັນຫາຂາດແຄນແຮງງານ, ການຂາດດຸນການຄ້າ ລວມທັງຜົນກະທົບຈາກເສດຖະກິດທີ່ບໍ່ມີຄວາມແນ່ນອນຫຼາຍດ້ານ. ນອກນັ້ນ, ການເພີ່ມຂຶ້ນຂອງລະດັບໜີ້ສິນສາທາລະນະ, ການເກັບລາຍຮັບບໍ່ໄດ້ດີ, ການອ່ອນຄ່າຂອງເງິນກີບ, ການຜະລິດພາຍໃນບໍ່ເຂັ້ມແຂງ ແລະ ການນຳໃຊ້ເງິນຕາຕ່າງປະເທດຫຼາຍສະກຸນໃນສັງຄົມ ຍັງເປັນສິ່ງທ້າທາຍສຳລັບການຂະຫຍາຍຕົວຂອງເສດຖະກິດ ໃນປີ 2024. ເຖິງຢ່າງໃດກໍ່ຕາມ, ລັດຖະບານລາວ ແມ່ນຖືເອົາການທ່ອງທ່ຽວເປັນທ່າແຮງໜຶ່ງທີ່ສຳຄັນໃນການກະຕຸ້ນເສດຖະກິດໃນປັດຈຸບັນ.

ຈາກປັດໄຈດ້ານຕ່າງໆທີ່ກ່າວມານັ້ນ, ການສ້າງແຜນດຳເນີນທຸລະກິດປະຈຳປີ 2024 ຂອງ ທຄຕລ ແມ່ນໄດ້ອີງໃສ່ສະພາບທຸລະກິດຂອງຕົນໃນໄລຍະຜ່ານມາເປັນຫຼັກ ເພື່ອໄລ່ລຽງກຳນົດບັນດາຕົວເລກແຜນການດ້ານຕ່າງໆ ບວກກັບການໄລ່ລຽງທາງດ້ານເສດຖະກິດທັງພາຍໃນ ແລະ ພາກພື້ນສາກົນ ທັງນີ້ກໍ່ເພື່ອຮັບປະກັນໃຫ້ການດຳເນີນທຸລະກິດຂອງ ທຄຕລ ມີລັກສະນະຍືນຍົງ ທັງສາມາດແກ້ໄຂບັນຫາທີ່ບົ່ມຊ້ອນໃນການດຳເນີນທຸລະກິດໃນໄລຍະຜ່ານມາໄປເທື່ອລະກ້າວ, ເຊິ່ງສາມາດກຳນົດເປັນເປົ້າໝາຍສູ້ຊົນໄດ້ດັ່ງລາຍລະອຽດລຸ່ມນີ້:

1. ວິໄສທັດ ທຄຕລ

ທຄຕລ ໄດ້ກຳນົດວິໄສທັດລວມຂອງຕົນຕາມແຜນຍຸດທະສາດໄລຍະຍາວ ແຕ່ປີ 2021-2025 ຄື **"ເປັນທະນາຄານທີ່ເຂັ້ມແຂງ ທັນສະໄໝ ໄດ້ມາດຕະຖານສາກົນ"**.

2. ພາລະກິດ

ເພື່ອເຮັດໃຫ້ ທຄຕລ ກາຍ ເປັນທະນາຄານທີ່ເຂັ້ມແຂງ ທັນສະໄໝ ໄດ້ມາດຖານສາກົນ ນັ້ນ ພາລະກິດຫຼັກທີ່ສຳຄັນຂອງ ທຄຕລ ທີ່ຈະຕ້ອງໄດ້ສຸມໃສ່ແມ່ນ ການພັດທະນາປັບປຸງດ້ານບໍລິການໃຫ້ແທດເໝາະກັບໄລຍະການປ່ຽນໃໝ່, ສ້າງຄວາມເຂັ້ມແຂງໝັ້ນຄົງທາງດ້ານການເງິນ, ປະຕິບັດຕາມຫຼັກການບາເຊ ອ 2, ພັດທະນາລະບົບໄອທີ ແລະ ເທັກໂນໂລຊີທີ່ທັນສະໄໝ ເຂົ້າໃນລະບົບບໍລິການ, ພັດທະນາດ້ານລະບົບຂໍ້ມູນຂ່າວສານໃຫ້ຖືກຕ້ອງ, ຊັດເຈນ ໂປ່ງໃສ, ວ່ອງໄວ ແລະ ຮັບປະກັນຄວາມປອດໄພໄດ້ມາດຖານສາກົນ. ພ້ອມນັ້ນ, ກໍ່ເນັ້ນໃສ່ການພັດທະນາບຸກຄະລາກອນໃນແຕ່ລະດ້ານໃຫ້ມີຄຸນນະພາບ, ມີຄວາມຊຳນິຊຳນານສະເພາະດ້ານ, ເປັນມືອາຊີບດ້ານການບໍລິການທະນາ ຄານ ເພື່ອຮອງກັບການປ່ຽນແປງ ແລະ ການພັດທະນາ ທຄຕລ ໃນທຸກດ້ານ, ສ້າງຄວາມເພິ່ງພໍໃຈໃຫ້ກັບລູກຄ້າທີ່ມາໃຊ້ບໍລິການ, ສ້າງປະສິດທິພາບທາງດ້ານການເງິນ ເພື່ອຜົນປະໂຫຍດສູງສຸດໃນແກ່ຜູ້ຖືຮຸ້ນ ທຄຕລ ແບບຍືນຍົງ.

[1] https://www.adb.org/news/lao-pdr-growth-slower-expected-2023-stable-outlook-2024-adb

3. ເປົ້າໝາຍການດຳເນີນງານ 2024

ເພື່ອເຮັດໃຫ້ການພັດທະນາຂອງ ທຄຕລ ສຳເລັດຕາມລະດັບຄາດໝາຍທີ່ວາງໄວ້ໃນທຸກໆດ້ານ ທຸກໆພາກສ່ວນຕ້ອງໄດ້ເພີ່ມທະວີຄວາມເອົາໃຈໃສ່ໃນການຈັດຕັ້ງປະຕິບັດບັນດາແຜນງານ, ໂຄງການ ຂອງ ທຄຕລ ໃຫ້ບັນລຸເປົ້າໝາຍທີ່ວາງໄວ້ໃນແຕ່ໄລຍະ ຄື:

- ຮັບປະກັນການຂະຫຍາຍຕົວຂອງທຸລະກິດ ທຄຕລ ໃຫ້ມີຄວາມສະຖຽນ, ເຂັ້ມແຂງທາງດ້ານການເງິນ ແລະ ຍືນຍົງ ທັງນີ້ເພື່ອສາມາດຮັບມືກັບສະພາບການປ່ຽນແປງ ແລະ ຜົນກະທົບຕ່າງໆໃນອານາຄົດ;
- ການບໍລິການທີ່ມີຄວາມທັນສະໄໝ ແລະ ນຳໃຊ້ນະວັດຕະກຳໃໝ່ໃນທຸລະກິດທະນາຄານ ເພື່ອຫັນສູ່ຮູບແບບການບໍລິການທີ່ເປັນ Digital Banking ໃຫ້ຫຼາຍຂຶ້ນ;
- ພັດທະນາບຸກຄະລາກອນຮອບດ້ານໃຫ້ເປັນຊ່ຽວຊານ ແລະ ເປັນມືອາຊີບ;
- ຍຶດຖືລູກຄ້າເປັນໃຈກາງໃນການຮັກສາຖານລູກຄ້າເກົ່າ, ຂະຫຍາຍຖານລູກຄ້າໃໝ່ ແລະ ການສ້າງຄວາມເພິ່ງພໍໃຈ;
- ສ້າງຜົນປະໂຫຍດທີ່ຍືນຍົງໃຫ້ແກ່ຜູ້ຖືຮຸ້ນ ທຄຕລ ແລະ ປະກອບເປັນສ່ວນໜຶ່ງຂອງສັງຄົມ;
- ເຮັດໃຫ້ທະນາຄານສາມາດປະຕິບັດໄດ້ເງື່ອນໄຂລະບຽບການ ຂອງບັນດາມາດຕະຖານຕ່າງໆຂອງສາກົນ.

4. ແຜນຖານະການເງິນທີ່ສຳຄັນປະຈຳປີ 2024:

ໃນປີ 2024 ທຄຕລ ຍັງຈະສືບຕໍ່ກຳນົດທິດທາງດຳເນີນທຸລະກິດຂອງຕົນເອງໃຫ້ມີລັກສະນະສູ້ຊົນ ແລະ ກ້າວໜ້າ, ທັງນີ້ກໍ່ເພື່ອເຮັດໃຫ້ຜົນການດຳເນີນທຸລະກິດໂດຍລວມອອກມາມີປະສິດທິຜົນ, ສ້າງຄວາມເຊື່ອໝັ້ນໃຫ້ແກ່ຜູ້ຖືຮຸ້ນ ເຊິ່ງລາຍລະອຽດມີດັ່ງນີ້:

- **ຍອດຊັບສິນ:** ບໍ່ໜ້ວ 140.795.000 ລ້ານກີບ, ທຽບໃສ່ການປະຕິບັດປີ 2023 ເພີ່ມຂຶ້ນ 11,36%;
- **ຍອດເງິນຝາກ:** ບໍ່ໜ້ວ 130.000.000 ລ້ານກີບ, ທຽບໃສ່ການປະຕິບັດປີ 2023 ເພີ່ມຂຶ້ນ 10,52%;
- **ຍອດເງິນກູ້ທັງໝົດ:** ບໍ່ໜ້ວ 59.470.000 ລ້ານກີບ, ທຽບໃສ່ການປະຕິບັດປີ 2023 ເພີ່ມຂຶ້ນ 13,93% (ຫຼື ຍອດເງິນກູ້ໃຫ້ກວມເອົາອັດຕາສ່ວນບໍ່ໜ້ວ 45% ຂອງຍອດເງິນຝາກທັງໝົດ);
- **ໜີ້ NPL ທັງໝົດ:** ບໍ່ເກີນ 3% ຂອງຍອດເງິນກູ້ທັງໝົດ;
- **ກຳໄລສຸດທິ (ຫຼັງຫັກອາກອນ):** ບໍ່ໜ້ວ 300.000 ລ້ານກີບ ທຽບໃສ່ປະຕິບັດປີ 2023 ເພີ່ມຂຶ້ນ 29,64%.

5. ແຜນປະກອບອັດຖເຕັກນິກ, ກໍ່ສ້າງ ແລະ ສ້ອມແປງ

ອີງໃສ່ແຫຼ່ງທຶນຂະຫຍາຍທຸລະກິດມີຈຳກັດ ສະນັ້ນການປະກອບອັດຖເຕັກນິກ, ກໍ່ສ້າງ ແລະ ສ້ອມແປງ ແມ່ນຈະເນັ້ນໃສ່ສືບຕໍ່ບັນດາໂຄງການທີ່ຍັງບໍ່ສຳເລັດ, ປ່ຽນແທນສິ່ງເກົ່າທີ່ເປ່ເພ ແລະ ປະກອບເພີ່ມໃໝ່ສິ່ງທີ່ຈຳເປັນ ລວມທັງໝົດຈຳນວນ 585,10 ຕື້ກີບ ເຊິ່ງຢູ່ໃນຂອບເຂດຂອງແຫຼ່ງທຶນທີ່ມີ.

6. ແຜນຂະຫຍາຍໜ່ວຍບໍລິການ

ປີ 2024 ທຄຕລ ມີແຜນຈະຂະຫຍາຍຕ່າໜ່າງບໍລິການ ໃນຂົງເຂດທີ່ເປັນຈຸດສຸມ ແລະ ມີທ່າແຮງທາງເສດຖະກິດ ໂດຍມີການວິເຄາະໄລ່ລຽງສະພາບການຂະຫຍາຍຕົວຂອງເສດຖະກິດເວົ້າລວມ ເວົ້າສະເພາະແມ່ນຜົນການດຳເນີນງານຂອງ ທຄຕລ ຊຶ່ງຈະມີການສຳຫຼວດເຖິງຄວາມເປັນໄປໄດ້ຄວາມເໝາະສົມ ຮັບປະກັນຄຸນນະພາບຢູ່ແຕ່ລະຂົງເຂດໃນແຕ່ລະໄລຍະ ເພື່ອສ້າງຜົນຕອບແທນສູງສຸດໃຫ້ແກ່ ທຄຕລ ທັງທາງກົງ ແລະ ທາງອ້ອມ. ສຳລັບແຜນປີ 2024 ກຳນົດແຜນຂະຫຍາຍຕາໜ່າງບໍລິການໃໝ່ 4 ແຫ່ງ ແລະ ຍົກຍ້າຍສະຖານທີ່ໜ່ວຍບໍລິການ 1 ແຫ່ງ ດັ່ງລາຍລະອຽດລຸ່ມນີ້:

ລ/ດ	ຊື່ໜ່ວຍບໍລິການ	ຂຶ້ນກັບສາຂາ	ໝາຍເຫດ
ຍົກຍ້າຍສະຖານທີ່ໃໝ່			
1	ໜ່ວຍບໍລິການດົງຄຳຊ້າງ	ສາຂາໄຊເສດຖາ	ຍົກຍ້າຍຈາກໜ່ວຍບໍລິການຕະຫຼາດຫຼັກຊັບ
ຂະຫຍາຍໃໝ່			
1	ໜ່ວຍບໍລິການໄຊມຸງຄຸນ	ສາຂາ ນະຄອນຫຼວງ	
2	ໜ່ວຍບໍລິການສະໜາມບິນສາກົນວັດໄຕ	ສາຂາ ນະຄອນຫຼວງ	
3	ໜ່ວຍບໍລິການຊຽງຮ່ອນ	ສາຂາໄຊຍະບູລີ	
4	ໜ່ວຍບໍລິການຊ່ອງເມັກ	ສາຂາຈຳປາສັກ	ຍົກລະດັບຫ້ອງແລກປ່ຽນ ເປັນໜ່ວຍບໍລິການ

7. ແຜນຮັບພະນັກງານໃໝ່

ສຳລັບປີ 2024 ທຄຕລ ໄດ້ຂຶ້ນແຜນຮັບພະນັກງານໃໝ່ ໂດຍສັງລວມຄວາມຕ້ອງການພະນັກງານຈາກບັນດາ ພະແນກ, ສູນ, ສາຂາ ໃນທົ່ວລະບົບ ທີ່ມີຄວາມຈຳເປັນ. ສຳລັບການປະກອບພະນັກງານໃໝ່ແມ່ນໄດ້ຄົ້ນຄວ້າບົນ ພື້ນຖານການໄລ່ລຽງທາງທຸລະກິດເປັນຕົ້ນຕໍ ເປັນຕົ້ນແມ່ນເພື່ອຮອງຮັບວຽກງານສະເພາະດ້ານທີ່ຈຳເປັນ ບໍ່ສາມາດ ສັບຊ້ອນພະນັກງານພາຍໃນໄດ້, ທົດແທນພະນັກງານທີ່ລາອອກໃນໄລຍະຜ່ານມາ, ປະກອບເຂົ້າໃນໂຄງຮ່າງການ ຈັດ ຕັ້ງ ແລະ ຕາໜ່ງໜ້ວຍບໍລິການທີ່ຂະຫຍາຍໃໝ່. ຫຼັກໆພາຍໃນປີ 2024 ແມ່ນຈະໄດ້ສືບຕໍ່ວຽກງານການສັບຊ້ອນ, ຈັດວາງພະນັກງານພາຍໃນໃຫ້ມີຄວາມເໝາະສົມ, ກະທັດຮັດ ແລະ ມີປະສິດທິພາບ. ຊຶ່ງແຜນການຮັບພະນັກງານໃ ໝ່ປະຈຳປີ 2024 ມີຈຳນວນທັງໝົດ 66 ຄົນ.

ຊີວະປະຫວັດ



1. ຂໍ້ມູນສ່ວນຕົວ:

- ຊື່ແລະນາມສະກຸນ: **ປອ. ອາຄົມ ປຣະເສີດ**
- ວັນເດືອນປີເກີດ: 3/5/1968
- ສັນຊາດ: ລາວ
- ທີ່ຢູ່ຫ້ອງການ: ສະຖາບັນການທະນາຄານ (Bank of the Lao PDR)

  ບ້ານຕານມີໄຊ, ເມືອງໄຊທານີ, ນະຄອນຫລວງວຽງຈັນ

2. ຄຸນວຸດທິດ້ານການສຶກສາ:

- 1985-1991: ຮຽນປະລິນຍາຕີ ວິຊາກົນຈັກຫນັກ, ມະຫາວິທະຍາໄລຂົວທາງ (TADY), ເມືອງທາສເຄນ, ປະເທດອຸສເບກິສຖານ (ອາດີດສະຫະພາບໂຊວຽດ);
- 1994-1996: ຮຽນປະລິນຍາໂທ ວິຊາບໍລິຫານທຸລະກິດ, ສະຖາບັນພັດທະນາບໍລິຫານສາດ (NIDA), ບາງກອກ, ປະເທດໄທ;
- 2002-2005: ຮຽນປະລິນຍາເອກ ວິຊາບໍລິຫານທຸລະກິດ, ມະຫາວິທະຍາໄລຂົນສົ່ງທາງນ້ຳ ສ.ເກົາຫລີ (KMU), ເມືອງປູຊານ, ປະເທດ ສ.ເກົາຫລີ;

3. ປະສົບການໃນການເຮັດວຽກ:

- 1992-1993: ເຮັດວຽກຢູ່ກະຊວງຄົມມະນາຄົມ, ໂຍທາທິການ ແລະ ຂົນສົ່ງ;
- 1997-2002: ຫົວຫນ້າພະແນກຄົ້ນຄວ້າເສດຖະກິດພາຍໃນ, ກົມຄົ້ນຄວ້າເສດຖະກິດ, ທະນາຄານແຫ່ງ ສປປ ລາວ;
- ມັງກອນ-ສິງຫາ/2005: ຫົວຫນ້າພະແນກຄົ້ນຄວ້າເສດຖະກິດຕ່າງປະເທດ, ກົມຄົ້ນຄວ້າເສດຖະກິດ, ທະນາຄານແຫ່ງ ສປປ ລາວ;
- ສິງຫາ/2005 - ກຸມພາ/2006: ຫົວຫນ້າພະແນກນະໂຍບາຍເງິນຕາ, ກົມນະໂຍບາຍເງິນຕາ, ທະນາຄານແຫ່ງ ສປປ ລາວ;
- ສິງຫາ/2006 - ກັນຍາ/2008: ເປັນສະມາຊິກສະພາບໍລິຫານ, ທະນາຄານພັດທະນາລາວ;
- ມັງກອນ/2007 - 2009: ຫົວຫນ້າຄະນະສ້າງແຜນຍຸດທະສາດພັດທະນາຂະແຫນງການເງິນ-ເງິນຕາຂອງ ສປປລາວ 2010-2020;

- ກຸມພາ/2007 - ກຸມພາ/2008: ຮອງຫົວໜ້າກົມຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນ, ທະນາຄານແຫ່ງ ສປປ ລາວ;
- ກຸມພາ/2008 - ສິງຫາ/2010: ຮອງຫົວໜ້າຄະນະສ້າງຕັ້ງຕະຫຼາດຫຼັກຊັບລາວ;
- ສິງຫາ/2010 - ກໍລະກົດ/2018: ຫົວໜ້າກົມຄຸ້ມຄອງສະຖາບັນການເງິນ, ທະນາຄານແຫ່ງ ສປປ ລາວ;
- ຕຸລາ/2010 - 2018: ເປັນສະມາຊິກສະພາບໍລິຫານ, ຕະຫຼາດຫຼັກຊັບລາວ;
- ຕຸລາ/2014 - 2018: ຫົວໜ້າຄະນະສ້າງແຜນຍຸດທະສາດພັດທະນາການເງິນ-ເງິນຕາ 2021-2025 ແລະ ວິໃສທັດຮອດປີ 2030.
- ກໍລະກົດ/2018 - ກໍລະກົດ/2021: ຜູ້ອຳນວຍການທະນາຄານພັດທະນາລາວ.
- ກໍລະກົດ 2021-ປັດຈຸບັນ: ຜູ້ອຳນວຍການສະຖາບັນການທະນາຄານ.

ຂໍ້ມູນເພີ່ມເຕີມ ກ່ຽວກັບ ການປ່ຽນແປງມູນຄ່າກຳນົດຮຸ້ນຂອງ ທຄຕລ

1. ທີ່ມາ ແລະ ຄວາມສຳຄັນຂອງບັນຫາ

ທຄຕລ ເປັນທະນາຄານທຳອິດທີ່ໄດ້ຈົດທະບຽນເຂົ້າໃນຕະຫຼາດຫຼັກຊັບລາວໃນປີ 2011 ໂດຍມີຈຳນວນຮຸ້ນທັງໝົດ 207.723.300 ຮຸ້ນ, ມູນຄ່າໜ້າຮຸ້ນ (Par Value): 5.000 ກີບ/ຮຸ້ນ. ໃນຈຳນວນນີ້, ຜູ້ຖືຮຸ້ນລາຍໃຫຍ່ ແມ່ນ ກະຊວງການເງິນຖືຮຸ້ນ 60%, ທະນາຄານ COFIBRED ຄູ່ຮ່ວມຍຸດທະສາດ 10% ແລະ ມະຫາຊົນທົ່ວໄປ 30%. ໃນ ໄລຍະຜ່ານມາ, ສະພາບການຊື້-ຂາຍຮຸ້ນໃນຕະຫຼາດຫຼັກຊັບລາວ ແມ່ນບໍ່ຄຶກຄື້ນເທົ່າທີ່ຄວນ. ຕົວຢ່າງ, ໄລຍະວັນທີ 01 ມັງກອນ 2023 ຫາ 30 ມິຖຸນາ 2023 ຈຳນວນຮຸ້ນ ທຄຕລ ທີ່ມີການ ຊື້-ຂາຍ ຫຼາຍສຸດຕໍ່ມື້ແມ່ນ 178.600 ຮຸ້ນ (ຕີມາ ເປັນມູນຄ່າ 852,40 ລ້ານກີບ) ກວມພຽງ 0,08% ຂອງຈຳນວນຮຸ້ນທັງໝົດ ແລະ ໃນບາງວັນບໍ່ມີການຊື້-ຂາຍ ເກີດຂຶ້ນ ເລີຍ.

ເພື່ອເພີ່ມສະພາບຄ່ອງຂອງ ການຊື້-ຂາຍ ຮຸ້ນໃນຕະຫຼາດຫຼັກຊັບ ແລະ ເພື່ອເຮັດໃຫ້ນັກລົງທຶນສາມາດເຂົ້າເຖິງ ຮຸ້ນໄດ້ຫຼາຍຂຶ້ນ ແລະ ມີລາຄາທີ່ຖືກລົງ ແຕ່ມູນຄ່າຫຼັກຊັບຕາມລາຄາຕະຫຼາດຍັງຄົງເດີມ, ທຄຕລ ຈຶ່ງໄດ້ຄົ້ນຄວ້າໂດຍ ສົມທົບກັບຜູ້ຄຸ້ມຄອງທີ່ກ່ຽວຂ້ອງ ໃນການປ່ຽນແປງມູນຄ່າກຳນົດຮຸ້ນ ຫຼື ມູນຄ່າໜ້າຮຸ້ນ (Par Value) ຂອງ ທຄຕລ ໂດຍການແຕກຮຸ້ນອອກ (Stock Split) ຕາມອັດຕາສ່ວນ 5/1 ໝາຍຄວາມວ່າຈາກເດີມລາຄາ 5.000 ກີບ/ຮຸ້ນ ເປັນ ລາຄາ 1.000 ກີບ/ຮຸ້ນ, ເຮັດໃຫ້ຈຳນວນຮຸ້ນຂອງ ທຄຕລ ເພີ່ມຂຶ້ນຈາກເດີມ 207.723.300 ຮຸ້ນ ເປັນ 1.038.616.500 ຮຸ້ນ ໂດຍທຶນຈົດທະບຽນຍັງຄົງເທົ່າເດີມ, ມູນຄ່າຫຼັກຊັບຕາມລາຄາຕະຫຼາດບໍ່ມີການປ່ຽນແປງ ແລະ ຍັງຄົງຮັກສາສັດສ່ວນການຖືຄອງຮຸ້ນຂອງຜູ້ຖືຮຸ້ນໄວ້ຕາມເດີມ.

2. ລາຍລະອຽດການປ່ຽນແປງມູນຄ່າກຳນົດຮຸ້ນ

ການປ່ຽນແປງມູນຄ່າກຳນົດຮຸ້ນໃນເທື່ອນີ້ ສາມາດອະທິບາຍຜ່ານຕາຕະລາງລຸ້ມນີ້:

ເນື້ອໃນ	ປະຈຸບັນ	ຫຼັງການປ່ຽນແປງ (ແຕກຮຸ້ນອັດຕາສ່ວນ 5:1)
ມູນຄ່າໜ້າຮຸ້ນ (Par Value)	5.000 ກີບ/ຮຸ້ນ	1.000 ກີບ/ຮຸ້ນ
ທຶນຈົດທະບຽນທັງໝົດ	1.038.616.500.000 ກີບ	1.038.616.500.000 ກີບ
ຈຳນວນຮຸ້ນ	207.723.300 ຮຸ້ນ	1.038.616.500 ຮຸ້ນ
ມູນຄ່າຕະຫຼາດທ້າຍ ກຸມພາ 2024	4.490 ກີບ/ຮຸ້ນ	898 ກີບ/ຮຸ້ນ
ລວມມູນຄ່າຕະຫຼາດທັງໝົດ	932.677.617.000 ກີບ	932.677.617.000 ກີບ

ສັງລວມການປັບປຸງກົດລະບຽບຂອງ ທຄຕລ ສະບັບປັບປຸງ ໃນປີ 2024

ມາດຕາທີ່ປັບປຸງ	**ເນື້ອໃນເດີມ ສະບັບປີ 2021**	**ເນື້ອໃນທີ່ປັບປຸງໃນປີ 2024**
ມາດຕາ 6 (ປັບປຸງ) ຮູບແບບຂອງ ທະນາຄານ	ທຄຕລ ມີຖານະເປັນນິຕິບຸກຄົນ, ມີຮູບແບບເປັນບໍລິສັດ ມະຫາຊົນ ແລະ ດຳເນີນການເຄື່ອນໄຫວທຸລະກິດ ພາຍໃຕ້ກົດໝາຍວ່າດ້ວຍທະນາຄານທຸລະກິດ ແລະ ກົດໝາຍອື່ນໆທີ່ກ່ຽວຂ້ອງ ຂອງ ສປປ ລາວ.	ທຄຕລ ມີຖານະເປັນນິຕິບຸກຄົນ, ມີຮູບແບບເປັນບໍລິສັດ ມະຫາຊົນ ແລະ ດຳເນີນການເຄື່ອນໄຫວທຸລະກິດ ພາຍໃຕ້ກົດ ໝາຍວ່າດ້ວຍ ທະນາຄານທຸລະກິດ, ກົດໝາຍ ແລະ ນິຕິກຳອື່ນໆທີ່ກ່ຽວຂ້ອງຂອງ ສປປ ລາວ.
ມາດຕາ 11 (ປັບປຸງ) ຮຸ້ນ	ຮຸ້ນຂອງ ທຄຕລ ມີທັງໝົດ 207.723.300 ຮຸ້ນ (ສອງຮ້ອຍເຈັດລ້ານເຈັດແສນຊາວສາມພັນສາມຮ້ອຍຮຸ້ນ) ແລະ ແຕ່ລະຮຸ້ນມີມູນຄ່າ 5.000 ກີບ (ຫ້າພັນກີບ) ລວມເປັນເງິນທັງໝົດ 1.038.616.500.000 ກີບ (ໜຶ່ງພັນສາມສິບແປດຕື້ຫົກຮ້ອຍສິບຫົກລ້ານຫ້າແສນກີບ). ຮຸ້ນຂອງ ທຄຕລ ບໍ່ສາມາດຖອນໄດ້ ແຕ່ສາມາດປ່ຽນມືໄດ້ໂດຍສອດຄ່ອງກັບລະບຽບກົດໝາຍຂອງ ສປປ ລາວ.	ຮຸ້ນຂອງ ທຄຕລ ມີທັງໝົດ 1.038.616.500 ຮຸ້ນ (ໜຶ່ງຕື້ສາມສິບແປດລ້ານຫົກແສນສິບຫົກພັນຫ້າຮ້ອຍຮຸ້ນ) ແລະ ແຕ່ລະຮຸ້ນມີມູນຄ່າ 1.000 ກີບ (ໜຶ່ງພັນກີບ) ລວມເປັນເງິນທັງໝົດ 1.038.616.500.000 ກີບ (ໜຶ່ງພັນສາມສິບແປດຕື້ຫົກຮ້ອຍສິບຫົກລ້ານຫ້າແສນກີບ). ຮຸ້ນຂອງ ທຄຕລ ບໍ່ສາມາດຖອນໄດ້ ແຕ່ສາມາດປ່ຽນມືໄດ້ໂດຍສອດຄ່ອງກັບລະບຽບກົດໝາຍຂອງ ສປປ ລາວ.
ມາດຕາ 28 (ປັບປຸງ) ສິດ ແລະ ໜ້າທີ່ຂອງ ສະພາບໍລິຫານ **(ປັບປຸງສະເພາະຂໍ້ 11 ແລະ 16)**	11. ແຕ່ງຕັ້ງຄະນະກຳມະການຂອງສະພາບໍລິຫານຂອງ ທຄຕລ ຄະນະກຳມະການກວດສອບ, ຄະນະກຳມະການຄຸ້ມຄອງຄວາມສ່ຽງ, ຄະນະກຳມະການກຳນົດຄ່າຕອບແທນ, ຄະນະກຳມະການຄັດເລືອກ ແລະ ຄະນະກຳມະການອື່ນໆທີ່ເຫັນວ່າມີຄວາມຈຳເປັນ; 16. ຄົ້ນຄວ້າ ແລະ ພິຈາລະນາຄ່າຕອບແທນຂອງປະທານ, ຮອງປະທານ, ກຳມະການ, ຄະນະກຳມະການຂອງສະພາບໍລິຫານ, ຜູ້ອຳນວຍການ ແລະ ຮອງຜູ້ອຳນວຍການ ເພື່ອສະເໜີກອງປະຊຸມຜູ້ຖືຮຸ້ນ ພິຈາລະນາຮັບຮອງຕາມການສະເໜີຂອງຄະນະກຳມະການພິຈາລະນາຄ່າຕອບແທນບົນພື້ນຖານຜົນປະໂຫຍດສູງສຸດຂອງ ທຄຕລ ແລະ ຜູ້ຖືຮຸ້ນ;	11. ແຕ່ງຕັ້ງບັນດາຄະນະກຳມະການຂອງສະພາບໍລິຫານຂອງ ທຄຕລ ເຊິ່ງລວມມີ ຄະນະກຳມະການກວດສອບ, ຄະນະກຳມະການຄຸ້ມຄອງຄວາມສ່ຽງ, ຄະນະກຳມະການຄັດເລືອກ ແລະ ກຳນົດຄ່າຕອບແທນ, ຄະນະກຳມະການຄຸ້ມຄອງບໍລິຫານ, ແລະ ຄະນະກຳມະການອື່ນໆທີ່ເຫັນວ່າມີຄວາມຈຳເປັນ; 16. ຄົ້ນຄວ້າ ແລະ ພິຈາລະນາຄ່າຕອບແທນຂອງປະທານ, ຮອງປະທານ, ກຳມະການ, ຄະນະກຳມະການຂອງສະພາບໍລິຫານ, ຜູ້ອຳນວຍການ ແລະ ຮອງຜູ້ອຳນວຍການ ເພື່ອສະເໜີກອງປະຊຸມຜູ້ຖືຮຸ້ນພິຈາລະນາຮັບຮອງ ຕາມການສະເໜີຂອງຄະນະກຳມະການທີ່ກ່ຽວຂ້ອງບົນພື້ນຖານຜົນປະໂຫຍດສູງສຸດຂອງ ທຄຕລ ແລະ ຜູ້ຖືຮຸ້ນ;

ມາດຕາ 33 (ປັບປຸງ) ຄະນະກຳມະການສະພາບໍລິຫານ **(ໝາຍເຫດ:** ໂຮມ ຄະນະກຳມະການກຳນິດຄ່າຕອບແທນ ແລະ ຄະນະກຳມະການຄັດເລືອກ ເຂົ້າກັນ)	ຄະນະກຳມະການຂອງສະພາບໍລິຫານ ປະກອບມີ ດັ່ງນີ້: 1. ຄະນະກຳມະການຄຸ້ມຄອງບໍລິຫານ; 2. ຄະນະກຳມະການກວດສອບ; 3. ຄະນະກຳມະການຄຸ້ມຄອງຄວາມສ່ຽງ; 4. ຄະນະກຳມະການກຳນົດຄ່າຕອບແທນ; 5. ຄະນະກຳມະການຄັດເລືອກ.	ຄະນະກຳມະການຂອງສະພາບໍລິຫານ ປະກອບມີ ດັ່ງນີ້: 1. ຄະນະກຳມະການຄຸ້ມຄອງບໍລິຫານ; 2. ຄະນະກຳມະການກວດສອບ; 3. ຄະນະກຳມະການຄຸ້ມຄອງຄວາມສ່ຽງ; 4. ຄະນະກຳມະການຄັດເລືອກ ແລະ ກຳນົດຄ່າຕອບແທນ.
ມາດຕາ 38 (ປັບປຸງ) ສິດ ແລະ ໜ້າທີ່ຂອງ ຄະນະກຳມະການຄັດເລືອກ (**ໝາຍເຫດ**: ເປັນການໂຮມເນື້ອໃນມາດຕາ 37 ແລະ ມາດຕາ 38 ເຂົ້າກັນ ເນື່ອງຈາກການໂຮມຄະນະກຳມະການ ເຂົ້າກັນ)	**ຄະນະກຳມະການຄັດເລືອກມີສິດ ແລະ ໜ້າທີ່ດັ່ງນີ້:** 1. ກຳນົດຫຼັກການ ແລະ ຂັ້ນຕອນກ່ຽວກັບການຄັດເລືອກບຸກຄະລາກອນເພື່ອມາດຳລົງຕຳແໜ່ງຢູ່ໃນສະພາບໍລິຫານ ແລະ ຕຳແໜ່ງຜູ້ອຳນວຍການ. ຫຼັກການ ແລະ ຂັ້ນຕອນດັ່ງກ່າວຕ້ອງມີຄວາມໂປ່ງໃສ ແລະ ກວດສອບໄດ້; 2. ພິຈາລະນາ, ປະກອບຄຳເຫັນຕໍ່ ຕຳແໜ່ງ ຜູ້ບໍລິຫານ ຂອງ ທຄຕລ ກ່ອນການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ; 3. ຄົ້ນຄວ້າຄຸນສົມບັດ, ຄວາມຮູ້, ປະສົບການ ແລະ ຄວາມເໝາະສົມຕາມເງື່ອນໄຂຄົບຖ້ວນທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງວ່າດ້ວຍສະພາບໍລິຫານ ແລະ ນິຕິກຳອື່ນທີ່ປະກາດໃຊ້ໃນແຕ່ລະໄລຍະ; 4. ສະເໜີຊື່ບຸກຄົນທີ່ຜ່ານການຄັດເລືອກ ເພື່ອໃຫ້ສະພາບໍລິຫານພິຈາລະນາ ແລະ ສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນພິຈາລະນາຮັບຮອງ; 5. ລາຍງານຜົນການເຄື່ອນໄຫວວຽກງານຂອງຕົນຕໍ່ ສະພາບໍລິຫານ; 6. ເປີດເຜີຍຂໍ້ມູນໃນບົດລາຍງານປະຈຳປີທີ່ຕິດພັນກັບລາຍຊື່ຂອງ ຄະນະກຳມະການຄັດເລືອກຕັ້ງ, ຈຳນວນຄັ້ງການປະຊຸມຂອງ	**ຄະນະກຳມະການຄັດເລືອກ ແລະ ກຳນົດຄ່າຕອບແທນມີສິດ ແລະ ໜ້າທີ່ດັ່ງນີ້:** 1. ກຳນົດຫຼັກການ ແລະ ຂັ້ນຕອນກ່ຽວກັບການຄັດເລືອກບຸກຄະລາກອນເພື່ອມາດຳລົງຕຳແໜ່ງຢູ່ໃນສະພາບໍລິຫານ ແລະ ຕຳແໜ່ງ ຜູ້ອຳນວຍການ. ຫຼັກການ ແລະ ຂັ້ນຕອນດັ່ງກ່າວຕ້ອງມີຄວາມໂປ່ງໃສ ແລະ ກວດສອບໄດ້; 2. ພິຈາລະນາ, ປະກອບຄຳເຫັນຕໍ່ ຕຳແໜ່ງ ຜູ້ບໍລິຫານ ຂອງ ທຄຕລ ກ່ອນການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ; 3. ຄົ້ນຄວ້າຄຸນສົມບັດ, ຄວາມຮູ້, ປະສົບການ ແລະ ຄວາມ ເໝາະສົມຕາມເງື່ອນໄຂຄົບຖ້ວນທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງວ່າດ້ວຍສະພາບໍລິຫານ ແລະ ນິຕິກຳອື່ນທີ່ປະກາດໃຊ້ໃນແຕ່ລະໄລຍະ; 4. ສະເໜີຊື່ບຸກຄົນທີ່ຜ່ານການຄັດເລືອກ ເພື່ອໃຫ້ສະພາບໍລິຫານພິຈາລະນາ ແລະ ສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນພິຈາລະນາຮັບຮອງ; 5. ກຳນົດຫຼັກການ ແລະ ຮູບແບບການຈ່າຍຄ່າຕອບແທນ; 6. ຄົ້ນຄວ້າຄ່າຕອບແທນຂອງສະພາບໍລິຫານ ແລະ ຄະນະອຳນວຍການ ເພື່ອສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນຮັບຮອງ;

	ຄະນະກຳມະການເລືອກຕັ້ງ, ຈຳນວນຄັ້ງຂອງການເຂົ້າຮ່ວມປະຊຸມຂອງຄະນະກຳມະການເລືອກຕັ້ງແຕ່ລະຄົນ ແລະ ຜົນການປະເມີນຂອງຄະນະກຳມະການຄັດເລືອກ ແລະ ເນື້ອໃນການເຄື່ອນໄຫວຂອງຄະນະກຳມະການຄັດເລືອກໂດຍຫຍໍ້; 7. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມການມອບໝາຍຂອງສະພາບໍລິຫານ	7. ຄົ້ນຄວ້າຄ່າຕອບແທນຂອງຫົວໜ້າພະແນກ ແລະ ຮອງຫົວໜ້າພະແນກ ເພື່ອສະເໜີຕໍ່ສະພາບໍລິຫານຮັບຮອງ; 8. ລາຍງານຜົນການເຄື່ອນໄຫວວຽກງານຂອງຕົນຕໍ່ສະພາບໍລິຫານ ແລະ ກອງປະຊຸມຜູ້ຖືຮຸ້ນ; 9. ເປີດເຜີຍຂໍ້ມູນໃນບົດລາຍງານປະຈຳປີທີ່ຕິດພັນກັບລາຍຊື່ຂອງຄະນະກຳມະການຄັດເລືອກຕັ້ງ, ຈຳນວນຄັ້ງການປະຊຸມຂອງຄະນະກຳມະການເລືອກຕັ້ງ, ຈຳນວນຄັ້ງຂອງການເຂົ້າຮ່ວມປະຊຸມຂອງຄະນະກຳມະການເລືອກຕັ້ງແຕ່ລະຄົນ ແລະ ຜົນການປະເມີນຂອງຄະນະກຳມະການຄັດເລືອກ ແລະ ເນື້ອໃນການເຄື່ອນໄຫວຂອງຄະນະກຳມະການຄັດເລືອກໂດຍຫຍໍ້; 10. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມການມອບໝາຍຂອງສະພາບໍລິຫານ
ມາດຕາ 73 (ປັບປຸງ) ຜົນສັກສິດ	**ມາດຕາ 73 (ປັບປຸງ) ຜົນສັກສິດ** ກົດລະບຽບສະບັບນີ້ປະກອບມີ 11 ໝວດ ແລະ 73 ມາດຕາ, ກົດລະບຽບສະບັບນີ້ປ່ຽນແທນກົດລະບຽບຂອງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ສະບັບເລກທີ 22/ທຄຕລ.2018 ລົງວັນທີ 30/07/2018. ມີຜົນສັກສິດນັບແຕ່ກອງປະຊຸມຜູ້ຖືຮຸ້ນ ທຄຕລ ຮັບຮອງ ແລະ ວັນທີລົງລາຍເຊັນເປັນຕົ້ນໄປ.	**ມາດຕາ 72 (ປັບປຸງ) ຜົນສັກສິດ** ກົດລະບຽບສະບັບນີ້ປະກອບມີ 11 ໝວດ ແລະ 72 ມາດຕາ, ກົດລະບຽບສະບັບນີ້ປ່ຽນແທນກົດລະບຽບຂອງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ສະບັບເລກທີ 001/ທຄຕລ.2021 ລົງວັນທີ 21/05/2021. ມີຜົນສັກສິດນັບແຕ່ກອງປະຊຸມຜູ້ຖືຮຸ້ນ ທຄຕລ ຮັບຮອງ ແລະ ວັນທີລົງລາຍເຊັນເປັນຕົ້ນໄປ.

ໝາຍເຫດ:

1. ໃນກົດລະບຽບສະບັບປັບປຸງເທື່ອນີ້ໄດ້ໂຮມເນື້ອໃນຂອງມາດຕາ 37 (ສິດແລະໜ້າທີ່ຂອງຄະນະກຳມະການກຳນົດຄ່າຕອບແທນ) ແລະ ມາດຕາ 38 (ສິດແລະໜ້າທີ່ຂອງຄະນະກຳມະການຄັດເລືອກ) ເຂົ້ານຳກັນກາຍເປັນມາດຕາດຽວ (ມາດຕາ 37 ສິດແລະໜ້າທີ່ຂອງຄະນະກຳມະການຄັດເລືອກ ແລະ ກຳນົດຄ່າຕອບແທນ) ເຮັດໃຫ້ພາຍຫຼັງການປັບປຸງກົດລະບຽບຈະຍັງຄົງເຫຼືອ 72 ມາດຕາ ຈາກເດີມ 73 ມາດຕາ.
2. ເນື້ອໃນທີ່ຖືກປັບປຸງໄດ້ທາສີໄວ້ ເພື່ອຄວາມສະດວກສຳລັບຜູ້ອ່ານ.

ໃບມອບສິດ
Proxy

1. ຂ້າພະເຈົ້າ ..... ສັນຊາດ.....
I / We ..... nationality .....
ເຮືອນເລກທີ່ ..... ບ້ານ ..... ເມືອງ ....
residing at ..... Village ..... District ....
ແຂວງ .....Province.....
ເປັນຜູ້ຖືຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
Being a shareholder of Banque Pour Le Commerce Exterieur Lao Public
ມີຮຸ້ນທີ່ຖືຈຳນວນ.....ຮຸ້ນຊຶ່ງເທົ່າກັບຈຳນວນສຽງທີ່ຈະລົງຄະແນນສຽງ
Holding a total number of .....shares which are equivalent to the same number of votes

2. ຂໍມອບໝາຍສະມາຊິກສະພາບໍລິຫານອິດສະຫຼະ:
Hereby assign the Independent Board Member (select only one):

☐ ທ່ານ ຄຳສຸກ ສຸນດາຣາ
Mr. Khamsouk Sundara

☐ ທ່ານ ຮສ. ທອງເພັດ ຈັນທະນິວົງ
Assoc Prof. Thongphet Chanthanivong

☐ ທ່ານ ສອນໄຊ ສີລາເພັດ
Mr. Sonexay Silaphet

☐ ທ່ານນາງ ລັດດາວັນ ຊົງວິໄລ
Mrs. Latdavanh Songvilay

☐ ***ບຸກຄົນອື່ນ ກະລຸນາລະບຸລາຍລະອຽດ / Or other person, please specify:***

ຂໍມອບໝາຍ ທ່ານ/ທ່ານ ນາງ ..... ອາຍຸ.....ປີ
Hereby assign Mr./Ms. ..... age .....
ສັນຊາດ.....ຢູ່ເຮືອນເລກທີ່.....
Nationality…….. residing at……
ບ້ານ..... ເມືອງ ..... ແຂວງ ....
Village ..... District ..... Province..... .....

ໃຫ້ເປັນຜູ້ຕາງໜ້າຂອງຂ້າພະເຈົ້າ ເພື່ອເຂົ້າຮ່ວມ ແລະ ລົງຄະແນນສຽງແທນຂ້າພະເຈົ້າຢູ່ໃນກອງປະຊຸມຜູ້ຖືຮຸ້ນ ທຄຕລ, ທີ່ຈະຈັດຂຶ້ນໃນ ເວລາ 14:30 ໂມງ ຂອງວັນທີ 29 ເມສາ 2024.
To be my/our proxy to attend and vote on my/our behalf in the Shareholders' Meeting of the Banque Pour Le Commerce Exterieur Lao Public which will be held at 14:30 PM of 29 April 2024.

3. ຂ້າພະເຈົ້າ ອະນຸຍາດໃຫ້ຜູ້ຕາງໜ້າລົງຄະແນນສຽງແທນຂ້າພະເຈົ້າ ຢູ່ໃນກອງປະຊຸມດັ່ງນີ້ (ເລືອກເອົາໜຶ່ງ ຈາກສອງທາງເລືອກລຸ່ມນີ້)
I /We authorize the proxy to vote on my/our behalf in the Meeting as follows (**choose one from the two following options**):

1. ☐ ໃຫ້ຜູ້ຕາງໜ້າມີສິດພິຈາລະນາ ແລະ ລົງຄະແນນສຽງໃນທຸກໆບັນຫາແທນຂ້າພະເຈົ້າ ຕາມທີ່ຜູ້ກ່ຽວເຫັນສົມຄວນ; ຫຼື
To grant the proxy to consider and vote in all agendas on my/our behalf as the proxy may deem appropriate; ***or***

2. ☐ ໃຫ້ຜູ້ຕາງໜ້າລົງຄະແນນສຽງຕາມຄວາມຕ້ອງການຂອງຂ້າພະເຈົ້າດັ່ງນີ້ (ຖ້າເລືອກຂໍ້ນີ້, ກະລຸນາເລືອກລົງຄະແນນ **ເຫັນດີ ຫຼື ບໍ່ເຫັນດີ** ໃນທຸກໆວາລະລຸ່ມນີ້):
To grant the proxy to vote as per my/our intention indicated in the followings (If you select this option, please choose to vote either ***approve*** or ***disapprove*** in every agenda):

ວາລະທີ 1: ຮັບຮອງບົດບັນທຶກກອງປະຊຸມຜູ້ຖືຮຸ້ນສະໄໝສາມັນ ທຄຕລ ປະຈຳປີ 2022

Agenda 1: Approve the minutes of the Ordinary Shareholders' Meeting for the year 2022;

☐ ເຫັນດີ / approve ☐ ບໍ່ເຫັນດີ / disapprove

ວາລະທີ 2: ພິຈາລະນາ ແລະ ຮັບຮອງບົດລາຍງານຜົນການດຳເນີນງານ ແລະ ເອກະສານລາຍງານການເງິນ ທຄຕລ ປະຈຳປີ 2023;

Agenda 2: To consider and approve the annual report on the performance and financial statements of BCEL for the year 2023

☐ ເຫັນດີ / approve ☐ ບໍ່ເຫັນດີ / disapprove

ວາລະທີ 3: ພິຈາລະນາ ແລະ ຮັບຮອງການຈັດສັນກຳໄລປະຈຳປີ 2023

Agenda 3: To consider and approve the allocation of the profit of the year 2023.

☐ ເຫັນດີ / approve ☐ ບໍ່ເຫັນດີ / disapprove

ວາລະທີ 4: ພິຈາລະນາ ແລະ ຮັບຮອງເອົາແຜນການປີ 2024

Agenda 4: To consider and approve the plan for the year 2024

☐ ເຫັນດີ / approve ☐ ບໍ່ເຫັນດີ / disapprove

ວາລະທີ 5: ພິຈາລະນາ ແລະ ຮັບຮອງເອົາຜູ້ກວດສອບອິດສະຫຼະປະຈຳປີ 2024

Agenda 5: To consider and approve the appointment of independent auditor for the year 2024.

☐ ເຫັນດີ / approve ☐ ບໍ່ເຫັນດີ / disapprove

ວາລະທີ 6: ພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງສະມາຊິກສະພາບໍລິຫານ ທຄຕລ

Agenda 6: To consider and approve the appointment of the Member of BCEL's Board of Directors

☐ ເຫັນດີ / approve ☐ ບໍ່ເຫັນດີ / disapprove

ວາລະທີ 7: ພິຈາລະນາ ແລະ ຮັບຮອງ ການປ່ຽນແປງມູນຄ່າກຳນົດຮຸ້ນ ທຄຕລ

Agenda 7: Consider and approve the change of BCEL's share par value

☐ ເຫັນດີ / approve ☐ ບໍ່ເຫັນດີ / disapprove

ວາລະທີ 8: ພິຈາລະນາ ແລະ ຮັບຮອງ ການປັບປຸງກົດລະບຽບຂອງ ທຄຕລ

Agenda 8: Consider and approve the amendment of BCEL's Articles of Association

☐ ເຫັນດີ / approve ☐ ບໍ່ເຫັນດີ / disapprove

4. ການລົງຄະແນນສຽງຂອງຜູ້ຕາງໜ້າທີ່ບໍ່ເປັນໄປຕາມໃບມອບສິດນີ້ ໃຫ້ຖືວ່າບໍ່ຖືກຕ້ອງ ແລະ ບໍ່ແມ່ນການລົງຄະແນນຂອງຂ້າພະເຈົ້າ.

Any votes made by the proxy contradicting to this Proxy shall be considered as invalid and shall not constitute my/our votes as the shareholder.

5. ໃນກໍລະນີທີ່ຂ້າພະເຈົ້າ ບໍ່ໄດ້ລະບຸຄວາມຕ້ອງການຂອງຕົນໃນການລົງຄະແນນສຽງໃນວາລະໃດໜຶ່ງ ຫຼື ລະບຸໃວ້ ບໍ່ຈະແຈ້ງ ໃຫ້ຖືວ່າຂ້າພະເຈົ້າ ລົງຄະແນນສຽງເຫັນດີ

In case I/we have failed to specify my/our voting intention in any agenda or not clearly specified, my/our vote in such agenda shall be deemed approved.

6. ທຸກການກະທຳໃດຂອງຜູ້ຕາງໜ້າໃນກອງປະຊຸມ ທີ່ເປັນໄປຕາມໃບມອບສິດນີ້ ໃຫ້ຖືວ່າຂ້າພະເຈົ້າ ໄດ້ກະທຳເອງທຸກປະການ.

Any action made by the proxy in the meeting in accordance with this Proxy, shall be deemed as having been performed by myself/ourselves in all respects.

ທີ່..... ວັນທີ...../...../2024
Wrote at…….. date…….

ເຊັນຜູ້ຖືຮຸ້ນທີ່ມອບໝາຍ / signed by the shareholder **ເຊັນຜູ້ຕາງໜ້າ /signed by the proxy**

ໝາຍເຫດ/Remark:

1. ຜູ້ຖືຮຸ້ນ ຈະຕ້ອງແຕ່ງຕັ້ງຜູ້ຕາງໜ້າພຽງຜູ້ດຽວເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງແທນຕົນເອງ
   The shareholder is required to assign only one proxy to attend and vote in the meeting on the shareholder's behalf.
2. ໃບມອບສິດສະບັບນີ້ຈະຕ້ອງນຳໄປຈົດທະບຽນສານ ນຳສຳນັກງານທະບຽນສານທີ່ຢູ່ສະດວກສຳລັບທ່ານ ເພື່ອໃຫ້ຮັບປະກັນຜົນ ສັກສິດທາງກົດໝາຍ, ທະນາຄານມີສິດປະຕິເສດໃບມອບສິດໃດໆທີ່ບໍ່ໄດ້ຈົດທະບຽນສານ.
   This Proxy must be certified by your most convenient Court Notary Office to ensure its legal validity. BCEL may reject any Proxies or proxy authorizations without endorsement of the Court Notary Office.
3. ຜູ້ຕາງໜ້າ ຕ້ອງສະແດງເອກະສານຂອງຕົນເອງຕໍ່ ພະນັກງານປະຈຳໂຕະລົງທະບຽນ ຄື: ບັດປະຈຳຕົວ ຫຼື ປຶ້ມສຳມະໂນຄົວ ຫຼື ໜັງສືຜ່ານແດນ (ສຳລັບນັກລົງທຶນຕ່າງປະເທດ) ພ້ອມກັບສຳເນົາເອະສານປະເພດດຽວກັນນີ້ຂອງຜູ້ຖືຮຸ້ນ, ໃບມອບສິດສະບັບນີ້ ແລະ ໜັງ ສືເຊີນປະຊຸມ.
   The proxy must present to the officers at registration desk his/her valid ID Card, or family book or passport (in case of foreign investor) together with the copies of the same documents of the shareholder, this Proxy, and the Invitation to the Meeting.



ທ່ານ ຄຳສຸກ ສູນດາຣາ
ຮອງປະທານສະພາບໍລິຫານ

ຊີວະປະຫວັດຫຍໍ້:

ວັນ ເດືອນ ປີເກີດ : 03/06/1945
ສັນຊາດ : ລາວ
ພາສາ : ລາວ, ອັງກິດ, ຝຣັ່ງ
ຕຳແໜ່ງ : ບຸກຄົນເອກະລາດຈາກພາຍນອກ

ປະຫວັດການສຶກສາ:

1993 : ມະຫາວິທະຍາໄລຈອດສ໌ທາວທີ່ນະຄອນວໍຊິງຕັນປະເທດສະຫະລັດອາເມລິກາ.

1985 : ສະຖາບັນຄຸ້ມຄອງທະນາຄານແຫ່ງອິນເດຍ ທີ່ເມືອງປານາ ປະເທດອິນເດຍ

1974 : ສູນຝຶກອົບຮົມລະຫວ່າງປະເທດ ທີ່ ເມືອງ ນາໂກ ປະເທດຍີ່ປຸ່ນ.

1972 : ການຝຶກອົບຮົມ: ດ້ານເສດຖະສາດ ຈາກສະຖາບັນຄຸ້ມຄອງເສດຖະກິດ ຂອງອົງການສະຫະປະຊາຊາດ ທີ່ບາງກອກປະເທດໄທ.

1969 : ຈົບອຸດົມ ແລະ ລະດັບປະລິນຍາຕຣີ ຈາກປະເທດອິດສະຕາລີ, ມະຫາວິທະຍາໄລມິວຊາວເອລ.

ປະຫວັດການເຮັດວຽກ:

04/2015 : ເປັນທີ່ປຶກສາດ້ານການເງິນ ແລະ ການທະນາຄານ ຂອງບໍລິສັດລ້ານຊ້າງ ມິເນີໂຮນ ຈຳກັດ (ຊຶ່ງເປັນ ບໍລິສັດໃນເຄືອຂອງກຸ່ມບໍລິສັດໂອເຊຍນາ ແຫ່ງ ເມືອງ ເມอเบิน ປະເທດອິດສະຕາລີ).

1995–1996 : ເປັນທີ່ປຶກສາຜູ້ອຳນວຍການ ທີ່ອົງການ ການເງິນ ລະຫວ່າງປະເທດ ກຸ່ມພາກພື້ນ ອາຊີຕາເວັນອອກ ສ່ຽງໃຕ້, ທີ່ນະຄອນວໍຊິງຕັນ ປະເທດອາເມລິກາ.

1990–1994 ແລະ 1997-2005 :
ທະນາຄານແຫ່ງ ສປປ ລາວ.

1976–1989 : ຢູ່ທະນາຄານການຄ້າຕ່າງປະເທດລາວ

1970–1975 : ຢູ່ທະນາຄານພັດທະນາລາວ



ທ່ານ ທອງເພັດ ຈັນທະນິວົງ
ສະມາຊິກອິດສະຫຼະ

ຊີວະປະຫວັດຫຍໍ້:

ວັນ ເດືອນ ປີເກີດ : 20/04/1962
ສັນຊາດ : ລາວ
ພາສາ : ລາວ, ອັງກິດ
ຕຳແໜ່ງ : ອະດີດຮອງຄະນະບໍດີ, ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ, ມະຫາວິທະຍາໄລແຫ່ງຊາດ

ປະຫວັດການສຶກສາ:

2018-2021: ຄົ້ນຄວ້າປະລິນຍາເອກ ດ້ານການບັນຊີ (PhD Candidate 2021) ຢູ່ມະຫາວິທະຍາໄລສີປະທຸມ, ປະເທດໄທ

2019: ໄດ້ຮັບປະກາດສະນິຍະບັດ ນັກຊ່ຽວຊານບັນຊີລາວ
1998-2002: ຄົ້ນຄວ້າປະລິນຍາໂທດ້ານການພົວພັນສາກົນຢູ່ມະຫາວິທະຍາໄລ De Mons ປະເທດແບນຊິກ
1998-2000: ຄົ້ນຄວ້າປະລິນຍາໂທດ້ານບໍລິຫານທຸລະກິດມະຫາວິທະຍາໄລເທັກໂນໂລຢີແຫ່ງເອເຊັຍ (AIT) ປະເທດໄທ;
1996-1997: ສຶກສາລະດັບປະລິນຍາຕີດ້ານບໍລິຫານທຸລະກິດໂຄງການຮ່ວມມືສະຖາບັນການເມືອງການປົກຄອງແຫ່ງຊາດແລະມະຫາວິທະຍາໄລເທັກໂນໂລຢີແຫ່ງເອເຊັຍ (AIT) ປະເທດໄທ
1981-1985: ສຶກສາລະດັບປະລິນຍາຕີ ດ້ານຄະນິດສາດ-ຟີຊິກສາດ ຢູ່ມະຫາວິທະຍາໄລແຫ່ງຊາດ.

ປະຫວັດການເຮັດວຽກ

- ເປັນຮອງຄະນະບໍດີ ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ(ຮັບຜິດຊອບຫຼັກສູດປະລິນຍາໂທ ແລະ ປະລິນຍາເອກ), ມະຫາວິທະຍາໄລແຫ່ງຊາດ
- ເປັນຮອງສາດສະດາຈານ ສາຂາບໍລິຫານທຸລະກິດ (ເລກທີ 304-178/ນຍ ລົງວັນທີ 04/09/2006)
- ເປັນປະທານຄະນະກຳມະທິການຫຼັກສູດ ການບັນຊີ ແລະ ການກວດສອບ (CPA) ຂອງສະພາວິຊາຊີບນັກບັນຊີ ແລະ ນັກກວດສອບລາວ
- ເປັນຄະນະບໍລິຫານງານສະພາວິຊາຊີບນັກບັນຊີ ແລະ ນັກກວດສອບລາວ
- ເປັນກຳມະການອິດສະຫຼະຂອງສະພາບໍລິຫານ ລັດວິສາຫະກິດ ລາວໂທລະຄົມ
- ເປັນຄະນະຄົ້ນຄວ້າ ແລະ ປັບປຸງລະບົບບັນຊີວິສາຫະກິດ, ຮູບແບບເອກະສານ ການລາຍງານການເງິນ, ການກຳນົດຜັງບັນຊີ ແລະເທັກນິກການບັນທຶກບັນຊີ ວິສາຫະກິດ
- ເປັນອາຈານສອນຫຼັກສູດ ປະລິນຍາຕີ ແລະ ປະລິນຍາໂທ ສາຂາບໍລິຫານ ທຸລະກິດ, ການບັນຊີ, ການເງິນ ແລະ ການທະນາຄານ, ເສດຖະສາດ ຂອງ ມະຫາວິທະຍາໄລ ແຫ່ງຊາດ
- ເປັນອາຈານຮັບເຊີນຫຼັກສູດ MBA ມະຫາວິທະຍາໄລຂອນແກນ,ປະເທດໄທ
- ເປັນຄູເຝິກ ມາດຕະຖານການບັນທຶກບັນຊີສາກົນ (IFRS) ແລະ ມາດຖານການກວດສອບ (AIS)



ທ່ານ ນ. ລັດຕາວັນ ຊິງວິໄລ

ສະມາຊິກອິດສະຫຼະ

ຊີວະປະຫວັດຫຍໍ້:

ວັນ ເດືອນ ປີເກີດ: 27/04/1982
ສັນຊາດ: ລາວ
ພາສາ: ອັງກິດ
ຕຳແໜ່ງ: ຫົວໜ້າ ສູນຄົ້ນຄວ້ານະໂຍບາຍເສດຖະກິດ ມະຫາພາກ ແລະ ປັບປຸງໂຄງສ້າງເສດຖະກິດ.

ປະຫວັດການສຶກສາ:

2008-2009:	ຄົ້ນຄວ້າປະລິນຍາໂທ ດ້ານນະໂຍບາຍບໍລິຫານພາກລັດ ຢູ່ສະຖາບັນ GRIPS, ປະເທດຍີ່ປຸ່ນ
2000-2005:	ສຶກສາລະດັບປະລິນຍາຕີ ດ້ານເສດຖະສາດ ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ, ມະຫາວິທະຍາໄລແຫ່ງຊາດ
2004:	ນັກສຶກສາແລກປ່ຽນມະຫາວິທະຍາໄລແຫ່ງຊາດສິງກະໂປ, ປະເທດສິງກະໂປ.

ປະສົບການການເຮັດວຽກ:

2019-ປະຈຸບັນ:	ເປັນຫົວໜ້າສູນຄົ້ນຄວ້ານະໂຍບາຍເສດຖະກິດມະຫາພາກ ແລະ ປັບປຸງໂຄງສ້າງເສດຖະກິດ
2016-2019:	ຮອງຫົວໜ້າສູນຄົ້ນຄວ້ານະໂຍບາຍເສດຖະກິດມະຫາພາກ ແລະ ປັບປຸງໂຄງສ້າງເສດຖະກິດ
2015-2016:	ຫົວໜ້າພະແນກຢູ່ສູນຄົ້ນຄວ້ານະໂຍບາຍເສດຖະກິດມະຫາພາກ ແລະ ປັບປຸງໂຄງສ້າງເສດຖະກິດ
2011-2015:	ຮອງຫົວໜ້າພະແນກຢູ່ສູນຄົ້ນຄວ້ານະໂຍບາຍເສດຖະກິດມະຫາພາກ ແລະ ປັບປຸງໂຄງສ້າງເສດຖະກິດ
2005-2011:	ຜູ້ຊ່ວຍນັກຄົ້ນຄວ້າຢູ່ສູນຄົ້ນຄວ້ານະໂຍບາຍເສດຖະກິດມະຫາພາກ ແລະ ປັບປຸງໂຄງສ້າງເສດຖະກິດ



ທ່ານ ສອນໄຊ ສີລາເພັດ
ສະມາຊິກອິດສະຫຼະ

ຊີວະປະຫວັດຫຍໍ້:

ວັນ ເດືອນ ປີເກີດ: 01/01/1977

ສັນຊາດ : ລາວ

ພາສາ : ອັງກິດ

ຕຳແໜ່ງ: ປະທານສະພາວິຊາຊີບ ນັກບັນຊີ ແລະ ນັກກວດສອບ

ປະຫວັດການສຶກສາ:

2017-2021:	ສຶກສາຄົ້ນຄວ້າປະລິນຍາເອກດ້ານການບັນຊີ(PhD Candidate) ຢູ່ມະຫາວິທະຍາໄລສີປະໜຸ, ປະເທດໄທ;
2018:	ເປັນສະມາຊິກຂອງ CPA ລາວ;
06/2016:	ເປັນສະມາຊິກຂອງ CPA ອິດສະຕາລີ;
2013-2014:	ສຶກສາ ແລະ ຄົ້ນຄວ້າປະລິນຍາໂທ ດ້ານການເງິນ ຢູ່ວິທະຍາໄລເທັກໂນໂລຢີສັນຕະພົນ ປະເທດໄທ;
1995-2000:	ສຶກສາລະດັບປະລິນຍາຕີ ດ້ານບໍລິຫານທຸລະກິດ ວິທະຍາໄລຄອມເຊັນເຕີ
1999-2000:	ເປັນສະມາຊິກຂອງ Lao Institute of Chartered Public Accountants (LICPA).
1995-1998:	ສຶກສາລະດັບຊັ້ນສູງ ດ້ານການບັນຊີ ຢູ່ວິທະຍາໄລປາກປ່າສັກ;

ປະສົບການການເຮັດວຽກ:

ປະຈຸບັນ:	ເປັນປະທານ Lao Chamber of Professional Accountants and Auditor (LCPAA)
01/2016-12/2017:	ເປັນປະທານ ASEAN Federation of Accountants (AFA)
01/2014-12/2015:	ຮອງເປັນປະທານ ASEAN Federation of Accountants (AFA)
07/2011-09/2014:	ເປັນຜູ້ອຳນວຍການ Ernst & Young Lao Limited
07/2008-06/2011:	ເປັນຜູ້ຈັດການອາວຸໂສຝ່າຍກວດສອບ Ernst & Young Lao Limited
08/2007-06/2008:	ເປັນຜູ້ຈັດການຝ່າຍກວດສອບ Ernst & Young Lao Limited
05/2004-08/2007:	ເປັນຜູ້ຈັດການຝ່າຍກວດສອບ PricewaterhouseCoopers (Lao) Ltd
2002-05/2004:	ເປັນພະນັກງານກວດສອບອາວຸໂສປະສົບການ Pricewaterhouse Coopers (Lao) Ltd
2000-2001:	ເປັນພະນັກງານກວດສອບອາວຸໂສ Pricewaterhouse Coopers (Lao) Ltd
1998-1999:	ເປັນພະນັກງານຜູ້ຊ່ວຍກວດສອບ Pricewaterhouse Coopers (Lao) Ltd

ລະບຽບສຳລັບການດຳເນີນກອງປະຊຸມຜູ້ຖືຮຸ້ນ ທຄຕລ
Rules for the Shareholders' Meeting of BCEL

1. ການລົງທະບຽນເພື່ອເຂົ້າຮ່ວມກອງປະຊຸມ/**Registration for attending the meeting**

ຜູ້ເຂົ້າຮ່ວມກອງປະຊຸມທຸກຄົນ ຕ້ອງລົງທະບຽນໃຫ້ຮຽບຮ້ອຍຕາມຂັ້ນຕອນທີ່ ທຄຕລ ກຳນົດໄວ້ ກ່ອນເຂົ້າຮ່ວມກອງປະຊຸມ ແລະ ຕ້ອງອະນຸຍາດໃຫ້ ທຄຕລ ສຳເນົາເອົາບັດປະຈຳຕົວ ຫຼື ໜັງສືຜ່ານແດນ ຫຼື ເອກະສານອື່ນໆທີ່ສາມາດໃຊ້ແທນໄດ້ ເພື່ອເອົາໄວ້ເປັນຫຼັກຖານ.

All attendees must complete registration in accordance with the procedures specified by BCEL before attending the meeting and allow BCEL to photocopy their ID cards or passports or other similar documents as evidence.

ຜູ້ຕາງໜ້າ ຕ້ອງສະແດງເອກະສານຂອງຕົນເອງຕໍ່ພະນັກງານປະຈຳໂຕະລົງທະບຽນ ຄື: ບັດປະຈຳຕົວ ຫຼື ປຶ້ມສຳມະໂນຄົວ ຫຼື ໜັງສືຜ່ານແດນ (ສຳລັບນັກລົງທຶນຕ່າງປະເທດ) ພ້ອມກັບ ສຳເນົາເອກະສານປະເພດດຽວກັນນີ້ຂອງຜູ້ຖືຮຸ້ນ, ແລະ ໃບມອບສິດ. ຖ້າເອກະສານເຫຼົ່ານີ້ເປັນພາສາຕ່າງປະເທດ ແມ່ນອະນຸຍາດໄດ້ສະເພາະເອກະສານທີ່ເປັນພາສາ ອັງກິດເທົ່ານັ້ນ.

For the proxy, documents to be presented to the officers at registration desk are: his/her own valid ID Card, or family book or passport (in case of foreign investor) together with the copies of the same documents of the shareholder, and letter of Proxy. If these documents are in foreign languages, only the documents in English are acceptable.

ກໍລະນີທີ່ບໍ່ໄດ້ລົງທະບຽນ ຫຼື ລົງທະບຽນບໍ່ສຳເລັດເນື່ອງຈາກຂາດຄວາມຄົບຖ້ວນດ້ານເອກະສານດັ່ງກ່າວ ຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າ ຈະບໍ່ມີສິດລົງຄະແນນສຽງ, ຕັ້ງຄຳຖາມ ຫຼື ມີຄຳເຫັນຕໍ່ທີ່ປະຊຸມ.

Without registration or the registration is incomplete due to absence of the said documents, shareholders or proxies shall have no right to vote, question or make comments in the meeting.

2. ອົງປະຊຸມ/**Quorum**

ກອງປະຊຸມສາມາດດຳເນີນໄດ້ກໍ່ຕໍ່ເມື່ອມີຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າທີ່ເຂົ້າຮ່ວມກອງປະຊຸມຢ່າງໜ້ອຍ 2 ຄົນຂຶ້ນໄປ ແລະມີຈຳນວນຮຸ້ນທີ່ຖືເກີນ 51% ຂອງຈຳນວນຮຸ້ນສາມັນທັງໝົດ ຕາມທີ່ໄດ້ກຳນົດໄວ້ໃນ ກົດລະບຽບຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ.

Shareholders' meeting can commence only if there are at least **2** or more shareholders attending the meeting and their shares shall be more than **51%** of the total shares, pursuant to the Articles of Association of Banque pour le Commerce Exterieur Lao Public.

3. ການດຳເນີນກອງປະຊຸມ/**Rules for proceeding**

3.1 ທ່ານປະທານສະພາບໍລິຫານ ທຄຕລ ຫຼື ຜູ້ທີ່ໄດ້ຮັບມອບໝາຍ ເປັນປະທານກ່າວເປີດ ແລະ ນຳພາດຳເນີນກອງປະຊຸມ.

The Chairman of BCEL's Board of Directors or designated person will preside over and lead the meeting.

3.2 ທ່ານປະທານກອງປະຊຸມ ເປັນຜູ້ສະເໜີຫົວຂໍ້ຂອງແຕ່ລະວາລະ ແລະ ເປັນຜູ້ສັ່ງໂຫວດ ຄະແນນແຕ່ລະວາລະ.

The Chairman of the meeting will propose the title of each agenda and order the voting of each agenda.

3.3 ຜູ້ອຳນວຍການ ທຄຕລ ເປັນຜູ້ດຳເນີນສະເໜີ ເນື້ອໃນຂອງແຕ່ ລະວາລະໃນກອງປະຊຸມ.

The Managing Director of BCEL will present details of each agenda to the meeting.

3.4 ຫຼັງຈາກທີ່ທ່ານຜູ້ອຳນວຍການ ໄດ້ສະເໜີເນື້ອໃນຂອງວາລະແລ້ວ, ປະທານກອງປະຊຸມຈະສະເໜີໃຫ້ຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າທີ່ມີຄຳຖາມ ຫຼື ຄຳເຫັນຕໍ່ວາລະທີ່ກຳລັງຖືກພິຈາລະນາຢູ່. ກໍລະນີມີຄຳຖາມ ທ່ານຜູ້ອຳນວຍການ ຈະເປັນຜູ້ໃຫ້ຄຳອະທິບາຍຊີ້ແຈງ. ຈາກນັ້ນ, ຖ້າບໍ່ມີຄຳຖາມໃດໆຕໍ່ແລ້ວ ປະທານກອງປະຊຸມຈະສະເໜີໃຫ້ຜູ້ຖືຮຸ້ນຫຼືຜູ້ຕາງໜ້າລົງມະຕິຕໍ່ວາລະດັ່ງກ່າວ.

After the Managing Director has presented details of each agenda, the Chairman will ask the Shareholders and Proxies to make necessary comments or questions. Should there is a question, the Managing Director shall give the answer forthwith. Only when there is no any further question or comment, the Chairman shall ask the Shareholders and Proxies to vote on the agenda

3.5 ຜູ້ເຂົ້າຮ່ວມກອງປະຊຸມ ຕ້ອງປິດສຽງໂທລະສັບ ຫຼື ອຸປະກອນການສື່ສານທຸກຢ່າງ ແລະ ບໍ່ສົ່ງສຽງດັງລົບກວນ ຕະຫຼອດໄລຍະຂອງການດຳເນີນກອງປະຊຸມ.

All attendees must switch off the sound of their mobile phones or any communication devices and must not make any disturbing noise throughout the meeting.

4. ພາສາທີ່ນຳໃຊ້ໃນກອງປະຊຸມ/**Language in the meeting**

ພາສາທີ່ນຳໃຊ້ຢູ່ໃນກອງປະຊຸມແມ່ນພາສາລາວ

The language used in the meeting is Lao language.

5. ຜູ້ມີສິດລົງຄະແນນສຽງ/**Persons eligible to vote**

5.1 ມີແຕ່ຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າທີ່ໄດ້ຮັບມອບໝາຍຢ່າງຖືກຕ້ອງ ຊຶ່ງໄດ້ລົງທະບຽນເຂົ້າຮ່ວມກອງປະຊຸມຮຽບຮ້ອຍແລ້ວ ເທົ່ານັ້ນ ທີ່ຈະມີສິດລົງຄະແນນສຽງ.

Only the shareholders or proxies who have registered to attend the meeting are eligible to vote.

5.2 ຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າທີ່ບໍ່ໄດ້ລົງທະບຽນເຂົ້າຮ່ວມກອງປະຊຸມ ແລະ ຜູ້ເຂົ້າຮ່ວມອື່ນ ຈະບໍ່ມີ ສິດໃນການລົງຄະແນນສຽງ.

Any shareholders or proxies who have not registered to attend the meeting and other attendees will not be eligible to vote.

6. ການລົງຄະແນນສຽງ/**Voting**

ປະທານກອງປະຊຸມ ຈະເປັນຜູ້ສະເໜີວາລະທີ່ຕ້ອງການໃຫ້ລົງຄະແນນສຽງ ໂດຍຈະເຊີນ ພຽງແຕ່ຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າທີ່ໄດ້ຮັບມອບໝາຍ ທ່ານໃດທີ່ບໍ່ເຫັນດີຕໍ່ບັນຫາທີ່ກອງປະຊຸມໄດ້ນຳ ສະເໜີເທົ່ານັ້ນ ລົງຄະແນນສຽງ ເພື່ອຄວາມສະດວກໃນການນັບຄະແນນສຽງ (ໝາຍຄວາມວ່າ ຜູ້ຖືຮຸ້ນທ່ານໃດທີ່ເຫັນດີຕໍ່ການສະເໜີດັ່ງກ່າວ ກໍບໍ່ຈຳເປັນຕ້ອງລົງຄະແນນສຽງໃດໆ).

The Chairman of the meeting will propose the agendas that require voting, and only the shareholders or proxies who DO NOT AGREE with the matters proposed by the meeting are invited to vote so as to facilitate vote counting process (meaning that for those who agree with such matters are not necessary to cast a vote).

7. ຜົນສັກສິດຂອງການລົງຄະແນນສຽງ/**Effectiveness of voting**

7.1 ສຳລັບ ການລົງມະຕິທົ່ວໄປ, ການລົງຄະແນນສຽງບໍ່ເຫັນດີຈະມີຜົນສັກສິດ ກໍຕໍ່ເມື່ອມີຄະແນນສຽງ ຫລາຍກວ່າເຄິ່ງໜຶ່ງຂອງ ຈຳນວນຮຸ້ນ ທຄຕລ ທັງໝົດໃນທີ່ປະຊຸມ.

For ordinary resolutions, the "Disapprove votes" will become effective only if such votes account for more than half of the total number of BCEL shares attending the meeting

7.2 ສຳລັບການລົງມະຕິສະເພາະ, ການລົງຄະແນນສຽງບໍ່ເຫັນດີຈະມີຜົນສັກສິດ ກໍຕໍ່ເມື່ອມີຄະແນນສຽງ ຫລາຍກວ່າ ໝຶ່ງສ່ວນສາມຂອງຈຳນວນຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າທັງໝົດທີ່ເຂົ້າຮ່ວມກອງປະຊຸມ ແລະ ມີຮຸ້ນລວມກັນຫຼາຍກວ່າ 20% ຈຳນວນຮຸ້ນ ທຄຕລ ທັງໝົດ.

For special resolution, the "Disapprove votes" will become effective only if such votes account for more than one third of total shareholders or proxies attending the meeting and having shares more than **20%** of the total BCEL shares.

7.3 ທຸກບັດລົງຄະແນນສຽງ "ບໍ່ເຫັນດີ" ຕໍ່ວາລະໃດໜຶ່ງທີ່ຖືກສົ່ງໃຫ້ທີ່ປະຊຸມຫຼັງຈາກທີ່ກອງປະຊຸມໄດ້ ປະກາດຜົນການລົງຄະແນນຂອງວາລະນັ້ນແລ້ວ, ຈະຖືວ່າເປັນບັດລົງຄະແນນສຽງທີ່ໃຊ້ບໍ່ໄດ້.

Any and All "Disapprove votes" in any Agenda which are submitted to the Meeting after the Meeting has already announced the voting result of such Agenda shall be null and void.

8. ການແຈ້ງຜົນການລົງຄະແນນສຽງ/**Notification of voting result**

ຜູ້ເຂົ້າຮ່ວມກອງປະຊຸມ ຈະໄດ້ຮັບແຈ້ງກ່ຽວກັບຜົນການນັບຄະແນນຢູ່ໃນທີ່ປະຊຸມເລີຍ ໂດຍ ການນັບ ຄະແນນສຽງ ຈະຖືເອົາໜຶ່ງຮຸ້ນ ເທົ່າກັບໜຶ່ງຄະແນນສຽງ.

Attendees will be informed about the voting result forthwith in the meeting with one share equals one vote.

9. ການສະເໜີຄຳຖາມ/**Questions**

9.1 ປະທານກອງປະຊຸມ ຈະສະເໜີໃຫ້ຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າທີ່ໄດ້ຮັບມອບໝາຍຢ່າງຖືກຕ້ອງ ມີຄຳ ຖາມ ຫຼື ສະແດງຄຳເຫັນທີ່ບໍ່ນອນໃນວາລະຂອງກອງປະຊຸມ, ໃນຕອນທ້າຍກອງປະຊຸມພາຍຫຼັງທີ່ ສຳເລັດຄົບຖ້ວນທຸກວາລະແລ້ວ. ສຳລັບຜູ້ເຂົ້າຮ່ວມອື່ນໆ ຈະບໍ່ມີສິດສະເໜີຄຳຖາມ ຫຼື ມີຄຳເຫັນໃນທີ່ ປະຊຸມ, ຍົກເວັ້ນກໍລະນີທີ່ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ເຂົ້າຮ່ວມດັ່ງກ່າວ ປະກອບຄຳເຫັນຕໍ່ທີ່ ປະຊຸມ.

The chairman of the meeting will ask the shareholders or proxies to question or make comments on the issues which are not included in the agenda of the meeting, after the meeting has completed its all agenda. Other attendees are not eligible to question or make any comments, unless the Chairman asks such attendees to question or make comments in the meeting.

9.2 ເມື່ອມີການສະເໜີຈາກປະທານກອງປະຊຸມແລ້ວນັ້ນ, ຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າທີ່ປະສົງຈະມີ ຄຳຖາມ ຫຼື ສະແດງຄຳເຫັນຕໍ່ທີ່ປະຊຸມ ຕ້ອງຍົກມືຂຶ້ນ ພ້ອມທັງສະແດງເຄື່ອງໝາຍຕາມທີ່ ທຄຕລ ກຳນົດໃຫ້ ເພື່ອສະແດງວ່າແມ່ນຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າທີ່ໄດ້ຮັບມອບໝາຍຢ່າງແທ້ຈິງ. ຖ້າຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າ ທີ່ ໄດ້ຮັບມອບໝາຍ ຫາກບໍ່ສະແດງເຄື່ອງໝາຍດັ່ງກ່າວແລ້ວນັ້ນ ປະທານກອງປະຊຸມ ຫຼື ຄະນະອຳນວຍ ການ ທຄຕລ ຫຼື ຄະນະຮັບຜິດຊອບກອງປະຊຸມ ມີສິດສະເໜີຄັດຄ້ານຄຳຖາມ ຫຼື ຄຳເຫັນຂອງຜູ້ກ່ຽວ ແລະ ກອງປະຊຸມ ຈະບໍ່ມີພັນທະໃນການຕອບຄຳຖາມຂອງຜູ້ກ່ຽວໃນກໍລະນີ ດັ່ງກ່າວ.

Having been asked by the Chairman, any shareholders or proxies desirous to question or make comments in the meeting must raise their hands and show the symbol as given by BCEL to confirm that they are truly the shareholders or proxies. Should the shareholders or proxies do not show such symbol, the Chairman or BCEL Directors, or Committee in charge of the meeting may reject questions or comments made by the shareholders or proxies, and in this case the meeting shall not be obliged to answer such questions.

ຄຳແນະນຳກ່ຽວກັບເອກະສານ ແລະ ຫຼັກຖານທີ່ຕ້ອງນຳມາສະເໜີໂຕເພື່ອເຂົ້າຮ່ວມກອງປະຊຸມ
Instruction about the documents and evidence to be presented prior to attending the meeting

ເພື່ອຄວາມສະດວກໃນການລົງທະບຽນເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ, ຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າ ທີ່ຈະເຂົ້າຮ່ວມກອງປະຊຸມ ກະລຸນານຳເອົາໜັງສືເຊີນປະຊຸມ, ໃບເຂົ້າຮ່ວມກອງປະຊຸມທີ່ອອກໃຫ້ໂດຍຕະຫຼາດຫຼັກຊັບລາວ ແລະ ໃບມອບສິດ (ສຳລັບຜູ້ຕາງໜ້າ) ມາພ້ອມເອກະສານທີ່ສາມາດນຳໃຊ້ຢັ້ງຢືນຕົນເອງ ຕາມແຕ່ລະກໍລະນີດັ່ງນີ້:

For convenience in registration process to attend the Shareholders ' Meeting of Banque Pour Le Commerce Exterieur Lao Public, the shareholders or the proxies who will attend the Meeting are required to bring the Invitation to the Meeting, the Letter for attending the meeting issued by the Lao Securities Exchange and the Proxy (applicable for the proxy only) together with the documents for proof of identity as indicated for each circumstance below:

1. ຜູ້ເຂົ້າຮ່ວມທີ່ເປັນບຸກຄົນ / attendees who are natural persons

ໃຫ້ນຳເອົາເອກະສານໃດໜຶ່ງຂອງຕົນດັ່ງຕໍ່ໄປນີ້ ມາສະແດງເວລາລົງທະບຽນ

Shall present one of the following documents of their own at the time of registration.

1.1. ບັດປະຈຳຕົວ/Identification Card

1.2. ສຳມະໂນຄົວ/Family book

1.3. ໜັງສືຜ່ານແດນ (ສຳລັບນັກລົງທຶນຕ່າງປະເທດ)/Passport (for foreign investors)

2. ຜູ້ເຂົ້າຮ່ວມທີ່ເປັນນິຕິບຸກຄົນ / Attendees who are legal persons

ໃຫ້ນຳເອົາເອກະສານໃດໜຶ່ງທີ່ກຳນົດໄວ້ໃນຂໍ້ 1 ເທິງນີ້ ພ້ອມກັບເອກະສານໃດໜຶ່ງດັ່ງຕໍ່ໄປນີ້ ມາສະແດງ ເວລາລົງທະບຽນ:

Shall present one of the documents as given in 1. above plus one of the following documents at the time of registration:

2.1. ໃບອະນຸຍາດລົງທຶນ/ Investment License

2.2. ໃບທະບຽນວິສາຫະກິດ/ Certificate of Enterprise Registration (Affidavit)

2.3. ໃບທະບຽນອາກອນສະບັບຫຼ້າສຸດ/ most recent Tax Certificate

ສຳລັບຜູ້ເຂົ້າຮ່ວມທີ່ບໍ່ແມ່ນຜູ້ອຳນວຍການ ຕ້ອງໄດ້ນຳເອົາໃບມອບສິດຈາກຜູ້ອຳນວຍການທີ່ມີສິດອຳນາດມາພ້ອມຕື່ມອີກ.

For attendee who is not the authorized director shall have the Proxy as attached hereto signed by the authorized director.

ເອກະສານ ແລະ ຫຼັກຖານທີ່ຕ້ອງນຳມາສະເໜີໂຕ ເພື່ອເຂົ້າຮ່ວມກອງປະຊຸມຊຶ່ງເປັນພາສາຕ່າງປະເທດ ຕ້ອງແປເປັນພາສາລາວ ໂດຍມີການເຊັນຢັ້ງຢືນຄວາມຖືກຕ້ອງໃນການແປຈາກບໍລິສັດແປພາສາທີ່ໜ້າເຊື່ອຖືໄດ້. ສຳລັບພາສາຕ່າງ ປະເທດ ແມ່ນອະນຸຍາດໃຫ້ສຳລັບພາສາອັງກິດເທົ່ານັ້ນ. ທຄຕລ ມີສິດປະຕິເສດເອກະສານອ້າງອີງໃດໆ ທີ່ບໍ່ເປັນໄປຕາມ ການກຳນົດນີ້.

All documents and evidence in a foreign language which are required to present prior to attending the Meeting must be translated into Lao language and the translation shall be certified by an acceptable translation company. The foreign language is permitted only for English. BCEL has the right to reject any documents contradicting this provision.

ຄຳແນະນຳ ກ່ຽວກັບ ການລົງຄະແນນສຽງ
Vote Instruction

1. ຜູ້ເຂົ້າຮ່ວມກອງປະຊຸມ ຈະໄດ້ຮັບບັດລົງຄະແນນສຽງສຳລັບທຸກໆວາລະ ທີ່ຕ້ອງການໃຫ້ມີການລົງຄະແນນສຽງ ໃນເວລາລົງທະບຽນເຂົ້າຮ່ວມກອງປະຊຸມ. ການລົງຄະແນນສຽງໂດຍຜູ້ຕາງໜ້າ ຊຶ່ງຜູ້ຖືຮຸ້ນທີ່ມອບໝາຍສິດໄດ້ລະບຸຢ່າງຈະແຈ້ງແລ້ວ ກ່ຽວກັບ ການລົງຄະແນນໃນແຕ່ລະວາລະ ທະນາຄານ ຈະບັນທຶກການລົງຄະແນນສຽງ ໃນເວລາລົງທະບຽນ ໂດຍທີ່ຜູ້ຕາງໜ້າຈະບໍ່ຕ້ອງລົງແນນສຽງອີກ.
   The attendees will be given a ballot for voting in each agenda requiring a vote at the time of registration. For the case of proxy in which the voting in each agenda has been clearly specified by the shareholder in the Proxy, BCEL will record such votes at the time of the registration and the proxy will not be required to vote.

2. ກອງປະຊຸມ ຈະເຊີນພຽງແຕ່ຜູ້ຖືຮຸ້ນທ່ານໃດທີ່ ບໍ່ເຫັນດີ ຕໍ່ບັນຫາທີ່ກອງປະຊຸມໄດ້ນຳສະເໜີເທົ່ານັ້ນ ລົງຄະແນນ ສຽງ (ໝາຍຄວາມວ່າ ຜູ້ຖືຮຸ້ນທ່ານໃດທີ່ ເຫັນດີຕໍ່ການແຕ່ງຕັ້ງດັ່ງກ່າວ ກໍບໍ່ຈຳເປັນຕ້ອງລົງຄະແນນສຽງໃດໆ).
   Only the shareholders who DO NOT AGREE with the matters proposed by the meeting are invited to vote (meaning that for those who agree with such appointment are not necessary to make any vote)

3. ໃນການລົງຄະແນນສຽງ ຂໍໃຫ້ທ່ານປະກອບຂໍ້ມູນໃສ່ບັດລົງຄະແນນສຽງທີ່ໄດ້ແຈກຢາຍໃຫ້. ໃນນັ້ນ ຕ້ອງໄດ້ລະບຸ ຢ່າງຈະແຈ້ງກ່ຽວກັບຊື່ ແລະ ນາມສະກຸນຂອງທ່ານ, ຈຳນວນຮຸ້ນ ທຄຕລ ທີ່ທ່ານຖືຢູ່ (ຖ້າບໍ່ມີຂໍ້ມູນດັ່ງກ່າວຢູ່ໃນບັດລົງຄະແນນສຽງ) ແລະ ໃຫ້ໝາຍຕີນກາໃສ່ຫ້ອງ ບໍ່ເຫັນດີ.
   To vote, kindly fill in the distributed ballot in which you must specify clearly about your name and surname, and the total number of BCEL shares you are holding (if such information is not available in the ballot) and mark a cross in the Disapprove box.

4. ຫລັງຈາກທ່ານລົງຄະແນນສຽງຮຽບຮ້ອຍແລ້ວ ຂໍໃຫ້ທ່ານຍົກບັດດັ່ງກ່າວຂຶ້ນ ເພື່ອໃຫ້ຄະນະຮັບຜິດຊອບເກັບເອົາ ແລະ ຮວບຮວມຄະແນນສຽງ.
   After you have clearly casted your vote, kindly raise your hand with the ballot, so the organizers can take the ballot and count the votes.

5. ທ່ານຈະໄດ້ຮັບແຈ້ງກ່ຽວກັບຜົນການນັບຄະແນນຢູ່ໃນທີ່ປະຊຸມເລີຍ ໂດຍການນັບຄະແນນສຽງຈະຖືເອົາໜຶ່ງຮຸ້ນ ເທົ່າກັບໜຶ່ງຄະແນນສຽງ.
   You will be informed about the voting result right in the meeting with one share equals one vote.

6. ການລົງຄະແນນສຽງບໍ່ເຫັນດີຈະມີຜົນສັກສິດ ກໍຕໍ່ເມື່ອມີຄະແນນສຽງຫລາຍກວ່າເຄິ່ງໜຶ່ງຂອງຈຳນວນຮຸ້ນ ທຄຕລ ທັງໝົດ ໃນທີ່ປະຊຸມ, ຍົກເວັ້ນວາລະໃດທີ່ຕ້ອງລົງຄະແນນສຽງດ້ວຍມະຕິສະເພາະນັ້ນ ຄະແນນສຽງບໍ່ເຫັນດີຕ້ອງມີຄະແນນຫຼາຍກວ່າ 1/3 ຂອງຈ□ານວນຮຸ້ນ ທຄຕລ ທັງໝົດໃນທີ່ປະຊຸມ.
   The Disapproval votes will become effective only if such votes account for more than half of the total number of BCEL shares attending the meeting, except for any agenda that requires a specific resolution, Disapproval vote shall account for more than 1/3 of the total number of BCEL shares attending the meeting.

ໝາຍເຫດ/Remark:

1. ຜູ້ເຂົ້າຮ່ວມທີ່ບໍ່ໄດ້ລົງທະບຽນເຂົ້າປະຊຸມ ຈະບໍ່ມີສິດໃນການລົງຄະແນນສຽງ.
   Any attendees who failed to make registration will not be eligible to votes.

2. ທຸກບັດລົງຄະແນນສຽງບໍ່ເຫັນດີຕໍ່ວາລະໃດໜຶ່ງ ທີ່ຖືກສົ່ງໃຫ້ທີ່ປະຊຸມ ຫຼັງຈາກທີ່ກອງປະຊຸມໄດ້ປະກາດຜົນການລົງຄະແນນຂອງວາລະນັ້ນແລ້ວ, ຈະຖືວ່າເປັນບັດລົງຄະແນນສຽງທີ່ໃຊ້ບໍ່ໄດ້.
   All disapprove votes in any Agenda which is submitted to the Meeting after the Meeting has announced the voting result of such Agenda shall be deemed invalid.

ແຜນທີ່ສະຖານທີ່ຈັດກອງປະຊຸມຜູ້ຖືຮຸ້ນຂອງ ທຄຕລ / BCEL Shareholder Meeting

- ກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2023
  ໃນວັນທີ 29 ເມສາ 2024 ເວລາ 14:30
  ທີ່ຫ້ອງປະຊຸມ Grand Ballroom
- BCEL's shareholder's Meeting 2023
  Date 29 April 2024, 14:30
  At Grand Ballroom

